

# ການຂະຫຍາຍຕົວຢ່າງໄວວາ ຂອງການປູກຢາງພາລາ ຢູ່ ແຂວງ ຫຼວງນ້ຳທາ

## ການເບິ່ງບັນຫາດ້ວຍທັດສະນະລະຫວ່າງປະເທດ

*ຂຽນໂດຍ: ເວີຍຍີ ຊີ (Weiyi shi)*

*ດັດແກ້ ແລະ ຮຽບຮຽງພາສາລາວໂດຍ:*
*ຂັນແກ້ວ ອຸປຣະວັນ*
*ຄຳສອນ ຫລັກໄມຕຣີ*

ກຸມພາ 2008

## ສາລະບານ:


ຄຳສັບຫຍໍ້ ........ 1
ການຄິດໄລ່ທຽບເທົ່າ........ 1
ຄຳຂອບໃຈ........ 2
ສະຫຼຸບໃຈຄວາມແບບຫຍໍ້ ........ 3

1 ອະລຳພະບົດ ........ 7
1.1 ການສຶກສາຜ່ານມາ ........ 7
1.2 ຂອບເຂດການສຶກສາ........ 8
1.3 ພູມີປະເທດ........ 9
1.4 ຮູບແບບ ແລະ ວິທີການ ........ 10
1.5 ຄວາມແນ່ນອນເຊື່ອຖືໄດ້ ຂອງຂໍ້ມູນ ແລະ ຂອບເຂດຈຳກັດຂອງການສຶກສາ........ 12

2 ສະພາບລວມ ຂອງການປູກຢາງພາລາຢູ່ ແຂວງ ຫຼວງນ້ຳທາ ........ 12
3 ເປັນຫຍັງຕ້ອງເປັນຢາງພາລາ? ເປັນຫຍັງຕ້ອງດຽວນີ້?........ 18
3.1 ການຊຸກຍູ້ສົ່ງເສີມໂດຍກົງ ແລະ ການສະໜັບສະໜູນໂດຍທາງອ້ອມຂອງ ລັດຖະບານລາວ.. 18
3.2 ກຳລັງຄວາມຕ້ອງການຂອງຕະຫຼາດໃນຂົງເຂດ ........ 19
3.3 ການຊຸກຍູ້, ຜັກດັນ ຢ່າງເຂັ້ມແຂງຂອງ ລັດຖະບານຈີນ........ 22
3.4 ຄວາມປະສົງຂອງຊາວບ້ານ ........ 23

4 ຢາງພາລາ, ການທົດແທນການປູກຝິ່ນ ແລະ *"ຊູຈູກູ"*........ 25
4.1 ປະຫວັດໂດຍສັງເຂບກ່ຽວກັບການທົດແທນ ການປູກຝິ່ນ ........ 25
4.2 ພາຍໃຕ້ກອບລວມຂອງ *"ຊູຈູກູ"*........ 26
4.3 ເພິ່ນຈັດການແນວໃດ ........ 28
4.4 ຄວາມເປັນຫ່ວງເປັນໄຍໃນອະນາຄົດກ່ຽວກັບການ ຫລື ເກື້ອກູນ ........ 30

5 ຮູບແບບການລົງທຶນໃນການປູກຢາງທີ່ ຫຼວງນ້ຳທາ ........ 32
5.1 ການປູກຢາງໃສ່ດິນສຳປະທານ ........ 32
5.2 ການປູກແບບສັນຍາຜູກພັນ ກັບນັກລົງທຶນຂະໜາດໃຫຍ່ (ທາງການ) ........ 35
5.2.1 ເຮັດສັນຍາແບບໃດ? ........ 36
5.2.2 ຮູບແບບສັນຍາ ແບບ "2+3" ໃຊ້ການໄດ້ແທ້ບໍ່? ........ 36
5.2.3 ອັນຕະລາຍຍ້ອນວິທີການແບບສັ່ງການຈາກເທິງລົງລຸ່ມ........ 42
5.3 ການປູກແບບສັນຍາຜູກພັນ ພາຍໃຕ້ສັນຍາກັບນັກລົງທຶນ ຂະໜາດນ້ອຍ (ບໍ່ເປັນທາງການ). 45
5.4 ຊາວບ້ານລົງທຶນເອງ ແລະ ຮ່ວມມືກັບ "ພີ່ນ້ອງ"........ 48
5.5 ຂໍ້ສະຫຼຸບກ່ຽວກັບປະເພດລົງທຶນ ........ 49

6. ຕາໜ່າງທຸລະກິດລະຫວ່າງປະເທດ ............ 51
6.1 ປະເພດຊຸມຊົນໃນຈີນ ໃນແວດລ້ອມຂອງການຂະຫຍາຍຕົວ ອຸດສາຫະກຳປູກຢາງພາລາ ...... 51
6.2 ຕາໜ່າງລະຫວ່າງຊາດດຳເນີນງານແບບໃດ? ............ 54
7. ຕ່ອງໂສ້ການຕະຫຼາດ ຂ້າມແດນ ............ 57
8. ນຶ່ງຊາຍແດນ, ສອງປະເທດ, ໜຶ່ງເສັ້ນທາງ ............ 62
8.1 ສະພາບລວມກ່ຽວກັບການປູກຢາງຢູ່ເຂດ ແຄວ້ນສິບສອງພັນນາ ຂອງຈີນ ............ 62
8.2 ການປຽບທຽບ ແຂວງຫຼວງນ້ຳທາ ແລະ ແຄວ້ນສິບສອງພັນນາ ............ 67
9. ປະເດັນສຳຄັນ, ຂໍ້ສະເໜີ ແລະ ບົດບາດຂອງການຊ່ວຍເຫລືອ ຫລື ເພື່ອການພັດທະນາ ............ 73
9.1 ສະຫຼຸບປະເດັນສຳຄັນ ແລະ ຂໍ້ແນະນຳ ............ 73
9.1.1 ການເຮັດສັນຍາ ຜູກພັນ ໃນການປູກຢາງພາລາ ............ 73
9.1.2 ການຄຸ້ມຄອງດິນ ແລະ ປ່າໄມ້ ............ 75
9.1.3 ການຕະຫຼາດ ............ 76
9.1.4 ປະເດັນບັນຫາອື່ນໆ ແລະ ຂໍ້ແນະນຳ ............ 77
9.2 ບົດບາດວິວັດທະນາການ ຂອງການຊ່ວຍເຫລືອ ຫລືເພື່ອການພັດທະນາ ............ 78

**ເອກະສານຊ້ອນທ້າຍ :**

ເອກະສານຊ້ອນທ້າຍ 1 : ລາຍຊື່ບ້ານ ທີ່ໄດ້ຢ້ຽມຢາມ ............ 80
ເອກະສານຊ້ອນທ້າຍ 2 : ຄຳຖາມເພື່ອເກັບກຳຂໍ້ມູນລະດັບບ້ານ ............ 87
ເອກະສານຊ້ອນທ້າຍ 3 : ປະມວນພາບ ............ 89

## ຄຳສັບຫຍໍ້

| | |
|---|---|
| CPI | ຄະນະກຳມະການແຜນການ ແລະ ການລົງທຶນ |
| DAFEO | ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ |
| DPI | ພະແນກແຜນການ ແລະ ການລົງທຶນແຂວງ |
| GoL | ລັດຖະບານລາວ |
| LFA | ການມອບດິນ-ມອບປ່າ |
| NAFRI | ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ |
| NPA | ເຂດປ່າສະຫງວນ ແຫ່ງຊາດ |
| PAFO | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| YDOC | ກົມການຄ້າ ຢຸນນານ |

## ການຄິດໄລ່ທຽບເທົ່າ

| | | |
|---|---|---|
| 1 ເຮັກຕາ | = | 15 ມູ |
| 1 ໂດລາສະຫະລັດ | = | 7.6 ຢວນ (ອັດຕາສະເລ່ຍ, fed reserve ທະນາຄານກາງສະຫະລັດ) |
| 1 ໂດລາສະຫະລັດ | = | 9,300 ກີບ (ອັດຕາແລກປ່ຽນຢູ່ຕະຫຼາດທ້ອງຖິ່ນແຂວງຫຼວງນ້ຳທາ, ທ້າຍປີ 2007) |

## ຄໍາຂອບໃຈ

ການສຶກສາຄັ້ງນີ້ຈະບໍ່ສາມາດເກີດຂຶ້ນໄດ້ ຖ້າປາສຈາກການສະໜັບສະໜູນຢ່າງໃຫຍ່ຫຼວງ ແລະ ຖ້າບໍ່ມີຂໍ້ແນະນໍາຈາກຫຼາຍໆອົງການຈັດຕັ້ງ ແລະ ບຸກຄົນ. ການສຶກສາຄັ້ງນີ້ເກີດຈາກແນວຄວາມຄຶດຂອງ ແຜນງານຮ່ວມມືເພື່ອການພັດທະນາລາວ-ເຢຍລະມັນ ໂດຍໄດ້ລວບລວມເສື່ອມສານການປະກອບສ່ວນ ແລະ ຂໍ້ລິເລີ່ມຈາກແຜນງານພັດທະນາຊົນນະບົດເຂດພູດອຍ ພາກເຫນືອ ຂອງ ສປປ ລາວ (GTZ-RDMA), ອົງການພັດທະນາ (CIM) ແລະໂຄງການພັດທະນາຊັບພະຍາກອນມະນຸດ ເພື່ອເສດຖະກິດຕະຫຼາດ (HRDME).

ຕະຫຼອດການສຶກສານີ້, ໜ່ວຍງານ GTZ ທີ່ເມືອງສິງໄດ້ໃຫ້ການສະໜັບສະໜູນຢ່າງສະເໝີຕົ້ນສະເໝີປາຍ ໂດຍໄດ້ແລກປ່ຽນໃຫ້ຂໍ້ມູນດ້ານຄວາມເປັນມາ, ໄດ້ຊ່ວຍຕິດຕໍ່ພົວພັນກັບບັນດາອົງກອນກ່ຽວຂ້ອງ ແລະ ຊ່ວຍເບິ່ງແຍງບັນຫາຂົນສົ່ງ ແລະ ຈັດຫາ. ຫົວໜ້າທີມງານ ທ່ານ ປີເຕີ ເຣັກຄາວຊ (Peter Reckhaus) ແລະ ຜູ້ປະສານງານແຜນງານລະດັບສູນກາງ ທ່ານ ອູນລິຄ໌ ຊາແບລ-ໂກເຊລາ (Ulrich Sabel-Koschella) ໄດ້ໃຫ້ການຊີ້ນໍາ ແລະ ສະເໜີແນະທີ່ເລິກເຊິ່ງເຫັນແຈ້ງບັນຫາຕະຫຼອດທຸກໆໄລຍະຂອງການຄົ້ນຄວ້າ, ເຊັ່ນດຽວກັນກໍໄດ້ຮັບການຊີ້ນໍາຈາກ ທ່ານ ຄູາວສ ໂກນດນິຄ /Klaus Goldnick (ຜູ້ວາງແຜນຂົງເຂດຂອງ CIM), ທ່ານໂຟຼຣຽນ ຣອຄ/ Florian Rock (ທີ່ປຶກສາດ້ານນະໂຍບາຍທີ່ດິນຂອງ GTZ), ແລະ ບັນດາຫົວໜ້າໜ່ວຍງານແລະ ທີ່ປຶກສາ GTZ ຄົນອື່ນໆ. ການສະໜັບສະໜູນດ້ານຈັດຫາ ໄດ້ຮັບຈາກອົງການ/ACF (ອົງການຕ້ານຄວາມອຶດຫິວ) ເປັນສິ່ງທີ່ຂາດບໍ່ໄດ້ເພື່ອສໍາເລັດວຽກພາກສະໜາມຢູ່ເມືອງລອງ.

ພະນັກງານຈາກພະແນກກະສິກໍາ ແລະ ປ່າໄມ້ແຂວງ, ໂດຍສະເພາະຢ່າງຍິ່ງ ທ່ານ ສຸນທອນ ອຸ່ນດາລາ, ໄດ້ແລກປ່ຽນຄວາມຮູ້, ຄວາມຊໍານິຊໍານານໃນເລື່ອງຢາງພາລາຢ່າງບໍ່ຮູ້ອິດຮູ້ເມື່ອຍ. ພະແນກ ແຜນການ ແລະການລົງທຶນແຂວງໄດ້ສະໜອງລະບຽບການຕ່າງໆ, ສັນຍາຂໍ້ຕົກລົງດ້ານຢາງພາລາ ແລະ ເອກະສານໂຄງການໃຫ້ ເພື່ອໄວ້ທົບທວນໃນການສຶກສານີ້. ບັນດາອົງກອນການຈັດຕັ້ງທີ່ເມືອງສິງ ແລະ ເມືອງລອງກໍມີຄວາມອົດທົນເປັນເລີດຕໍ່ຄໍາຖາມແບບຊໍ້າແລ້ວຊໍ້າອີກຂອງຂ້າພະເຈົ້າ. ນອກນັ້ນ, ຂ້າພະເຈົ້າຂໍຂອບໃຈຢ່າງລົ້ນເຫຼືອໄປຍັງ ດຣ. ລູຊິງ/Lu Xing, ອໍານວຍການສູນ GMS ຂອງມະຫາວິທະຍາໄລຢຸນນານ ແລະ ນາງ ກາວ ລີຮົງ/Gao Lihong ຊຶ່ງທັງສອງເປັນຜູ້ສໍາຄັນທີ່ໃຫ້ຂ້າພະເຈົ້າໄດ້ສໍາຜັດກັບພູມີປະເທດບ່ອນປູກຢາງພາລາທີ່ສິບສອງພັນນາ ແລະ ຊ່ວຍຂ້າພະເຈົ້າເຈລະຈາເຂົ້າຫາແຫລ່ງຂໍ້ມູນທີ່ຫາໄດ້ບໍ່ງ່າຍໃນຈີນ.

ພ້ອມດຽວກັນນີ້ ຂ້າພະເຈົ້າກໍໄດ້ຮັບປະໂຫຍດຈາກການສົນທະນາແລກປ່ຽນຄວາມເຫັນກັບເພື່ອນຮ່ວມງານນັກຄົ້ນຄວ້າ. ສະເພາະຢ່າງຍິ່ງ ດຣ. ຢາໂຢອິ ລາເຈີກວິສທ/Yayoi Lagerg-vist ທີ່ໄດ້ສະໜອງໃຫ້ຂ້າພະເຈົ້າຫຼາຍໆເອກະສານຄວາມເປັນມາພ້ອມບ່ອນຕິດຕໍ່ພົວພັນ ພ້ອມທັງໃຫ້ຄວາມເຫັນທີ່ເປັນປະໂຫຍດ ຊຶ່ງໃຫ້ຂໍ້ມູນຄວາມຮູ້ ແລະ ຊີ້ແນະທິດຂອງການສຶກສາ ຄັ້ງນີ້.

ສິ່ງສໍາຄັນທີ່ສຸດແມ່ນຂ້າພະເຈົ້າຂໍຂອບໃຈຊາວບ້ານ, ພໍ່ຄ້າຊາວຂາຍ, ຜູ້ອົບພະຍົບຍົກຍ້າຍ ແລະ ຜູ້ຈັດການບໍລິສັດທີ່ຂ້າພະເຈົ້າໄດ້ຕິດຕໍ່ທີ່ຢູ່ທັງສອງເບື້ອງຂອງແນວຊາຍແດນ ທີ່ໄດ້ແລກປ່ຽນຄວາມຮູ້, ປະສົບການ ແລະ ທັດສະນະແນວຄຶດນໍາຂ້າພະເຈົ້າ, ຂ້າພະເຈົ້າຂອບໃຈເປັນຢ່າງຍິ່ງໄປຍັງ ສອນໄຊ ທີ່ບໍ່ພຽງແຕ່ໄດ້ຂັບລົດພາຂ້າພະເຂົ້າໄປພາກສະໜາມ ແຕ່ຍັງໃຫ້ຂໍ້ມູນເກືອບວ່າເທົ່າກັບສາລານຸກົມກ່ຽວກັບເມືອງສິງ. ຂ້າພະເຈົ້າຂອບໃຈ ສຸກສາຄອນ ພິລາວັນ (ແຕັດ) ໃນການແປພາສາພ້ອມທັງຂອບໃຈ ອາເອີ ຊາງເຮຊີ/Zhang Hezhi ທີ່ມີທັກສະແປສາມພາສາແບບດີເລີດ ແລະ ໄດ້ນໍາພາຂ້າພະເຈົ້າໄປເບິ່ງໝູ່ບ້ານຕ່າງໆຂອງເຜົ່າອາຄ່າຕາມຊາຍແດນ ແຂວງຫຼວງນ້ຳທາ ກໍຄືຢູ່ເຂດ ແຄວັນສິບສອງພັນນາ.

# ບົດຄັດຫຍໍ້

ການປູກຢາງພາລາຢູ່ ແຂວງ ຫຼວງນ້ຳທາ ໄດ້ລິເລີ້ມມາແຕ່ປີ 1994, ເລີ່ມຕົ້ນຈາກ ບ້ານຫາດຍາວ ຊຶ່ງມີຊື່ສຽງໃນປັດຈຸບັນ ແລະ ບ້ານອື່ນໆອີກທີ່ຢູ່ລຽບຊາຍແດນຢູ່ເມືອງສິງ. ຢ່າງໃດກໍຕາມການປູກຂະໜານໃຫຍ່ບໍ່ໄດ້ປະກົດຂຶ້ນຈົນກວ່າຊຸມປີ 2000 ຊຶ່ງເປັນໄລຍະມີການລົງທຶນຕ່າງປະເທດສະໜອງໃຫ້ແກ່ຊາວປູກຝັງຂະໜາດນ້ອຍຈຳນວນຫຼວງຫຼາຍ. ມາເຖິງຕອນທ້າຍ 2006, ເນື້ອທີ່ປູກຢາງພາລາທັງໝົດໃນ ແຂວງ ຫຼວງນ້ຳທາ ມີຮອດ 12,585 ຮຕ, ໃນຈຳນວນນັ້ນ 88% ເປັນຂອງຊາວສວນຂະໜາດນ້ອຍໃນທ້ອງຖິ່ນ ຫລື ຂອງຜູ້ລົງທຶນນອກລະບົບ (ຈາກຈີນ ແລະ ລາວ). ສ່ວນທີ່ເຫລືອແມ່ນຮູບແບບລົງທຶນທາງການ ໂດຍໃນນັ້ນກໍມີ 11 ບໍລິສັດຢາງພາລາ, ຊຶ່ງໃນນັ້ນ 9 ບໍລິສັດແມ່ນຂອງຈີນ.

ຄວາມກະຕືລືລົ້ນຢາກປູກຢາງຕາມສອງຟາກຂອງຊາຍແດນນັ້ນເບິ່ງຄືວ່າປະກົດຕົວຂຶ້ນແບບກະທັນຫັນ ຍ້ອນວ່າມີນະໂຍບາຍຫຼາຍຢ່າງປະສົມປະສານກັນ ແລະ ຍ້ອນບັນດາປັດໄຈຕະຫຼາດ. ທາງດ້ານລາວ, ອຳນາດການປົກຄອງແຂວງກໍສົ່ງເສີມແບບຈະແຈ້ງ ໃຫ້ປູກຢາງພາລາ ຊຶ່ງຖືວ່າເປັນທາງເລືອກໜຶ່ງ ເພື່ອຢຸດຕິການຖາງປ່າເຮັດໄຮ່ ແລະ ເພື່ອຫຼຸດຜ່ອນຄວາມທຸກຍາກ. ຝາກເບື້ອງນັ້ນຂອງຊາຍແດນ ຄືຢູ່ຈີນ ຊ້ຳພັດມີຄວາມຕ້ອງການແບບເພີ່ມທະວີໃນດ້ານຢາງທຳມະຊາດ ຍ້ອນເສດຖະກິດຂະຫຍາຍຕົວຢ່າງໄວວາ ແລະ ຍ້ອນການສະໜອງພາຍໃນປະເທດບໍ່ພຽງພໍ ແລະ ລາຄາຢາງທຳມະຊາດໃນໂລກກໍຖີບຂຶ້ນສູງ. ສ່ວນໃຫຍ່ແມ່ນຍ້ອນວ່າດິນປູກຝັງບໍ່ພຽງພໍ, ເຮັດໃຫ້ນັກລົງທຶນ ແລະ ຊາວບ້ານນັບມື້ນັບຫັນໜ້າໄປຫາປະເທດເພື່ອນບ້ານທີ່ມີຄວາມສາມາດ ແລະ ທ່າແຮງບົ່ມຊ້ອນໃນການປູກຢາງຫຼາຍຂຶ້ນ. ພ້ອມດຽວກັນນັ້ນ ລັດຖະບານຈີນກໍສະໜັບສະໜູນການລົງທຶນປູກຢາງຢູ່ຕ່າງປະເທດ ໃນນັ້ນໄດ້ມີສິ່ງຈູງໃຈທາງນະໂຍບາຍ ແລະ ມີເງິນອຸດໜູນຖົມຊຸມຈຳນວນບໍ່ໜ້ອຍໃຫ້ແກ່ນັກທຸລະກິດ, ໂດຍນຳໃຊ້ກອງທຶນພິເສດເພື່ອທົດແທນການປູກຝິ່ນ. ສຸດທ້າຍ ແມ່ນຊາວບ້ານ ແຂວງຫຼວງນ້ຳທາ ເອງທີ່ມີຄວາມປະທັບໃຈເມື່ອເຫັນສະພາບຂອງຊາວບ້ານຈີນ, ແລະ ພ້ອມກັນເຂົ້າໃຈວ່າຢາງພາລາເປັນທາງເລືອກທີ່ດີ ແລະ ໝັ້ນໃຈໄດ້ ເພື່ອໄປສູ່ອະນາຄົດທີ່ສົດໃສ.

ການປູກຢາງພາລາຢູ່ ຫຼວງນ້ຳທາ ດຳເນີນໄປພາຍໃຕ້ສະພາບເງື່ອນໄຂ ແລະ ຮູບແບບວິທີການ ທີ່ຫຼາກຫຼາຍ. ເມື່ອທຽບໃສ່ບັນດາແຂວງພາກໃຕ້, ຫຼວງນ້ຳທາບໍ່ຄ່ອຍມີຮູບແບບສຳປະທານຫຼາຍ, ສ່ວນໜຶ່ງກໍຍ້ອນວ່າ ມີຄວາມເປັນເອກະພາບພາຍໃນແຂວງ ທີ່ບໍ່ຢາກໃຫ້ມີຮູບແບບສຳປະທານ, ແຕ່ພັດມັກສັນຍາຜູກພັນ ໃນການປູກຝັງແທນ. ແຂວງຊຸກຍູ້ຮູບແບບປູກຝັງ “2+3” ຊຶ່ງໝາຍຄວາມວ່າຊາວສວນເປັນດິນ ແລະ ແຮງງານ ແລະ ຜູ້ລົງທຶນຈະສະໜອງທຶນ, ເຕັກນິກ ແລະ ການເຂົ້າເຖິງຕະຫຼາດ ແລະ ໃນນີ້ຮູບແບບແບ່ງປັນກຳໄລແມ່ນ: 70% ເປັນຂອງຊາວບ້ານ ແລະ 30% ເປັນຂອງບໍລິສັດ. ເຖິງຢ່າງໃດກໍຕາມ, ໃນພາກປະຕິບັດ, ຮູບແບບນີ້ ມັກຈະເຈືອຈາງກາຍເປັນຮູບແບບສຳປະທານ ຄື ບໍລິສັດຈະຮັບຜິດຊອບທັງໝົດຂອງການບໍລິຫານສວນຢາງໃນຊຸມປີທຳອິດ, ແລະຊາວບ້ານພຽງແຕ່ປະກອບດິນ ແລະ ຈະໄດ້ຮັບ 30% ຂອງການປູກໃນອະນາຄົດ ພ້ອມທັງເງິນເດືອນ (ຖ້າເຂົາເຈົ້າເລືອກເຮັດວຽກໃຫ້ບໍລິສັດໃນນາມກຳມະກອນ). ຮູບການແບບນີ້ເອີ້ນກັນວ່າຮູບແບບ “1+4” ຊຶ່ງບໍ່ພຽງແຕ່ຈະພົ້ນເດັ່ນມີຫຼາຍຖ້າສັງເກດເບິ່ງຈຳນວນໂຄງການຂໍ້ຕົກລົງປູກຝັງເຮັດກັບຜູ້ລົງທຶນທາງການຂະໜາດໃຫຍ່. ຮູບແບບນີ້ຍັງເປັນທີ່ນິຍົມກັນຫຼາຍສົມຄວນໃນໝູ່ຜູ້ລົງທຶນຂະໜາດນ້ອຍນອກລະບົບ.

ມີບາງປັດໄຈທີ່ມີສ່ວນເຮັດໃຫ້ຕົວແບບ “1+4” ນີ້ພົ້ນເດັ່ນໃນຕົວຈິງ ຊຶ່ງໃນນັ້ນແມ່ນຊາວບ້ານ, ໂດຍສະເພາະຜູ້ຢູ່ຫ່າງໄກ, ທີ່ບໍ່ມີແຫລ່ງລາຍຮັບຈາກບ່ອນອື່ນໆ, ເຂົາເຈົ້າບໍ່ສາມາດຢູ່ລອດຕະຫຼອດໄລຍະຍາວນານເຖິງ 7-8 ປີ ກ່ອນທີ່ຈະໄດ້ປາດຢາງໂດຍທີ່ບໍ່ໄດ້ຮັບຄ່າແຮງງານທີ່ໄດ້ເຮັດໄປແລ້ວ. ປະເດັນອື່ນໆທີ່ມັກເກີດຂຶ້ນເວລາມີສັນຍາຜູກພັນປູກຝັງແບບນີ້ ແມ່ນການຂາດການປຶກສາຫາລືແບບທົ່ວເຖິງກັບຊາວບ້ານ, ການບັງຄັບກົດດັນໃນລະດັບ

ຕ່າງໆ, ຄວາມເຂົ້າໃຈ ແລະ ການຕີລາຄາແບບບໍ່ແນ່ນອນທີ່ເກີດຂຶ້ນລະຫວ່າງຝ່າຍຜູ້ເຮັດຂໍ້ຕົກລົງ ແລະ ຝ່າຍປົກຄອງລັດ, ນອກນັ້ນລະດັບການສົ່ງຄວາມຮູ້ເຕັກໂນໂລຊີໃຫ້ແກ່ຊາວບ້ານຈາກຜູ້ລົງທຶນກໍຕໍ່າ, ມີການໂຕ້ຖຽງຂັດແຍ່ງກ່ຽວກັບທີ່ດິນ ແລະ ແຮງງານ. ຮູບການເຮັດຂໍ້ຕົກລົງແບບບັງຄັບ ແຕ່ເທິງລົງລຸ່ມ ມັກນໍາໄປສູ່ການນໍາໃຊ້ເຄື່ອງມືເຮັດສັນຍາລະດັບສູງກວ່າໃນເວລາມີການເຈລະຈາຕໍ່ລອງຢູ່ລະດັບຕໍ່າ. ລາຍລະອຽດທີ່ກໍານົດໄວ້ໃນເງື່ອນໄຂຂອງສັນຍາ ສ່ວນຫຼາຍມັກຈະເວົ້າແບບລວມໆ ແລະ ກວ້າງເກີນຄວາມເປັນຈິງ, ຊຶ່ງມັກກໍ່ໃຫ້ເກີດສະພາບສັນຍາທັບຊ້ອນ ແລະ ມີການໂຕ້ຖຽງກັນດ້ານເນື້ອທີ່ ແລະ ເຂດແດນ. ໃນຂະນະທີ່ລັດຖະບານລາວໄດ້ຢຸດເຊົາ ແລະ ງົດການໃຫ້ສໍາປະທານລະດັບແຂວງ ກໍຄືລະດັບຊາດ, ເຮົາຕ້ອງມີສະຕິວ່າ ໃນຄວາມເປັນຈິງການສົ່ງເສີມສັນຍາຜູກພັນ ການປູກແບບຕາຍຕົວ ກໍບໍ່ແມ່ນວ່າຈະເປັນວິທີທາງມະຫັດສະຈັນເພື່ອອອກຈາກຄວາມທຸກຍາກແຕ່ຢ່າງໃດເລີຍ. ສັນຍາປູກຝັງກໍເຊັ່ນດຽວ, ສາມາດມີຫຼາຍຈຸດອ່ອນໄດ້ ດັ່ງກໍລະນີຕົວແບບ ໃນການໃຫ້ສໍາປະທານ.

ອິດທິພົນຈາກຊາຍແດນຟາກນັ້ນ ເຮັດໃຫ້ເກີດທຸກຮູບແບບ ການລົງທຶນດ້ານຢາງພາລາຢູ່ ຫຼວງນໍ້າທາ. ສ່ວນຫຼວງຫຼາຍຂອງຜູ້ລົງທຶນທາງການ ບໍ່ພຽງແຕ່ມາຈາກຈີນເທົ່ານັ້ນ, ຫຼາຍໆການລົງທຶນຂະໜາດນ້ອຍທີ່ບໍ່ເປັນທາງການກໍຄ່ອຍໆມາຈາກຊຸມຊົນຈີນທີ່ມາຕັ້ງຖິ່ນຖານໃໝ່, ຜູ້ທີ່ເມື່ອກ່ອນເປັນກໍາມະກອນນິຄົມຂອງລັດ, ຊາວບ້ານຈີນອາຄ່າ ຫລື ລື້ (ໄຕ) ທີ່ຮັ່ງມີ, ນັກທຸລະກິດທີ່ມາຈາກເຂດໃກ້ຊາຍແດນຂອງແຄ້ວນສິບສອງພັນນາ. ແມ້ແຕ່ຊາວບ້ານລາວເອງກໍລົງທຶນເຊັ່ນກັນ; ຊາວບ້ານທີ່ມີສາຍພົວພັນຖານພີ່ນ້ອງແໜ້ນໜາກວ່າກັບ ຄົນທີ່ຢູ່ຊາຍແດນຟາກນັ້ນກໍມີໂອກາດເລີ່ມຕົ້ນໄວກວ່າ, ໄດ້ປູກຫຼາຍກວ່າ ແລະ ໄດ້ຮັບຜົນປະໂຫຍດຈາກກະແສເງິນສິນເຊື່ອໄຫຼເຂົ້າແບບນອກແຜນ, ຮັບຄວາມຮູ້ເຕັກນິກ, ແລະ ຂໍ້ມູນຕະຫຼາດຈາກເພື່ອນຈີນຂອງເຂົາເຈົ້າ ຫລາຍກວ່າ. ຈາກຜົນສະທ້ອນດັ່ງກ່າວ, ໄດ້ເຮັດໃຫ້ມີຄວາມແຕກຕ່າງເລື່ອມລໍ້າເກີດຂຶ້ນໃນກຸ່ມຊາວບ້ານ, ເຊິ່ງເຮັດໃຫ້ມີຄວາມເຄັ່ງຕຶງດ້ານສັງຄົມລະຫວ່າງຜູ້ມີສວນຢາງ ແລະ ບໍ່ມີສວນຢາງເລີຍ. ລາຄາດິນເຂດພູດອຍທີ່ເພີ່ມຂຶ້ນຢ່າງໄວວານໍາໄປສູ່ການຂັດແຍ່ງລະດັບສູງຂຶ້ນກ່ຽວກັບເຂດແດນຂອງບ້ານ (ໂດຍສະເພາະຢ່າງຍິ່ງ ລະຫວ່າງບ້ານຊາວລື້ທີ່ຢູ່ທົ່ງພຽງ ແລະ ບ້ານອາຄ່າຢູ່ເທິງພູ).

ເລື່ອງລາວຢາງພາລາຢູ່ ຫຼວງນໍ້າທາ ແມ່ນເລື່ອງລາວສາຍພົວພັນທາງສັງຄົມ ກໍຄືຊົນເຜົ່າ ແລະ ເສດຖະກິດອັນຍາວນານ ລະຫວ່າງສອງຟາກຊາຍແດນ. ຕາໜ່າງທຸລະກິດລະຫວ່າງສອງປະເທດຊຶ່ງສະທ້ອນເຖິງຄວາມສໍາພັນຍຸດທະສາດລະຫວ່າງກຸ່ມຊົນເຜົ່າຈີນ ແລະ ກຸ່ມຊົນເຜົ່າລາວ, ຜູ້ຕັ້ງຖິ່ນຖານເກົ່າ ແລະ ໃໝ່, ຜູ້ລົງທຶນຂະໜາດໃຫຍ່ ແລະ ນ້ອຍ ກໍຄືການໄປມາຫາສູ່ຂ້າມຊາຍແດນຢູ່ຢ່າງບໍ່ຂາດລະຫວ່າງເພື່ອນມິດ, ພີ່ນ້ອງ ແລະ ເພື່ອນສະຫາຍລຸ້ນລາວຄາວດຽວກັນ. ເຖິງວ່າໃນໄລຍະມໍ່ໆມານີ້ ຈະມີຜູ້ລົງທຶນທາງການ ຂະໜາດໃຫຍ່ທີ່ເຂົ້າມາຢ່າງເປັນໜ້າສັງເກດໄດ້ງ່າຍທີ່ສຸດກໍຕາມ, ມັນເປັນໄປບໍ່ໄດ້ ທີ່ນັກລົງທຶນກຸ່ມນີ້ຈະບໍ່ອີງອາໃສຕາໜ່າງທີ່ມີຢູ່ແລ້ວ ເພື່ອນໍາໃຊ້ຜູ້ຮັບເໝົາຍ່ອຍ, ກໍຄືໃນດ້ານສະໜອງແຮງງານ ແລະ ທັກສະຄວາມຮູ້ໃນຫຼາຍພາສາເພື່ອຊ່ວຍເປັນຂົວເຊື່ອມຕໍ່ທາງວັດທະນາທໍາ ແລະ ພາສາ. ຕ່ອງໂສ້ການຜະລິດ ແລະ ຕະຫຼາດຢາງພາລາຢູ່ ຫຼວງນໍ້າທາ ມີລັກສະນະລະຫວ່າງຊາດ. ນັບແຕ່ການກ້າເບ້ຍຈົນເຖິງການປູກປ່າ, ການປາດເອົານໍ້າຢາງ, ການຕາກ ແລະ ຂາຍຂ້າມຊາຍແດນໄປ, ທັງໝົດນີ້ ບໍ່ມີຂົງເຂດໃດທີ່ຈະພົ້ນຈາກອິດທິພົນຂອງຈີນໃນດ້ານນະໂຍບາຍ, ເຕັກໂນໂລຊີ ຫລື ການຕະຫຼາດ. ຢາງລາວທີ່ໄດ້ຜະລິດອອກ ຖືກສົ່ງໄປສະໜອງໃຫ້ແກ່ຕະຫຼາດຈີນ ແລະ ມັນຈະສືບຕໍ່ເປັນໄປຄືແນວນັ້ນ. ເຖິງວ່າຄວາມຕ້ອງການທີ່ບໍ່ລົດລະຂອງຈີນ ທາງດ້ານຢາງພາລາ ທີ່ຄາດວ່າຍັງຈະສືບຕໍ່, ຄວາມສ່ຽງ ທີ່ມີການຜະລິດຫຼາຍເກີນໄປ ກໍບໍ່ແມ່ນວ່າຈະເປັນໄປບໍ່ໄດ້ເລີຍ ຖ້າເຮົາເບິ່ງຄືນບົດຮຽນໃນອະດີດ. ນອກຈາກນີ້ ກໍຕ້ອງຄໍານຶງເຖິງວົງຈອນເສດຖະກິດທີ່ຫລີກລ້ຽງບໍ່ໄດ້, ກໍຄືຄວາມພະຍາຍາມແບບເອົາແທ້ເອົາວ່າຂອງຈີນຫວ່າງໝໍ່ໆນີ້ ໃນເລື່ອງສົ່ງເສີມການປູກປ່າຢາງພາລາຢູ່ຕ່າງປະເທດ. ໃນກໍລະນີມີການຜະລິດຫຼາຍໂພດ, ຊາວບ້ານ ແລະ ຜູ້ລົງທຶນລາວຈະຕົກຢູ່ໃນຄວາມສ່ຽງ ຈາກຜົນສະທ້ອນຂອງການຕະຫຼາດແບບເພີ່ມທະວີ ຍ້ອນນະໂຍບາຍທີ່ມັກຈະປົກປ້ອງຂອງປະເທດຈີນ ຕໍ່ອຸດສະຫະກໍາຢາງພາລາພາຍໃນປະເທດ. ການສົ່ງອອກຂອງລາວກໍ

ຈະຢູ່ໃນທ່າເສຍປຽບທາງຕະຫຼາດ ເມື່ອທຽບໃສ່ການສົ່ງອອກທີ່ຍົກເວັ້ນພາສີຂອງຜູ້ລົງທຶນທາງການຈີນທີ່ໄດ້ຮັບການສະໜັບສະໜູນຈາກບັນດານະໂຍບາຍທົດແທນການປູກຝິ່ນ. ສິ່ງທີ່ນຳເຂົ້າຫລັກ ໃນກິດຈະກຳປູກຢາງແມ່ນມີແຕ່ແຮງງານເທົ່ານັ້ນ ຍ້ອນການປູກຂະຫຍາຍຕົວອອກເກີນຄວາມສາມາດຂອງແຮງງານທ້ອງຖິ່ນ ຫຼວງນໍ້າທາ, ການຂາດແຄນແຮງງານ ແລະ ການເຄື່ອນຍ້າຍພາຍໃນປະເທດຈາກບັນດາແຂວງພູດອຍຕາເວັນອອກສ່ຽງເໜືອ ແລະ ຈາກພາຍນອກ-ຄືຈີນ-ໄດ້ປະກົດຕົວແລ້ວ ແລະ ຈະສືບຕໍ່ເພີ່ມທະວີໃນປີຕໍ່ໆໄປ.

ສຳລັບ ຫຼວງນໍ້າທາແລ້ວ ການປູກຢາງຍັງຄົງເປັນປະກົດການຂ້ອນຂ້າງໃໝ່ ຖ້າທຽບໃສ່ແຄ້ວນ ສິບສອງພັນນາ ຊຶ່ງໄດ້ປູກຢາງມາແຕ່ຊຸມປີ 1950, ໃນຕອນຕົ້ນຖືວ່າເປັນຫນຶ່ງໃນການສູ້ຊົນສ້າງປະເທດຄອມມຸຍນິດ. ເມື່ອປຽບທຽບໃສ່ປະຫວັດ ແລະ ສະພາບການພັດທະນາຢາງພາລາໃນປັດຈຸບັນຂອງ ຫຼວງນໍ້າທາ ແລະ ສິບສອງພັນນາ, ເຮົາຈະເຫັນໄດ້ວ່າທັງສອງມີຄວາມຄ້າຍຄືກັນຈຳນວນຫນຶ່ງ ໃນນັ້ນແມ່ນ ຄວາມກົດດັນ ລະຫວ່າງຜູ້ປູກລາຍໃຫຍ່ ແລະ ຊຸມຊົນທ້ອງຖິ່ນ, ຄວາມບໍ່ກ້ຳເກິ່ງກັນໃນໝູ່ຊາວສວນຢາງຂະໜາດນ້ອຍ, ຮູບແບບສະໜອງແຮງງານ, ບັນດາສິ່ງທ້າທາຍດ້ານການຄຸ້ມຄອງປ່າໄມ້ ແລະ ດິນ. ແຕ່ສອງຝ່າຍກໍມີຄວາມແຕກຕ່າງໃນດ້ານລະດັບການຊ່ວຍເຫລືອຂອງລັດຖະບານຕໍ່ຊາວບ້ານ, ປະສິດທິຜົນດ້ານວຽກງານສົ່ງເສີມເຕັກນິກ ແລະ ດ້ານຄວບຄຸມຄຸນນະພາບ. ເຂດສິບສອງພັນນາສະໜອງໃຫ້ ຫຼວງນໍ້າທາ ກ່ຽວກັບບົດຮຽນ ໃນການລິເລີ່ມ ແລະ ຂໍ້ຄວນລະວັງໃນການພັດທະນາອຸດສາຫະກຳຢາງພາລາ ຂອງຕົນເອງ, ເປັນຕົ້ນແມ່ນ: ການສະໜັບສະໜູນຂອງລັດຖະບານທາງດ້ານການຕັດສິນໃຈ ທີ່ມີປະສິດທິຜົນຖືວ່າ ເປັນປັດໄຈທີ່ຈຳເປັນເພື່ອປັບປຸງຊີວິດການເປັນຢູ່ຂອງຊຸມຊົນທ້ອງຖິ່ນຕ່າງໆ. ເຖິງຢ່າງໃດກໍດີ ຖ້າບໍ່ມີຄວາມຮອບຄອບ ໃນດ້ານປະຕິບັດ ບັນດາຜົນສຳເລັດທັງຫຼາຍ ກໍສາມາດສ້າງຄວາມເສຍຫາຍສູງແບບແກ້ບໍ່ໄດ້ ທີ່ຈະມີຕໍ່ສິ່ງແວດລ້ອມທຳມະຊາດ.

ສະຫຼຸບລວມແລ້ວ ການສຶກສານີ້ ໄດ້ໃຫ້ທັດສະນະແນວຄິດກ່ຽວກັບການຂະຫຍາຍຕົວ ຢ່າງກວ້າງຂວາງ ແລະ ວ່ອງໄວຂອງການປູກຢາງພາລາຢູ່ ຫຼວງນໍ້າທາ ໂດຍໄດ້ປຽບທຽບ ການຈັດຕັ້ງປະຕິບັດຕົວຈິງ ທີ່ເກີດຂຶ້ນ ຢູ່ທັງສອງຟາກຊາຍແດນ ຊຶ່ງໃນນີ້ ໄດ້ສຸມໃສ່ສາຍພົວພັນລະຫວ່າງຜູ້ມີສ່ວນກ່ຽວຂ້ອງ (ລະຫວ່າງຊາວບ້ານ, ລັດຖະບານ, ແລະ ຜູ້ລົງທຶນ), ປະເພດການລົງທຶນ ແລະ ຕ່ອງໂສ້ການຕະຫຼາດລະຫວ່າງປະເທດ. ການສຶກສານີ້ມີຂໍ້ສະເໜີສະເພາະໃນບາງຂົງເຂດດັ່ງຕໍ່ໄປນີ້:

1). ສັນຍາຜູກພັນປູກຢາງພາລາ: ມີຄວາມຈຳເປັນຢ່າງຮີບດ່ວນທີ່ຕ້ອງໂຈະໄວ້ຊົ່ວຄາວການອະນຸມັດໂຄງການສັນຍາຜູກພັນ ການປູກໃໝ່ຂະໜາດໃຫຍ່ ຍ້ອນເຫັນວ່າຍັງມີຫຼາຍໆບັນຫາ ທີ່ຍັງບໍ່ທັນໄດ້ຮັບການແກ້ໄຂ ເປັນຕົ້ນແມ່ນ ນັກລົງທຶນໃນປັດຈຸບັນ ແລະ ເນື້ອທີ່ເຂດແດນ ທີ່ລະບຸໄວ້ ໃນຂໍ້ຕົກລົງສັນຍາ. ເພື່ອຮັບປະກັນໃຫ້ຊາວບ້ານ ຊຶ່ງປັດຈຸບັນຖືກ*ລັອກ* ພາຍໃຕ້ສັນຍາຂໍ້ຕົກລົງຂະໜາດໃຫຍ່ ໃຫ້ເຂົາເຈົ້າໄດ້ຮັບຜົນປະໂຫຍດນັ້ນ, ສິ່ງສຳຄັນທີ່ສຸດແມ່ນຕ້ອງສະໜອງສິນເຊື່ອ ທີ່ຮັບປະກັນ, ມີການສົ່ງເສີມດ້ານເຕັກນິກ ແລະມີບັນດາມາດຕະຖານຄ່າແຮງງານຕ່ຳສຸດ. ນອກນັ້ນ ກໍຕ້ອງພິຈາລະນາ ເປີເຊັນການແບ່ງປັນຜົນປະໂຫຍດທີ່ກ່ຽວຂ້ອງກັບຮູບແບບ 1+4 ຄືນໃໝ່, ແກ້ໄຂປັບປຸງບັນດາສັນຍາຂໍ້ຕົກລົງ ແລະ ຂັ້ນຕອນຂະບວນການສັນຍາ (ໃນສັນຍາໃດກໍຕາມບໍ່ໃຫ້ກຳນົດຈຳນວນເຮັກຕາແບບຕາຍຕົວ ຫລື ກຳນົດສິດຜູກຂາດຜູ້ດຽວ), ເສີມຂະຫຍາຍການຕິດຕາມຜູ້ລົງທຶນ ແລະ ມີກຸ່ມເອກະລາດໃຫ້ການສະໜັບສະໜູນໃນການໄກ່ເກ່ຍໃຫ້ແກ່ຊຸມຊົນທ້ອງຖິ່ນ.

2). ການຄຸ້ມຄອງບໍລິຫານດິນ ແລະ ປ່າ: ການກຳນົດຢ່າງຈະແຈ້ງກ່ຽວກັບການມອບດິນ ແລະ ການດຳເນີນການອອກໃບຕາດິນໂດຍໄວ ແມ່ນມີຄວາມສຳຄັນ ຊຶ່ງຈະຮັບປະກັນໃຫ້ຊາວບ້ານເຂົ້າເຖິງດິນ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ຕ່າງໆ. ມັນມີຄວາມຈຳເປັນຕ້ອງມີລະບົບການສັງເກດຕິດຕາມ ຕົວຈິງເພື່ອໃຫ້ໄດ້ຂໍ້ມູນຕົວເລກທີ່ຊັດເຈນ ຖືກຕ້ອງ ກ່ຽວກັບສວນຢາງຢູ່ ຫຼວງນໍ້າທາ ແລະ ເພື່ອຕິດຕາມເບິ່ງວ່າມີການປູກຝັງທີ່ສອດຄ່ອງກັບມາດຕະຖານເໝາະສົມ ແລະ ຕາມແຜນນຳໃຊ້ທີ່ດິນ ຫລື ບໍ່.

3). ການຕະຫຼາດ: ໃຫ້ຂໍ້ມູນການຕະຫຼາດແກ່ຊາວບ້ານ. ໃຫ້ຊາວບ້ານມີອຳນາດທັກສະ ດ້ານການຄ້າ ແລະ ພາສາໂດຍຜ່ານການຈັດຕັ້ງກຸ່ມ. ຄວນເລີ່ມຕົ້ນເຈລະຈາລະຫວ່າງລັດຖະບານແຕ່ດຽວນີ້ ກ່ຽວກັບການຄຸ້ມຄອງ ການສົ່ງອອກຂະໜາດໃຫຍ່ໃນອະນາຄົດ. ສົ່ງເສີມໃຫ້ຊາວບ້ານສ້າງລາຍຮັບດ້ວຍຫຼາຍຮູບແບບ ເພື່ອໃຫ້ສາມາດ ເອົາຕົວລອດໄດ້ດີກວ່າເກົ່າ ໃນກໍລະນີທີ່ມີສະພາບບໍ່ແນ່ນອນດ້ານລາຄາຢາງພາລາໃນອະນາຄົດ.

ພາຍໃຕ້ເງື່ອນໄຂ ຂອງການຂະຫຍາຍຕົວຢ່າງກວ້າງຂວາງ ແລະ ວ່ອງໄວຂອງການປູກຢາງ ພາລາຢູ່ ແຂວງ ຫຼວງນໍ້າທາ, ການຊ່ວຍເຫລືອເພື່ອການພັດທະນາຊຸມຊົນ ມີບົດບາດສຳຄັນທີ່ຂາດບໍ່ໄດ້ ທີ່ຈະຕ້ອງໄກ່ເກ່ຍຂໍ້ຂັດ ແຍ່ງ, ປັບປຸງການຄຸ້ມຄອງຂອງຝ່າຍລັດ, ສ້າງຄວາມເຂັ້ມແຂງ ທາງລະບຽບການ, ຫຼຸດຜ່ອນຄວາມເສຍຫາຍແກ່ ສິ່ງແວດລ້ອມໃຫ້ມີໜ້ອຍທີ່ສຸດ, ແລະ ສິ່ງສຳຄັນທີ່ສຸດແມ່ນ ການໂຄສະນາຂົນຂວາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ອຳນາດ ການປົກຄອງທ້ອງຖິ່ນ ເຖິງວ່າຮູບແບບວິທີໃຫ້ການຊ່ວຍເຫລືອ ແລະ ພັດທະນາຂອງຈີນຈະແຕກ ຕ່າງກັບຄວາມເຂົ້າໃຈດັ້ງເດີມຂອງຝ່າຍຕາເວັນຕົກກໍຕາມ, ແຕ່ມັນກໍຍັງມີພື້ນຖານທີ່ທັງສອງຖືສຳຄັນຢູ່. ຈີນ ກຳນົດໄວ້ວ່າ “ການຮ່ວມມືກັບອົງການຈັດຕັ້ງສາກົນ” ແມ່ນຫນຶ່ງໃນບັນດາບູລິມະສິດສູງຂອງຕົນ ເພື່ອຄວາມຄືບ ໜ້າໃນການພັດທະນາໃນຕ່າງປະເທດ ເພື່ອທົດແທນໃຫ້ແກ່ການປູກຝິ່ນ, ເພື່ອເປັນເວທີ ສົນທະນາ ແລະ ແລກ ປ່ຽນຄວາມຄິດເຫັນກັນໄດ້. ທາງຝ່າຍໃຫ້ການຊ່ວຍເຫລືອ ແລະ ພັດທະນາຊຸມຊົນ ກໍຈະໄດ້ຮັບຜົນປະໂຫຍດ ຈາກການຮ່ວມມືແບບເພີ່ມທະວີກັບສະຖາບັນສຶກສາ ແລະ ອົງການຈັດຕັ້ງບໍ່ສັງກັດລັດຂອງຈີນ ທັງນີ້ເພື່ອໃຫ້ ມວນຊົນໃນຈີນເອງໄດ້ເຂົ້າໃຈດີກວ່າເກົ່າ ແລະ ສາມາດພິຈາລະນາຢ່າງໃກ້ຊິດດ້ານການດຳເນີນທຸລະກິດຂອງ ບັນດາບໍລິສັດຈີນຢູ່ຕ່າງປະເທດ.

# ພາກທີ 1
# ອະລຳພະບົດ

ໃນຊຸມປີຜ່ານມາທີ່ບໍ່ນານມານີ້, ຢາງພາລາໄດ້ກາຍເປັນຈຸດທີ່ໄດ້ຮັບການເອົາໃຈໃສ່ ເມື່ອໃດຫາກມີການສົນທະນາດ້ານນະໂຍບາຍຢູ່ ແຂວງ ຫຼວງນ້ຳທາ. ບໍ່ວ່າຈະແມ່ນຫົວຂໍ້ລົງທຶນຕ່າງປະເທດ, ຫຼຸດຜ່ອນຄວາມທຸກຍາກ, ຄຸ້ມຄອງຊັບພະຍາກອນທຳມະຊາດ, ການນຳໃຊ້ດິນ, ຕ່ອງໂສ້ມູນຄ່າ, ຫລື ການດຳລົງຊີວິດຂອງຊຸມຊົນ ເທື່ອໃດເທື່ອນັ້ນ ເລື່ອງຢາງພາລາຈະຖືກນຳເຂົ້າໄປເປັນຫົວຂໍ້ປຶກສາຫາລືກັນ. ບາງຄົນກໍດີໃຈຊົມເຊີຍ ຖືວ່າມັນເປັນໂອກາດດີ ທີ່ຈະຊ່ວຍໃຫ້ຊາວບ້ານສ່ວນຫຼວງຫຼາຍຫຼຸດອອກຈາກສະພາບທຸກຍາກ ແຕ່ກໍມີບາງຄົນ, ທີ່ຢ້ານວ່າມັນຈະສ້າງຜົນກະທົບຮ້າຍແຮງທີ່ບໍ່ມີຊ້ອນໄວ້ຕໍ່ສິ່ງແວດລ້ອມ ແລະ ພ້ອມໆກັນນັ້ນ ຜົນປະໂຫຍດ ຕົວຈິງທີ່ຊາວບ້ານລາວທີ່ຈະໄດ້ຮັບ ກໍຍັງຄົງຄາດຄະເນບໍ່ໄດ້ ແລະ ຕົກຢູ່ໃນສະພາບສ່ຽງທີ່ຈະຖືກສວຍໃຊ້.

ເຖິງວ່າ ຈະມີຄວາມເຫັນຕ່າງໆນາໆ ທີ່ແຕກຕ່າງກັນກໍຕາມ, ພຽງແຕ່ສຳຫຼວດເບິ່ງທິວທັດຫຼວງນ້ຳທາແບບຜິວເຜີນ ກໍຈະເຫັນພາບແຫ່ງຄວາມໝັ້ນໃຈວ່າ ຕາມເຈີ້ຍພູທີ່ຍັງບໍ່ທັນມີແຖວຕົ້ນຢາງອ່ອນລຽງລາຍເປັນລະບຽບເທື່ອນັ້ນ ກໍຈະເຫັນວ່າເພິ່ນກຳລັງຂຸດຊ່າວຢ່າງຮີບຮ້ອນ ແລະ ກຽມພັກຂັ້ນໃດ ເພື່ອລະດູປູກຝັງຕໍ່ໄປ; ເຮົາຈະເຫັນສວນກ້າເບ້ຍເປັນຈຸດໆຍັງຍາຍກັນໄປຢູ່ທຸກບ່ອນຕາມເສັ້ນທາງຕ່າງໆ ກໍຄືຢູ່ເດີ່ນຫລັງບ້ານຂອງປະຊາຊົນ; ເຫັນລົດຈັກແລ່ນໄປມາມີກິ່ງງ່າຢາງທີ່ໄດ້ຕອນມາແລ້ວມັດໄວ້ທາງຫລັງ; ປ້າຍຕາມຖະໜົນແຕ້ມມາໃໝ່ໆໂດຍບໍລິສັດຈີນທີ່ສົ່ງເສີມ ປ່າວປະກາດຢ່າງໜັກແໜ້ນໃຈວ່າ ຢາງພາລາແມ່ນທາງອອກທີ່ຈະນຳຜົນກຳໄລດີທຽບໃສ່ການປູກຝິ່ນ. ປ່າຕົ້ນຢາງທີ່ໃຫຍ່ແລ້ວ ແລະ ໃນໄລຍະ ການປາດຢາງທີ່ບ້ານ ຫາດຍາວ ແລະ ຢູ່ຟາກນັ້ນຂອງຊາຍແດນທີ່ແຄວ້ນສິບສອງພັນນາ ເປັນສິ່ງຊັກຊວນໃຫ້ຊາວສວນ ແຂວງ ຫຼວງນ້ຳທາທີ່ປູກຕົ້ນຢາງເຫັນອະນາຄົດທີ່ສົດໃສ ແລະ ຮັບປະກັນ. ບໍ່ຕ້ອງສົງໃສວ່າ ແຂວງ ຫຼວງນ້ຳທາ ຊຶ່ງຫຼາຍໆຄົນເຂົ້າໃຈວ່າເປັນນິມິດໝາຍຕໍ່ອະນາຄົດຂອງແຂວງອື່ນໆ ທີ່ພາກເໜືອຂອງປະເທດ, ໄດ້ກ້າວເດີນໄປສູ່ສະພາບປູກຢາງພາລາທີ່ຂະຫຍາຍຕົວຢ່າງໄວວາ ແລະ ກວ້າງຂວາງຢ່າງແທ້ຈິງ.

## 1.1 ການສຶກສາຜ່ານມາ

ການຂະຫຍາຍຕົວ ທີ່ກວ້າງຂວາງ ຂອງການປູກຢາງພາລາ ຢູ່ ຫຼວງນ້ຳທາ (ແລະ ຢູ່ແຫ່ງອື່ນໆຂອງລາວ) ຊຶ່ງເປັນຫົວຂໍ້ຖົກຖຽງຫຼາຍສົມຄວນແມ່ນປະກົດການສະລັບສັບຊ້ອນທີ່ປະກອບດ້ວຍຫຼາຍປັດໄຈ. ການສຶກສາຜ່ານມາໄດ້ເວົ້າເຖິງຫົວຂໍ້ຢາງພາລາ ໃນລາວຈາກຫຼາຍໆແງ່ມຸມ. ຂ້າພະເຈົ້າຢາກເນັ້ນ ສອງຈຸດ: ການສຶກສາຂອງ Alton, Bluhm and Sananikone (2005) ຊື່ວ່າ "ດ້ານໜຶ່ງຂອງການປູກຢາງ/Para Rubber Study" ໄດ້ວິເຄາະທາງດ້ານເຕັກນິກການພັດທະນາຢາງພາລາຢູ່ ຫຼວງນ້ຳທາ ໂດຍອີງຕາມຂໍ້ມູນພາກສະໜາມ ທີ່ໄດ້ເກັບກຳໃນລະຫວ່າງເດືອນຕຸລາ-ທັນວາ 2005. ການສຶກສານີ້ ໄດ້ສຸມໃສ່ການປະເມີນຄວາມຢູ່ລອດທາງດ້ານເສດຖະກິດຂອງສວນປູກຢາງຂະໜາດນ້ອຍ, ເຕັກໂນໂລຊີກ່ຽວກັບຢາງ ແລະ ຜົນສະທ້ອນຂອງມັນຕໍ່ສິ່ງແວດລ້ອມ. ພ້ອມກັນນັ້ນ ກໍເວົ້າເຖິງການປະເມີນຕີລາຄາໄລ່ລຽງຢ່າງເລິກເຊິ່ງດ້ານຜົນປະໂຫຍດໃນລະດັບຄົວເຮືອນ ທີ່ຊາວບ້ານຫາດຍາວໄດ້ຮັບ, ນີ້ແມ່ນບ້ານ ທີ່ປະສົບຜົນສຳເລັດ ໃນການປູກຢາງພາລາ ບ້ານທຳອິດ. ໃນລັກສະນະດຽວກັນ, Manivong and Cramb (2006) ຊຶ່ງໄດ້ນຳໃຊ້ເຄື່ອງມືຕົວແບບຊີວະເສດຖະກິດ ແລະ ການເງິນກໍໄດ້ວິເຄາະດ້ານເສດຖະກິດຂອງທຸລະກິດສວນຢາງຂະໜາດນ້ອຍຢູ່ພາກເໜືອຂອງລາວ. ນອກຈາກຢູ່ ຫຼວງນ້ຳທາ ແລ້ວ, Alton et. al. (2005) ໄດ້ທຳການປຽບທຽບໂດຍໄດ້ອ້າງອີງເຖິງການປູກຢາງຢູ່ພາກເໜືອໄທ ແລະພາກໃຕ້ຈີນ- ຢຸນນານ. ຍ້ອນລະບົບຄຸ້ມຄອງຢູ່ຈີນ ຂໍ້ມູນກ່ຽວກັບຈີນຈຶ່ງຖືກຈຳກັດ.

ການສຶກສາຂອງສະຖາບັນ ຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດຂອງລາວ/NAFRI (2007) ຊື່ "ປະເດັນຫລັກໃນການປູກຢາງພາລາຂະໜາດນ້ອຍຢູ່ ແຂວງ ອຸດົມໄຊ ແລະ ຫຼວງພະບາງ, ສປປ ລາວ" ໄດ້ທຳການປະ

ເມີນຕີລາຄາແບບຮອບດ້ານກ່ຽວກັບໂອກາດ ແລະ ສິ່ງທ້າທາຍ ທີ່ຜູ້ປູກຕົ້ນຢາງຂະໜາດນ້ອຍໄດ້ພົບເຫັນຢູ່ສອງແຂວງພາກເໜືອຂອງລາວ. ວຽກສະໜາມໄດ້ດຳເນີນໄປໃນລະຫວ່າງ ເດືອນພະຈິກ 2006 ຫາ ກຸມພາ 2007 ແລະ ການວິເຄາະໄດ້ສັງເກດເບິ່ງບັນດາປັດໄຈກ່ຽວຂ້ອງຕ່າງໆ, ລວມທັງບັນຫາການຄຸ້ມຄອງທີ່ດິນ, ປະເດັນເຕັກນິກ, ລະບົບການດຳລົງຊີວິດ ແລະ ລະບົບສັນຍາປູກຢາງ. ການສຶກສາຄັ້ງນີ້ ໄດ້ສະທ້ອນໃຫ້ເຫັນເຖິງຄວາມຮຽກຮ້ອງຕ້ອງການ ທີ່ນັບມື້ ນັບເພີ່ມທະວີໃຫ້ແກ້ໄຂປະເດັນຕ່າງໆ ທີ່ພົວພັນເຖິງການລົງທຶນຂອງຕ່າງປະເທດ, ໂດຍສະເພາະຢ່າງຍິ່ງໃນຂົງເຂດສັນຍາຜູກພັນ ດ້ານການປູກຝັງ ແລະ ຕ່ອງໂສ້ການຕະຫຼາດ.

## 1.2 ຂອບເຂດການສຶກສາ

ຄຽງຄູ່ກັບການຄົ້ນຄວ້າຜ່ານມາ, ການສຶກສາຄັ້ງນີ້ໄດ້ສຸມໃສ່ ບັນດາຕາໜ່າງ ລະຫວ່າງຊາຍແດນ, ຕ່ອງໂສ້ດ້ານການຕະຫຼາດ ແລະ ປະເພດການລົງທຶນໃນເລື່ອງການຂະຫຍາຍຕົວຢ່າງວ່ອງໄວຂອງການປູກສວນຢາງຢູ່ ແຂວງ ຫຼວງນໍ້າທາ. ສື່ມວນຊົນໄດ້ອອກຂ່າວຢ່າງກວ້າງຂວາງ ພ້ອມນີ້ ກໍໄດ້ຈັດກອງປະຊຸມ ເພື່ອປຶກສາກ່ຽວກັບການລົງທຶນຕ່າງປະເທດໃນຂະແໜງຢາງພາລາໃນລາວ, ໂດຍສະເພາະຢ່າງຍິ່ງ ການລົງທຶນຂອງຈີນ. ໃນເວລາຂຽນລາຍງານນີ້ ການລົງທຶນຂອງຈີນໄດ້ກວມເອົາທັງໝົດຂອງການລົງທຶນຕ່າງປະເທດໃນຂະແໜງຢູ່ຫຼວງນໍ້າທາ, ຊຶ່ງກໍບໍ່ແມ່ນເລື່ອງແປກ ຍ້ອນປະເທດຈີນມີຊາຍແດນຕິດຈອດກັບລາວ. ເຖິງຢ່າງໃດກໍຕາມ ສັງເກດວ່າ ຍັງຂາດເອກະສານ ແລະ ການວິເຄາະແບບເປັນລະບົບດ້ານແນວໂນ້ມການລົງທຶນ ແລະ ຜົນກະທົບດ້ານເສດຖະກິດສັງຄົມ. ສຳລັບຊາວກະສິກອນລາວ ແລະ ເຈົ້າໜ້າທີ່ລັດລະດັບທ້ອງຖິ່ນ ເຫັນວ່າມັນເປັນເລື່ອງປະຫຼາດ ບໍ່ເຂົ້າໃຈ ທີ່ຜູ້ລົງທຶນຕ່າງປະເທດທັງຂະໜາດໃຫຍ່ ແລະ ນ້ອຍ ຫລັ່ງໄຫຼເຂົ້າມາຢ່າງໄວວາ, ໂດຍສະເພາະໃນບໍ່ເທົ່າໃດປີຜ່ານມານີ້. ດັ່ງນັ້ນ, ຈຸດປະສົງຂອງບົດລາຍງານນີ້ ແມ່ນສຶກສາສາຍພົວພັນ ໃນບັນດາຜູ້ທີ່ມີສ່ວນກ່ຽວຂ້ອງພ້ອມທັງເບິ່ງບັນດາປັດໄຈການຕະຫຼາດ ແລະ ນະໂຍບາຍ ຕະຫຼອດຄວາມຍາວຂອງເສັ້ນຊາຍແດນທາງເໜືອຂອງ ແຂວງ ຫຼວງນໍ້າທາ ທີ່ຕິດກັບ ແຂວງ ຢຸນນານ ຂອງປະເທດຈີນ. ພ້ອມດຽວກັນ, ຂ້າພະເຈົ້າກໍຈະສັງເກດປຽບທຽບເບິ່ງເສັ້ນທາງການພັດທະນາຢາງພາລາຢູ່ ແຂວງ ຫຼວງນໍ້າທາ ແລະ ຢຸນນານ. ພິເສດ ຂ້າພະເຈົ້າຈະຍົກໃຫ້ເຫັນປະເດັນຫລັກດັ່ງຂ້າງລຸ່ມ:

- ພາບລວມດ້ານການປູກຢາງ ພາລາ ຢູ່ ແຂວງ ຫຼວງນໍ້າທາ ເປັນຄືແນວໃດ? ມີຢາງຢູ່ຫຼາຍປານໃດ? ຊາວບ້ານໄດ້ປູກຫຼາຍຊ່ຳໃດ ແລະ ບໍລິສັດລາວ ແລະ ຕ່າງປະເທດໄດ້ປູກຫຼາຍປານໃດ?
- ເປັນຫຍັງຈຶ່ງມີການພັດທະນາສວນຢາງຢ່າງໄວວາກວ້າງຂວາງແນວນີ້ຢູ່ຫຼວງນໍ້າທາ ໃນບໍ່ເທົ່າໃດປີຜ່ານມາ? ເປັນຫຍັງຈຶ່ງມີບໍລິສັດ ແລະ ຜູ້ລົງທຶນຕ່າງປະເທດຫຼາຍປານນີ້ ເມື່ອທຽບໃສ່ສິບປີກ່ອນ? ອັນໃດຄືປັດໄຈທີ່ເຮັດໃຫ້ເປັນເຊັ່ນນີ້?
- ໃຜຄືຜູ້ລົງທຶນປູກຢາງພາລາຕ່າງປະເທດຢູ່ ຫຼວງນໍ້າທາ? ເຂົາເຈົ້າມີລັກສະນະພິເສດທົ່ວໄປຄືແນວໃດ ແລະ ເຂົາເຈົ້າດຳເນີນງານແບບໃດ?
- ມີການພັດທະນາສວນຢາງທີ່ແຕກຕ່າງກັນປະເພດໃດແດ່ ຢູ່ຫຼວງນໍ້າທາ ແລະ ມັນມີຄວາມໝາຍ ທາງດ້ານເສດຖະກິດສັງຄົມ ຄືແນວໃດ? ຜູ້ມີສ່ວນກ່ຽວຂ້ອງ (ລັດຖະບານ, ຜູ້ລົງທຶນ ແລະ ຊາວສວນ) ມີບົດບາດແບບໃດໃນແຕ່ລະສະພາບ ແລະ ເພິ່ນຈັດການກັບມັນດ້ວຍຮູບແບບໃດ?
- ຕ່ອງໂສ້ການຕະຫຼາດຊາຍແດນຂະຫຍາຍຕົວໄປແບບໃດ?
- ຫຼວງນໍ້າທາ ແລະ ຢຸນນານມີຄວາມຄ້າຍຄືກັນ ແລະ ແຕກຕ່າງກັນແນວໃດໃນດ້ານເສັ້ນທາງໄປສູ່ການພັດທະນາຢາງພາລາ? ຫຼວງນໍ້າທາ ສາມາດຖອດຖອນບົດຮຽນຫຍັງແດ່ ຈາກປະສົບການຜ່ານມາຂອງຈີນ?




## ພູມີປະເທດ

ແຂວງ ຫຼວງນໍ້າທາ ຕັ້ງຢູ່ທິດຕາເວັນຕົກສ່ຽງເໜືອຂອງລາວ, ດ້ານປົກຄອງແບ່ງອອກເປັນຫ້າເມືອງຄື: ເມືອງ ນໍ້າທາ, ສິງ, ລອງ, ວຽງພູຄາ ແລະ ນາແລ. ຈຸດສຸມດ້ານພູມສາດຂອງການສຶກສານີ້ແມ່ນເມືອງ ສິງ ແລະ ລອງ; ນອກນີ້ກໍໄດ້ເອົາຂໍ້ມູນບາງຢ່າງ ຈາກເມືອງນໍ້າທາ ແລະ ເມືອງສິງ ຊຶ່ງມີຊາຍແດນຕິດກັບເຂດສິບສອງພັນນາຂອງແຂວງຢຸນນານ, ປະເທດຈີນໄປທາງຕາເວັນອອກສ່ຽງເໜືອ ແລະ ມຽນມາ ຢູ່ທາງຕາເວັນຕົກຂ້າມແມ່ນໍ້າຂອງໄປ. ເມືອງລອງຕິດກັບເມືອງສິງໄປທາງຕາເວັນຕົກສ່ຽງໃຕ້, ຂ້າມນໍ້າຂອງໄປກໍແມ່ນມຽນມາ ແຕ່ບໍ່ມີຊາຍແດນຕິດກັບຈີນ. ເຖິງຢ່າງໃດກໍດີ ມັນກໍຢູ່ໃກ້ກັບພາກໃຕ້ຢຸນນານ ຍ້ອນມີການຂົນສົ່ງທາງນໍ້າ ແລະ ຖະໜົນເລກທີ 17 ຊຶ່ງສາມາດຫຼຽວໄດ້ທຸກລະດູການນັບແຕ່ປີ 2000 ເປັນຕົ້ນມາ ແມ່ນຜ່ານຕົວເມືອງສິງ ແລະ ລອງ ແລະ ຍາວໄປຮອດທ່າເຮືອຊຽງກົກທາງທິດຕາເວັນຕົກ (ທົບທາງ 17 B) ແລະທາງທິດຕາເວັນອອກໄປຫາຈີນທີ່ດ່ານກວດກາຊາຍແດນ ເຂດປາງທອງ-ເມືອງມາງ ຂອງ ຈີນ (ເສັ້ນທາງ 17 A). ມັນຍັງຕິດກັບເມືອງ ນໍ້າທາ ໄປທາງທິດຕາເວັນອອກສຽງໃຕ້ຂອງ ເມືອງສິງ. ເມືອງ ຫຼວງນໍ້າທາ ມີຊາຍແດນຕິດກັບເຂດສິບສອງພັນນາໄປທາງທິດເໜືອ ແລະ ຍັງມີດ່ານກວດ ກາຊາຍແດນສາກົນ ບໍ່ເຕັນ-ໂມຮານ. ເມື່ອມໍ່ໆມານີ້ ເມືອງນີ້ໄດ້ຕິດຈອດກັບຖະໜົນເລກທີ 3 ຊຶ່ງເອີ້ນກັນວ່າ ທາງຫຼວງສາກົນຄຸນໝິງ-ບາງກອກ, ເສັ້ນທາງນີ້ໄປເຖິງຫ້ວຍຊາຍ, ບໍ່ແກ້ວ ຊຶ່ງຖືວ່າເປັນປະຕູສໍາຄັນທີ່ເປີດໄປສູ່ພາກເໜືອຂອງ ໄທ.

ທິວທັດເຂດນີ້ ໂດຍລວມເປັນພູດອຍສະລັບກັບຮ່ອມພູ ທີ່ມີນາເຂົ້າ ແລະ ສາຍນໍ້າ. ເມືອງ ສິງມີເນື້ອທີ່ທັງໝົດ 17,980 ຮຕ, ໃນນັ້ນ 4,744 ຮຕ ແມ່ນນາເຂົ້າ. ເນື້ອທີ່ທັງໝົດຂອງເມືອງລອງ ໃຫຍ່ກວ່າເມືອງສິງ ປະມານສາມເທົ່າ, ແຕ່ເຂດພູດອຍຊໍ້າພັດມີໜ້ອຍກວ່າ ຄືມີພຽງແຕ່ໜຶ່ງສ່ວນສາມຂອງເຂດພູດອຍຂອງເມືອງສິງ (Lyttleton et. al., 2004).

ຍ້ອນການຄົ້ນຄວ້ານີ້ ມີຈຸດສຸມຢູ່ຈຸດຊາຍແດນ-ເມືອງສິງ, ລອງ ແລະ ນໍ້າທາ ຊຶ່ງມີຊາຍແດນຍາວຢຽດຕິດກັບເຂດສິບສອງພັນນາ ຈຶ່ງກາຍເປັນຈຸດທີ່ດີເລີດສໍາລັບການສັງເກດ ແລະສໍາຫຼວດເບິ່ງສະພາບຈຸດທີ່ຕັ້ງຍຸດທະສາດທາງພູມສາດ ແລະ ຕາໜ່າງຂົນສົ່ງຂອງເມືອງເລົ່ານີ້ເຮັດໃຫ້ມັນ ກາຍເປັນສູນການຄ້າຂາຍຊາຍແດນໂດຍຫລີກລ້ຽງຫລີບໍ່ໄດ້. ເຂດນີ້ຍັງເປັນເຂດຫຼາກຫຼາຍດ້ານກຸ່ມຊົນເຜົ່າ ໃນນັ້ນມີອາຄ່າ, ໄຕລື້, ໄຕດໍາ, ໄຕເໜືອ, ມົ້ງ, ຂະມຸ, ຢ້າວ, ຜູ້ນ້ອຍ, ແລນແຕນ, ມູເຊີ ແລະ ກຸ່ມອື່ນໆອີກ. ຍ້ອນມີ ຮູບແບບການຢູ່ອາໃສ ແລະ ມີປະຫວັດເຄື່ອນຍ້າຍໄປມາ ລະຫວ່າງຊາຍແດນແບບປະເພນີຂອງເຂົາເຈົ້າຢູ່ແລ້ວ ຈຶ່ງຖືວ່າຄວາມຫຼາກຫຼາຍດ້ານຊົນເຜົ່າແມ່ນສ່ວນນຶ່ງຂອງບັນດາກິດຈະກໍາເສດຖະກິດຊາຍແດນ, ຊຶ່ງລວມໃນນັ້ນ ກໍມີທັງເລື່ອງທີ່ພົວພັນກັບຢາງພາລາ.

ກິ່ງແຂວງເອກະລາດ ສິບສອງພັນນາ ຕັ້ງຢູ່ແຫຼມໃຕ້ສຸດຂອງ ແຂວງ ຢຸນນານ ຂອງຈີນ ທີ່ເຄີຍມີສະພາບຄ້າຍຄືກັບພາກເໜືອຂອງລາວໃນປັດຈຸບັນໃນແງ່ທິວທັດທໍາມະຊາດ, ສະພາບດິນຟ້າອາກາດ, ການປະກອບທາງຊົນເຜົ່າ ແລະ ວັດທະນະທໍາ ຕະຫລອດເຖິງການພັດທະນາເສດຖະກິດ ແລະ ການສ້າງປະເທດຂອງຈີນໃນໄລຍະເຄິ່ງສຸດ

ທ້າຍຂອງສັດຕະວັດຜ່ານມາ ຈຶ່ງໄດ້ເຮັດໃຫ້ມີການປ່ຽນແປງຫຼາຍ. ສິບສອງພັນນານັບແຕ່ຊຸມປີ 1950 ມາແມ່ນມີປະຫວັດຍາວນານດ້ານປູກຢາງພາລາ ໂດຍສະເພາະ ແມ່ນໃນເຂດ ເມືອງມາງ, ເມືອງນູນ ແລະ ເມືອງພົງ ຊຶ່ງທັງໝົດຕັ້ງຢູ່ອ້ອມແອ້ມ ເມືອງສິງ ເປັນສາມເຂດທີ່ດີເລີດສຳລັບຄົ້ນຄວ້າ ແລະ ປຽບທຽບບັນຫາກ່ຽວກັບຢາງພາລາ ລະຫວ່າງຊາຍແດນ.

ໃນບົດລາຍງານນີ້ຈະໄດ້ໃຫ້ຂໍ້ມູນກ່ຽວຂ້ອງເພື່ອເປັນການອ້າງອີງກ່ຽວກັບການສົນທະນາແລກປ່ຽນຄວາມເຫັນໃນເລື່ອງຢາງນີ້, ຜູ້ອ່ານທີ່ມີຄວາມສົນໃຈອາດຈະອ່ານ Littleton et. al. (2004) ແລະ Diana (2006) ຊຶ່ງເວົ້າເຖິງການສົນທະນາໂດຍລະອຽດທາງແງ່ມຸມປະຫວັດສາດ ແລະ ສະພາບເສດຖະກິດສັງຄົມໃນປັດຈຸບັນຢູ່ເມືອງສິງ ແລະ ເມືອງລອງ.

## 1.3 ຮູບແບບ ແລະ ວິທີການ

ການສຶກສານີ້ແມ່ນອີງໃສ່ວຽກພາກສະໜາມ ທີ່ໄດ້ດຳເນີນໄປລະຫວ່າງກາງເດືອນກັນຍາຕະຫຼອດເຖິງຕອນຕົ້ນເດືອນທັນວາ 2007. ຂ້າພະເຈົ້າໄດ້ສຳພາດຜູ້ທີ່ມີສ່ວນກ່ຽວຂ້ອງ ດ້ວຍຮູບແບບ "ເຄິ່ງໂຄງຮ່າງເພື່ອສຳພາດ" ແລະ "ສຳພາດແບບເສລີບໍ່ມີໂຄງຮ່າງເລີຍ" ຊຶ່ງແມ່ນວິທີຕົ້ນຕໍໃນການເກັບກຳຂໍ້ມູນ. ໃນການວິເຄາະ, ຂ້າພະເຈົ້າມີ ຜູ້ມີສ່ວນກ່ຽວຂ້ອງ ສີ່ (ປະເພດ): ລັດຖະບານລາວ, ລັດຖະບານຈີນ, ນັກລົງທຶນຈີນ ແລະ ລາວ ແລະ ທ້າຍສຸດ ແມ່ນຊາວກະສິກອນຈີນ ແລະ ລາວ. ຂ້າພະເຈົ້າຈະສະເໜີແຕ່ລະປະເພດແຍກກັນໄປ ດັ່ງລຸ່ມນີ້:

1). ຝ່າຍລັດຖະບານລາວ: ໄດ້ສຳພາດອົງການຈັດຕັ້ງຫລັກລະດັບແຂວງ ແລະ ເມືອງຢູ່ ແຂວງຫຼວງນ້ຳທາ, ເຊິ່ງລວມມີ ພະແນກແຜນການ ແລະ ການລົງທຶນແຂວງ ແລະ ຫ້ອງການດັ່ງກ່າວໃນລະດັບເມືອງ, ໜ່ວຍງານຢາງພາລາຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ, ແລະ ຫ້ອງການພາສີແຂວງ. ອົງການກ່ຽວຂ້ອງຍັງໄດ້ໃຫ້ສະຖິຕິຂັ້ນສອງ ສ່ວນຫຼາຍແມ່ນກ່ຽວກັບເນື້ອທີ່ປູກ, ສັນຍາທາງການ ທີ່ເຮັດກັບຜູ້ລົງທຶນ ແລະ ເອກະສານກ່ຽວຂ້ອງທາງດ້ານນະໂຍບາຍ.

2). ຝ່າຍລັດຖະບານຈີນ: ອຳນາດປົກຄອງ ກິ່ງແຂວງ ສິບສອງພັນນາຂອງແຂວງ ຢຸນນານ ບໍ່ໄດ້ໃຫ້ສຳພາດ. ຂໍ້ມູນສ່ວນຫຼວງຫຼາຍກ່ຽວກັບນະໂຍບາຍຈີນແມ່ນໄດ້ມາຈາກການແຈ້ງຂ່າວ ແລະ ປະກາດສຳລັບສາທາລະນະຊົນ ເປັນພາສາຈີນ ຊຶ່ງພົບເຫັນຢູ່ *ເວັບໄຊທ* ຂອງລັດຖະບານ; ນອກນັ້ນ ກໍເອົາມາຈາກໜັງສືພິມ ແລະ ວາລະສານອຸດສາຫະກຳພາສາຈີນ, ແລະ ໂດຍຜ່ານການສົນທະນາແບບບໍ່ເປັນທາງການກັບພະນັກງານລັດ ແລະ ຜູ້ລົງທຶນຈີນ.

3). ນັກລົງທຶນຈີນ ແລະ ລາວ: ການພົວພັນກັບນັກລົງທຶນຈີນຊຶ່ງຕົ້ນຕໍ ແມ່ນອີງໃສ່ການສົນທະນາແບບບໍ່ມີໂຄງຮ່າງສຳພາດແບບບໍ່ເປັນທາງການ ເຊິ່ງມີຄວາມຈຳເປັນ ເພາະສ່ວນໃຫຍ່ຂອງນັກລົງທຶນ ມີຄວາມຢ້ານກົວ ກ່ຽວກັບຫົວຂໍ້ຂອງການສຶກສານີ້ ແລະ ເຂົາເຈົ້າຈະມີຄວາມພ້ອມຫຼາຍກວ່າທີ່ຈະແລກປ່ຽນຄວາມເຫັນແບບສະບາຍເປັນກັນເອງ. ສັນຍາໄດ້ຖືກພັດທະນາຂຶ້ນໂດຍໄດ້ຮັບຜົນສຳເລັດໃນລະດັບແຕກຕ່າງກັນນຳບັນດາບໍລິສັດຢາງພາລາຈີນທັງໝົດ ທີ່ໄດ້ຂຶ້ນທະບຽນເປັນທາງການ ໃນການດຳເນີນກິດຈະກຳຢູ່ເມືອງສິງ ແລະ ລອງ. ໄດ້ໄປຢ້ຽມຢາມຕົວຈິງຢູ່ສວນຢາງຈຳນວນໜຶ່ງຂອງບໍລິສັດ. ໄດ້ພົວພັນກັບບໍລິສັດລາວເຊັ່ນກັນ ແຕ່ໃນຈຳນວນໜ້ອຍກວ່າ. ທັງນີ້ ກໍຍ້ອນວ່າ ຈຸດສຸມຂອງການສຶກສາແມ່ນກ່ຽວກັບສະພາບລະຫວ່າງຊາຍແດນ; ນອກຈາກນີ້ແລ້ວ ຈຳນວນບໍລິສັດລາວກໍມີໜ້ອຍກວ່າ (ຢູ່ເມືອງ ສິງ ແລະ ລອງ ມີພຽງສອງບໍລິສັດ, ໜຶ່ງໃນນັ້ນແມ່ນບໍລິສັດຮ່ວມລົງທຶນກັບຈີນ). ເຖິງຢ່າງໃດກໍຕາມ ບໍລິສັດດັ່ງກ່າວ ແມ່ນມີຄວາມສຳຄັນບໍ່ພຽງແຕ່ໃນແງ່ທີ່ຈະຕີລາຄາສະພາບລວມຂອງການພັດທະນາຢາງພາລາໃນພາກເໜືອຂອງລາວເທົ່ານັ້ນ, ແຕ່ມັນຍັງເປັນໄມ້ຫຼາວັດ

ແທກເພື່ອປຽບທຽບເວລາປະເມີນຂຸມບໍລິສັດຝ່າຍຈີນອີກດ້ວຍ. ກໍລະນີຕົວແທນກໍເປັນຈຸດສຶກສາ ເພື່ອເຂົ້າໃຈສະພາບຂອງນັກລົງທຶນຈີນ ແລະ ລາວທີ່ດຳເນີນການໂດຍບໍ່ລົງທະບຽນທີ່ເປັນທາງການ.

4). ຊາວບ້ານຈີນ ແລະ ລາວ: ຊາວບ້ານລາວທີ່ໄດ້ສຳພາດຈາກບ້ານຕ່າງໆ ໄດ້ຖືກຄັດເລືອກ ໃຫ້ເປັນຕົວແທນແກ່ກະສິກອນທ້ອງຖິ່ນຈາກຫຼາຍໆສະພາບພັດທະນາຂອງສວນຢາງ; ໝາຍຄວາມວ່າ ຂ້າພະເຈົ້າໄດ້ພະຍາຍາມສຳພາດຊາວບ້ານໃນເງື່ອນໄຂທີ່ຫຼາກຫຼາຍ (ຜູ້ທີ່ຍັງບໍ່ທັນໄດ້ປູກ, ປູກດ້ວຍຕົນເອງ, ພວກເຮັດສັນຍາຜູກພັນການປູກ, ແລະ ຜູ້ມີສຳປະທານ) ແລະ ໃນໄລຍະພັດທະນາປູກຝັງທີ່ແຕກຕ່າງກັນ (ໝາຍຄວາມວ່າໄລຍະຍັງບໍ່ທັນໄດ້ປາດຢາງ ແລະ ໄລຍະໄດ້ປາດຢາງແລ້ວ). ນອກນັ້ນ ກໍໄດ້ຄຳນຶງເຖິງປັດໄຈຕ່າງໆເຊັ່ນ: ຊົນເຜົ່າ ແລະ ໄລຍະໃກ້ໄກຈາກຖະໜົນ ແລະ ຊາຍແດນ. ການເລືອກບ້ານໃນຕົວມັນເອງແລ້ວ ແມ່ນມີການລົ້ມຄືນເຊັ່ນ: ໃນເວລາສຳພາດຢູ່ບ້ານໜຶ່ງ, ຂ້າພະເຈົ້າມັກຈະໄດ້ຮຽນຮູ້ກ່ຽວກັບຮູບແບບໃໝ່ໃນການດຳເນີນກິດຈະກຳຢູ່ບ້ານໜຶ່ງອີກ, ຈາກນັ້ນຂ້າພະເຈົ້າກໍຈະກັບຄືນໄປຢ້ຽມຢາມບ້ານນັ້ນເພື່ອຕິດຕາມເບິ່ງຕື່ມອີກ. ບັນດາອົງການລັດທີ່ກ່ຽວຂ້ອງ ແລະ ໂຄງການພັດທະນາ ເປັນຝ່າຍສະເໜີໃຫ້ຮູ້ກ່ຽວກັບບ້ານປູກຢາງ "ທົ່ວໄປ" ນັບແຕ່ຂັ້ນຕອນ ເລີ່ມຕົ້ນຂອງການຄົ້ນຄວ້າ. ບັນດາບໍລິສັດ ແລະ ນັກລົງທຶນຍັງໃຫ້ຂໍ້ຄຶດ. ສຳລັບແຕ່ລະບໍລິສັດຢາງພາລາ, ຂ້າພະເຈົ້າກໍໄດ້ໄປຢ້ຽມຢາມ ຢ່າງໜ້ອຍສອງ ຫລື ສາມບ້ານທີ່ບໍລິສັດນັ້ນ ກຳລັງດຳເນີນກິດຈະກຳຢູ່ (ການດຳເນີນກິດຈະກຳຂອງບໍລິສັດ ມີບາງຄັ້ງແຕກຕ່າງກັນຫຼາຍຈາກບ້ານໜຶ່ງໄປຍັງອີກບ້ານໜຶ່ງ). ສ່ວນຫຼາຍໃນຈຳນວນບ້ານທີ່ໄດ້ຢ້ຽມຢາມ, ຂ້າພະເຈົ້າໄດ້ສົນທະນາກັບນາຍບ້ານ ຫລື ບາງຄັ້ງກໍຈັດໃຫ້ໄດ້ສົນທະນາກັບກຸ່ມຈຸດສຸມທີ່ບໍ່ເປັນທາງການ ຢູ່ເຮືອນນາຍບ້ານ. ຍ້ອນວ່າຈຸດສຸມຂອງການສຶກສານີ້ແມ່ນກ່ຽວກັບປະເພດຂອງການຈັດການ (ແທນທີ່ຈະເປັນການວິເຄາະຄົວເຮືອນສະເພາະ), ຮູບແບບວິທີການນີ້ ອະນຸຍາດໃຫ້ກວມເອົາຂອບເຂດກວ້າງຂວາງທີ່ສຸດ. ໄດ້ສຳຫຼວດຄອບຄົວຕ່າງໆ ບາງຄັ້ງໃນເວລາທີ່ຮູ້ສຶກຄືວ່າ ມີຄວາມຄິດເຫັນທີ່ແຕກຕ່າງກັນຫຼາຍໃນກຸ່ມຊາວບ້ານ, ຫລືຖ້າຫາກນາຍບ້ານບໍ່ຢູ່ໃນເວລາໄປຢ້ຽມຢາມ. ມີຊາວບ້ານຈຳນວນໜຶ່ງ ກໍ່ໃຫ້ເບິ່ງສຳເນົາຂອງສັນຍາທີ່ເຂົາເຈົ້າໄດ້ເຮັດກັບຜູ້ລົງທຶນ ຊຶ່ງຈະເຫັນຢູ່ເອກະສານຊ້ອນທ້າຍ 1 ແລະ 2. ຂ້າພະເຈົ້າໄດ້ໃຫ້ລາຍການບ້ານທີ່ໄດ້ຢ້ຽມຢາມ, ພ້ອມທັງສະຖິຕິພື້ນຖານ ແລະ ຄຳຖາມທີ່ຂ້າພະເຈົ້າໄດ້ໃຊ້ເພື່ອສຳພາດດ້ວຍວິທີ ທີ່ອີງໃສ່ໂຄງຮ່າງແບບຄ້າວໆ ຂໍ້ມູນຂ່າວສານທີ່ມີຄຸນຄ່າສ່ວນຫຼວງຫຼາຍ ແມ່ນເກັບກຳໄດ້ໃນເວລາແລກປ່ຽນຄວາມເຫັນແບບບໍ່ເປັນທາງການ.

ທາງຝ່າຍຈີນ, ຂ້າພະເຈົ້າໄດ້ເອົາຕົວແທນຈາກ 7 ບ້ານຊົນເຜົ່າອາຄ່າ ແລະ ລື້ ຊຶ່ງຕັ້ງຢູ່ໃກ້ຊາຍແດນໃນເຂດເມືອງຫລ້າ, ເມືອງມາງ ແລະ ເມືອງພົງ. ທັງສາມເຂດມີການພັດທະນາສວນຢາງຫຼາຍສົມຄວນ ແລະ ກໍມີນິຄົມຂອງລັດທີ່ເຂັ້ມແຂງ. ທັກໃນເຈັດບ້ານມີປະຫວັດການປູກຢາງມາດົນນານ ນັບແຕ່ຕົ້ນຊຸມປີ 1980 ມາ, ແຕ່ບ້ານທີ່ເຈັດ ຕາມປະເພນີແລ້ວເປັນບ້ານປູກຊາ ແລະ ຫາກໍເລີ່ມຕົ້ນປູກຢາງພຽງບໍ່ທໍ່ໃດປີຜ່ານມາ. ເຊັ່ນດຽວກັນຂ້າພະເຈົ້າໄດ້ສຳພາດຊາວບ້ານໃນສະພາບການທີ່ຫຼາກຫຼາຍ ແລະ ໄດ້ໃຊ້ໝວດຄຳຖາມຄ້າຍຄືກັນກັບທີ່ໄດ້ໃຊ້ກັບຊາວບ້ານລາວ. ເພື່ອໃຫ້ໄດ້ການປຽບທຽບທີ່ດີກວ່າ ກ່ຽວກັບຊາວສວນຢາງລາວໃນປັດຈຸບັນ, ຂ້າພະເຈົ້າໄດ້ເນັ້ນໜັກຫຼາຍສົມຄວນໃນການຊອກຮູ້ປະຫວັດຄວາມເປັນມາຂອງການພັດທະນາສວນຢາງໃນຕອນຕົ້ນໆຂອງຊາວກະສິກອນຈີນ. ນອກຈາກນີ້ ກໍໄດ້ເນັ້ນໜັກໃສ່ການຕິດຕໍ່ສາຍພົວພັນຂອງເຂົາເຈົ້າ ຢູ່ຊາຍແດນຟາກນັ້ນ ກັບຊາວກະສິກອນລາວ. ຊາວສວນຢາງຈີນໂດຍທົ່ວໄປປະກົດວ່າ ບໍ່ພ້ອມທີ່ຈະລົມເລື່ອງຊີວິດທາງເສດຖະກິດກັບຄົນພາຍນອກ. ເພື່ອຊອກທາງອອກ ຂ້າພະເຈົ້າໄດ້ສຳພາດດ້ວຍຮູບແບບໃໝ່, ເຮັດເປັນການສົນທະນາໄປເລື້ອຍໆ ບໍ່ເຄັ່ງຂຶມ ແລະ ບໍ່ເປັນທາງການພ້ອມທັງໄດ້ຢ້ຽມຢາມໝູ່ບ້ານເມື່ອໃດຫາກພໍເຮັດໄດ້ ໂດຍມີ *ຜູ້ນຳທ່ຽວ* ເປັນຜູ້ນຳທາງໄປຫາພີ່ນ້ອງ ຫລື ໝູ່ຄູ່ຢູ່ບ້ານນັ້ນ.

ການສໍາພາດແມ່ນໃຊ້ພາສາລາວ ແລະ/ຫລື ຈີນກາງ. ເມື່ອຊາວບ້ານສ່ວນໃຫຍ່ເວົ້າພາສາອາຄ່າ, ກໍໄດ້ໃຊ້ຜູ້ແປພາສາອາຄ່າ-ຈີນ ຫລື ອາຄ່າ-ລາວ ເພື່ອຊ່ວຍໃນການແລກປ່ຽນຄວາມເຫັນ. ການແປພາສາລາວ-ອັງກິດແມ່ນໄດ້ໃຊ້ເວລາສໍາພາດອົງການກ່ຽວຂ້ອງຝ່າຍລາວ ແລະ ໃນບາງຄັ້ງກໍໄດ້ໃຊ້ເວລາຢ້ຽມຢາມບ້ານ.

## 1.4 ຄວາມແນ່ນອນ, ເຊື່ອຖືໄດ້ ຂອງຂໍ້ມູນ ແລະ ຂໍ້ຈໍາກັດຂອງການສຶກສາ

ໃນບົດລາຍງານຂ້າພະເຈົ້າຈະອ້າງອີງເຖິງແຫລ່ງຂໍ້ມູນຈາກຫຼາຍບ່ອນ ເທົ່າທີ່ເປັນໄປໄດ້ ເພື່ອພິສູດສະແດງຫລັກຖານ. ເຖິງຢ່າງໃດກໍຕາມ, ມີບາງປະເພດຂໍ້ມູນເຊັ່ນ: ເນື້ອທີ່ປູກຝັງຕົວຈິງ ມັນເປັນສິ່ງທີ່ເກີນຄວາມສາມາດຂອງຂ້າພະເຈົ້າທີ່ຈະພິສູດ ແລະ ຢັ້ງຢືນໄດ້. ມີບາງຂໍ້ມູນທີ່ຍາກທີ່ຈະໄດ້ມາ ຍ້ອນວິທີຮູບແບບຕົ້ນຕໍຂອງການຄົ້ນຄວ້າ. ຕົວຢ່າງ: ຄືງບໍ່ມີຊາວບ້ານຜູ້ໃດທີ່ຈະສາລະພາບວ່າ ຕົນໄດ້ທໍາລາຍປ່າປົກປ້ອງໃຫ້ເປັນບ່ອນປູກຕົ້ນຢາງ, ໃນເວລາສໍາພາດເມື່ອເຂົາເຈົ້າຮູ້ດີວ່າການສຶກສານີ້ໄດ້ຮັບການສະໜັບສະໜູນຈາກໂຄງການພັດທະນາຫນຶ່ງ ແລະ ກໍມີສ່ວນພົວພັນກັບລັດຖະບານລາວ. ເມື່ອໄດ້ເກັບເອົາຂໍ້ມູນຈາກຫຼາຍໆແຫລ່ງ, ມັນເປັນເລື່ອງງ່າຍທີ່ຈະສັງເກດວ່າຜູ້ທີ່ມີສ່ວນກ່ຽວຂ້ອງມັກຈະໃຫ້ຂໍ້ມູນແບບຂັດກັນໃນຫົວຂໍ້ອັນດຽວກັນ, ຄວາມບໍ່ກົງກັນນີ້ແທນທີ່ຈະສະທ້ອນເຖິງບັນຫາຂໍ້ມູນ ພັດສາມາດຊ່ວຍເຮົາໃຫ້ເຂົ້າໃຈຕື່ມກ່ຽວກັບຄວາມສະລັບສັບຊ້ອນຂອງຕາໜ່າງຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຜົນປະໂຫຍດສ່ວນຕົວຂອງເຂົາເຈົ້າ.

ການສຶກສານີ້ ເຮັດໃຫ້ເຫັນພາບລວມ ກ່ຽວກັບບັນດາກິດຈະກໍາສວນຢາງລະຫວ່າງປະເທດ ຈົນເຖິງຕົ້ນເດືອນທັນວາ 2007 ຊຶ່ງເປັນເວລາສິ້ນສຸດວຽກພາກສະໜາມຂອງຂ້າພະເຈົ້າ. ເຖິງຢ່າງໃດກໍຕາມ ສະພາບການປູກຢາງພາລາ ແລະ ການອະພິປາຍດ້ານນະໂຍບາຍກ່ຽວຂ້ອງເປັນເລື່ອງຕໍ່ເນື່ອງຢູ່ ຫຼວງນໍ້າທາ ກໍຄືຢູ່ສິບສອງພັນນາ. ບົດລາຍງານນີ້ສາມາດຖືເປັນຫນຶ່ງ ໃນຂໍ້ມູນພື້ນຖານ ເພື່ອເປັນຕົວຢືນ ປຽບທຽບສໍາລັບການສຶກສາໃນອະນາຄົດ.

# ບົດທີ 2
# ສະພາບທົ່ວໄປ ຂອງການປູກຢາງພາລາ ຢູ່ ແຂວງ ຫຼວງນໍ້າທາ

ຫຼວງນໍ້າທາ ເລີ່ມຕົ້ນປູກຢາງພາລາ ໃນປີ 1994 ເຊິ່ງບ້ານຫາດຍາວ ເປັນບ້ານຫນຶ່ງ ທີ່ຖືກຍອມຮັບວ່າ ເປັນບ້ານທໍາອິດ ໃນເຂດພາກເຫນືອຂອງລາວ ແຕ່ໃນຂະນະດຽວກັນ ກໍ່ມີຫລາຍໆ ບ້ານ ທີ່ໄດ້ເລີ່ມປູກປະມານເວລາດຽວກັນ. ຄວາມຈິງແລ້ວບ້ານ ຫາດຍາວ ແມ່ນ ຫນຶ່ງ ໃນຈໍານວນ 6 ຊົນເຜົ່າທີ່ໄດ້ຮັບການລະດົມໃຫ້ປູກຢາງພາລາໂດຍອໍານາດປົກຄອງແຂວງໃນກາງຊຸມປີ 1990 [1]. ເກືອບວ່າພ້ອມໆກັນ ກໍມີກຸ່ມບ້ານອາຄ່າ ແລະ ລື້ຈໍານວນຫນຶ່ງໃນກຸ່ມບ້ານມອມຂອງ ເມືອງສິງ ກໍໄດ້ເລີ່ມຕົ້ນປູກຢາງ ຍ້ອນໄດ້ຮັບອິດທິພົນຈາກຊຸມໝູ່ບ້ານ ຈີນ

---

[1] Alton et. al. (2005) ໄດ້ບັນລະຍາຍປະສົບການຂອງບ້ານຫາດຍາວຕົ້ນຕໍແມ່ນອີງໃສ່ຄວາມພະຍາຍາມຂອງຊຸມຊົນ ໂດຍແມ່ນຫົວຄິດລິເລີ່ມເຂົາເຈົ້າເອງ, ເຖິງແມ່ນວ່າຮອງເຈົ້າແຂວງໃນຕອນນັ້ນ ຊຶ່ງແມ່ນສະມາຊິກຂອງບ້ານ ຫາດຍາວ ເອງໄດ້ມີບົດບາດສໍາຄັນຍາດແຍ່ງເອົາກອງທຶນຂອງແຂວງສະໜັບສະໜູນເງິນກູ້ຢືມ. ຜ່ານການລົມກັບອົງການຈັດຕັ້ງກ່ຽວຂ້ອງມັນໄດ້ຊີ້ໃຫ້ເຫັນວ່າ ບ້ານຫາດຍາວແມ່ນນອນຢູ່ໃນຄວາມພະຍາຍາມແບບບໍ່ລົດລະ ເພື່ອຫຼຸດຜ່ອນຄວາມທຸກຍາກ ຊຶ່ງມັນປະກອບດ້ວຍ 6 ບ້ານຜູ້ທີ່ໄດ້ຮັບເງິນກູ້ຢືມທີ່ລັດຊ່ວຍ ແລະການສະໜັບສະໜູນດ້ານວິຊາການ. ຕົວຈິງທັງສອງແນວອະທິບາຍກໍໜ້າຈະເປັນຄວາມຈິງ.

ທີ່ຢູ່ຂ້າງຄຽງ ແລະ ຍ້ອນກຳລັງຂອງການເຄື່ອນຍ້າຍຂອງປະຊາຊົນໃນຂົງເຂດ[2]. ເລີ່ມຕົ້ນແຕ່ຕອນຕົ້ນໆຂອງຊຸມປີ 1990, ອົບພະຍົບອາຄ່າຈາກສົງຄາມອະເມຣິກາຈຳນວນໜຶ່ງໄດ້ກັບຈາກປະເທດຈີນ ມາຕັ້ງຖິ່ນຖານ ໃນກຸ່ມບ້ານມອມ ຂອງ ເມືອງສິງ. ພາຍຫລັງທີ່ພວກເຂົາເຈົ້າໄດ້ຢູ່ ປະເທດຈີນ ມາຫຼາຍກວ່າສິບປີ, ຊຶ່ງໃນໄລຍະນັ້ນເຂົາເຈົ້າກໍໄດ້ຮຽນຫັກສະການປູກຕົ້ນຢາງ. ແມ່ນພວກເຂົາເຈົ້ານັ້ນເອງທີ່ເປັນຜູ້ປູກຢາງ ຄົນທຳອິດຂອງເຂດມອມ ແລະ ກາຍເປັນຕົວຢ່າງ ແລະ ເປັນແຫລ່ງຄວາມຮູ້ສຳຄັນສຳລັບຄົນອື່ນໆໃນບ້ານ. ປີ 1999 ເຂດນີ້ໄດ້ປະສົບສະພາບອາກາດໜາວຮ້າຍແຮງ, ມີນໍ້າໝອກຊຸ້ມອັນໄດ້ສ້າງຜົນກະທົບຢ່າງໃຫຍ່ຫລວງແກ່ໝູ່ບ້ານທັງໝົດທີ່ປູກຢາງ, ລວມທັງບ້ານ ຫາດຍາວ. ເຫດການນີ້ໄດ້ເຮັດໃຫ້ຊາວບ້ານຫຼາຍຄົນໝົດຫວັງ ຍ້ອນຕົ້ນຢາງສ່ວນຫຼາຍຖືກນໍ້າໝອກຊຸ້ມທຳລາຍ. ພວກທີ່ຕ້ອງການຢາກສືບຕໍ່ປູກກໍພົບຄວາມຫຍຸ້ງຍາກຫຼາຍໃນການກູ້ຢືມເງິນເພີ່ມຈາກລັດຖະບານ. ດັ່ງນັ້ນການປູກຕົ້ນຢາງຄືນໃນຈຳນວນຫຼາຍນັ້ນ ບໍ່ໄດ້ເລີ່ມຕົ້ນ ຈົນມາຮອດປີ 2003 ຫລື 2004 ພາຍຫລັງທີ່ຊາວບ້ານ ຫາດຍາວ ໄດ້ເລີ່ມຕົ້ນປາດຢາງ ແລະ ໄດ້ຮັບຜົນປະໂຫຍດຈາກຕົ້ນໄມ້ທີ່ລອດຕາຍຈາກການປູກຮອບທຳອິດໃນກາງຊຸມປີ 1990. ໃນເວລານັ້ນ, ບ້ານອື່ນໆກໍມີຄວາມກະຕືລືລົ້ນ ຍ້ອນຖືກກະຕຸ້ນຈາກຕົວຢ່າງແທ້ຈິງຂອງບ້ານ ຫາດຍາວ ອັນເຮັດໃຫ້ບ້ານອື່ນໆ ເລີ່ມຕົ້ນປູກຕົ້ນຢາງນຳ ຢ່າງເປັນຂະບວນກວ້າງຂວາງ.

ໃນປີ 2003, ອຳນາດການປົກຄອງ ເມືອງນໍ້າທາ ໄດ້ເລີ່ມຕົ້ນປະຕິບັດໂຄງການສະເພາະຊຸກຍູ້ສົ່ງເສີມໂດຍເລັ່ງໃສ່ 12 ບ້ານພາຍໃນເມືອງເອງ (ລວມໃນນັ້ນບ້ານຈຳນວນໜຶ່ງແມ່ນຢູ່ໃນເຂດປ່າສະຫງວນແຫ່ງຊາດ ນໍ້າຫ້າ). ເງິນທຶນສຳລັບໂຄງການແມ່ນໄດ້ຢືມມາຈາກອຳນາດ ການປົກຄອງ ເມືອງຫລ້າ ຂອງກິ່ງແຂວງ ສິບສອງພັນນາ ແລະ ໄດ້ໃຫ້ຊາວບ້ານຢືມໃນອັດຕາດອກເບ້ຍທີ່ລັດຖົມຊຸມ ໂດຍຜ່ານບໍລິການຂອງທະນາຄານສົ່ງເສີມກະສິກຳ. ບໍລິສັດຈີນໜຶ່ງເປັນຜູ້ຮັບເໝົາເພື່ອປູກຕົ້ນຢາງໃນເນື້ອທີ່ 400 ຮຕ ຊຶ່ງໃນນັ້ນ ຊາວບ້ານເອງເກືອບວ່າບໍ່ໄດ້ມີສ່ວນຮ່ວມໃນຂະບວນການເລີຍ.

ໃນໄລຍະດຽວກັນ, ແຂວງ ຫຼວງນໍ້າທາ ກໍໄດ້ເລີ່ມຮັບເອົາການລົງທຶນເປັນທາງການຈາກຈີນ. ໃນ 2004 ບໍລິສັດຢາງພາລາກຸ່ມທຳອິດໄດ້ລົງທະບຽນເປັນທາງການ, ຈາກນັ້ນບໍ່ດົນ ບໍລິສັດກໍໄດ້ນຳພາປູກ.

ຢູ່ ຫຼວງນໍ້າທາ ມີຕົ້ນຢາງຫຼາຍປານໃດ? ພາບເສັ້ນ 2.1 ຊີ້ໃຫ້ເຫັນເຖິງເສັ້ນທາງການພັດທະນາຢາງພາລານັບແຕ່ 1994. ເຖິງວ່າຕົວເລກສະເພາະອາດຈະຂາດໄປ, ແຕ່ມັນກໍຊີ້ໃຫ້ເຫັນພາບແນວໂນ້ມທີ່ສອດຄ່ອງກັບລຳດັບຂອງເຫດການທາງປະຫວັດຄວາມເປັນມາທີ່ໄດ້ອະທິບາຍມາຂ້າງເທິງນັ້ນ. ຕົວເລກຕອນຕົ້ນການພັດທະນາເປັນໄລຍະທີ່ບ້ານ, ແລະ ບ້ານບຸກເບີກໃນການປູກຢາງອື່ນໆ ຈຳນວນໜຶ່ງຢູ່ກຸ່ມບ້ານມອມຂອງ ເມືອງສິງ. ຂະບວນປູກບໍ່ໄດ້ເລີ່ມຕົ້ນແທ້ໆຈົນເຖິງປີ 2003-2004 ໃນເວລາທີ່ມີເຫດການຈຳນວນໜຶ່ງ ພ້ອມໆກັບມີແນວໂນ້ມທີ່ເກີດຂຶ້ນໃນເວລາດຽວກັນ ອັນໄດ້ກະຕຸ້ນໃຫ້ມີເນື້ອທີ່ປູກຝັງທັງໝົດເພີ່ມຂຶ້ນຢ່າງທັນທີ.

---

[2] ອຸດົມສິນຢູ່ກຸ່ມບ້ານນາຄຳແມ່ນໜຶ່ງໃນຈຳນວນບ້ານປູກຢາງທຳອິດຂອງ ເມືອງສິງ ຍ້ອນວ່າມີສະມາຊິກບ້ານຄົນໜຶ່ງໄດ້ຮຽນຫັກສະການປູກຢາງໃນເວລາຢູ່ໄທ ແລະ ຈີນ

**ເສັ້ນພາບ 2.1 ເນື້ອທີ່ປູກຢາງພາລາ ໃນແຂວງ ຫລວງນ້□າທາ 1994-2006**




**ໝາຍເຫດ: ບໍ່ມີຕົວເລກ ສຳລັບປີ 1996, 2000, ແລະ 2002**
**ແຫລ່ງຂໍ້ມູນ: ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຫລວງນ້ຳທາ**

ອີງຕາມພະແນກກະສິກຳປ່າໄມ້ແຂວງ, ຮອດທ້າຍ 2006 ເນື້ອທີ່ປູກລວມມີ 12,585 ຮຕ. ໃນນັ້ນ ສ່ວນຫຼວງຫຼາຍ ຄື 11,119 ຮຕ ແມ່ນຊາວບ້ານເອງເປັນຜູ້ປູກ. ສ່ວນທີ່ເຫລືອ 1,466 ຮຕ ແມ່ນບໍລິສັດປູກໂດຍຜ່ານຮູບການສັນຍາຜູກພັນ ຫລື ສຳປະທານ. ນອກນັ້ນ ໃນປີ 2007 ມີແຜນປູກອີກຕື່ມທັງໝົດ 8,650 ຮຕ. (ຂໍ້ມູນທາງການດ້ານເນື້ອທີ່ປູກຕົວຈິງໃນເວລາຂຽນລາຍງານນີ້ຍັງບໍ່ທັນມີ). ອີງຕາມການສຳພາດພະແນກກະສິກຳປ່າໄມ້ແຂວງ_ເມື່ອບໍ່ດົນມານີ້ໂດຍ ໜັງສືພິມ ວຽງຈັນທາຍມ໌, (Vientiane Times Newspaper, 20 ພະຈິກ 2007), ເນື້ອທີ່ລວມທີ່ໄດ້ປູກຕົ້ນຢາງມາຮອດເດືອນພະຈິກ 2007 ໄດ້ລື່ນຕົວເລກ 16,000 ຮຕ. ຕົວເລກນີ້ຫຼຸດຕົວເລກຄາດໝາຍສູ້ຊົນຂອງອຳນາດປົກຄອງແຂວງທີ່ວາງໄວ້ 20,000 ຮຕ ແລະ ຮອດທ້າຍປີ 2010 ກໍຍັງເຫຼືອແຕ່ 4,000 ຮຕ ເທົ່ານັ້ນ. ຖ້າປ່ອຍໃຫ້ແນວໂນ້ມນີ້ເພີ່ມຂຶ້ນແບບທະວີຄູນໂດຍຂາດການຄວບຄຸມ, ແຂວງນີ້ອາດຈະມີເນື້ອທີ່ປູກຢາງລວມ ລື່ນຄາດໝາຍດັ່ງກຳນົດໄວ້ໃນຕອນທຳອິດ ຫລື ເປັນໄປໄດ້ວ່າ ມັນໄດ້ລື່ນຢູ່ແລ້ວກໍເປັນໄດ້.

ເສັ້ນສະແດງ 2.2 ສະແດງຕົວເລກສະສົມລວມເນື້ອທີ່ ປູກຢາງພາລາທັງຫມົດ ໃນບັນດາເມືອງຕ່າງໆ. ໃນນີ້, ເມືອງ ນ້ຳທາ ມີເນື້ອທີ່ປູກຫຼາຍທີ່ສຸດ, ຕິດຕາມດ້ວຍ ເມືອງສິງ, ແຕ່ເມືອງສິງ ມີແຜນປູກໃຫ້ກາຍ ນ້ຳທາ ໃນປີ 2007. ທັງສອງເມືອງແມ່ນໄດ້ເລີ່ມຕົ້ນປູກກ່ອນໝູ່ ຍ້ອນການຂົນຂວາຍລະດົມຂອງລັດຖະບານ, ອິດທິພົນສູງຈາກຊາຍແດນຟາກນັ້ນ ແລະ ຍ້ອນຊາວບ້ານມີຫົວຄິດລິເລີ່ມເອງ. ສ່ວນເມືອງອື່ນໆເຊັ່ນ: ນາແລ ແລະ ວຽງພູຄາ ແມ່ນຖືກຕັດອອກຈາກໝູ່ຈົນມາເຖິງປັດຈຸບັນ. ເຖິງຢ່າງໃດກໍຕາມ ເມື່ອມີໂຄງລ່າງປັບປຸງທີ່ດີຫຼາຍແລ້ວ ແລະ ມີຜູ້ລົງທຶນພ້ອມເງິນລົງທຶນ ເຂົ້າມາ, ຕົວເລກການປູກຢາງ ຢູ່ສອງເມືອງນີ້ກໍອາດທຽບທັນກັບເມືອງ ນ້ຳທາ ແລະ ເມືອງສິງ ໃນເວລາໄວໆນີ້ກໍ່ໄດ້.

**ເສັ້ນພາບສະແດງ 2.2 ເນື້ອທີ່ປູກຢາງພາລາ ໃນເມືອງ ຕ່າງໆ**




*ຫ້ອງການກະສິກຳ ເມືອງລອງ ແຈ້ງວ່າ ປັດຈຸບັນ ເນື້ອທີ່ປູກຢາງມີ ປະມານ 1,700 ເຮັກຕາ

ແຫລ່ງຂໍ້ມູນ: ພະແນກກະສິກຳ ປ່າໄມ້ ແຂວງ ຫລວງນ້ຳທາ

ພະແນກກະສິກຳປ່າໄມ້ແຂວງ ໄດ້ສະຫຼຸບຕົວເລກຈາກການລວບລວມເອົາສະຖິຕິຂອງຫ້ອງການກະສິກຳປ່າໄມ້ເມືອງ ຊຶ່ງໄດ້ເກັບເອົາຕົວເລກຈາກບ້ານມາ. ຕົວເລກຂອງບໍລິສັດແມ່ນອີງໃສ່ ການລາຍງານຂອງບໍລິສັດເອງ. ຜູ້ດຳເນີນທຸລະກິດຕ້ອງຍື່ນລາຍງານຄວາມຄືບໜ້າໄປຍັງພະແນກແຜນການ ແລະ ການລົງທຶນແຂວງ (DPI) ໃນແຕ່ລະປີ, ແລະ ຈະມີລາຍງານດັ່ງກ່າວຫຼາຍກວ່າໃນປີທຳອິດຂອງການປະຕິບັດງານ. ໃນເດືອນພະຈິກ 2007 ພະແນກ ກະສິກຳປ່າໄມ້ແຂວງ (PAFO) ແຈ້ງວ່າໄດ້ສຳຫຼວດເບິ່ງເນື້ອທີ່ປູກຝັງຂອງບັນດາບໍລິສັດທົ່ວແຂວງເພື່ອກວດກາວ່າ ບໍລິສັດເຫລົ່ານັ້ນ ໄດ້ປະຕິບັດຕາມແຜນນຳໃຊ້ດິນດີເທົ່າໃດ (Vientiane Times, 20 ພະຈິກ, 2007). ເຖິງຢ່າງໃດກໍຕາມ ບໍ່ໄດ້ມີການລາຍງານຕົວເລກກ່ຽວກັບການສຳຫຼວດທີ່ກຳລັງດຳເນີນຢູ່ແຕ່ຢ່າງໃດ.

ກ່ອນທີ່ຈະຊົມເຊີຍ ຫລື ເປັນຫ່ວງນຳຕົວເລກໃດໆ, ເຮົາຄວນຄຳນຶງເຖິງອັນຕະລາຍບົ່ມຊ້ອນ ທີ່ພົວພັນກັບຕົວເລກຂອງລັດຖະບານທີ່ໃຫ້ມາຄື:

- ຊາວບ້ານອາດລາຍງານຕົວເລກຕ່ຳກວ່າ ເນື້ອທີ່ປູກຕົວຈິງ ເພາະຢ້ານເສຍພາສີຫລາຍ. ການລາຍງານຕ່ຳໄວ້ມີການຢັ້ງຢືນໃນບາງກໍລະນີບອກເລົ່າຈຳນວນຫນຶ່ງ ແລະ ເຊື່ອວ່າການລາຍງານແບບນີ້ທີ່ບໍ່ມີການຢັ້ງຢືນອາດມີຢ່າງຫຼວງຫຼາຍ. ອີງຕາມ ລະບຽບການຂອງ ແຂວງ ຫຼວງນ້ຳທາ ກ່ຽວກັບການປູກຢາງ (ຈຂ. ເລກທີ 7, 06/12/2006), ຊາວບ້ານຜູ້ທີ່ປູກຢາງໃນເນື້ອທີ່ 1 ຮຕ ຫລື ໜ້ອຍກວ່າ ຕ້ອງເສຍ 1 ຢວນຕໍ່ຕົ້ນຕໍ່ປີໃຫ້ລັດຖະບານລາວ ພາຍຫລັງທີ່ໄດ້ປາດຢາງ. ຊາວບ້ານທີ່ປູກ 2-6 ຮຕ ຕ້ອງເສຍ 3 ຢວນ/ຕົ້ນ/ປີ ພາຍຫລັງໄດ້ປາດຢາງ. ຊາວບ້ານທີ່ປູກຢາງຫຼາຍກວ່າ 6 ຮຕ ຕ້ອງເສຍພາສີເຊັ່ນດຽວກັນກັບກໍລະນີຜູ້ລົງທຶນ ຊຶ່ງໝາຍຄວາມວ່າຈະຈ່າຍພາສີ 6 ຢວນ/ຕົ້ນ/ປີ. ດັ່ງນັ້ນ ຊາວບ້ານໂດຍສະເພາະຜູ້ທີ່ຮັ່ງມີແດ່ ກໍມີເຫດຜົນຈູງໃຈທີ່ບໍ່ຢາກບອກເນື້ອທີ່ປູກຝັງທີ່ແທ້ຈິງຂອງສວນປູກຕົນເອງ. ການລາຍງານໜ້ອຍກວ່າຄວາມເປັນຈິງນັ້ນ ສາມາດເຮັດໄດ້ງ່າຍ ຍ້ອນວ່າ ປັດຈຸບັນ ບໍ່ທັນມີລະບົບການຕິດຕາມ ກວດກາ ເນື້ອທີ່ປູກຕົວຈິງເທື່ອ.
- ເນື້ອທີ່ກວ້າງຂວາງສົມຄວນທີ່ຊາວບ້ານປູກຕົວຈິງແລ້ວ ແມ່ນປູກດ້ວຍເງິນຂອງຜູ້ລົງ ທຶນນອກລະບົບໂດຍການເຮັດສັນຍາຮູບໃດຮູບຫນຶ່ງກັບຊາວບ້ານ. ຊາວບ້ານ ຈະບໍ່ບອກໃຫ້ທາງການຮູ້ ກ່ຽວກັບ

ແຜນການນີ້ ເພາະຢ້ານຖືກປັບໃໝ ຫລື ຖືກຄຸກ. ຕົວຢ່າງ: ການຮ່ວມມືນອກລະບົບແບບນີ້ມີຢູ່ທົ່ວແຂວງ, ແຕ່ຈະສັງເກດເຫັນ ຫລາຍກວ່າຢູ່ບ້ານຕາມຊາຍແດນ ແລະ ໂດຍສະເພາະ ບ່ອນໃກ້ກັບຕາໜ່າງຂົນສົ່ງ. ນີ້ກໍໝາຍຄວາມວ່າ ເນື້ອທີ່ສວນທີ່ຊາວບ້ານສາມາດເອີ້ນວ່າເປັນຂອງຕົນເອງຢ່າງແທ້ຈິງນັ້ນ ບາງທີອາດຈະໜ້ອຍກວ່າຕົວເລກຂອງທາງການຊໍ້າ.

- ການປູກຢາງໄດ້ຂະຫຍາຍຢ່າງໄວວາ ກວ້າງຂວາງແບບຄວບຄຸມບໍ່ໄດ້ ຊຶ່ງເປັນການຍາກທີ່ຈະວັດແທກ ແລະ ຄາດຄະເນໄດ້ທັນການ. PAFO ແລະ ຫ້ອງການສົ່ງເສີມກະສິກຳປ່າໄມ້ເມືອງ (DAFEO) ບໍ່ມີພະນັກງານພຽງພໍ ເພື່ອເກັບກຳຂໍ້ມູນໄດ້ຢ່າງທົ່ວເຖິງ ແລະ ທັນການ ຫລື ບໍ່ກໍຂາດວິຊາການທີ່ຈະລົງຕິດຕາມພື້ນທີ່ຕົວຈິງ. ການມີໜ້າຂອງນັກລົງທຶນຂະໜາດໃຫຍ່ ບໍ່ພຽງແຕ່ເລັ່ງຈັງຫວະການພັດທະນາຢາງພາລາ, ແຕ່ມັນຍັງເພີ່ມທະວີການປູກອອກໄປສູ່ເຂດຫ່າງໄກສອກຫລີກ ຊຶ່ງຍິ່ງເພີ່ມທະວີຄວາມຫຍຸ້ງຍາກໃຫ້ແກ່ການເກັບກຳສະຖິຕິຢ່າງທັນການ ຍ້ອນທາງເລືອກກ່ຽວກັບການຂົນສົ່ງກໍມີໜ້ອຍ.
- ການລາຍງານຂອງບໍລິສັດເອງ ແນ່ນອນ ອາດຈະບໍ່ຖືກຕ້ອງ ແລະ ເຮັດໄປແບບຕັ້ງໃຈ ແຕ່ກໍ່ບໍ່ແມ່ນມີເຈດຕະນາຮ້າຍແຕ່ຢ່າງໃດ ຍ້ອນບໍລິສັດຈີນມີສິ່ງຈູງໃຈໃຫ້ລາຍງານດ້ວຍຕົວເລກສູງໄວ້ເພື່ອຈະມີສິດໄດ້ຮັບນະໂຍບາຍທົດແທນໃຫ້ແກ່ການປູກຝິ່ນທີ່ສະໜອງໂດຍລັດຖະບານຈີນຫລາຍຂຶ້ນ ຊຶ່ງເປັນນະໂຍບາຍ ຂ້າພະເຈົ້າຈະອະທິບາຍລະອຽດໃນບົດທີ 4. ນອກນັ້ນ ປະຕິບັດການຕົວຈິງຂອງບໍລິສັດໃຫຍ່ສ່ວນຫຼາຍ ແມ່ນມອບໝາຍໃຫ້ຜູ້ຮັບເໝົາຕໍ່ໃນຈຸດທີ່ຫ່າງໄກ. ບໍລິສັດເອງອາດກຳບໍ່ໄດ້ຢ່າງແນ່ນອນດ້ານຄວາມຄືບໜ້າຂອງຕົນເອງແບບທັນເວລາ.

ຕາຕະລາງ 2.1 ໄດ້ສະແດງໃຫ້ເຫັນລາຍຊື່ບັນດາບໍລິສັດ ຕົ້ນຕໍ ທີ່ດຳເນີນການປູກຢາງພາລາ ຫລັກຢູ່ ແຂວງ ຫຼວງນໍ້າທາ, ພ້ອມວັນທີ່ລົງທະບຽນ, ເຂດປະຕິບັດການ, ຮູບແບບວິທີປະຕິບັດການ[3]. ຍົກເວັ້ນບໍລິສັດຮ່ວມລົງທຶນລະຫວ່າງ ເມືອງຫລ້າຈິງຈູການຄ້າຈຳກັດ ແລະອະດີດຮອງເຈົ້າແຂວງຕົງລີ (ຕົງລີ-ຈີງກູ), ບໍລິສັດທັງໝົດແມ່ນໄດ້ເຂົ້າມາໃນ 2004 ຫລື ຈາກນັ້ນບໍ່ດົນ. ນັ້ນແມ່ນປີທີ່ມີຄວາມໝາຍປະຫວັດສາດສຳລັບການພັດທະນາຢາງພາລາຢູ່ ແຂວງ ຫຼວງນໍ້າທາ, ສົມທຽບເນື້ອທີ່ປູກຝັງຕາມສັນຍາກັບເນື້ອທີ່ໆໄດ້ປູກແລ້ວນັ້ນ, ພວກເຮົາຮູ້ວ່າການປູກຢາງ ຊຶ່ງນຳພາໂດຍບໍລິສັດໃນຊຸມປີຂ້າງໜ້ານັ້ນ ຈະແຂງແຮງກວ້າງຂວາງ. ເຖິງຢ່າງໃດກໍຕາມ ເນື້ອທີ່ຈະປູກຕົວຈິງ ໃນທີ່ສຸດ ອາດຈະບໍ່ເປັນຕາຕື່ນຄືເຫັນນຳຕົວເລກເນື້ອທີ່ຕາມສັນຍາ (ຖ້າອ່ານເບິ່ງຕົວເລກເນື້ອທີ່ຕາມສັນຍາເທົ່ານັ້ນ ຈະເຫັນວ່າພຽງແຕ່ເນື້ອທີ່ຂອງ ຣູເຟງ/ Ruifeng ເທົ່ານັ້ນ ກໍເກືອບກວມເອົາທັງໝົດຂອງ ເມືອງສິງ ແລະ ລອງ ແລ້ວ). ຂ້າພະເຈົ້າຈະພະຍາຍາມອະທິບາຍຄວາມແຕກຕ່າງນີ້ ແລະ ແລກປ່ຽນຄວາມເຫັນແບບເລິກເຊິ່ງກວ່າໃນເລື່ອງການພັດທະນາຢາງ ຍ້ອນມີບໍລິສັດເປັນຫຼັກ ໃນບົດທີ 5. ເຖິງຈະພະຍາຍາມໃຫ້ໄດ້ຄວາມຊັດເຈນແບບພໍຍອມຮັບໄດ້ກໍຕາມ, ຕົວເລກສະຖິຕິທາງການນີ້ ສາມາດເຮັດໃຫ້ເຫັນພາບທົ່ວໄປ ແລະ ແນວໂນ້ມກ່ຽວກັບການພັດທະນາຢາງພາລາໃນທົດສະວັດຜ່ານມາ. ໃນສອງສາມປີຂ້າງໜ້ານີ້ ການເພີ່ມຂຶ້ນຢ່າງໄວວາໜ້າຈະສືບຕໍ່, ມີຄວາມເປັນໄປໄດ້ຢູ່ວ່າ ຈະເປັນຮູບແບບເພີ່ມທະວີການພັດທະນາຢາງພາລາທີ່ນຳທາງໂດຍບໍລິສັດ. ມີຄວາມຈຳເປັນແທ້ໆທີ່ຕ້ອງມີການເກັບກຳຂໍ້ມູນ, ຕິດຕາມ ແລະ ເອົາໃຈໃສ່ດູແລ ສັງເກດເບິ່ງເນື້ອທີ່ປູກຕົວຈິງ ເພື່ອປະເມີນຕີລາຄາໃຫ້ໄດ້ຢ່າງຖືກຕ້ອງ ແລະ ທັນການ ກ່ຽວກັບແວດລ້ອມການປູກຢາງຢູ່ ຫຼວງນໍ້າທາ (ກໍຄືບ່ອນອື່ນໆໃນພາກເໜືອ ຂອງລາວ) ຊຶ່ງຈະປ່ຽນແປງຢູ່ຕະຫຼອດ. ປັບປຸງວິທີການຕິດຕາມຢ່າງໃກ້ຊິດແມ່ນບາດກ້າວສຳຄັນຫນຶ່ງ ເພື່ອໃຫ້ມີການພັດທະນາຢາງພາລາແບບໂປ່ງໃສ ແລະ ມີການຄວບຄຸມ ແລະ ນີ້ຄືຂໍ້ສະເໜີຫນຶ່ງ ຊຶ່ງຂ້າພະເຈົ້າຈະຍົກມາເວົ້າອີກຕື່ມໃນ ບົດທີ 9.

---

[3] ເຖິງແມ່ນວ່າຕາຕະລາງ 2.1 ມີແຕ່ 9 ບໍລິສັດ, ແຕ່ຍັງມີຢ່າງໜ້ອຍ 11 ບໍລິສັດທາງການທີ່ປະຕິບັດງານຢູ່ ຫຼວງນໍ້າທາ, ລວມໃນນັ້ນ 3 ບໍລິສັດຮ່ວມມືກັບທະຫານແຂວງ. ໃນຈຳນວນບໍລິສັດທາງການ 9 ບໍລິສັດ ແມ່ນບໍລິສັດຈີນ.

**ຕາຕະລາງ 2.1 ບໍລິສັດຢາງພາລາສໍາຄັນໃນ ຫຼວງນໍ້າທາ**

| ບໍລິສັດ | ລົງທະບຽນທາງການ | ເມືອງທີ່ດໍາເນີນການ | ເນື້ອທີ່ຕາມຕົກລົງ (ຮຕ) | ວິທີປະຕິບັດ* |
|---|---|---|---|---|
| ຢາງພາລາຢຸນນານ | 2006 | ນໍ້າທາ, ລອງ | 166,667 ໃນ 4ແຂວງ | ສໍາປະທານ (214 ຮຕ) ແລະປູກຕາມສັນຍາ (ຊາວບ້ານ 30%/ບໍລິສັດ 70%) |
| ຣູແຟງ | 2006 | ລອງ | 300,000* | ສໍາປະທານຜ່ານທະຫານ |
| ດີຢວນ | 2006 | ລອງ | 17,500 | ສັນຍາປູກ (ຊາວບ້ານ 30% /ບໍລິສັດ70%) |
| ເຊັງລີ | 2004 | ສິງ | 2,000 | ປູກຝັງຕາມສັນຍາກາຍເປັນສາທິດ |
| ທົງລີ-ຈິງກູ (ຮ່ວມລົງທຶນ) | | ສິງ, ລອງ, ນໍ້າທາ, ວຽງພູຄາ | 6,350*** | ປູກຝັງຕາມສັນຍາດ້ວຍຫຼາຍຮູບແບບແບ່ງປັນ % |
| ສາຍພະຈັນ (ລາວ) | 2006 | ລອງ | 1,050 | ປູກຝັງຕາມສັນຍາດ້ວຍຫຼາຍຮູບແບບແບ່ງປັນ % |
| ເຊັງຮົວ | 2004 | ວຽງພູຄາ | 3,000 | ສັນຍາປູກ (ຊາວບ້ານ 30% /ບໍລິສັດ 70%) ຫລື (ຊາວບ້ານ 61% /ບໍລິສັດ39%) |
| ເຈຍຊວງ | 2005 | ນາແລ | 2,000 | ສັນຍາປູກ (ຊາວບ້ານ 65% /ບໍລິສັດ35%) |
| ໄຕຈາງ | 2006 | ນໍ້າທາ | 1,004 | ສັນຍາປູກ (ຊາວບ້ານ6 5% /ບໍລິສັດ 35%) |

* ໃນຖັນ ວິທີປະຕິບັດນີ້, ຈະບົ່ງຮູບແບບໃຊ້ດັ່ງທີ່ດໍາເນີນຢູ່. ສໍາລັບບໍລິສັດປະຕິບັດງານຢູ່ ເມືອງສິງ ແລະ ລອງ ຊຶ່ງບໍ່ໄດ້ໄປຢ້ຽມຢາມພາກສະໜາມນັ້ນ, ວິທີປະຕິບັດຈະຂຽນລົງວ່າດັ່ງລະບຸໄວ້ໃນສັນຍາ.

ເບິ່ງເຊັ່ນຂຽນໄວ້ໃນວົງເລັບເວົ້າເຖິງການແບ່ງປັນຜົນກໍາໄລລະຫວ່າງຊາວບ້ານ (V) ແລະບໍລິສັດ (C). ຈະເວົ້າເລື່ອງສັນຍາປູກອີກໃນບົດທີ 5.

** ອີງຕາມຕົ້ນສະບັບສັນຍາເຊັ່ນກັບກອງທັບແຂວງ. ເນື້ອທີ່ອາດຫຼຸດລົງໃນເມື່ອໄດ້ມີການ ເຈລະຈາກັບອົງກອນອື່ນໆຂອງລັດຖະບານລາວ

*** ອີງຕາມແຜນທີ່ໂຄສະນາຈາກຫ້ອງການບໍລິສັດ, ຂໍ້ມູນອາດເກົ່າບໍ່ຫຼ້າສຸດ.

**ແຫລ່ງຂໍ້ມູນ: ສັນຍາເປັນລາຍລັກອັກສອນ, ສົນທະນາກັບບໍລິສັດ, ຊາວບ້ານ ແລະ ອົງການກ່ຽວຂ້ອງ**

# ບົດທີ 3
# ເປັນຫຍັງຕ້ອງເປັນຢາງພາລາ? ເປັນຫຍັງຕ້ອງດຽວນີ້?

ໃນບົດທີ 2 ໄດ້ສົນທະນາ ກ່ຽວກັບບັນຫາຂະໜາດ ແລະ ຂອບເຂດຄວາມກວ້າງຂວາງຂອງການພັດທະນາຢາງພາລາໃນຊຸມປີຜ່ານມາທີ່ ແຂວງ ຫຼວງນ້ຳທາ. ເຖິງແມ່ນວ່າ ແຂວງນີ້ໄດ້ ເລີ່ມຕົ້ນປູກຢາງມາແຕ່ 1994, ຄວາມອົບລະວົນກ່ຽວກັບຢາງດັ່ງທີ່ເຫັນກັນໃນທຸກມື້ນີ້ ບໍ່ໄດ້ປະກົດຕົວ ຈົນມາຮອດຊຸມປີ 2000 ມາ, ອັນໃດເປັນສິ່ງຜັກດັນເຮັດໃຫ້ມີຄວາມສົນໃຈເປັນຂະບວນເຊັ່ນນີ້? ເປັນຫຍັງຕ້ອງແມ່ນຢາງພາລາ? ເປັນຫຍັງຕ້ອງເປັນດຽວນີ້?

## 3.1 ການຊຸກຍູ້ສົ່ງເສີມໂດຍກົງ ແລະ ການສະໜັບສະໜູນແບບທາງອ້ອມຂອງລັດຖະບານລາວ

ກອງປະຊຸມໃຫຍ່ ຄັ້ງທີ 5 (1991) ຂອງອົງຄະນະພັກ ແຂວງ ຫຼວງນ້ຳທາ ໄດ້ກຳນົດເອົາຢາງພາລາເປັນຍຸດທະສາດຂໍກຸນແຈເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ຖືເປັນເຄື່ອງມືອັນໜຶ່ງເພື່ອຍຸດຕິການຖາງປ່າເຮັດໄຮ່. ຄວາມພະຍາຍາມໃນຕອນຕົ້ນກໍລວມມີແຜນງານຂອງລັດຖະບານ ແລະ ເງິນ ກູ້ຢືມແບບລັດຊ່ວຍຜ່ອນຜັນ ເພື່ອສະໜັບສະໜູນກຸ່ມບ້ານ, ແລະ ຕໍ່ມາໃນປີ 2003 ກໍໄດ້ໃຫ້ແກ່ກຸ່ມນຶ່ງອີກ ຊຶ່ງປະກອບດ້ວຍ 12 ບ້ານໃນ ເມືອງນ້ຳທາ (ບົດທີ 2). ພ້ອມກັນນັ້ນ ໃນປີ 2003 ແຂວງໄດ້ພະຍາຍາມເປັນເທື່ອທຳອິດທີ່ຈະກຳນົດ ແລະ ເກັບກຳຄຸ້ມຄອງການລົງທຶນຂະໜານໃຫຍ່ໃນຢາງພາລາ: ຄຳສັ່ງເຈົ້າແຂວງ ເລກທີ_34 (19/12/2003) ໄດ້ອະທິບາຍຮູບແບບທົ່ວໄປໃນການລົງທຶນໃນການປູກຢາງ ແລະ ຂັ້ນຕອນຕ່າງໆທີ່ກ່ຽວຂ້ອງຂອງແຕ່ລະຮູບແບບນັ້ນ. ນອກຈາກຊາວບ້ານທີ່ມີສວນຢາງຂະໜາດນ້ອຍ, ລະບຽບການຍັງເວົ້າແຈ້ງເຖິງສະພາບຕ່າງໆໃນການລົງທຶນໂດຍບໍລິສັດພາຍໃນ ແລະ ຕ່າງປະເທດໂດຍຜ່ານຮູບການປູກດ້ວຍການສຳປະທານ ຫລື ດ້ວຍສັນຍາຜູກພັນ ປູກຢາງ (ຕໍ່ມາບໍ່ດົນກໍມີບໍລິສັດຢາງພາລາຈຳນວນນຶ່ງມາລົງທະບຽນ). ຫວ່າງໝໍ່ໆນີ້ ລະບຽບການຂອງແຂວງ (ຈຂ ເລກ 7, 06/12/2006) ໄດ້ກຳນົດໄວ້ວ່າຄອບຄົວໃດຫາກບໍ່ມີດິນນາ ອຳນາດປົກຄອງແຂວງ ກໍຈະມອບດິນ 1 ຮຕ ໃຫ້ພ້ອມທັງເບ້ຍຢາງ; ເຖິງຢ່າງໃດກໍຕາມ, ຈົນເຖິງດຽວນີ້ ຄຳສັນຍານີ້ຍັງບໍ່ເປັນຕົວເປັນຕົນເທື່ອ. ເອກະສານດັ່ງກ່າວ ຍັງໄດ້ກຳນົດຄາດໝາຍເນື້ອທີ່ ໃນການປູກຢາງພາລາໄວ້ເຖິງ 20,000 ຮຕ ເມື່ອຮອດທ້າຍປີ 2010[4].

ການລົງທຶນໃນຢາງພາລາທີ່ເພີ່ມຂຶ້ນຢ່າງໄວວາຫວ່າງບໍ່ດົນມານີ້ ແມ່ນກ່ຽວຂ້ອງຢ່າງໃກ້ຊິດກັບນະໂຍບາຍຕ່າງໆຂອງລາວໃນດ້ານການສົ່ງເສີມການລົງທຶນຕ່າງປະເທດ. ກົດໝາຍສົ່ງເສີມການລົງທຶນຕ່າງ ປະເທດໃນປັດຈຸບັນ (ສະພາແຫ່ງຊາດ ເລກ 11, 22/10/2004) ໄດ້ກຳນົດເຂດທີ່ມີຄວາມຫ່າງໄກໃນສາມລະດັບແຕກຕ່າງກັນ ເພື່ອເສຍ ແລະ ບໍ່ຕ້ອງເສຍ ພາສີອາກອນອີງຕາມກໍລະນີຄວາມຫ່າງໄກ. ການຈັດແບ່ງທີ່ຕັ້ງພູມສາດສະເພາະຂອງເຂດຕ່າງໆເລົ່ານີ້ ແມ່ນແຂວງຈະເປັນຜູ້ຕີລາຄາ. ການລົງທຶນຂອງບໍລິສັດຢາງພາລາຕ່າງປະເທດຢູ່ ຫຼວງນ້ຳທາສ່ວນຫຼາຍແມ່ນຢູ່ “ເຂດ 1” ຊຶ່ງມີລະບົບໂຄງລ່າງເລັກໜ້ອຍທີ່ສຸດ. ສ່ວນ ໜຶ່ງຂອງເຫດຜົນກໍຍ້ອນວ່າ ບໍລິສັດເຫຼົ່ານີ້ມັກຕອນດິນກວ້າງໃຫຍ່ທີ່ມີທຳມະຊາດແວດລ້ອມທີ່ຄົນບໍ່ໄດ້ແຕະຕ້ອງເທື່ອ ຊຶ່ງຈະຢູ່ໃນເຂດຫ່າງໄກສອກຫລີກ; ແຕ່ການທີ່ມັກລົງທຶນຢູ່ເຂດ 1 ນີ້ອາດເປັນຍ້ອນມີນະໂຍບາຍຜ່ອນຜັນດີສຳລັບບໍລິສັດ. ການລົງທຶນໃນເຂດນີ້ຈະບໍ່ຕ້ອງເສຍພາສີກຳໄລ 7 ປີ ແລະ ຫລັງຈາກນັ້ນ ກໍຈະເສຍພາສີໃນອັດຕາຫຼຸດຜ່ອນ 10%. ໂດຍທົ່ວໄປແລ້ວຕົ້ນຢາງໃຊ້ເວລາ 7-8 ປີກ່ອນຈະໃຫຍ່ ແລະ ສາມາດປາດຢາງໄດ້, ບໍລິສັດຈຶ່ງຖືກຍົກເວັ້ນບໍ່ຕ້ອງເສຍພາສີກຳໄລໃນລະຫວ່າງ 14-15 ປີທຳອິດຂອງການດຳເນີນກິດຈະກຳ. ນອກນັ້ນແລ້ວ ບໍລິສັດຍັງບໍ່ຕ້ອງເສຍ

[4] ຈ.ຂ. ເລກ 34 ໄດ້ກຳນົດຕົວເລກຄາດໝາຍຜ່ອນຜັນຫຼາຍກ່ວາຄືຢູ່ລະຫວ່າງ 10-15 ພັນ ຮຕ ສວນຢາງໃນຂອບເວລາດຽວກັນ

ພາສີອັດຕາຕ່ຳສຸດ ແລະ ພາສີນຳເຂົ້າອຸປະກອນ ແລະ ພາຫະນະຍານຍົນ ແລະ ບໍ່ເສຍອາກອນສົ່ງອອກສຳລັບຜະລິດຕະພັນສົ່ງອອກ.

ໃນລະດັບຊາດ, ເຖິງວ່າ ຢາງພາລາບໍ່ໄດ້ຖືກກຳນົດວ່າເປັນເປົ້າຫມາຍເພື່ອສົ່ງເສີມ, ແຕ່ຍຸດທະສາດປ່າໄມ້ແຫ່ງຊາດຂອງລາວຈົນເຖິງ 2020 ຊໍ້າພັດສົ່ງເສີມການປູກປ່າໄມ້ ເພື່ອຈຸດປະສົງການຄ້າ. ຍຸດທະສາດຮອດປີ 2020 ໄດ້ວາງແຜນເພີ່ມທະວີການປົກຫຸ້ມຂອງ "ປ່າ" ຈາກ 40% ເປັນ 70% ຊຶ່ງການປູກຕົ້ນໄມ້ຈະປະກອບສ່ວນ ໃນຈຳນວນບໍ່ໜ້ອຍເລີຍ. ເພື່ອບັນລຸເປົ້າໝາຍ, ລັດຖະບານໄດ້ມີສິ່ງລະດົມໃຈ, ຊຶ່ງລວມໃນນັ້ນ ກໍມີການມອບ ຫລືໃຫ້ເຊົ່າເນື້ອທີ່ດິນເພື່ອປູກປ່າ, ໃຫ້ກຳມະສິດຕໍ່ຕົ້ນໄມ້ທີ່ໄດ້ປູກ, ຍົກເວັ້ນພາສີດິນບ່ອນທີ່ໄດ້ລົງ ທະບຽນປູກຕົ້ນໄມ້ ແລະ ການແຈກຢາຍເບ້ຍໄມ້ໂດຍບໍ່ຄິດຄ່າໃຫ້ແກ່ກະສິກອນ ແລະ ອົງການຈັດຕັ້ງ (ກະຊວງກະສິກຳ ແລະ ປ່າໄມ້, ກໍລະກົດ 2005). ແຜນ 5 ປີ ເພື່ອພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີຫ້າ (2001-2005) ແລະຄັ້ງທີຫົກ (2006-2010) ຍັງສົ່ງເສີມ ການປູກຕົ້ນໄມ້ ຢ່າງແຂງແຮງ ເພື່ອຈຸດປະສົງທາງການຄ້າ ແລະ ຫຼຸດຜ່ອນການເຮັດໄຮ່ ໂດຍມີຕົວເລກຄາດໝາຍສູງ, ຄືປູກປ່າໃຫ້ໄດ້ 134,000 ຮຕ. ຮອດ 2005 (91,000 ຮຕ. ໄດ້ບັນລຸແລ້ວ) ແລະ ໄປຮອດ 2010 ໃຫ້ໄດ້ອີກຕື່ມ 25,000-30,000 ຮຕ.

ຂະບວນການມອບດິນ ມອບປ່າແຫ່ງຊາດ ກໍມີບົດບາດທາງອ້ອມໃຫ້ແກ່ການສ້າງທິວທັດສວນຢາງຢູ່ ແຂວງຫຼວງນໍ້າທາ. ການວາງແຜນນຳໃຊ້ດິນ ແລະ ມອບດິນຢູ່ ແຂວງ ຫຼວງນໍ້າທາ ໄດ້ເລີ່ມມາແຕ່ປີ 1997, ໂດຍໄດ້ເລີ່ມຕົ້ນກ່ອນໝູ່ທີ່ ເມືອງນໍ້າທາ ແລ້ວຂະຫຍາຍອອກໄປທົ່ວແຂວງ[5]. ພາຍຫລັງການມອບດິນແລ້ວຊາວບ້ານໄດ້ຖືກຜັກດັນໃຫ້ຊອກຫາທາງເລືອກຖາວອນທົດແທນໃຫ້ແກ່ການເຮັດໄຮ່, ຖ້າບໍ່ດັ່ງນັ້ນກໍຈະຕົກຢູ່ສະພາບສ່ຽງ-ດິນທີ່ໄດ້ມອບໃຫ້ນັ້ນອາດເອົາໃຫ້ຄົວເຮືອນໃໝ່ ຖ້າຫາກປ່ອຍດິນເປັນເຮື້ອຫຼາຍກວ່າສາມປີ. ດັ່ງນັ້ນສຳລັບຊາວບ້ານຫຼາຍຄົນ ການປູກຢາງຈຶ່ງເປັນທາງເລືອກທີ່ມີເຫດຜົນດີ.

## 3.2 ກຳລັງຄວາມຕ້ອງການ ຂອງຕະຫຼາດໃນຂົງເຂດ

ຍ້ອນແຂວງ ຫຼວງນໍ້າທາ ຢູ່ໃກ້ກັບຈີນ ຈຶ່ງຢູ່ໃຕ້ອິດທິພົນ ແລະ ໄດ້ຮັບຜົນກະທົບໂດຍກົງ ຈາກກຳລັງຕະຫຼາດຈີນ. ຄວາມຕ້ອງການຢາງພາລາທີ່ເພີ່ມຂຶ້ນຂອງຈີນ, ການສະໜອງພາຍໃນຈີນ ທີ່ຢູ່ເກົ່າບໍ່ເພີ້ມ ແລະ ລາຄາດິນສູງ ເປັນເຫດຜົນສ່ວນໃຫຍ່ເຮັດໃຫ້ແນວໂນ້ມການພັດທະນາຢາງພາລາເພີ່ມທະວີຂຶ້ນຢູ່ ແຂວງ ຫຼວງນໍ້າທາ ແລະຢູ່ແຫ່ງອື່ນໆໃນພາກເໜືອຂອງລາວ.

ຢາງພາລາ, ຫນຶ່ງໃນສີ່ວັດສະດຸອຸດສາຫະກຳຕົ້ນຕໍຂອງຈີນ (ວັດສະດຸສາມຢ່າງອື່ນໆນັ້ນມີຄືຖ່ານຫີນ, ເຫລັກ ແລະ ນໍ້າມັນ) ນັບວ່າມີຄວາມສຳຄັນຍຸດທະສາດເພື່ອເຮັດໃຫ້ມີການເຕີບໂຕດ້ານເສດຖະກິດຢ່າງໄວວາໃນປະເທດ. ນັບແຕ່ປີ 2001 ຈີນໄດ້ລື່ນສະຫະລັດ ແລະ ໄດ້ກາຍເປັນປະເທດຊົມໃຊ້ ແລະ ນຳເຂົ້າຢາງທຳມະຊາດໃຫຍ່ທີ່ສຸດໃນໂລກ. ບໍ່ມີສັນຍານວ່າຄວາມຕ້ອງການທີ່ເພີ່ມທະວີນັ້ນຈະຫລຸດລົງ ຍ້ອນເສດຖະກິດທີ່ຂະຫຍາຍຕົວແຮງ. ໃນປີ 2003, ຈີນຊົມໃຊ້ຢາງທຳມະຊາດ 1.6 ລ້ານໂຕນ, ກວມເອົາ 23% ຂອງການສະໜອງຂອງໂລກ. ປະລິມານນໍ້າໜັກນີ້ໄດ້ເພີ່ມຂຶ້ນເຖິງ 1.8 ລ້ານໃນ 2004 ຫາ 2.0 ລ້ານໃນ 2005, 2.3 ລ້ານໃນ 2006, ແລະ 1.3 ລ້ານໃນ 6 ເດືອນຕົ້ນຂອງ 2007. ພ້ອມໆກັບນັ້ນ ການຜະລິດຢາງທຳມະຊາດພາຍໃນຈີນເອງໄດ້ຢູ່ເກົ່າ,

---

[5] ຫຼາຍໆບ້ານຢູ່ເມືອງສິງລາຍງານວ່າວຽກວາງແຜນນຳໃຊ້ດິນ ແລະ ມອບດິນປະຕິບັດກາງຊຸມປີ 2000 ນີ້. ເມື່ອສົນທະນາກັບພະນັກງານ GTZ ຢູ່ເມືອງສິງ_ຊີ້ໃຫ້ເຫັນວ່າຊາວບ້ານຫຼາຍຄົນບໍ່ຮູ້ເລື່ອງຫຍັງກ່ຽວກັບການມອບດິນ ໂດຍລັດຖະບານໃນຄັ້ງທຳອິດໃນຕອນທ້າຍຊຸມປີ 1990. ໂຄງການໄດ້ເນັ້ນການວາງແຜນນຳໃຊ້ ແລະ ມອບດິນໃນຄັ້ງທີສອງນີ້ໃນກາງຊຸມປີ 2000 ຊຶ່ງເປັນເວລາທີ່ຊາວບ້ານສ່ວນຫຼາຍລົງທະບຽນ.

ຄື ປະມານ 0.55 ລ້ານໂຕນຕໍ່ປີ ແລະ ນັບແຕ່ປີ 2005 ເປັນຕົ້ນມາ ຍັງມີລັກສະນະຫຼຸດລົງຊ້ຳ ເມື່ອພາຍຸໃຕ້ຝຸ່ນໄດ້ທຳລາຍ ຮາຍໜານ ຊຶ່ງເປັນຫນຶ່ງໃນຈຳນວນສາມແຂວງທີ່ຜະລິດຢາງໃນຈີນ; ພາຍຸໃຕ້ຝຸ່ນໄດ້ທຳລາຍປ່າຕົ້ນຢາງຫຼາຍສົມຄວນ[6].

ການຫຼຸດໂຕນກັນທີ່ກວ້າງອອກລະຫວ່າງຄວາມຕ້ອງການ ແລະ ການສະໜອງຂອງຈີນນັ້ນ ຈຳເປັນຕ້ອງມີການນຳເຂົ້າມາຖົມຊ່ອງຫວ່າງ. ພາບເສັ້ນກຣາຟ 3.1 ຊີ້ໃຫ້ເຫັນເຖິງບົດບາດແຕກຕ່າງກັນ ທີ່ເພີ່ມທະວີລະຫວ່າງການຜະລິດພາຍໃນປະເທດ ແລະ ການນຳເຂົ້າເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການທີ່ສູງຂຶ້ນຂອງຈີນ. ຕົ້ນຕໍແມ່ນ ຍ້ອນການຊົມໃຊ້ຂອງຈີນທີ່ເຮັດໃຫ້ລາຄາຢາງທຳມະຊາດຂອງໂລກ ແລະ ພາຍໃນປະເທດເອງເພີ່ມຂຶ້ນເກືອບສີ່ເທົ່າຕົວນັບແຕ່ 2001 ເປັນຕົ້ນມາ ຊຶ່ງມັນເຮັດໃຫ້ລາຄາຊັບພະຍາກອນທຳມະຊາດຖີບຂຶ້ນສຳລັບຂະແໜງອຸດສາຫະກຳຈີນ (ຮູບກຣາຟ 3.2 ແລະ Zee News/ຂ່າວ Zee 2007). ຍ້ອນຄ່າໃຊ້ຈ່າຍໃນການຜະລິດຢາງທຽມດ້ວຍນ້ຳມັນດິບທີ່ສູງຍິ່ງເຮັດໃຫ້ການສະໜອງຢາງທຳມະຊາດນັ້ນເປັນບູລິມະສິດອັນດັບໜຶ່ງເພື່ອຮັກສາການຂະຫຍາຍຕົວຂອງເສດຖະກິດໃຫ້ສູງ.

ຮູບສະແດງ 3.1. ຕົວເລກການຜະລິດຢາງພາຍໃນຈີນ ແລະ ນຳເຂົ້າໃນຊ່ວງປີ 1992-2005




ແຫລ່ງຂໍ້ມູນ: ບໍລິສັດ ຢາງພາລາຂອງຈີນ

6 ຂໍ້ມູນຊົມໃຊ້ ແລະ ຜະລິດສຳລັບແຕ່ລະປີໄດ້ເກັບກຳມາຈາກແຫລ່ງສີ່ຕ່າງໆຂອງຈີນ

**ຮູບສະແດງ 3.2. ລາຄາຢາງພາລາ ຊ່ວງປີ 1995-2007**




**ໝາຍເຫດ:** ລາຄາ SMRS ໄດ້ *ດາວໂລດ* ໂດຍກົງເປັນເງິນໂດລາສະຫະລັດ. ລາຄາ SCR5 ແມ່ນເປັນຢວນ ແລະ ປ່ຽນມາເປັນຫຼຽນສະຫະລັດໂດຍໄດ້ໃຊ້ຂໍ້ມູນແລກປ່ຽນເງິນຕາປະຫວັດສາດຈາກຄະນະບໍລິຫານຄັງສຳຮອງ ກາງສະຫະລັດ.

**ແຫຼ່ງຂໍ້ມູນ:** ຂໍ້ມູນຂາຍແມ່ນສະໜອງໂດຍພະແນກການທ້ອງຖິ່ນສິບສອງພັນນາ (ຂໍ້ມູນຕະຫຼາດທົ່ວໄປແມ່ນຈັດລຽງໃນຈີນ). ຄະນະບໍລິຫານຢາງດິບແຫ່ງ ມາເລເຊຍ http://www2.lgm.gov. my/mre/yearly Avg.aspx (ຂໍ້ມູນກ່ອນ 2000 ບໍ່ມີຢູ່ internet).

ເຫດຜົນຕົ້ນຕໍຂອງການສະໜອງພາຍໃນຂອງຈີນຢູ່ຄົງຕົວ ບໍ່ເພີ້ມຂື້ນນັ້ນ ກໍຍ້ອນວ່າຂາດດິນທີ່ເໝາະສົມເພື່ອປູກຕົ້ນຢາງ. ຢູ່ຈີນ ຕົ້ນຢາງທຳມະຊາດສາມາດປູກໄດ້ຢູ່ແຕ່ແຂວງພາກໃຕ້ຢຸນນານ (ສະເພາະຢ່າງຍິ່ງຢູ່ສິບສອງພັນນາ), ຮາຍນານ ແລະ ບາງສ່ວນຢູ່ກວາງດົງ. ເວລາເບິ່ງທິວທັດເຂດສິບສອງພັນນາແບບຜ່ານໆໄປ ຈະເຫັນວ່າການພັດທະນາຂະແໜງປູກຢາງນັ້ນເຮັດຫຼາຍໄປກວ່ານັ້ນແມ່ນບໍ່ໄດ້ອີກແລ້ວ[7]. ສ່ວນຫຼາຍ ສວນຢາງມີແຕ່ປູກພືດຊະນິດດຽວ, ຕົ້ນຢາງປົກຄຸມໄປທົ່ວເຈີ້ຍພູຂອງສິບສອງພັນນາ ແລະ ຍັງປູກຢູ່ຈຸດທີ່ບໍ່ຄວນຈະປູກໄດ້ ເຊັ່ນປູກຕາມແຖບດິນທີ່ຍົກພື້ນໄປຕາມລວງຍາວຂອງທາງຫຼວງ. ຕົ້ນຢາງນ້ອຍພວມປົ່ງຕາມເຈີ້ຍພູ ໃນລະດັບ ຄວາມຄ້ອຍຊັນສູງກວ່າ 35 ອົງສາ ແລະ ໃນລະດັບຄວາມສູງ ຈາກໜ້ານ້ຳທະເລ ກວ່າ 900 ມ; ນອກນັ້ນ ກໍປູກຢູ່ສວນປູກໝາກໄມ້ໃນເມື່ອກ່ອນ ແລະເຂົ້າໃຈວ່າປູກຢູ່ໃກ້ກັບແຫລ່ງຕົ້ນນ້ຳ. ປັດຈຸບັນ ນິຄົມລັດຢຸນນານ ຊຶ່ງມີຜົນຜະລິດກວມເອົາ 60% ຂອງການຜະລິດໃນທົ່ວແຂວງມີສະມັດຕະພາບການຜະລິດເຖິງ 1.7 ໂຕນ ຕໍ່ ເຮັກຕາຂອງຢາງແຫ້ງໃນປີ 2004, ຊຶ່ງເປັນຕົວເລກໜຶ່ງ ທີ່ສູງສຸດ ໃນທົ່ວໂລກ (website ຂອງນິຄົມລັດຂອງເຂດຢຸນນານ) ຈະຍົກການຜະລິດຂອງຕົ້ນຢາງທີ່ມີຢູ່ໃນປັດຈຸບັນໃຫ້ສູງກວ່ານີ້ ເຫັນວ່າຈະເປັນໄປໄດ້ຍາກ.

ການທີ່ລາຄາຢາງຖີບຕົວຂື້ນໃນຊຸມປີ 2000 ນີ້ ມັນໄດ້ຊຸກຍູ້ໃຫ້ມີຄວາມພະຍາຍາມຢ່າງຂະຫຍັນຂັນແຂງໂດຍບໍ່ສົນໃຈຫຍັງໝົດ, ສະເພາະຢ່າງຍິ່ງໃນກຸ່ມຊາວບ້ານ ແລະ ຜູ້ລົງທຶນຂະໜາດນ້ອຍ ໂດຍທີ່ເຂົາເຈົ້າຈະເຂົ້າໄປບຸກລຸກປ່າໄມ້, ແຫລ່ງຕົ້ນນ້ຳ ແລະ ດິນ ຊຶ່ງບໍ່ເໝາະສົມ ສຳລັບການປູກພືດອື່ນ. ການປູກແບບບໍ່ຍັ້ງຄິດດັ່ງກ່າວ

---

[7] ອີງຕາມການສັງເກດພາກສະໜາມຢູ່ເມືອງມານ, ເມືອງຮຸນ, ເມືອງແປງ, ກວນລີ ແລະ ຕາມເສັ້ນທາງຈາກມໍຮານຜ່ານເມືອງຫຼາ ຫາ ຈີງຮົງ

ເຮັດໃຫ້ທາງການແຂວງ ແລະ ກຳແພງນະຄອນສະແດງຄວາມເປັນຫ່ວງ. ເຖິງວ່າ ຈະບໍ່ໄດ້ຫ້າມການປູກຢາງຢ່າງໜັກແໜ້ນກໍຕາມ, ແຕ່ກໍໄດ້ປະຕິບັດບາງມາດຕະການເພື່ອຄວບຄຸມຄວາມວຸ້ນວາຍ ສັບສົນນີ້ (ມີການສົນທະນາຫຼາຍກວ່າເກົ່າວ່າ: ເຂດສິບສອງພັນນາຄວນມີລະບຽບການແນວໃດເພື່ອກວດກາການພັດທະນາການປູກຢາງໃນແຄ້ວນ ສິບສອງພັນນາ ຊຶ່ງຈະເວົ້າຢູ່ໃນບົດທີ 8). ສຳຄັນຢູ່ທີ່ນີ້ແມ່ນໃນປີ 2006 ອຳນາດການປົກຄອງກຳແພງນະຄອນສິບສອງພັນນາໄດ້ສັ່ງງົດທຸກໆການເຄື່ອນໄຫວ, ມອບສິດຕໍ່, ຮັບເໝົາ ຫລື ຮັບເໝົາຕໍ່ກິດຈະການພົວພັນກັບສະຫະກອນປ່າໄມ້ ຫລື ດິນໄຮ່ປະເປັນເຮື້ອຈົນກວ່າ 2008. ເຖິງວ່າພາກປະຕິບັດຍັງຈະຕ້ອງປັບປຸງຫຼາຍຢ່າງ, ແຕ່ມີລາຍງານວ່າມາດຕະການດັ່ງກ່າວ ເຮັດໃຫ້ເປັນການຍາກກວ່າເກົ່າສຳລັບຊາວບ້ານທີ່ຕ້ອງການປູກຢາງ, ນີ້ກໍຍ້ອນວ່າການປູກຢາງສ່ວນຫຼາຍແມ່ນເຮັດດ້ວຍການຮັບເໝົາ ແລະ ໂອນສິດດິນສອງປະເພດຂ້າງເທິງ.

ເມື່ອເຫັນສະພາບຂາດແຄນດິນຢູ່ສິບສອງພັນນາ, ພາກເໜືອຂອງລາວຈຶ່ງເປັນຈຸດທີ່ເໝາະສົມທີ່ສຸດສຳລັບຜູ້ລົງທຶນປູກຢາງຊາວຈີນ. ສັງເກດໄດ້ງ່າຍວ່າ ດິນກໍດີກວ່າ ແລະ ກໍຫາໄດ້ງ່າຍກວ່າ; ນອກນັ້ນ ລາຄາກໍເປັນພຽງສ່ວນໜຶ່ງຂອງລາຄາດິນຢູ່ຈີນ. ຄ່າເຊົ່າດິນນາຢູ່ເຂດທົ່ງພຽງຢູ່ສິບສອງພັນນາ ຕົກເປັນ 500-1,000 ຢວນຕໍ່ມູຕໍ່ລະດູການ. ຄ່າເຊົ່າດິນຢູ່ເຂດພູດອຍຈະແຕກຕ່າງກັນຫຼາຍກວ່າ ຊຶ່ງມັນຈະຂຶ້ນກັບຄຸນນະພາບ ແລະ ທີ່ຕັ້ງຂອງດິນ. ຢູ່ສິບສອງພັນນາ, ຄ່າເຊົ່າຈະຕົກຢູ່ລະຫວ່າງ 500-3,000 ຢວນ/ມູ ຕະຫຼອດອາຍຸຂອງການປູກຢາງ (35-45 ປີ), ແຕ່ຢູ່ເມືອງສິງ ແລະ ລອງ ສາມາດໄດ້ສິດໃນການນຳໃຊ້ດິນຕະຫລອດໄປ (ຖາວອນ) ຢູ່ເຂດເຈັ້ຍພູ 4,000-5,000 ຢວນຕໍ່ເຮັກຕາ ຫລື ລະຫວ່າງ 367-333 ຢວນຕໍ່ມູ[8].

## 3.3 ການຊຸກຍູ້ຢ່າງຂະໜັບຂັນແຂງ ຈາກລັດຖະບານຈີນ

ນອກເໜືອຈາກເລື່ອງກຳລັງຕະຫຼາດ ແລະ ການຂາດແຄນດິນ ຊຶ່ງເປັນສິ່ງຈະແຈ້ງຢູ່ແລ້ວ ຊຶ່ງໄດ້ຍູ້ດັນໃຫ້ຈີນໄປລົງທຶນໃນຂະແໜງຢາງພາລາຢູ່ຕ່າງປະເທດ, ລັດຖະບານຈີນກໍຍັງສົ່ງເສີມຢ່າງແຂງແຮງໃຫ້ມີການລົງທຶນເຊັ່ນນັ້ນເພື່ອຮັບປະກັນການສະໜອງວັດສະດຸອຸດສາຫະກຳປະເພດໜຶ່ງທີ່ສຳຄັນທີ່ສຸດ ສຳລັບຈີນ ໃຫ້ມີຢ່າງສະໝ່ຳສະເໝີ. ພາຍໃຕ້ການຊີ້ນຳໂດຍກົງຂອງຮອງນາຍົກ ວູຢີ, ນິຄົມລັດຢູ່ຢຸນນານໄດ້ຊອກລົງທຶນຢູ່ພາກເໜືອຂອງລາວນັບແຕ່ປີ 2004 ເປັນຕົ້ນມາ; ໃນຂະນະດຽວກັນນິຄົມລັດ ຢູ່ຮາຍນານ ແລະ ກວາງດົງ ໄດ້ຂະຫຍາຍກິດຈະກຳລົງທາງໃຕ້ຮອດມາເລເຊຍ.

ນອກເໜືອຈາກ (ອະດີດ) ລັດວິສາຫະກິດ, ທຸລະກິດເອກະຊົນກໍຖືກຊຸກຍູ້ໃຫ້ໄປລົງທຶນຢູ່ຕ່າງປະເທດ. ສະເພາະຢ່າງຍິ່ງໃນຊຸມກາງປີ 2000, ຈີນໄດ້ເຊື່ອມສານຄວາມພະຍາຍາມຄວບຄຸມຢາເສບຕິດຕົນເອງເຂົ້າໃສ່ກິດຈະກຳເສດຖະກິດແຫ່ງຊາດ ແລະ ປະຕິບັດນະໂຍບາຍອຸດໜູນ ຖົມຂຸມຢ່າງແຂງແຮງໃຫ້ແກ່ວຽກພັດທະນາ ເພື່ອທົດແທນການປູກຝິ່ນຢູ່ລາວ ແລະ ມຽນມາ. ເກືອບວ່າທຸກໆການລົງທຶນຂອງຈີນຂະໜາດໃຫຍ່ ແລະ ເປັນທາງການໃນການປູກຢາງໃນພາກເໜືອຂອງລາວແມ່ນປະຕິບັດພາຍໃຕ້ທິດນຳເພື່ອທົດແທນການປູກຝິ່ນ, ຊຶ່ງແມ່ນແບບວິທີໜຶ່ງເພື່ອຍຸດຕິການປູກຝິ່ນໂດຍສ້າງທາງເລືອກໃນແງ່ເສດຖະກິດເຊັ່ນ: ການປູກຕົ້ນໄມ້ ແລະ ພືດເປັນສິນຄ້າ: ໂຄງການທົດແທນການປູກຝິ່ນ ຊຶ່ງສ່ວນຫຼວງຫຼາຍເປັນຂອງເອກະຊົນໄດ້ຮັບການສະໜັບສະໜູນໂດຍລັດຖະບານຈີນ ຜ່ານຫຼາຍໆຮູບແບບຖົມຂຸມໃຫ້ເຊັ່ນ: ໃນຈຳນວນນະໂຍບາຍຕ່າງໆ ກໍໃຫ້ກູ້ຢືມເງິນ ແລະ ຍົກເວັ້ນພາສີ. ອີງຕາມຂໍ້ມູນ ຂອງຫ້ອງການ ການຄ້າເຂດສິບສອງພັນນາ, ມີຫຼາຍກວ່າ 40 ບໍລິສັດຈີນ, ແຕ່ທັງໝົດ ບໍ່ແມ່ນປູກຢາງ ທີ່ກຳລັງດຳເນີນທຸລະກິດຢູ່ພາກເໜືອຂອງ ລາວ ພາຍໃຕ້ເງື່ອນໄຂນະໂຍບາຍທົດແທນການປູກຝິ່ນ.

---

8 ລາຄາດິນແມ່ນອີງໃສ່ການສຳພາດຊາວບ້ານ ແລະ ຜູ້ລົງທຶນ

ແຕ່ທາງດ້ານນະໂຍບາຍຂອງລາວ, ໜ້ອຍຄົນຈະຮູ້ ແລະ ກໍບໍ່ມີໃຜຂຽນເຖິງເບື້ອງໜ້າເບື້ອງ ຫລັງຂອງນະໂຍບາຍຈີນ ຕໍ່ການຂະຫຍາຍຕົວດ້ານປູກຢາງແບບໄວວາຢູ່ ແຂວງ ຫຼວງນໍ້າທາ. ດັ່ງນັ້ນ ຂ້າພະເຈົ້າໄດ້ຍົກບັນຫານີ້ມາເວົ້າໂດຍລະອຽດໃນພາກໜຶ່ງສະເພາະ (ບົດທີ 4) ເພື່ອໃຫ້ເຫັນເລື່ອງການອຸດໜູນຖົມຊຸມຕ່າງໆ ໃນວຽກທົດແທນການປູກຝິ່ນ ແລະ ນະໂຍບາຍການສົ່ງເສີມທີ່ກ່ຽວຂ້ອງ. ພາບເສັ້ນສະແດງ 3.3 ໄດ້ສະແດງໃຫ້ເຫັນຂອບເຂດເວລາ ແລະ ເຫດການ (ນະໂຍບາຍ) ສຳຄັນໆທີ່ໄດ້ປະຕິບັດກັນຢູ່ ຫຼວງນໍ້າທາ ແລະ ຈີນ; ໃນນີ້ຫວັງວ່າຜູ້ອ່ານຈະເຫັນລັກສະນະລະຫວ່າງປະເທດຂອງການຂະຫຍາຍຕົວຢ່າງວ່ອງໄວຂອງການປູກຢາງຢູ່ ແຂວງ ຫຼວງນໍ້າທາ (ບາງເຫດການຈະອະທິບາຍລະອຽດຢູ່ບົດທີ 4). ເຖິງຢ່າງໃດກໍຕາມ, ປາສະຈາກການທົດສອບຢ່າງແທ້ຈິງກໍບໍ່ຄວນເຂົ້າໃຈວ່າ ເຫດການອັນໜຶ່ງ ກໍ່ໃຫ້ເກີດເຫດການໜຶ່ງອີກໄດ້ແນ່ນອນ. ພາບເສັ້ນ 3.3 ພຽງແຕ່ໃຫ້ຂໍ້ມູນດ້ານນະໂຍບາຍທີ່ມີຢູ່ໃນຫົວຂໍ້ຢາງພາລາ.

## 3.4 ຄວາມປາດຖະໜາຂອງຊາວບ້ານ

ຊາວບ້ານສ່ວນຫຼວງຫຼາຍຢູ່ທົ່ວສິບສອງພັນນາໄດ້ເລີ່ມປູກຕົ້ນຢາງໃນຊຸມປີ 1980 ແລະ ໄດ້ຮັບຜົນປະໂຫຍດຈາກລາຄາຢາງທີ່ໄດ້ເພີ່ມຂຶ້ນສູງໃນຊຸມປີ 2000 ຊາວບ້ານອາຄ່າ ແລະ ລື້ທີ່ຢູ່ເຂດປູກຢາງເຊັ່ນ: ເມືອງຫລ້າ, ເມືອງພົງ ແລະ ເມືອງມູນ ສາມາດປັບປຸງຊີວິດການເປັນຢູ່ຂອງຕົນໄດ້ດີບໍ່ໜ້ອຍ. ເຮືອນຮ້ານມີເສົາ ໃນເມື່ອກ່ອນກໍໄດ້ປ່ຽນເປັນເຮືອນຫຼາຍຊັ້ນ, ມີເຮືອນວິນລາສີສັນ; ຄອບຄົວມີເງິນຊື້ລົດຈັກ, ລົດບັນທຸກ, ລົດເກັງ, ໂທລະທັດ, ຕູ້ເຢັນ, ຈັກຊັກເຄື່ອງ, ເຄື່ອງຕົ້ມນໍ້າຮ້ອນ. ສິ່ງເຫລົ່ານີ້ເປັນເຄື່ອງໃຊ້ພື້ນຖານໃນຄົວເຮືອນ; ເຂົ້າປາອາຫານມີ ຫຼາຍຂຶ້ນ ແລະ ຫຼາກຫຼາຍ ແຕ່ມາຈາກພາຍນອກເປັນສ່ວນຫຼາຍ. ທຸກສິ່ງເຫລົ່ານີ້ ເປັນສັນຍາລັກຄວາມທັນສະໄໝ ໝາຍເຖິງຄວາມຫວັງ ແລະ ສິ່ງປາດຖະໜາຂອງຊາວບ້ານ ຢູ່ ແຂວງ ຫຼວງນໍ້າທາ ຊຶ່ງຫຼາຍຄົນກໍມີພີ່ນ້ອງເພື່ອນສະຫາຍຢູ່ເບື້ອງນັ້ນຂອງຊາຍແດນ. ຊາວບ້ານທັງສອງຟາກຖືວ່າ ຢາງພາລາເປັນເສັ້ນທາງໄປສູ່ຄວາມຢູ່ດີກິນດີ ຮັ່ງມີ. ຜົນສຳເລັດຂອງບາງບ້ານຢູ່ລາວ ທີ່ເລີ່ມຕົ້ນເຊັ່ນ: ບ້ານ ຫາດຍາວ ຍິ່ງເປັນສິ່ງລະດົມໃຈ, ໂດຍສະເພາະສຳລັບຜູ້ທີ່ບໍ່ມີພີ່ນ້ອງຢູ່ຟາກນັ້ນຂອງຊາຍແດນ. ເມື່ອມີຊາວບ້ານຫຼາຍຄົນແລ້ວໄດ້ເລີ່ມປູກ, ມັນກໍເຮັດໃຫ້ຄົນອື່ນໆເຮັດຕາມ.

ຊາວບ້ານຢູ່ລາວຫຼາຍຄົນທີ່ຖືກສຳພາດ ເມື່ອເວົ້າເຖິງສິ່ງລະດົມໃຈໃຫ້ປູກຢາງ ໄດ້ມີຄວາມເຫັນວ່າ "ຊາວບ້ານຄົນອື່ນໆກໍປູກ, ຂ້ອຍກໍເລີຍຕັດສິນໃຈເຮັດຄືກັນ"

## ພາບເສັ້ນ 3.3 ດ້ານນະໂຍບາຍຂອງການຂະຫຍາຍຕົວໃນການປູກຢາງ ຢູ່ຫລວງນໍ້າທາ ແລະ ຈີນ

| | 1991 | 1992 | 1994 | 1998 | 2000 | 2001 | 2003 | 2004 | 2005 | 2006 | 2007 |
|---|---|---|---|---|---|---|---|---|---|---|---|
| ສປປ ລາວ | ກອງປະຊຸມ ໃຫຍ່ພັກ V ຕົກລົງສົ່ງ ເສີມປູກຢາງ | | ຊາວບ້ານຫາດ ຍາວເລີ່ມປູກ ຢາງໂດຍໄດ້ຮັບ ການສະໜັບສະ ໜູນສ່ວນນຶ່ງ ຈາກລັດ | | | ບໍລິສັດຈີນ-ລາວ, ບໍລິສັດທໍາອິດລົງທະ ບຽນຢູ່ຫຼວງນໍ້າທາ.<br>ສົ່ງເສີມປູກໄມ້ຢ່າງ ແຂງແຮງໃນແຜນພັດ ທະນາ 2001-2005 | ເມືອງນໍ້າທາ ເລີ່ມສົ່ງເສີມ ປູກ 12 ບ້ານ 400 ຮຕ (ເງິນກູ້ຢືມ ຈາກຈີນ) | 2 ບໍລິສັດປູກຢາງ ຈີນລົງທະບຽນ. | ຍຸດທະສາດປ່າໄມ້ 2020 ຢໍ້າຄືນການສົ່ງ ເສີມປູກຢາງ<br>ຄວາມເຫັນເອກະພາບ ໃນແຂວງພາກເໜືອທີ່ ຫລີກ ລ້ຽງການ ສໍາ ປະທານ ແລະ ສົ່ງ ເສີມການປູກຝັງ ຕາມ ສັນຍາ (ພາກ 5) | ຢ່າງໜ້ອຍ 4 ບໍລິສັດຈີນ (ລວມທັງນິຄົມລັດ ຢູນນານ) ລົງທະບຽນ.<br>ສືບຕໍ່ສົ່ງເສີມປູກ ໄມ້ໃນແຜນພັດທະນາ 2006-2010<br>ກໍານົດຄາດໝາຍ ໃຫ້ສໍາເລັດປູກ 20,000 ຮຕ ມາຮອດ 2010. ແຂວງປະກາດ ຊ່ວຍ ແຕ່ລະຄອບຄົວບໍ່ມີນາໃຫ້ ມີດິນປູກຢາງ 1 ຮຕ. | |
| ຈີນ | | ທົດລອງໃນຕອນ ຕົ້ນດ້ານພັດທະນາ ປູກທົດແທນແກ່ ການປູກຝິ່ນຢູ່ບ່ອນ ອື່ນ (ຕົວແບບ ເມັງຮາຍ) | | ໄດ້ພັດທະ ນາແນວຄິດ "ຊູຊູກູ" | ການຢ້ຽມ ຢາມ ຂອງ ທ່ານຈຽງ ຊີມິນ, ການ ຢ້ຽມ ຢາມປະ ຫວັດສາດ ໂດຍນາຍົກ | | | ສ້າງໜ່ວຍປະຕິບັດງານ 122 ໜ່ວຍ, ເຊື່ອມ ສານການ ປູກພືດ ຊົດ ເຊີຍປູກຝິ່ນ ຊຶ່ງເອົາ ເຂົ້າໃນແຜນເສດຖະ ກິດແຫ່ງຊາດ.<br>ພິມເຜີຍແຜ່ຂໍ້ແນະນໍາ ລົງທຶນຕ່າງປະເທດ. ຂົງເຂດບູລິ ມະສິດ ສໍາລັບລາວຢູ່ນໍາຂະ ແໜງຊັບພະຍາກອນ: ລວມໃນນັ້ນກໍມີສ່ວນ ປູກໄມ້ເພື່ອການຄ້າ<br>ຢ້ຽມຢາມທາງການທູດ ໂດຍ ຮອງນາຍົກ ວູຢີ ແລະນາຍົກ ເວງ ເຈຍ ບາວ, ເຊັ່ນ ຂໍ້ຕົກ ລົງ ຈໍານວນນຶ່ງ ແລະ ແຜນແມ່ບົດເພື່ອ ພັດທະນາເຂດເໜືອ | | ສ້າງກອງທຶນພິເສດ ທົດແທນການປູກຝິ່ນ ໂດຍສະພາແຫ່ງລັດ<br>ຢ້ຽມຢາມໂດຍປະທານ ຮູ ຈິທາວ | ຈີນແລະມຽນມາ ເຊັນ ຕົກລົງດ້ານການປູກ ທົດແທນການປູກຝິ່ນ. ສັນຍາປະເພດນີ້ ຍັງບໍ່ ທັນມີສໍາລັບຈີນ ແລະ ລາວ.<br>ທາງການຢຸນນານ ສືບຕໍ່ຢ້ຽມຢາມເພື່ອຂະຫ ຍາຍແຜແມ່ບົດ |

ລາຄາຢາງເພີ່ມຂຶ້ນຢ່າງໄວວາ ແລະໜັກແໜ້ນ. ຄວາມແຕກໂຕນກັນລະຫວ່າງການຊົມໃຊ້ຢາງຂອງຈີນ ແລະການສະໜອງພາຍໃນນັບມື້ນັບກວ້າງອອກ

# ພາກທີ 4
# ຢາງພາລາ, ການທົດແທນໃຫ້ການປູກຝິ່ນ ແລະ "ຊູຈູກູ" *"Zou Chu Qu"*

ໃນບົດທີ 3 ເວົ້າເຖິງບັນດາປັດໄຈທີ່ອາດມີສ່ວນປະກອບໃຫ້ແກ່ການເຕີບໃຫຍ່ຢ່າງໄວວາຂອງກິດຈະກຳປູກຢາງໃນປັດຈຸບັນຢູ່ ຫຼວງນ້ຳທາ. ພາກນີ້ ຈະຂະຫຍາຍເນື້ອໃນຂອງໜຶ່ງປັດໄຈໃນຈຳນວນນັ້ນຕື່ມ, ນັ້ນກໍຄືນະໂຍບາຍຈີນທີ່ເປັນຕົ້ນເຫດໃຫ້ມີການຫລັ່ງໄຫຼຂອງການລົງທຶນຂ້າມຊາຍແດນມາ. ມາດຕະການໜຶ່ງໂດຍສະເພາະທີ່ກ່ຽວກັບການປູກຝັງເພື່ອທົດແທນໃຫ້ແກ່ຝິ່ນ ແມ່ນພົວພັນໂດຍກົງກັບຮູບແບບການລົງທຶນຂອງຕ່າງປະເທດຢູ່ ແຂວງ ຫຼວງນ້ຳທາ.

## 4.1 ປະຫວັດໂດຍສັງເຂບ ກ່ຽວກັບການທົດແທນຝິ່ນ

ການຊຸກຍູ້ສົ່ງເສີມການປູກພືດທົດແທນຝິ່ນຢູ່ຕ່າງປະເທດ ມີປະຫວັດຍາວນານມາແລ້ວ ຢູ່ຈີນ ໂດຍທີ່ຈີນໄດ້ມີໂຄງການຄັ້ງທຳອິດທີ່ໄດ້ເລີ່ມປະຕິບັດຢູ່ພາກເໜືອມຽນມາ ແລະ ໃນເວລານັ້ນກໍໄດ້ປູກຢູ່ ລາວ ແຕ່ບໍ່ຫຼາຍ. ເຂດເມັງຮາຍ ຂອງກຳແພງນະຄອນສິບສອງພັນນາ ໄດ້ເລີ່ມ ຕົ້ນຮ່ວມມືກັບເພື່ອນບ້ານໃກ້ຄຽງ. ໃນນັ້ນຢູ່ເຂດພິເສດທີ 4 ຂອງລັດຊານ, ປະເທດມຽນມາ, ກໍໄດ້ປູກເຂົ້າ, ອ້ອຍ, ຢາງ ແລະ ຊາ ນັບແຕ່ 1992 ເປັນຕົ້ນມາ. ໂຄງການນີ້ໄດ້ຮັບການຍ້ອງຍໍຈາກຫຼາຍພາກສ່ວນລວມທັງສະຫະປະຊາຊາດ ແລະ ໄດ້ຖືກສົ່ງເສີມໃຫ້ເປັນຕົວແບບໜຶ່ງ (ຮູ້ກັນໃນນາມ "ຕົວແບບເມັງຮາຍ") ໃນຈຳນວນກິດຈະກຳໃນເຂດຊາຍແດນຂອງ ແຂວງ ຢຸນນານ. ຕົກມາຮອດປີ 2003, ແຂວງ ຢຸນນານ ໄດ້ບັນລຸກິດຈະກຳປູກພືດທົດແທນຝິ່ນໃນເນື້ອທີ່ 620,000 ມູ, ໃນນັ້ນ 550,000 ມູ ແມ່ນຢູ່ ມຽນມາ ແລະ 70,000 ມູ ຢູ່ລາວ, ອັນໄດ້ກວມເອົາພືດ 20 ກວ່າຊະນິດ (ກົມການຄ້າ ຢຸນນານ, ກັນຍາ 2004).

ບໍ່ທັນເຖິງປີ 2004 ການປູກພືດປ່ຽນແທນຝິ່ນກໍ່ກາຍເປັນຂະບວນຮີບຮ້ອນ ແລະ ມີຄວາມສຳຄັນຍຸດທະສາດເພີ່ມຂຶ້ນໃນແຜນກິດຈະກຳແຫ່ງຊາດ. ກຸ່ມປະຕິບັດງານພິເສດເອີ້ນວ່າ "ກຸ່ມປະຕິບັດງານ 122" ໄດ້ຖືກສ້າງຕັ້ງຂຶ້ນເພື່ອກຳນົດນະໂຍບາຍພ້ອມທັງສົ່ງເສີມ ແລະ ປະສານກັບບັນດາທຸລະກິດຈີນໃຫ້ໄປລົງທຶນເພື່ອພັດທະນາວຽກງານທົດແທນຝິ່ນຢູ່ພາກເໜືອຂອງ ມຽນມາ ແລະ ລາວ. ກຸ່ມດັ່ງກ່າວນຳໂດຍກະຊວງການຄ້າ ແລະ ກຳມະການທີ່ມາຈາກຫຼາຍກວ່າສິບກະຊວງ ແລະ ກຳມາທິການລະດັບຊາດ. ກອງປະຊຸມຄັ້ງທຳອິດຂອງກຸ່ມນີ້ຊຶ່ງເປີດຂຶ້ນຕອນທ້າຍປີ 2004 ໄດ້ເຊື່ອມສານເອົາຄຳສັ່ງກ່ຽວກັບການປ່ຽນແທນການປູກຝິ່ນເຂົ້າໃນບັນດາຍຸດທະສາດເສດຖະກິດໂດຍລວມຂອງ ຈີນ ຢ່າງເປັນທາງການ, ຊຶ່ງໃນຕົວຈິງແລ້ວ ກໍແມ່ນໄດ້ຍົກຖານະວຽກນີ້ຈາກການເປັນພຽງແຕ່ປະເດັນຊາຍແດນໃຫ້ເປັນເລື່ອງສຳຄັນລະດັບຊາດ.

ນັບແຕ່ນັ້ນມາ ກໍໄດ້ມີການສ້າງນະໂຍບາຍທີ່ເອື້ອອຳນວຍຕ່າງໆ ໃນລະດັບຊາດ ແລະ ແຂວງ ເພື່ອເຮັດໃຫ້ຂັ້ນຕອນອະນຸມັດການລົງທຶນງ່າຍຂຶ້ນ, ບໍ່ຈຳກັດຫຼາຍ ກ່ຽວກັບຂໍ້ຮຽກຮ້ອງທາງດ້ານຕົ້ນທຶນທີ່ຈະລົງ, ຜ່ອນຜັນເລື່ອງຂໍ້ຈຳກັດດ້ານແຮງງານ ແລະ ສະໜອງສິ່ງຈູງໃຈດ້ານການເງິນຈົນໄປເຖິງການທີ່ສະພາແຫ່ງລັດຈີນສ້າງຕັ້ງກອງທຶນພິເສດ ປະກອບດ້ວຍ 250 ລ້ານຢວນໃນປີ 2006 ເພື່ອຊ່ວຍທຸລະກິດໂດຍຜ່ານຮູບການໃຫ້ທຶນຊ່ວຍເຫລືອ ແລະ ຈ່າຍດອກເບ້ຍເງິນກູ້ຢືມຄືນ. ກອງທຶນນີ້ແມ່ນກົມການຄ້າ ແຂວງ ຢຸນນານ ເປັນຜູ້ຈັດການ ຊຶ່ງທີ່ຕັ້ງພູມສາດຂອງມັນແມ່ນຢູ່ບ່ອນດຽວກັນກັບບ່ອນດຳເນີນບັນດາໂຄງການການທົດແທນການປູກຝິ່ນທັງໝົດ. ກົມດັ່ງກ່າວມີອຳນາດຕັດສິນວ່າທຸລະກິດໃດຄວນໄດ້ຮັບເງິນທຶນ ແລະ ວັດສະດຸຕ່າງໆເພື່ອການທົດແທນໃຫ້ແກ່ການປູກຝິ່ນ. ການປຶກສາຫາລືດ້ານນະໂຍບາຍຂອງຈີນໃນໄລຍະນັ້ນ ເກືອບເວົ້າໄດ້ວ່າພໍດີກົງກັນກັບການຫລັ່ງໄຫຼເຂົ້າມາຂອງເງິນລົງທຶນເພື່ອປູກຢາງພາລາໃນ ແຂວງ ຫຼວງນ້ຳທາ ຊຶ່ງເປັນແຂວງຜູ້ລົງທຶນທາງການຈາກ ຢຸນນານ ໄດ້ເຂົ້າມາລະຫວ່າງ ປີ 2004-2006.

## 4.2 ພາຍໃຕ້ກອບລວມຂອງ "ຊູຈູກູ" *"Zou Chu Qu"*

ຄວາມກະຕືລືລົ້ນ ໃນການປູກພືດທົດແທນປູກຝິ່ນ ທີ່ເກີດຂຶ້ນມາແບບກະທັນຫັນນີ້ ຄວນເບິ່ງໃສ່ກັບບັນດາກຳລັງຕະຫຼາດໃນຂົງເຂດ ແລະ ກອບນະໂຍບາຍຂອງຈີນໂດຍລວມ ທີ່ຄຸ້ມຄອງການລົງທຶນໃນຕ່າງປະເທດ.

ການລົງທຶນໃສ່ຢາງພາລາຂອງຈີນ ໃນ ລາວ ໄດ້ມີມາກ່ອນການປະຕິບັດນະໂຍບາຍທີ່ປະກົດຂຶ້ນຫວ່າງບໍ່ດົນມານີ້ອີກ. ດັ່ງທີ່ໄດ້ຊີ້ແຈງໃນບົດທີ 3, ມັນເປັນເລື່ອງເໝາະສົມທີ່ສຸດ ທາງດ້ານເສດຖະກິດ ເພື່ອນັກທຸລະກິດຈີນຈະຕັດສິນໃຈລະດັບຈຸນລະພາກ ເພື່ອການລົງທຶນດັ່ງກ່າວນັ້ນ (ຍ້ອນຄ່າລົງທຶນບໍ່ສູງ ແລະ ຍ້ອນຄວາມຕ້ອງການຂອງຈີນຊ້ຳພັດເພີ່ມຂຶ້ນ) ໂດຍທີ່ຍັງບໍ່ຕ້ອງເວົ້າເຖິງນະໂຍບາຍຂົງເຂດດ້ວຍຊ້ຳ. ການສົ່ງເສີມຢ່າງຈະແຈ້ງຕໍ່ການປູກພືດທົດແທນຝິ່ນຂອງລັດຖະບານຈີນໃນນາມ ເປັນຍຸດທະສາດເສດຖະກິດໜຶ່ງ ໃນປີຫລັງໆນີ້ຍັງບໍ່ທັນໄດ້ເລີ່ມຕົ້ນ, ມັນພຽງແຕ່ເຮັດໃຫ້ແນວໂນ້ມ ການລົງທຶນນີ້ແຂງແຮງກວ່າເກົ່າ. ນັກລົງທຶນສວນຢາງຂະໜາດນ້ອຍຫຼາຍຄົນໄດ້ມາ ຫຼວງນ້ຳທາ ຫຼາຍປີກ່ອນທີ່ເຂົາເຈົ້າຈະໄດ້ຍິນເລື່ອງທົດແທນການປູກຝິ່ນ ຫລື ກອງທຶນພິເສດ. ໃນຈຳນວນຜູ້ທີ່ເຂົ້າມາຫວ່າງຫລັງໆນີ້, ສ່ວນຫຼາຍກໍໄດ້ເວົ້າວ່າ ຢາກມາລົງທຶນຢູ່ລາວ ຢູ່ແລ້ວ ແລະ ການທີ່ລັດຖະບານຈີນມີນະໂຍບາຍສະໜັບສະໜູນ ຍິ່ງເຮັດໃຫ້ທາງເລືອກທີ່ຄິດໄວ້ແລ້ວຍິ່ງດຶງດູດກວ່າເກົ່າ. ນອກຈາກເປັນເລື່ອງເສດຖະກິດໂດຍພື້ນຖານຢູ່ແລ້ວ, ການສົ່ງເສີມບັນດາໂຄງການທົດແທນການປູກຝິ່ນຍັງສະທ້ອນໃຫ້ເຫັນທິດທາງນະໂຍບາຍທີ່ກວ້າງຂວາງກວ່າຂອງຈີນ ຊຶ່ງແນໃສ່ທັນໃຫ້ປະເທດຈີນ ປ່ຽນຈາກການເປັນປະເທດທີ່ຮັບເອົາການລົງທຶນຈາກຕ່າງປະເທດ ເປັນສ່ວນໃຫຍ່ ໃຫ້ກາຍເປັນຜູ້ລິເລີ່ມທຳການລົງທຶນຫຼັກ ໃນຕ່າງປະເທດໄປເທື່ອລະກ້າວ. ລັດຖະບານ ແລະ ສື່ມວນຊົນຈີນເອີ້ນການປ່ຽນແປງທາງຍຸດທະສາດນີ້ໄດ້ດີ ແລະ ແຈ້ງທີ່ສຸດດ້ວຍສາມຄຳສັບຄື *"ຊູຈູກູ"* ***"Zou Chu Qu"*** ຊຶ່ງແປວ່າ "ອອກໄປນອກ". ແນວຄວາມຄິດນີ້ປະກົດຂຶ້ນໃນປີ 1998 ໃນຂະນະທີ່ຈີນກຽມລໍຖ້າເປັນສະມາຊິກອົງການການຄ້າໂລກ, ມັນໄດ້ກາຍເປັນແນວຄິດທາງການໃນປີ 2001 ໃນ "ແຜນຫ້າປີເພື່ອພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີສິບ" (ໃນລັກສະນະດຽວກັນກັບຢູ່ລາວ, ແຜນພັດທະນາຂອງຈີນ ແມ່ນອອກແບບເປັນແຜນຫ້າປີ). ແຜນພັດທະນານີ້ໃຫ້ຫລັກການຊີ້ນຳຕ່າງໆ ເພື່ອກຳນົດໃນເວລາຕໍ່ມາການປ່ຽນແປງທາງນະໂຍບາຍ ແລະ ລະບຽບການລວມທັງການແລກປ່ຽນເງິນຕາ, ຂັ້ນຕອນການລົງທຶນ, ການສະໜອງສິນເຊື່ອ, ຄວບຄຸມແຮງງານ, ໆລໆ, ເພື່ອສົ່ງເສີມການລົງທຶນຂອງຈີນຢູ່ຕ່າງປະເທດ. ລະຫວ່າງປີ 2004-2006, ການລົງທຶນຂອງ ຈີນຢູ່ຕ່າງປະເທດໄດ້ເພີ່ມຂຶ້ນຫຼາຍກວ່າ 70% ຕໍ່ປີ ຈົນເຖິງ 16.1 ຕື້ໃນ 2006. ໃນໄລຍະ "ແຜນພັດທະນາຫ້າປີຄັ້ງທີ II" ແຕ່ 2006 ເຖິງ 2010, ຈີນ ມີແຜນລົງທຶນຢູ່ຕ່າງປະເທດລວມທັງໝົດ $60 ຕື້ ຫຼຽນສະຫະລັດ. ຈຳນວນທັງໝົດຂອງການລົງທຶນຢູ່ຕ່າງປະເທດຂອງຈີນ ນັບແຕ່ 1978 ຊຶ່ງເປັນປີການເລີ່ມຕົ້ນການປະຕິຮູບເສດຖະກິດ ລວມມີພຽງແຕ່ 73.3 ຕື້ຫຼຽນສະຫະລັດ (ກົມການຄ້າຢຸນນານ, ກໍລະກົດ 2007).

ມັນເປັນສິ່ງຮັບຮູ້ກັນຢ່າງກວ້າງຂວາງວ່າ ການທີ່ຈີນໄປລົງທຶນຢູ່ຕ່າງປະເທດ ຕົ້ນຕໍແມ່ນຍ້ອນຈີນຂາດຊັບພະຍາກອນທຳມະຊາດ ແລະ ວັດຖຸດິບປ້ອນອຸດສາຫະກຳຈີນ (ກົມການຄ້າຢຸນນານ, ກໍລະກົດ 2007). ຕະຫຼອດຊ່ວງປີ 2004-2007, ກະຊວງການຄ້າ, ກະຊວງຕ່າງປະເທດ ແລະ ກຳມາທິການແຫ່ງຊາດເພື່ອພັດທະນາ ແລະ ປະຕິຮູບ (ເມື່ອກ່ອນເອີ້ນວ່າກຳມາທິການ ວາງແຜນແຫ່ງຊາດ) ຂອງຈີນ ໄດ້ຮ່ວມກັນພິມຂໍ້ແນະນຳການລົງທຶນຢູ່ຕ່າງປະເທດໃນແຕ່ລະປະເທດສາມຊຸດ. ຂໍ້ແນະນຳສຳລັບລາວຖືກພິມເປັນຊຸດທຳອິດໃນ ເດືອນກໍລະກົດປີ 2004, ໃນນັ້ນໄດ້ບອກລາຍການບູລິມະສິດໃນການລົງທຶນໃນຂົງເຂດຊັບພະຍາກອນປ່າໄມ້, ພະລັງງານໄຟຟ້າ, ການປູກ ແລະ ປຸງແຕ່ງພືດເປັນສິນຄ້າ, ບໍ່ແຮ່ (ທາດໂປຕາສຊຽມ ຫລື ໂປຕາສຊຽມຄໍຣາຍດ), ເຄື່ອງຈັກປັ່ນໄຟຟ້າ ແລະ ເຄື່ອງຈັກໄຟຟ້າອື່ນໆ, ລົດຈັກ ແລະ ອາໄຫລ່ ເນື້ອໄມ້ເພື່ອຜະລິດເຈ້ຍ, ແລະ ຜະລິດຕະພັນເຈ້ຍ. ບູລິມະສິດສຳລັບ ມຽນມາ ແລະ ກຳປູເຈຍ ກໍເຊັ່ນດຽວແມ່ນ ມີທ່າອ່ຽງໄປທາງຂະແໜງຊັບພະຍາກອນ.

ໃນໄລຍະປີງົບປະມານການເງິນທີ່ສິ້ນສຸດໃນເດືອນກັນຍາ 2007, ຈີນ ໄດ້ນໍາໜ້າປະເທດອື່ນໆໃນເລື່ອງຜູ້ລົງທຶນຕ່າງປະເທດໃນລາວລວມທັງໝົດເປັນ $462 ລ້ານໂດລາສະຫະລັດ. ປະມານ 32% ຂອງການລົງທຶນແມ່ນຢູ່ຂົງເຂດພະລັງງານນໍ້າຕົກ, ຕິດຕາມດ້ວຍບໍ່ແຮ່, ປູກຢາງ, ໂທລະຄົມມະນາຄົມ ແລະ ອຸດສາຫະກໍາອື່ນໆ (Bangkok Post, 2 ຕຸລາ 2007). ຫຼວງນໍ້າທາ ຊຶ່ງເປັນແຂວງຕິດຊາຍແດນຈີນ ຈຶ່ງບໍ່ເປັນເລື່ອງແປກ ທີ່ໄດ້ຮັບການລົງທຶນຈີນຫຼາຍກວ່າແຂວງອື່ນໆ.

ຄວາມໄຝ່ຝັນດ້ານເສດຖະກິດຂອງຈີນຕໍ່ລາວ ແມ່ນໄດ້ຮັບຄວາມສະດວກ ບໍ່ພຽງແຕ່ຍ້ອນມີພາຫະນະທາງນະໂຍບາຍດ້ານເສດຖະກິດເທົ່ານັ້ນ, ແຕ່ຍ້ອນສອງປະເທດມີການແລກປ່ຽນການຢ້ຽມຢາມທາງການທູດ ແລະ ການເຈລະຈາສອງຝ່າຍ ຊຶ່ງເຮັດໃຫ້ເກີດມີການເຊັນສັນຍາ ແລະ ບັນທຶກຄວາມເຂົ້າໃຈລະດັບຊາດເພື່ອສະໜັບສະໜູນ ແລະ ບາງຄັ້ງກໍນໍາໄປສູ່ກິດຈະກໍາດ້ານການລົງທຶນແບບເອົາຈິງເອົາຈັງ ຊຶ່ງພວກເຮົາສາມາດສັງເກດເຫັນໄດ້ໃນຕົວຈິງ. ໃນເດືອນພະຈິກປີ 2000 ແລະ ບໍ່ດົນພາຍຫລັງມີແນວຄວາມຄິດ *"ອອກໄປນອກ"* ກາຍເປັນບູລິມະສິດແຫ່ງຊາດຂອງຈີນ, ປະທານ ຈຽງ ຊີມິນ ກໍໄດ້ມາຢ້ຽມຢາມລາວ ຊຶ່ງເປັນປະຫວັດສາດ ຄັ້ງທໍາອິດຂອງນາຍົກຈີນ. ຖະແຫຼງການຮ່ວມ ຈີນ-ລາວ ໄດ້ຖືກເຊັນເພື່ອສ້າງຕັ້ງການຮ່ວມມືໄລຍະຍາວລະຫວ່າງສອງປະເທດ. ປະເດັນທີ່ບໍ່ມີຄົນຮູ້ຫຼາຍໃນໄລຍະຢ້ຽມຢາມນັ້ນ ກໍຄືເລື່ອງພັດທະນາຢາງພາລາຢູ່ພາກເໜືອຂອງ ລາວ (ໂດຍສະເພາະແມ່ນເລື່ອງປະຕິບັດການຂອງບໍລິສັດ ຢາງພາລາ ຈີນ-ລາວ ທີ່ ແຂວງ ຫຼວງນໍ້າທາ) ໄດ້ຖືກກໍານົດວ່າເປັນຫນຶ່ງໃນຈໍານວນໂຄງການຫຼັກໃນການຮ່ວມມື ຊຶ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານລະດັບສູນກາງຂອງສອງປະເທດ[9]. ໃນເດືອນມີນາ 2004, ຮອງນາຍົກຈີນ ທ່ານ ວູ ຢີ ກໍໄດ້ມາຢ້ຽມຢາມລາວ; ໃນການເດີນທາງຄັ້ງນີ້ ເພິ່ນກໍໄດ້ໄປຢາມ ມຽນມາ, ກໍາປູເຈຍ ແລະ ເກາະມາລດິວນໍາອີກ. ນອກຈາກໄດ້ເຊັນ 11 ເອກະສານເພື່ອຂະຫຍາຍການຮ່ວມມືກັບຂະແໜງຕ່າງໆແລ້ວ, ການຢ້ຽມຢາມນີ້ ໄດ້ລະດົມໃຫ້ບັນດານັກລົງທຶນຢູນນານ ຮ່ວມໃນການພັດທະນາຢາງພາລາໃນພາກເໜືອຂອງລາວ. ສິ່ງນີ້ໄດ້ນໍາໄປສູ່ການເຊັນສັນຍາລະດັບຊາດໃຫ້ມີການພັດທະນາຢາງພາລາໃນສີ່ແຂວງພາກເໜືອໃນເນື້ອທີ່ 2,500,000 ມູ (166,667 ຮຕ); ໃນນັ້ນ ມີຫຼວງນໍ້າທາ (ໜັງສືພິມຢູນນານ ລາຍວັນ, ກັນຍາ 2005). ການຢ້ຽມຢາມຂອງທ່ານ ວູ ແມ່ນຕິດຕາມໂດຍການມາຂອງທ່ານ ເວີນ ເຈຍບາວ, ນາຍົກລັດຖະມົນຕີ ໃນເດືອນພະຈິກ 2004 ຜູ້ທີ່ໄດ້ເຊັນບົດບັນທຶກເປີດກວ້າງ ເພື່ອພັດທະນາຂະແໜງຂຸດຄົ້ນບໍ່ແຮ່ ແລະ ພະລັງງານ ແລະ ເພື່ອອອກແບບແຜນແມ່ບົດເພື່ອການພັດທະນາແບບເຊື່ອມສານໃນເກົ້າແຂວງພາກເໜືອ[10].

---

[9] ບໍລິສັດ ຢາງພາລາ ຈີນ-ລາວ ໄດ້ລົງທະບຽນ ໃນດືອນມີນາ 2001 ຢູ່ ຫຼວງນໍ້າທາ ດ້ວຍເງິນທຶນຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກຜະລິດຕະພັນທ້ອງຖິ່ນຢູນນານ ຊຶ່ງເປັນລັດວິສາຫະກິດ ແລະ ການລົງທຶນຂອງບໍລິສັດຢາງເບຈິງ-ຈີນຮຸນ ຈໍາກັດ. ມັນບໍ່ປະຕິບັດງານຢູ່ ຫຼວງນໍ້າທາ ອີກແລ້ວ, ແຕ່ໄປທໍາການປູກຢູ່ອຸດົມໄຊແທນ. ຫ້ອງການກະສິກໍາປ່າໄມ້ແຂວງໄດ້ບອກວ່າບໍລິສັດມີຄວາມສົນໃຈຢາກໄດ້ສໍາປະທານ ແຕ່ວ່າຫຼວງນໍ້າທາບໍ່ມີດິນ. ບໍລິສັດຍັງໄດ້ສ້າງໂຮງງານປຸງແຕ່ງ ແຕ່ຫາກບໍ່ໄດ້ເຮັດຫຍັງແລ້ວດຽວນີ້. ຊາວບ້ານທໍາການປາດຢາງ (ສ່ວນໃຫຍ່ຈາກບ້ານຫາດງາວ) ຈົ່ມວ່າຄ່າແຮງງານເກັບຢາງຕໍ່າໂພດ ຈຶ່ງຂາຍຢາງຂອງຕົນໃຫ້ພໍ່ຄ້າຊາວຈີນແທນ.

[10] ພາລະໃນການພັດທະນາແຜນແມ່ບົດໄດ້ມອບໃຫ້ອໍານາດປົກຄອງຢູນນານ ໃນຮູບການດຽວກັນກັບການທີ່ຢູນນານໄດ້ຮັບອໍານາດ ເພື່ອສົ່ງເສີມ ແລະ ປະຕິບັດວຽກທົດແທນການປູກຝິ່ນຢູ່ຕ່າງປະເທດ. ເຈົ້າແຂວງຢູນນານໄດ້ຢາມລາວເດືອນເມສາ 2007 ເພື່ອຕິດຕາມຄວາມຄືບໜ້າຂອງແຜນໃນຂະແໜງກະສິກໍາ ແລະ ໂຄງລ່າງ (Vientiane Times, 4 ເມສາ, 2007).

ມັນເປັນເລື່ອງນອກເໜືອກອບການລາຍງານສະບັບນີ້ ຈະເວົ້າເຖິງການຄົ້ນຄວ້າຢ່າງລະອຽດ ແລະ ຄົບຖ້ວນກ່ຽວກັບບັນດາຍຸດທະສາດເສດຖະກິດ ແລະ ການເມືອງສຳລັບຂົງເຂດ. ອີກເທື່ອຫນຶ່ງ ເຮົາຄວນລະວັງໃຫ້ຫຼາຍໃນການທີ່ຈະສະຫຼຸບແບບຕື້ນໆທີ່ງ່າຍດາຍວ່າ ຍ້ອນມີເຫດການຈຳນວນນຶ່ງເກີດຂຶ້ນພ້ອມໆກັນ ຫລື ຕິດຕາມກັນມາ, ເຫດການເລົ່ານັ້ນ ຕ້ອງມີອັນພົວພັນກັນຢ່າງແນ່ນອນ. ເຖິງຢ່າງໃດກໍຕາມ, ເມື່ອສຶກສາສະພາບເສດຖະກິດ ແລະ ການເມືອງໃນຂົງເຂດແບບກວ້າງໆ, ເຮົາຈະເລີ່ມຕົ້ນເຂົ້າໃຈດີກວ່າເກົ່າວ່າເປັນຫຍັງຈຶ່ງມີປະກົດການຂະຫຍາຍຕົວຢ່າງໄວວາດ້ານການປູກຢາງຢູ່ ຫຼວງນໍ້າທາ ແລະ ເປັນຫຍັງການລົງທຶນຂອງຈີນ ຈຶ່ງຫລັ່ງໄຫຼເຂົ້າມາແບບນັ້ນ. ພ້ອມດຽວກັນ ມັນກໍເຮັດໃຫ້ເຂົ້າໃຈໄດ້ວ່າ ບາງທີ ອົງການພັດທະນາສາກົນຕ່າງໆ ກໍສາມາດໄດ້ຮັບຜົນປະໂຫຍດຈາກການເບິ່ງບັນຫາແບບກວ້າງແລະເປັນເຈົ້າການເມື່ອຕິດຕາມ ແລະ ຮ່ວມມືໃນຄວາມພະຍາຍາມຂອງຈີນ ຢູ່ລາວ (ຈະແມ່ນເລື່ອງປູກຢາງ ຫລື ເລື່ອງອື່ນກໍຕາມ) ຊຶ່ງເປັນຈຸດທີ່ຂ້າພະເຈົ້າຈະກັບມາບັນລະຍາຍຕື່ມຢູ່ພາກສຸດທ້າຍ.

## 4.3 ເພິ່ນຈັດການແນວໃດ

ອີງຕາມລະບຽບການໃຊ້ຢູ່ປັດຈຸບັນກ່ຽວກັບໂຄງການຕ່າງໆເພື່ອປ່ຽນແທນການປູກຝິ່ນ ຊຶ່ງພິມເຜີຍແຜ່ໃນເດືອນມີນາ ປີ 2007 ໂດຍກົມການຄ້າຢຸນນານນັ້ນ, ນັກທຸລະກິດຈີນຈະຕ້ອງເຮັດຕາມເງື່ອນໄຂຂ້າງລຸ່ມເພື່ອຈະຖືວ່າໄດ້ດຳເນີນກິດຈະກຳການປູກຝັງທົດແທນການປູກຝິ່ນ:

- ການລົງທຶນຕ້ອງແນໃສ່ພາກເໜືອລາວ ຫລື ມຽນມາ[11].
- ການລົງທຶນຈະຕ້ອງນອນໃນບັນດາຂົງເຂດຕໍ່ໄປຄື:
  - ປູກຝັງ, ລ້ຽງສັດ, ປະມົງ ແລະ ປຸງແຕ່ງຜົນຜະລິດທີ່ກ່ຽວຂ້ອງ
  - ຂຸດຄົ້ນບໍ່ແຮ່, ທ່ອງທ່ຽວ, ການຊື້ຂາຍ, ການຄ້າ, ການຕະຫຼາດ, ແລະກິດຈະກຳອື່ນໆ ທີ່ກະຕຸ້ນການພັດທະນາເສດຖະກິດສັງຄົມທ້ອງຖິ່ນ ແລະ ຂະຫຍາຍໂອກາດໃຫ້ມີວຽກເຮັດງານທຳ.
  - ສະໜັບສະໜູນໂຄງລ່າງເຊັ່ນ: ຖະໜົນ, ຊົນລະປະທານ ແລະ ສະໜອງພະລັງງານ.

ໃຫ້ສັງເກດວ່າ ອີງຕາມລະບຽບການໃຊ້ຢູ່ປັດຈຸບັນ, ການປ່ຽນແທນການປູກຝິ່ນບໍ່ຖືກຈຳກັດຢູ່ພຽງແຕ່ໃນໂຄງການປູກຝັງ, ເຖິງວ່າ ສ່ວນໃຫຍ່ທີ່ໄດ້ອະນຸມັດຜ່ານມາ ແມ່ນຕົກຢູ່ໃນປະເພດນີ້. ເອກະສານລະບຽບການດຽວກັນໃນສະບັບກ່ອນໜ້ານັ້ນ, ຊຶ່ງໃຊ້ໃນເດືອນພຶດສະພາ ປີ 2004 ແຕ່ດຽວນີ້ໄດ້ເຊົາໃຊ້ແລ້ວນັ້ນ, ໄດ້ເວົ້າເຖິງການປູກຝັງແຕ່ຢ່າງດຽວ. ການປ່ຽນແປງນີ້ ສະທ້ອນໃຫ້ເຫັນ ເຖິງການຫັນທິດດ້ານນະໂຍບາຍເມື່ອບໍ່ດົນມານີ້ ຈາກຈຸດທີ່ສົ່ງເສີມ “ການປູກເພື່ອທົດແທນຝິ່ນ” ຊຶ່ງເປັນແງ່ມຸມແຄບຂອງນິຍາມໄປຫາ “ການພັດທະນາແທນການປູກຝິ່ນ” ຊຶ່ງອະນຸຍາດໃຫ້ ຫຼາຍໆກິດຈະກຳທຸລະກິດໄດ້ຮັບການຊ່ວຍເຫລືອຖົມຊຸມ. ເຮົາຈະຕ້ອງລໍຖ້າເບິ່ງວ່າການປ່ຽນແປງທາງນະໂຍບາຍນີ້ວ່າ ຈະເອື້ອອຳນວຍຊໍ່າໃດໃຫ້ແກ່ການຫັນປ່ຽນ ຂະແໜງການໃນການລົງທຶນຢູ່ແຂວງ ຫຼວງນໍ້າທາ ແລະ ຢູ່ບ່ອນອື່ນໆໃນພາກເໜືອຂອງລາວ. ມີບໍລິສັດປູກຢາງຈຳນວນນຶ່ງທີ່ດຳເນີນການຢູ່ເມືອງສິງ ແລະ ລອງ ຊຶ່ງຕົວຈິງໄດ້ຂະຫຍາຍໄປຫາອຸດສາຫະກຳໃໝ່ຈຳນວນຫນຶ່ງ (ມັກຈະເປັນຮູບແບບປະສົມປະສານການປູກຝັງກັບການຂຸດຄົ້ນບໍ່ແຮ່). ເຖິງແມ່ນວ່າປະກົດການນີ້ ອາດຈະເປັນການສະທ້ອນໃຫ້

---

11 ເຖິງຢ່າງໃດກໍຕາມ ເພິ່ນບໍ່ມີນິຍາມດ້ານພູມສາດເພີ່ມເຕີມໃນລະບຽບການນີ້ກໍຄືຢູ່ບ່ອນອື່ນໆ. ເວລາສົນທະນາກັບນັກທຸລະກິດ, ພະນັກງານລັດ ແລະຄູອາຈານ ຈີນເຫັນວ່າມີຄວາມເຂົ້າໃຈແຕກຕ່າງກັນໄປວ່າອັນໃດຄືເຂດພາກເໜືອລາວ. ບາງຄົນລວມເອົາຫຼວງພະບາງ, ອຸດົມໄຊ, ບໍ່ແກ້ວ ແລະຜົ້ງສາລີ. ບາງຄົນເອົາຜົ້ງສາລີ ແທນໄຊຍະບູລີ. ອີກບາງຄົນເຫັນວ່າມີເກົ້າແຂວງລວມທັງບໍ່ແກ້ວ, ຫົວພັນ, ຫຼວງນໍ້າທາ, ຫຼວງພະບາງ, ຜົ້ງສາລີ, ອຸດົມໄຊ, ໄຊຍະບູລີ, ຊຽງຂວາງ ແລະ ວຽງຈັນ. ມີຄວາມເຫັນວ່າ ແມ່ນແຕ່ຄຳນິຍາມທາງພູມສາດ ກໍຍັງຕີຄວາມໝາຍຕ່າງກັນ, ມີການປ່ຽນແປງ ແລະ ຄຳນິຍາມນັ້ນມັນຂຶ້ນກັບການເຈລະຈາລະຫວ່າງລັດຖະບານ.

ເຫັນເຖິງສັນຊາດຕະຍານ ການສະແຫວງຫາກຳໄລຂອງນັກທຸລະກິດຫຼາຍກວ່າເປັນການສົ່ງເສີມຂອງລັດຖະບານ ໂດຍກົງ ຊຶ່ງຈະມັກ ຫລື ບໍ່ກໍຕາມ ການສົ່ງເສີມແບບນີ້ໄດ້ສ້າງສະພາບແວດລ້ອມທາງນະໂຍບາຍທີ່ດີ.

- ນັກທຸລະກິດນັ້ນ ຕ້ອງຍື່ນບົດລາຍງານຄວາມເປັນໄປໄດ້ທີ່ຈະດຳນີນການ ແລະ ສະເໜີ ສັນຍາທີ່ມີລາຍເຊັນ ກັບຄູ່ຮ່ວມທຸລະກິດຕ່າງປະເທດ, ຈົດໝາຍສະໜັບສະໜູນຈາກກົມກອງລັດຖະບານຕ່າງປະເທດທີ່ກ່ຽວຂ້ອງ ແລະ ຈົດໝາຍຈາກສະຖານທູດ ຈີນ ໃນປະເທດຈະໄປລົງທຶນ.
- ພ້ອມນີ້ ນັກທຸລະກິດ ກໍຕ້ອງເຮັດຕາມຂໍ້ຮຽກຮ້ອງຕ່າງໆ ທົ່ວໄປກ່ຽວກັບການຄ້າ ແລະ ລົງທຶນຢູ່ຕ່າງປະເທດ. ເຖິງຢ່າງໃດກໍຕາມ ເພິ່ນໄດ້ເວົ້າກັນວ່າ ຂໍ້ຮຽກຮ້ອງດ້ານທຶນທີ່ລົງທະບຽນ ແລະ ລາຍຮັບຈາກການດຳເນີນການນຳເຂົ້າ ຫຼື ສົ່ງອອກໃນອະດີດໄດ້ມີການຜ່ອນຜັນນັບແຕ່ປີ 2004 ເປັນຕົ້ນມາ. ໃນເມື່ອກ່ອນ ທຸລະກິດຕ້ອງມີລາຍຮັບໃນປີກ່ອນໜ້າຢ່າງໜ້ອຍ 5,000,000 ຢວນ ຈາກການນຳເຂົ້າ ແລະ ສົ່ງອອກ ກ່ອນທີ່ຈະຖືວ່າທຸລະກິດນັ້ນຢູ່ໃນຖານະທົດແທນການປູກຝິ່ນ.

ເມື່ອໄດ້ຮັບຮອງວ່າເປັນທຸລະກິດທົດແທນການປູກຝິ່ນແລ້ວ, ເມື່ອນັ້ນກໍຈະໄດ້ຮັບຜົນປະໂຫຍດຕົວຈິງຫຼາຍຢ່າງ ຊຶ່ງລວມມີ:

- ເງິນອຸດໜູນໂດຍກົງຈາກກອງທຶນພິເສດ:

- ເງິນອຸດໜູນສະໜັບສະໜູນເຖິງ 80% ຂອງຄ່າໃຊ້ຈ່າຍຕົວຈິງໃນໄລຍະສຳຫຼວດ ແລະ ສຶກສາຄວາມເປັນໄປໄດ້ຂອງໂຄງການ;
- ເງິນອຸດໜູນເຖິງ 90% ຂອງຄ່າໃຊ້ຈ່າຍເພື່ອໄດ້ປະກັນໄພ ແລະ ການຮັບປະກັນຈາກປະກັນໄພພາຍໃນ ແລະ ຜູ້ສະໜອງການຮັບປະກັນ;
- ຈ່າຍແທນຄ່າດອກເບ້ຍທັງໝົດໃນໄລຍະບໍ່ຫຼຸດສາມປີ ຍ້ອນໄດ້ກູ້ຢືມຈາກທະນາຄານພາຍໃນ;
- ເງິນອຸດໜູນລະຫວ່າງ 10-30 ຢວນ/ມູ/ປີ ໃນໂຄງການປູກຝັງໂດຍຈະຈ່າຍຕາມເນື້ອທີ່ປູກຝັງຕົວຈິງ (ເງິນອຸດໜູນແບບດຽວກັນນີ້ຈະໃຫ້ແກ່ບັນດາໂຄງການລ້ຽງສັດ ແລະ ປະມົງໂດຍອີງຕາມຄ່າໃຊ້ຈ່າຍຕົວຈິງ).

ກ່ຽວກັບໂຄງການປູກຝັງ, ເວົ້າກັນວ່າເນື້ອທີ່ປູກຕ້ອງໃຫ້ກາຍ 10,000 ມູ ກ່ອນທີ່ຈະໄດ້ຮັບເງິນອຸດໜູນ. ມີສອງໂອກາດໃນແຕ່ລະປີ ຄືເດືອນມິຖຸນາ ແລະ ພະຈິກ ທີ່ຜູ້ທຳທຸລະກິດອາດເຮັດຄຳຮ້ອງເພື່ອຂໍທຶນ.

- ຜົນປະໂຫຍດຕ່າງໆອີກມີ:

- ຂະຫຍາຍການເຂົ້າເຖິງສິນເຊື່ອທີ່ທະນາຄານນະໂຍບາຍ ແລະ ການຄ້າຈີນ.
- ມີເສລີພາບເຄື່ອນໄຫວລະຫວ່າງຊາຍແດນຫຼາຍກວ່າ ເພື່ອຈັດສົ່ງແຮງງານ, ອຸບປະກອນ ແລະ ພາຫະນະ.
- ໄດ້ຍົກເວັ້ນພາສີ ແລະ ພາສີມູນຄ່າເພີ່ມໃນການນຳເຂົ້າຜະລິດຕະພັນ ແລະ ຜົນຜະລິດເພື່ອທົດແທນໃຫ້ແກ່ການປູກຝິ່ນ (ແຕ່ມີ *ໂຄຕາ* ຈຳກັດ).

ນຳເອົາຜະລິດຕະພັນທົດແທນການປູກຝິ່ນເຂົ້າຈີນຄືນ ຈະຕ້ອງຜ່ານລະບົບໂຄຕາລະອຽດຊຶ່ງ ມີຫຼາຍຂັ້ນຕອນ. ໃນເດືອນກໍລະກົດຂອງແຕ່ລະປີ, ທຸລະກິດຕ່າງໆຕ້ອງລາຍງານໃຫ້ເມືອງ ຫລື ກຳແພງນະຄອນຮູ້ກ່ຽວກັບປະລິມານສົ່ງອອກຕາມແຜນໃນປີຕໍ່ມາ. ຈາກນັ້ນ ຕົວເມືອງ ຫລື ກຳແພງນະຄອນກໍຈະລາຍງານຫາ ແຂວງຢຸນນານ ຊຶ່ງເປັນຜູ້ທີ່ຈະສົ່ງບົດລາຍງານຕໍ່ໄປຫາສະພາແຫ່ງລັດ. ເມື່ອສະພາແຫ່ງລັດເຫັນດີອະນຸມັດປະລິມານສຳລັບແຕ່ລະຜະລິດຕະພັນ ຫລື ແຕ່ລະພືດໃຫ້ແຂວງ, ແຂວງກໍຈະຮັບຜິດຊອບແບ່ງປັນ ແລະ ແຈກຢາຍໂຄຕາໃຫ້ບັນດາທຸລະກິດ. ນະໂຍບາຍແລະຂັ້ນຕອນຕ່າງໆ ຈະຖືກປ່ຽນແປງ ແລະ ດັດປັບຢູ່ເລື້ອຍໆ; ຕົວຢ່າງໃນປີ 2007, ໂຄຕາການນຳເຂົ້າຜະລິດຕະພັນທົດແທນການປູກຝິ່ນ ສຳລັບຢາງ, ເຂົ້າ, ສາລີ, ອ້ອຍ ແລະ ມັນຕົ້ນ

ຈາກລາວນັ້ນໄດ້ແບ່ງປັນໃຫ້ນັກທຸລະກິດຕ່າງໆ. ແຕ່ໂຄຕາສຳລັບຜະລິດຕະພັນທີ່ບໍ່ເປັນຍຸດທະສາດປານໃດເຊັ່ນ: ຊາ, ກ້ວຍ ແລະ ໝາກໂມ ແມ່ນອີງຕາມຫລັກການ "ໃຜມາກ່ອນ ໄດ້ກ່ອນ".

ປະກົດວ່າກົມການຄ້າ ຢຸນນານ ໄດ້ນຳໃຊ້ຮູບແບບປະສົມໃນການຄຸ້ມຄອງບັນດາໂຄງການທົດແທນການປູກຝິ່ນ. ນີ້ຄືວິທີການວາງແຜນແບບເຂັ້ມງວດຢູ່ສູນກາງ, ແຕ່ພ້ອມກັນນັ້ນກໍຈະອີງອາໄສກຳລັງການຕະຫຼາດ ແລະ ບັນດາທຸລະກິດເອກະຊົນໃນນາມຕົວແທນ ທີ່ຕ້ອງການຜົນກຳໄລສູງສຸດ. ເປົ້າໝາຍປັດຈຸບັນສຳລັບໄລຍະປີ 2006-2010 ຊຶ່ງຖືກກຳນົດໂດຍກຸ່ມປະຕິບັດງານ 122 ລະດັບສູນກາງແມ່ນກໍ່ສ້າງສວນປູກ (ທັງໝົດເປັນພືດ) ເພື່ອທົດແທນການປູກຝິ່ນໃຫ້ໄດ້ 1,000,000 ມູ ຢູ່ພາກເໜືອຂອງມຽນມາ ແລະ ລາວ. ຕົວເລກຄາດໝາຍສຳລັບ 2006 ແມ່ນ 250,000 ມູ, ລວມໃນນີ້ມີ 70,000 ມູ ສຳລັບປູກຢາງ (ໃນນັ້ນ 50,000 ມູ ແມ່ນຢູ່ລາວ) ແລະ 40,000 ມູ ສຳລັບປູກມັນຕົ້ນ. ຕົວເລກຄາດໝາຍທັງໝົດສຳລັບປີ 2007 ໄດ້ເພີ່ມຂຶ້ນຮອດ 350,000 ມູ ລວມໃນ ລາວ ແລະ ມຽນມາ (ຂໍ້ມູນກ່ຽວກັບແຕ່ລະພືດປູກນັ້ນບໍ່ມີສຳລັບມະຫາຊົນທົ່ວໄປ) (ກົມການຄ້າຢຸນນານ, 6 ສິງຫາ 2007). ພາຍຫລັງທີ່ໄດ້ຕັດສິນກ່ຽວກັບຄາດໝາຍປະຈຳປີສຳລັບແຕ່ລະພືດແລ້ວ, ຕົວເລກປີ ໄດ້ຖືກເອົາມາແບ່ງປັນໂດຍທາງການ ແຂວງ ຢຸນນານ ແລະ ແຈກຈ່າຍໄປຍັງເມືອງ ແລະ ກຳແພງນະຄອນ. ຕົວຢ່າງໃນປີ2007 ສິບສອງພັນນາໄດ້ຮັບຄຳສັ່ງໃຫ້ສຳເລັດການປູກຝັງເພີ່ມ ເພື່ອທົດແທນການປູກຝິ່ນໃຫ້ໄດ້ 115,000 ມູຕື່ມ (ກົມການຄ້າຢຸນນານ, 21 ມິຖຸນາ, 2007).

## 4.4 ຄວາມເປັນຫ່ວງເປັນໄຍໃນອະນາຄົດກ່ຽວກັບການອຸດໜູນຊ່ວຍເຫລືອ

- *ກຳໄລຈາກການລົງທຶນອາດຍາກທີ່ຈະຮັບປະກັນໃນສະພາບທີ່ມີເງິນອຸດໜູນ*

ເງິນອຸດໜູນອາດຊຸກຍູ້ແບບບໍ່ຕັ້ງໃຈໃຫ້ມີພຶດຕິກຳເອົາກຳໄລແບບສ່ຽງ ພຽງຊອກຫາຄ່າເຊົ່າ, ຫາກບໍ່ເອົາໃຈໃສ່ຕໍ່ຜົນກຳໄລໄລຍະຍາວ ແລະ ຄວາມຍືນຍົງຂອງທຸລະກິດ. ນັກທຸລະກິດອາດຈະອົດບໍ່ໄດ້ທີ່ຈະລົງທຶນຫຼາຍໂພດ, ຂະຫຍາຍກິດຈະການຫຼາຍໂພດ, ແຕ່ກົງກັນຂ້າມ ມີການນຳໃຊ້ວິທີກວດກາທີ່ເຂັ້ມງວດໜ້ອຍລົງ ໃນການປະເມີນຕີລາຄາບັນດາໂຄງການໃນອະນາຄົດ. ມັນບໍ່ຊ່ວຍຫຍັງໄດ້ເລີຍ ຊຶ່ງໃນສະພາບທີ່ດິນຫາຍາກເກືອບວ່າບໍ່ມີແລ້ວຢູ່ຈີນ ແລະ ຄ່າດິນກໍຖີບຂຶ້ນສູງຢູ່ລາວ, ຄົນທີ່ຈະມາສົນໃຈລົງທຶນໃສ່ດິນ ໂດຍຖືວ່າ ນັ້ນກໍເປັນການລົງທຶນທີ່ຮັບປະກັນຜົນກຳໄລ ແລະ ບໍ່ຖືສຳຄັນ ວ່າຈະປູກຝັງຫຍັງ ລົງໃສ່ດິນຕອນນັ້ນ. ສິ່ງນີ້ເຮັດໃຫ້ຄິດໄດ້ວ່າ ອາດມີດິນບາງຕອນທີ່ໄດ້ມາ ໂດຍອ້າງວ່າເພື່ອປູກຢາງ, ແຕ່ຕົວຈິງແມ່ນເພື່ອເອົາກຳໄລ. ໃນກໍລະນີນີ້ ກອງທຶນພິເສດເພື່ອຊົດເຊີຍໃຫ້ແກ່ການປູກຝິ່ນ ໃນທີ່ສຸດ ອາດຖືກນຳເອົາໄປອຸດໜູນຜູ້ຈອງດິນຜືນໃຫຍ່ ລາຄາຖືກພ້ອມທັງມີຊັບພະຍາກອນຕ່າງໆ ແທນທີ່ຈະອຸດໜູນການປູກຝັງທີ່ແທ້ຈິງ.

ຖ້າບໍ່ປະຕິບັດຢ່າງລະມັດລະວັງແລ້ວ, ນັກທຸລະກິດອາດຈະຊອກເອົາດິນແລ້ວເຮັດສັນຍາຂຶ້ນ ມາ ເພື່ອພຽງແຕ່ຈຸດປະສົງຂໍເງິນອຸດໜູນ, ແລະ ເມື່ອໄດ້ຮັບເງິນອຸດໜູນທັງໝົດແລ້ວ ກໍອາດຊອກຫາວິທີອອກ ຫລື ໂອນທຸລະກິດໃຫ້ພາກສ່ວນອື່ນໆ. ລັດຖະບານຈີນໄດ້ພະຍາຍາມແກ້ບັນຫານີ້ດ້ວຍວິທີອະນຸມັດເງິນອຸດໜູນໂດຍອີງຕາມຄ່າໃຊ້ຈ່າຍຕົວຈິງ, ໃນນັ້ນລວມທັງຄ່າໃຊ້ຈ່າຍ ໃນການຖາກຖາງເນື້ອທີ່ ແລະການປູກຕົວຈິງ. ເຖິງຢ່າງໃດກໍຕາມຄວາມເປັນຫ່ວງທີ່ມີໃນອະນາຄົດແມ່ນການປະຕິບັດແບບຫລົ້ມເຫລວ ແລະ ການສໍ້ລາດໃຫ້ສິນບົນ.

ຜູ້ລົງທຶນບາງຄົນຈະເຫັນພ້ອມກັນ ແລະ ສະແດງຄວາມບໍ່ພໍໃຈວ່າຂະບວນການແຈກຢາຍເງິນອຸດໜູນນັ້ນມັກຈະມີຄວາມລຳອຽງ, ເຫັນແກ່ເພື່ອນມິດ ແລະ ເຕັມໄປດ້ວຍການໃຫ້ສິນບົນ ແລະ ບໍ່ໄດ້ປະຕິບັດໄປຕາມຄວາມສາມາດບົ່ມຊ້ອນຂອງໂຄງການ. ເຖິງວ່າຄວາມເຫັນແບບນີ້ອາດເປັນຄວາມໂວຍວາຍ ຄວາມຢ້ານລື່ນຜູ້ລົງທຶນບາງຄົນທີ່ບໍ່ໄດ້ເງິນອຸດໜູນດັ່ງທີ່ຕົນເອງປາດຖະໜາກໍຕາມ, ມັນກໍອາດເປັນສິ່ງເຕືອນໃຫ້ເຫັນເຖິງຄວາມເປັນໄປໄດ້ທີ່ເງິນອຸດໜູນໃຫ້ໄປ ບໍ່ຖືກເປົ້າ ຄືໃຫ້ແກ່ນັກທຸລະກິດທີ່ສົມຄວນໄດ້. ລະບຽບຂອງກອງທຶນພິເສດ ພຽງແຕ່ໃຊ້

ເພື່ອກໍານົດກອບເພດານຂອງຈໍານວນເງິນອຸດໜູນເທົ່ານັ້ນ. ແຕ່ການແບ່ງສ່ວນ ທຶນຕົວຈິງນັ້ນ, ຍັງມີຫຼາຍຢ່າງ ແລະ ຫຼາຍໆປັດໄຈທີ່ສ່ວນໃຫຍ່ແລ້ວ ຍັງເປັນສິ່ງບໍ່ເປີດເຜີຍ. ກອງທຶນພິເສດນີ້ແມ່ນກອງທຶນມີກອບຈໍາກັດ ທີ່ໃຜໆກໍປາດຖະໜາ; ເມື່ອເປັນດັ່ງນັ້ນ ໂດຍບໍ່ໄດ້ຕັ້ງໃຈ ອາດຈະເຮັດໃຫ້ ເກີດສະພາບແຂ່ງຂັນກັນໃນການຊອກຫາດິນ ແລະ ເຮັດສັນຍາ ອັນເປັນເລື່ອງທີ່ບໍ່ເພິ່ງປາດຖະໜາ; ສະພາບດັ່ງກ່າວ ຍິ່ງຈະເຮັດໃຫ້ໂອກາດປະເມີນຜົນແບບຄົບຖ້ວນກ່ອນເກີດໂຄງການ ຍິ່ງມີໜ້ອຍລົງ.

ນອກຈາກນີ້ແລ້ວ ວິທີການວາງແຜນແບບເທິງລົງລຸ່ມ ມີຈຸດອ່ອນຂອງມັນ. ຄວາມພະຍາຍາມໃນການທົດແທນການປູກຝິ່ນແມ່ນໄດ້ຖືກວາງແຜນຢູ່ສູນກາງ ແລະ ຖືກຕິດຕາມໂດຍລັດຖະບານຈີນ ເຖິງວ່າຜູ້ປະຕິບັດຜູ້ສຸດທ້າຍ (ສ່ວນຫຼາຍ) ແມ່ນທຸລະກິດເອກະຊົນ. ມັນຍັງບໍ່ຈະແຈ້ງວ່າທາງການວາງແຜນໂດຍອີງໃສ່ຫຍັງ ກ່ອນທີ່ຈະຕັດສິນໃຈວ່າຕ້ອງປູກຝັງຫຼາຍໜ້ອຍເທົ່າໃດ ແລະ ໃນລະຫວ່າງເວລາເທົ່າໃດ ຈຶ່ງເໝາະສົມທີ່ສຸດ. ມີຄວາມເປັນໄປໄດ້ວ່າ ແຜນເຫລົ່ານີ້ ແລະ ລະດັບຕ່າງໆໃນການປະຕິບັດ ອາດເຮັດໃຫ້ບໍ່ສາມາດຄາດຄະເນຜົນໄດ້ຮັບທາງຕະຫຼາດລ່ວງໜ້າໄດ້ດີ. ທາງຝ່າຍລັດຖະບານທ້ອງຖິ່ນ ຊໍ້າພັດມີຄວາມກົດດັນທີ່ຕ້ອງບັນລຸແຜນປະຈໍາປີ, ຊຶ່ງອາດສ້າງສະພາບສ່ຽງຕື່ມອີກ ໃນການປະເມີນຕີລາຄາທີ່ບໍ່ຄ່ອຍດີ ແລະ ເຮັດໃຫ້ມີການລົງທຶນຫຼາຍໂພດ.

- *ຍ້ອນການອຸດໜູນ, ການມີສ່ວນຮັບຄວາມສ່ຽງ ລະຫວ່າງຜູ້ລົງທຶນ ແລະ ຊາວກະສິກອນ ມີຄວາມແຕກຕ່າງກັນ*

ໃນກໍລະນີສັນຍາຜູກພັນ ໃນການປູກຝັງ ຊຶ່ງເປັນຮູບແບບສ່ວນໃຫຍ່ໃນເລື່ອງສວນປູກຢາງຢູ່ ຫຼວງນໍ້າທາ, ຊຶ່ງຈະຍົກມາເວົ້າໂດຍລະອຽດໃນບົດທີ 5, ການອຸດໜູນຊ່ວຍເຫລືອນໍາໄປສູ່ສະພາບຮັບຄວາມສ່ຽງແບບບໍ່ສະເໝີພາບລະຫວ່າງຜູ້ລົງທຶນ ແລະ ກະສິກອນ. ສະພາບບໍ່ກໍ້າເກິ່ງນີ້ບໍ່ໄດ້ຖືກຄໍານວນໄວ້ຢູ່ໃນຂໍ້ຄວາມຂອງສັນຍາທີ່ກ່ຽວກັບການແບ່ງປັນຜົນກໍາໄລ. ມີພຽງຊາວກະສິກອນຈໍານວນຫນ້ອຍໜຶ່ງເທົ່ານັ້ນ ທີ່ມີກໍາລັງແຮງໃນການເຈລະຈານັບແຕ່ຕອນຕົ້ນ ແລະ ເຈົ້າໜ້າທີ່ລັດຖະບານບໍ່ເທົ່າໃດຄົນທີ່ຮູ້ເລື່ອງເງິນອຸດໜູນ. ຍ້ອນມີການອຸດໜູນຖົມຊຸມຈາກລັດຖະບານ, ຄ່າໃຊ້ຈ່າຍສຸດທິ ແລະ ຄວາມສ່ຽງຈະມີບໍ່ຫຼາຍສໍາລັບຜູ້ລົງທຶນຈີນຊຶ່ງເປັນຜູ້ທີ່ທໍາການປູກເພື່ອການຄ້າຢູ່ລາວ. ໃນກໍລະນີທີ່ທຸລະກິດພົບຄວາມລົ້ມເຫຼວ, ຊາວກະສິກອນລາວຈະຖືກກະທົບຢ່າງຫລີກລ້ຽງບໍ່ໄດ້ ຍ້ອນພວກເຂົາບໍ່ສາມາດເຂົ້າເຖິງເງິນອຸດໜູນແບບດຽວກັນ ນອກນັ້ນ ກໍຍັງຫາບແບກພາລະໜັກດ້ານພາສີ ແລະ ອາກອນຕ່າງໆ.

- *ເງິນອຸດໜູນເຮັດໃຫ້ຜູ້ລົງທຶນລາວ ແລະ ຈີນບໍ່ຢູ່ໃນຖານະແບບດຽວກັນ*

ເມື່ອບໍ່ມີເງິນອຸດໜູນ, ຜູ້ລົງທຶນລາວຈຶ່ງຕົກຢູ່ໃນທ່າເສຍປຽບທີ່ຈະແຂ່ງຂັນກັບນັກລົງທຶນຈີນ, ໂດຍສະເພາະຢ່າງຍິ່ງໃນເວລາເລີ່ມຕົ້ນໂຄງການ ຊຶ່ງເປັນໄລຍະທີ່ມີການອຸດໜູນຫຼາຍທີ່ສຸດ.

- *ເງິນອຸດໜູນແມ່ນເພື່ອນັກລົງທຶນລາຍໃຫຍ່ເທົ່ານັ້ນ*

ຍ້ອນຂໍ້ຮຽກຮ້ອງທີ່ວ່າຕ້ອງມີເນື້ອທີ່ປູກຕໍ່າສຸດ 10,000 ມູ ຈຶ່ງເຮັດໃຫ້ເງິນອຸດໜູນເພື່ອກິດຈະກໍາປ່ຽນແທນການປູກຝິ່ນຮັບໃຊ້ແຕ່ ບໍລິສັດຈີນ ທີ່ເຮັດສັນຍາລາຍໃຫຍ່ເທົ່ານັ້ນ. ຜູ້ລົງທຶນລາຍໃຫຍ່ເທົ່ານັ້ນ ທີ່ຮອດດຽວນີ້ ໄດ້ສະແດງໃຫ້ເຫັນວ່າມີການພົວພັນບໍ່ຄ່ອຍດີກັບກະສິກອນທ້ອງຖິ່ນ (ບົດທີ 5). ດັ່ງນັ້ນ ຈຶ່ງຕັ້ງຄໍາຖາມຂຶ້ນກ່ຽວກັບການອຸດໜູນເລົ່ານີ້ ຊຶ່ງໃນການອອກແບບແມ່ນແນໃສ່ອໍານວຍຄວາມສະດວກໃຫ້ມີຕົວແບບພັດທະນາຢາງພາລາ ທີ່ຮັບປະກັນຜົນປະໂຫຍດສູງສຸດໃຫ້ແກ່ຊາວກະສິກອນ ແລະ ລັດຖະບານລາວ.

- *ການຄຸ້ມຄອງກອງທຶນອຸດໜູນແບບທັນການ ນັບວ່າເປັນສິ່ງທ້າທາຍ*

ນັກທຸລະກິດທີ່ຖືກສໍາພາດບາງຄົນບອກວ່າ ມີການຊັກຊ້າໃນການຮັບເອົາເງິນກອງທຶນ ຊຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການປະຕິບັດງານຢູ່ລາວ. ຂໍ້ສັງເກດນີ້ກໍເປັນຄວາມເຫັນທີ່ຖືກຢັ້ງຢືນວ່າຖືກຕ້ອງເວລາໂອ້ລົມແບບບໍ່ເປັນທາງການກັບເຈົ້າໜ້າທີ່ລັດຖະບານຈີນຢູ່ສິບສອງພັນນາ.

# ພາກທີ 5
# ຮູບແບບການລົງທຶນ ໃນການປູກຢາງພາລາ ທີ່ ແຂວງ ຫຼວງນໍ້າທາ

ການປູກຢາງພາລາຢູ່ ແຂວງ ຫຼວງນໍ້າທາ ໄດ້ດໍາເນີນໄປໃນຫຼາຍໆເງື່ອນໄຂ ແລະ ສະພາບ ການຕົກລົງທີ່ແຕກຕ່າງກັນ. ຊາວບ້ານ (ທັງລາວ ແລະ ຈີນຢູ່ເຂດພູດອຍ ແລະ ທົ່ງພຽງ), ຜູ້ລົງທຶນ (ຂະໜາດໃຫຍ່ ແລະ ນ້ອຍ, ພາຍໃນ ແລະ ຕ່າງປະເທດ), ແລະ ອົງກອນລັດທີ່ຫຼາກຫຼາຍ ແລະ ຫຼາຍລະດັບ ໄດ້ສ້າງຕາໜ່າງພົວພັນຕິດຕໍ່ແບບສະລັບສັບຊ້ອນ, ພ້ອມດຽວກັນ ກໍ່ກໍ່ໃຫ້ເກີດຫຼາຍສະພາບພັດທະນາຢາງພາລາ. ຂ້າພະເຈົ້າຮັບຮູ້ເຖິງຄວາມສ່ຽງໃນການຕີລາວາດກວາດພຽງ, ແຕ່ໄດ້ຈັດປະເພດການປູກຢາງ ດັ່ງນີ້: ການປູກຢາງໃສ່ດິນໄດ້ຮັບສໍາປະທານ, ການເຮັດສັນຍາຜູກພັນ ກັບຜູ້ລົງທຶນຂະໜາດໃຫຍ່ (ທາງການ), ການເຮັດສັນຍາຜູກພັນ ກັບຜູ້ລົງທຶນຂະໜາດນ້ອຍ (ນອກລະບົບ) ແລະ ໝວດສຸດທ້າຍແມ່ນການລົງທຶນດ້ວຍຊາວບ້ານເອງ ແລະ ຮ່ວມມືກັບພີ່ນ້ອງ.

## 5.1 ການປູກຢາງໃສ່ດິນສໍາປະທານ

ທຽບໃສ່ແຂວງພາກໃຕ້, ດິນສໍາປະທານເພື່ອປູກຢາງບໍ່ຄ່ອຍຈະມີຫລາຍຢູ່ ຫຼວງນໍ້າທາ. ການທີ່ທາງການແຂວງໄດ້ມີການສະກັດກັ້ນ ສ່ວນຫນຶ່ງກໍຍ້ອນວ່າ (ມາຮອດຕອນນັ້ນ) ຍັງບໍ່ທັນມີສວນໄມ້ອຸດສາຫະກໍາຂະໜາດໃຫຍ່ເທື່ອ. ໃນເດືອນຕຸລາປີ 2005, ສາມແຂວງພາກເໜືອຄື: ຫຼວງນໍ້າທາ, ບໍ່ແກ້ວ ແລະ ອຸດົມໄຊ ໄດ້ມີຄວາມເປັນເອກະພາບກັນແບບທາງການວ່າຈະບໍ່ອະນຸມັດໃຫ້ນັກລົງທຶນໄດ້ສໍາປະທານດິນ ເພື່ອປູກຢາງ. ກົງກັນຂ້າມຄວນສົ່ງເສີມໃຫ້ມີສັນຍາຜູກພັນ ໃນການປູກຝັງໂດຍໃຫ້ມີແຜນທົ່ວໄປ ເພື່ອແບ່ງປັນຜົນກໍາໄລໃຫ້ຊາວບ້ານໄດ້ຮັບ 70% ແລະ 30% ໃຫ້ຜູ້ລົງທຶນ.

ບາງທີ ປັດໄຈຫນຶ່ງທີ່ເດັ່ນກວ່ານັ້ນ ຊຶ່ງບໍ່ອະນຸຍາດໃຫ້ມີສໍາປະທານດິນຂະໜາດໃຫຍ່, ໂດຍສະເພາະຢ່າງຍິ່ງຢູ່ເມືອງສິງ ແລະ ນໍ້າທາ, ຍ້ອນວ່າມີເຈົ້າຂອງດິນຂະໜາດນ້ອຍຈໍານວນຫຼວງຫຼາຍ. ໃນນີ້ ກໍມີຊາວບ້ານທີ່ປູກຢາງດ້ວຍເຂົາເຈົ້າເອງ ແລະ ຍັງມີສ່ວນນຶ່ງທີ່ໄດ້ເຮັດສັນຍາທາງການ ແລະ ບໍ່ເປັນທາງການກັບພີ່ນ້ອງ, ເພື່ອນມິດ ແລະ ນັກລົງທຶນຂະໜາດນ້ອຍ ຊຶ່ງສ່ວນໃຫຍ່ແມ່ນມາຈາກຟາກນັ້ນຂອງຊາຍແດນ. ການສໍາປະທານຂະໜາດໃຫຍ່ເປັນສິ່ງປາດຖະໜາຂອງບໍລິສັດທີ່ສາມາດເຂົ້າເຖິງເງິນທຶນໄດ້ຢ່າງງ່າຍດາຍ ແລະ ມີສາຍຜູກພັນກັບລັດຖະບານຢ່າງແຂງແຮງ. ເຖິງຢ່າງໃດກໍຕາມ ບໍລິສັດເຫລົ່ານີ້ບໍ່ໄດ້ເລີ່ມຕົ້ນເຂົ້າມາເປັນຈໍານວນຫຼາຍ ຈົນຮອດກາງຊຸມປີ 2000, ພາຍຫລັງທີ່ຈີນໄດ້ເລີ່ມຕົ້ນສົ່ງເສີມ ແລະ ໃຫ້ເງິນອຸດໜູນແກ່ການລົງທຶນເພື່ອທົດແທນການປູກຝິ່ນໃນພາກເໜືອລາວ (ພາກທີ 4). ເຖິງຕອນນັ້ນ, ໃນເຂດທີ່ມີຄວາມໜາແໜ້ນສູງດ້ານພົນລະເມືອງ ແລະ ມີໂຄງລ່າງດີກວ່າ, ພວກເຈົ້າຂອງດິນຂະໜາດນ້ອຍຫຼາຍຄົນໄດ້ເລີ່ມຕົ້ນປູກຢາງໃສ່ສວນຂະໜາດນ້ອຍຢັ້ງຢາຍໄປຕາມທິວທັດຢູ່ແລ້ວ, ອັນໄດ້ກີດຂວາງນັກລົງທຶນທີ່ສົນໃຈຢາກປູກຕົ້ນຢາງຢູ່ສວນຂະໜາດໃຫຍ່ທີ່ການພັດທະນາຍັງບໍ່ທັນເຖິງ.

ເຖິງຢ່າງໃດກໍຕາມ, ຫຼວງນໍ້າທາ ບໍ່ແມ່ນຈະສາມາດຕ້ານທານການນໍາໃຊ້ດິນທີ່ເອີ້ນວ່າ ຕົວແບບສໍາປະທານໄດ້ທັງໝົດ. ໃນປີ 2006 ຢຸນນານຮັບເບີ, ສາຂານ້ອຍຢູ່ລາວທີ່ຂຶ້ນກັບນິຄົມ ລັດຢຸນນານ ໄດ້ຮັບສໍາປະທານດິນ 214 ຮຕ. (ຫລື 320 ອີງຕາມບາງແຫລ່ງຂ່າວອື່ນອີກ) ຢູ່ບ້ານ ສົບຕຸດ, ຊຶ່ງເປັນ ເຂດຫ່າງໄກສອກຫລີກຂອງເມືອງນໍ້າທາ ຕິດກັບ ເມືອງນາແລ. ເວລາທີ່ທາງການຖືກຖາມວ່າເປັນຫຍັງກໍລະນີນີ້ຈຶ່ງໄດ້ອະນຸມັດ ເຖິງແມ່ນວ່າໄດ້ມີຂໍ້ຕົກລົງຢ່າງເອກະສັນລະຫວ່າງແຂວງໃຫ້ຫລີກລ້ຽງການໃຫ້ສໍາປະທານ, ພວກເພິ່ນກໍໄດ້ບອກວ່າຖືກກົດດັນຈາກຂັ້ນເທິງ. ຢຸນນານຮັບເບີ ມີຂໍ້ຕົກລົງລະດັບຊາດທີ່ເຊັນໂດຍນາຍົກລັດຖະມົນຕີ ເພື່ອພັດທະນາຢາງໃນເນື້ອທີ່ 2.5 ລ້ານມູ (ຫລື 166,667 ຮຕ) ຢູ່ສີ່ແຂວງພາກເໜືອຂອງລາວ, ໃນນັ້ນ ລວມມີ: ແຂວງ ຫຼວງນໍ້າທາ, ບໍ່

ແກ້ວ, ໄຊຍະບູລີ ແລະ ອຸດົມໄຊ. ໃນ 2.5 ລ້ານນັ້ນ, 0.5 ລ້ານ ຈະພັດທະນາໃຫ້ເປັນສວນສາທິດ (ໝາຍຄວາມວ່າສຳປະທານ).

ເຂດສຳປະທານອື່ນໃນ ແຂວງ ຫຼວງນ້ຳທາ ມີຢູ່ຕາມບໍລິເວນຊາຍແດນທີ່ກວ້າງຍາວ. ເຖິງວ່າ ມັນຈະເປັນເລື່ອງທີ່ບໍ່ຄ່ອຍຖືກຍົກຂຶ້ນມາສົນທະນາ, ແຕ່ຄວາມຈິງມີຢູ່ວ່າ ທະຫານເປັນພາກສ່ວນນຶ່ງທີ່ຕົກເປັນເປົ້າສາຍຕາໃນຂະບວນປູກຢາງທີ່ແຜ່ຂະຫຍາຍຢູ່ ຫຼວງນ້ຳທາ. ເຊັ່ນດຽວກັນກັບພາກສ່ວນອື່ນໆທີ່ຕົກໃນວົງວຽນສິນລະວົນນີ້, ກອງທັບກໍເຫັນວ່າ ຢາງແມ່ນກິດຈະກຳສ້າງລາຍຮັບໄດ້ດີ. ຍ້ອນວ່າ ຂາດຄວາມສາມາດທີ່ຈະພັດທະນາສວນດ້ວຍຕົນເອງ, ກອງທັບຈຶ່ງຫຼຽວໄປຫາຟາກນັ້ນຂອງຊາຍແດນເພື່ອຊອກຄູ່ຮ່ວມງານ. ຢ່າງໜ້ອຍມີສາມບໍລິສັດຈີນທີ່ມີສັນຍາກັບກອງທັບແຂວງເພື່ອປູກຢາງ, ໃນນັ້ນລວມມີ ຣູເຟີງ ທີ່ປູກຕາມແຄມແມ່ນ້ຳຂອງໃນເມືອງລອງ, ເຣລີທີ່ປູກຕາມຊາຍແດນຕາເວັນອອກຂອງກຸ່ມບ້ານມອມໃນເມືອງສິງ, ແລະ ບໍລິສັດທີສາມກໍຢູ່ ກຸ່ມບ້ານມອມໄປທາງທິດຕາເວັນຕົກ (ເລີ່ມແຕ່ ສົບຫລ້າ ໄປເຖິງ ປາກຫລ້າ). ໃນທາງທິດສະດີແລ້ວ, ສວນປູກເຫລົ່ານີ້ໃຊ້ແຕ່ດິນຂອງກຳລັງປ້ອງກັນຊາດ ຊຶ່ງເປັນດິນລັດ (ກະຊວງປ້ອງກັນປະເທດ). ຂົງເຂດດິນຂອງກຳລັງປ້ອງກັນຊາດບໍ່ເຄີຍມີແດນຢ່າງຈະແຈ້ງຈັກເທື່ອ ອັນເຮັດໃຫ້ມີການໂຕ້ຖຽງກັນຢ່າງເຜັດຮ້ອນກັບຊາວບ້ານທີ່ຕັ້ງຢູ່ເຂດຊາຍແດນ ຊຶ່ງຄວາມເຂົ້າໃຈ (ແລະ ຫລັກຖານ) ກ່ຽວກັບການຖືກຳມະສິດແມ່ນບໍ່ມີຫຍັງຫຼາຍໄປກວ່າການນຳໃຊ້ຕາມຮີດຄອງປະເພນີ[12]. ກໍລະນີ 5.1 ເວົ້າເຖິງເລື່ອງລາວທີ່ຕົກຢູ່ໃນບັນຫາແບບນີ້ຢູ່ບ້ານ ຈາຢີ, ບ້ານເຜົ່າມູເຊີໃນກຸ່ມບ້ານຊຽງກົກ, ເມືອງລອງ ອັນເຮັດໃຫ້ຊາວບ້ານເສຍດິນນາທັງໝົດ ແລະ ສ່ວນໃຫຍ່ຂອງດິນໄຮ່ໃຫ້ແກ່ ການສຳປະທານຂອງທະຫານ.

ການສຳປະທານຂອງກອງທັບປະກົດວ່າມີວິທີປະຕິບັດທີ່ເອກະລາດສົມຄວນ ຊຶ່ງບໍ່ເປັນໄປຕາມຂັ້ນຕອນຮັບຮອງໄວ້ແລ້ວ ດ້ານການອະນຸມັດການລົງທຶນຕ່າງປະເທດ. ເມື່ອພະແນກ ແຜນການ ແລະ ການລົງທຶນແຂວງ ຊຶ່ງຖືກແຕ່ງຕັ້ງໃຫ້ເປັນຜູ້ເບິ່ງແຍງກຳກັບການລົງທຶນຕ່າງປະເທດທັງໝົດ ຖືກຖາມກ່ຽວກັບສັນຍາທະຫານ, ພະນັກງານບໍ່ໄດ້ຮູ້ຫຍັງຫຼາຍ ແລະ ຈົ່ມວ່າການຮ່ວມມືຂອງບໍລິສັດກັບກອງທັບ ທີ່ຫລີກຂັ້ນຕອນປົກກະຕິຊຶ່ງເປັນເລື່ອງໜ້າສົງໃສໃນແງ່ກົດໝາຍ. ແຕ່ເມື່ອສຶກສາເບິ່ງສັນຍາ ຂອງທະຫານປະເພດນີ້ແລ້ວເຫັນວ່າ ມັນກໍມີກາປະທັບອະນຸມັດຂອງພະແນກແຜນການ ແລະ ການລົງທຶນ ແລະ ຂອງຫ້ອງການທະບຽນສານ ແຂວງ ພ້ອມ, ຊຶ່ງເຮັດໃຫ້ເຂົ້າໃຈວ່າມັນບໍ່ປົກກະຕິ ຫລື ອາດເປັນໄປໄດ້ວ່າ ມີການໃຫ້ສິນບົນຢ່າງໜັກໃນຂະບວນການອະນຸມັດການລົງທຶນ. ນອກນັ້ນ ສັນຍານີ້ຍັງມີຈຸດທີ່ຜິດປົກກະຕິຢູ່ທີ່ວ່າ ຍັງມີການໃຫ້ສິດຂຸດຄົ້ນບໍ່ແຮ່ ແລະ ຊັບພະຍາກອນປະເພດອື່ນໆພາຍໃນຂອບເຂດສຳປະທານອີກດ້ວຍ (ຕາມປົກກະຕິຖ້າຫາກຄົ້ນພົບຊັບພະຍາກອນຕື່ມ, ສິດໃນການຂຸດຄົ້ນຍັງແມ່ນຂອງລັດຖະບານລາວ). ນອກຈາກນີ້ແລ້ວ, ບໍລິສັດຍັງໄດ້ຮັບການຍົກເວັ້ນຄ່າທຳນຽມທັງໝົດ, ລວມທັງຄ່າສຳປະທານທີ່ມັກປະຕິບັດກັນຄື $6 ສະຫະລັດ/ຮຕ/ປີ (ຊຶ່ງເປັນອັດຕາທີ່ຍຸນນານຮັບເປີ/ຢາງພາລາຍຸນນານເສຍໃຫ້ຫ້ອງການປົກຄອງແຂວງ). ບໍລິສັດພຽງແຕ່ຈ່າຍ 6 ຢວນ/ຕໍ່ຕົ້ນ/ຂອງຜົນກຳໄລຕໍ່ປີ (ອີງຕາມລະບຽບການເດືອນທັນວາ 2006) ໃຫ້ກອງທັບ ພາຍຫລັງເລີ່ມຕົ້ນປາດຢາງ.

ໃນຈຳນວນຕົວແບບຕ່າງໆຂອງການພັດທະນາສວນຢາງ, ບໍລິສັດທັງຫຼາຍຈະມັກຮູບແບບສຳປະທານຫລາຍກວ່າໝູ່ໝົດ, ເພາະມັນອຳນວຍຄວາມສະດວກໃຫ້ບໍລິສັດມີສິດຄວບຄຸມສູງສຸດ. ໃນພາສາຜູ້ປູກຢາງ, ເພິ່ນມັກໃຊ້ຄຳສັບ "ສາທິດ" ແທນຄຳສັບສຳປະທານ, ເພາະສາທິດຕີຄວາມໝາຍວ່າທາງບໍລິສັດຈະສາທິດເຕັກໂນໂລຊີໄດ້ທົດ

---

[12] ສິ່ງນີ້ປະກົດວ່າເປັນບັນຫາຢູ່ທຸກໆປະເທດ, ມັນແມ່ນປະເດັນກ່ຽວຂ້ອງກັບສຳປະທານດິນ. ສຳປະທານຈະກ່ຽວຂ້ອງກັບດິນລັດເທົ່ານັ້ນ. ແຕ່ວ່າອັນໃດເປັນດິນລັດຊ້ຳພັດບໍ່ມີນິຍາມຕາຍຕົວ, ແລ້ວແຕ່ຈະຄິດ ແລະ ຕີຄວາມໝາຍ ແລະ ຄິດເອົາເອງ

ສອບມາແລ້ວວ່າໄດ້ພົບແລະວິທີຄຸ້ມຄອງບໍລິຫານທີ່ມີປະສິດທິພາບຊຶ່ງກ່ຽວຂ້ອງກັບສວນປູກພືດອຸດສາຫະກໍາທັນສະໄໝ. ແຕ່ໃນຕົວຈິງແລ້ວ ວິທີປະຕິບັດຂອງ "ສວນສາທິດ" ປະເພດນີ້ບໍ່ເປັນແບບຢ່າງສະເໝີໄປ. ສ່ວນໃຫຍ່ມັນຕ້ອງອາໃສຄວາມສາມາດຂອງຜູ້ມາຮັບເໝົາຕໍ່ຊ້ວງ ແລະ ຂຶ້ນກັບສະພາບຮີບດ່ວນທີ່ເຂົາຕ້ອງການເຮັດວຽກ[13]. ນອກນັ້ນ ການສົ່ງຄວາມຮູ້ເຕັກໂນໂລຊີໃຫ້ຊາວບ້ານກໍຈໍາກັດ, ໂດຍສະເພາະຢ່າງຍິ່ງ ຖ້າແມ່ນແຮງງານຈ້າງມາແຕ່ຈີນ[14]. ເມື່ອຖາມວ່າຊາວບ້ານໄດ້ຮັບການຝຶກອົບຮົມກ່ຽວກັບການປູກຢາງຫລືບໍ່ ພະນັກງານອາວຸໂສຂອງ ບໍລິສັດສາລະພາບວ່າ, "ເວົ້າແທ້ກະບໍ່. ພວກເຮົາຕ້ອງເກັບບາງສິ່ງບາງຢ່າງໄວ້. ພວກເຮົາຈະສອນພວກເຂົາຖ້າເຫັນວ່າມັນຮອດເວລາແລ້ວ."

ໃນກໍລະນີສວນປູກແບບສໍາປະທານ, ຊາວບ້ານຈະບໍ່ສາມາດເຂົ້າເຖິງດິນ ແລະ ສູນເສຍຮູບແບບດໍາລົງຊີວິດຂອງເຂົາ ແລ້ວກາຍເປັນກໍາມະກອນຮັບຈ້າງ. ນອກນັ້ນ ມັນກໍຈະຈໍາກັດ ບໍ່ໃຫ້ມີຜູ້ລົງທຶນຂະໜາດນ້ອຍເຂົ້າມາ ຊຶ່ງເປັນກໍລະນີຢູ່ ບ້ານຈະຍີ (ກໍລະນີ 5.1)[15] ຜົນກະທົບທາງລົບທີ່ກ່ຽວຂ້ອງກັບຕົວແບບສໍາປະທານນີ້ ລະດັບສູນກາງໄດ້ຮັບຮູ້ຢູ່ແລ້ວ. ໃນເດືອນພຶດສະພາປີ 2007 ນາຍົກລັດຖະມົນຕີໄດ້ປະກາດຍົກເລີກຢ່າງບໍ່ມີກໍານົດໃນການອະນຸມັດສໍາປະທານໃຫຍ່ (100 ຮຕ ຫລື ຫຼາຍກວ່ານັ້ນ) ເພື່ອເອົາດິນປູກຕົ້ນໄມ້ອຸດສາຫະກໍາ, ໄມ້ຢືນຕົ້ນ ແລະ ຂຸດຄົ້ນບໍ່ແຮ່ (ໜັງສືພິມ ວຽງຈັນ ທາຍມ໌ Vientiane Times, ພຶດສະພາ 2007). ມີບາງຄົນທີ່ຈົ່ມວ່າການໃຫ້ສໍາປະທານຍັງຄົງສືບຕໍ່ ເຖິງວ່າຈະມີການຫ້າມຊົ່ວຄາວ, ມີບາງຄົນຄາດກະເອົາວ່າການສໍາປະທານອະນຸຍາດຫວ່າງມໍ່ໆນີ້ອາດຈະຍ້ອນວ່າ ເພິ່ນໄດ້ກະກຽມໄວ້ກ່ອນ ດົນມາແລ້ວ, ກ່ອນການປະກາດ ໂຈະນັ້ນອີກ. ມັນອາດຈະໄວເກີນໄປໂພດເພື່ອຈະຕີລາຄາບັນຫານີ້.

ການ "ສໍາປະທານ" ແບບບໍ່ເປັນທາງການ, ຖ້າສາມາດຮ້ອງມັນແບບນີ້ໄດ້, ໂດຍເຈົ້າໜ້າທີ່ລັດຖະບານ ແລະພາກສ່ວນທີ່ມີອໍານາດ ຊຶ່ງເປັນເລື່ອງປົກກະຕິ ແລະ ຈະເຫັນຢູ່ເຂດທີ່ເຂົ້າເຖິງໄປມາໄດ້ງ່າຍທີ່ ເມືອງສິງ ແລະເມືອງລອງ. ໃນກໍລະນີແບບນີ້ ເຖິງວ່າຈະບໍ່ແມ່ນດິນຂະໜາດໃຫຍ່ ກໍຖືໄດ້ວ່າເປັນການຍາດເອົາດິນໄປ ຫຼາຍກວ່າການສໍາປະທານ ຊຶ່ງມັກມີຄວາມໝາຍວ່າເປັນເລື່ອງຖືກຕ້ອງຕາມກົດໝາຍ. ຊາວບ້ານທີ່ເສຍດິນ ບາງຄັ້ງຈະໄດ້ຮັບເງິນທົດແທນເລັກນ້ອຍ ແລະ ບາງຄັ້ງກໍບໍ່ໄດ້ເລີຍ. ຊາວບ້ານມັກຕີລາຄາວ່າພະນັກງານລັດ ແລະ ຜ ູ້ກ່ຽວຂ້ອງແມ່ນ "ລັດຖະບານ", ແລ້ວຮູ້ສຶກບໍ່ມີເຫື່ອມີແຮງສູ້ ໃນເວລາເຈລະຈາຕໍ່ລອງ. ການຍາດເອົາດິນນີ້ ຍິ່ງເປັນສິ່ງທີ່ເຮົາບໍ່ຮູ້ໄດ້ເຖິງຂອບເຂດ ແລະ ຂະບວນການນີ້ປານໃດ, ຍ້ອນຊາວບ້ານຢ້ານທີ່ຈະວິຈານຢ່າງລະອຽດ, ພຽງແຕ່ເວົ້າວ່າ "ມັນມີຢູ່ຫຼາຍ".

---

**ກໍລະນີ 5.1 ບ້ານຈະຍີ, ຕັ້ງຢູ່ດິນສໍາປະທານທະຫານ**

ບ້ານຈະຍີ, ຕັ້ງຢູ່ແຄມນໍ້າຂອງໃນກຸ່ມບ້ານ ຊຽງກົກ, ເມືອງລອງ, ເປັນບ້ານເຜົ່າ ມູເຊີ ມີປະຊາກອນ 212 ຄົນ. ກ່ອນບໍລິສັດຢາງພາລາຈີນເຂົ້າມາ, ວິຖີຊີວິດຂອງຊາວບ້ານ ຕິດພັນກັບການເຮັດນາ ແລະ ໄຮ່ເຂົ້າ, ເກັບເຄື່ອງປ່າຂອງດົງ ແລະ ລ້ຽງສັດ. ໃນປີ 2006, ບ້ານຈະຍີ ມີຜູ້ມາຢ້ຽມຢາມ ທີ່ມາຊັກຊວນຢ່າງບໍ່ຂາດ; ພວກເພິ່ນມາໃນນາມນັກລົງທຶນຈີນ, ກອງທັບ, ພະນັກງານແຂວງ ແລະ ເມືອງ. ໃນຕອນຕົ້ນໆ, ຊາວບ້ານເລົ່າວ່າ ກອງທັບ

---

13 ດັ່ງທີ່ຈະຍົກຂຶ້ນໃຫ້ເຫັນຕອນຕໍ່ໄປໃນບົດນີ້ ທີ່ວ່າບໍລິສັດມັກຈະຖ ືກກົດດັນໃຫ້ຊ່ວງຊີງກັນເອົາດິນ, ບາງຄັ້ງກໍບໍ່ເຮັດຕາມມາດຕະຖານເຕັກນິກ.

14 ສັນຍາຢາງໂດຍທົ່ວໄປຈະໃຫ້ມີກໍາມະກອນຕ່າງດ້າວ 10-20%. ແຕ່ຕົວເລກນີ້ບໍ່ຄ່ອຍຈະຖືກປະຕິບັດ.

15 ອະນາຄົດຂອງຜູ້ມີດິນຂະໜາດນ້ອຍທີ່ກ່ຽວຂ້ອງກັບດິນສໍາປະທານນັ້ນແມ່ນບໍ່ຈະແຈ້ງ, ໃນປັດຈຸບັນຍັງປ່ອຍເຂົາເຈົ້າເຮັດດັ່ງຜ່ານມາ.

ໄດ້ສັນຍາວ່າພວກເພິ່ນຈະໃຊ້ແຕ່ດິນທະຫານ, ແຕ່ມາດຽວນີ້ ບ້ານໄດ້ສູນເສຍດິນນາທັງໝົດໄປ (ຊຶ່ງໄດ້ກາຍເປັນບ່ອນກ້າເບ້ຍທີ່ກວ້າງຂວາງ) ແລະ ໄດ້ເສຍດິນເຮັດໄຮ່ເກືອບໝົດ. ມີຊາວບ້ານບາງຄົນທີ່ຂັດຂືນການສຳປະທານ, ໄດ້ມີລາຍງານວ່າພວກເຂົາເຈົ້າຖືກເອົາປືນຈີ້.

ການມີເຂົ້າກິນຢ່າງພຽງພໍ ໄດ້ກາຍເປັນບັນຫາທີ່ຫນັກຫນ່ວງ ສຳລັບຊາວບ້ານ. ສັດລ້ຽງຕ້ອງຖືກຕັດຈຳນວນລົງ, ມີພຽງແຕ່ໄກ່ ແລະ ໝູບໍ່ພໍເທົ່າໃດໂຕ. ຊາວບ້ານບາງຄົນດຽວນີ້ເຮັດວຽກໃຫ້ບໍລິສັດ, ໄດ້ເງິນຄ່າແຮງງານພຽງ 30,000-40,000 ກີບ/ວັນ ຊຶ່ງເຂົາເຈົ້າກໍເວົ້າວ່າ ກໍບໍ່ຂີ້ຮ້າຍ. ເຖິງຢ່າງໃດກໍຕາມ, ບັນຍາກາດລວມໃນບ້ານແມ່ນບໍ່ພໍໃຈ ບວກໃສ່ຄວາມບໍ່ອາໄລຕາຍຢາກ. ຊາວບ້ານໄດ້ພະຍາຍາມຮ້ອງຂໍໄປຍັງເຈົ້າໜ້າທີ່ທ້ອງຖິ່ນຫຼາຍຄັ້ງ ແຕ່ບໍ່ໄດ້ຮັບຜົນ. ເພິ່ນໄດ້ບອກຊາວບ້ານວ່າ ດິນນາເຂົາເຈົ້າຈະຖືກສົ່ງຄືນພາຍຫລັງສາມປີ, ໄດ້ມີການເວົ້າວ່າ ຈະໃຫ້ດິນໄຮ່ເທິງພູສ່ວນຫນຶ່ງແກ່ຊາວບ້ານຄືນ ໂດຍອີງໃສ່ໂຄຕາຄອບຄົວ, ແຕ່ຊາວບ້ານເອງບໍ່ເຊື່ອແລ້ວວ່າ ຄຳສັນຍາອັນໃດຈະກາຍເປັນຄວາມຈິງ.

ໜ່ວຍພູກົງກັນຂ້າມກັບ ບ້ານຈະຍີ ແມ່ນປ່າຊ້າຕາມປະເພນີຂອງບ້ານມາແຕ່ໃດ. ໂດຍບໍ່ຮູ້ເຖິງຄວາມໝາຍສຳຄັນຂອງມັນ, ບໍລິສັດຈີນໃນຕອນຕົ້ນໆໄດ້ເອົາດິນຈາກຈຸດນັ້ນໄປຖົມເປັນຖານສ້າງທົ່ນທາງ. ສິ່ງນີ້ໄດ້ກະຕຸ້ນໃຫ້ຊາວບ້ານຕໍ່ຕ້ານຢ່າງຮຸນແຮງ ແລະ ຍິ່ງເຮັດໃຫ້ຄວາມບໍ່ໄວ້ໃຈຂອງຊາວບ້ານຕໍ່ຜູ້ລົງທຶນນັ້ນເພີ້ມຂຶ້ນຫລາຍກວ່າເກົ່າ. ຂໍ້ໂຕ້ແຍ່ງນີ້ຈົບລົງດ້ວຍການຈ່າຍຄ່າເສຽຫາຍທັງໝົດ 100,000 ກີບໃຫ້ບ້ານ, ດິນບາງສ່ວນໄດ້ຖືກຂົນຄືນ ແລະ ໜ່ວຍພູນີ້ບໍ່ຖືກຖາກຖາງອີກ.

ກ່ອນການມີສຳປະທານກັບທະຫານ, ມີຫົກຄອບຄົວທີ່ໄດ້ເຮັດສັນຍາປູກຢາງກັບນັກລົງທຶນລື້ ທ້ອງຖິ່ນທີ່ຢູ່ ຊຽງກົກ (ເດີມມາຈາກ ເມືອງສິງ), ສັນຍານັ້ນ ໃຫ້ສ່ວນແບ່ງ 50-50 ພາຍຫລັງ 5 ປີ. ໃນຊຸມປີທຳອິດ ຜູ້ລົງທຶນສະໜອງແຮງງານວິຊາການ ພ້ອມທັງເບ້ຍ ແລະ ອຸປະກອນ; ສ່ວນຊາວບ້ານແມ່ນຮັບຜິດຊອບວຽກເບົາບາງໃນການບົວລະບັດຮັກສາເຊັ່ນ: ເສຍຫຍ້າ. ພາຍຫລັງ ການປັນສ່ວນແບ່ງແລ້ວ, ຜູ້ລົງທຶນຈະມີສິດຖາວອນໃນດິນທີ່ເປັນສ່ວນແບ່ງຂອງເຂົາ. ໃນການໄປຢ້ຽມຢາມຜູ້ລົງທຶນເວລາຕໍ່ມາ, ຜູ້ກ່ຽວໄດ້ເວົ້າວ່າສວນປູກຂອງເຂົາຢູ່ ບ້ານຈະຍີ ບໍ່ໄດ້ຮັບຜົນກະທົບຈາກການສຳປະທານທະຫານມາເຖິງຕອນນັ້ນ, ແຕ່ເຂົາຈະບໍ່ສາມາດເຮັດສັນຍາກັບຄອບຄົວຊາວບ້ານອີກແລ້ວດັ່ງໄດ້ວາງແຜນໄວ້ ເພາະວ່າບໍລິສັດຈີນໄດ້ເອົາດິນທີ່ເຫລືອທັງໝົດໄປແລ້ວ.

ແຕ່ບໍລິສັດຈີນຍາກທີ່ຈະເຂົ້າໃຈ ກ່ຽວກັບຄວາມຜູກພັນຂອງ ບ້ານຈະຍີ ຕໍ່ຊີວິດຕາມປະເພນີເຂົາເຈົ້າ. “ເປັນຫຍັງເຂົາບໍ່ຄິດ? ເຂົາສາມາດຊື້ເຂົ້າໄດ້ຢູ່ຕະຫຼອດ,” ຜູ້ຈັດການຄົນຫນຶ່ງເວົ້າຢ່າງອຸກອັ່ງ. ບໍລິສັດມີຄວາມພູມໃຈທີ່ຈະໃຫ້ແກ່ຊາວບ້ານ ແລະ ກອງທັບໃນບໍ່ເທົ່າໃດປີຂ້າງໜ້າ: ຄ່າແຮງງານທີ່ແນ່ນອນ, ໂຄງລ່າງທີ່ດີກວ່າເກົ່າຫຼາຍ, ລະບົບສະໜອງນ້ຳ ແລະ ສາຍໄຟຟ້າເຊື່ອມຕໍ່ມາເຖິງ ສຳລັບບ້ານແຄມນ້ຳຂອງບ້ານຫນຶ່ງທີ່ເຄີຍຖືກຕັດແຍກອອກຈາກໝູ່.

---

## 5.2. ການປູກຝັງໂດຍມີສັນຍາຜູກພັນ ກັບນັກລົງທຶນຂະໜາດໃຫຍ່ (ທາງການ)

ອຳນາດປົກຄອງ ຫຼວງນ້ຳທາ ສົ່ງເສີມຢ່າງເປັນທາງການຕົວແບບສັນຍາຜູກພັນ ການປູກຝັງ ແບບ “2+3” ຊຶ່ງປົກກະຕິແລ້ວ 70% ຂອງກຳໄລ (ກຳໄລ ຫລື ຜະລິດຕະພັນ) ແມ່ນເປັນຂອງຊາວບ້ານ ແລະ 30% ເປັນຂອງນັກລົງທຶນ. ໃນຕົວແບບນີ້ມີປັດໄຈນຳເຂົ້າ *(input)* ຫ້າຢ່າງຄື: ດິນ, ແຮງງານ, ທຶນ (ລວມ ທັງເບ້ຍ, ຝຸ່ນ, ແລະ ອຸປະກອນ), ເຕັກນິກ ແລະ ການຕະຫຼາດ. ຊາວບ້ານຈະສະໜອງສອງຢ່າງທຳອິດ ແລະ ບໍລິສັດຮັບ

ຜິດຊອບສາມຢ່າງສຸດທ້າຍ. ແຂວງຮູ້ສຶກວ່າ ການຮ່ວມມືແບບນີ້ເມື່ອທຽບໃສ່ສຳປະທານແລ້ວ, ທາງຊາວບ້ານຈະສາມາດເຂົ້າເຖິງດິນຂອງຕົນເອງແບບຮັບປະກັນກວ່າ, ດັ່ງນັ້ນກໍຈະຮູ້ສຶກເປັນເຈົ້າຂອງໃນສວນປູກຫຼາຍກວ່າ.

ໃນພາກນີ້ ຂ້າພະເຈົ້າໄດ້ໂອ້ລົມກັບນັກລົງທຶນຂະໜາດໃຫຍ່ທາງການຈຳນວນບໍ່ໜ້ອຍ ຜູ້ທີ່ໃນຂະນະນີ້ມີສັນຍາກັບຊາວບ້ານກໍຍັງມີສັນຍາກັບທາງການລາວຢ່າງໜ້ອຍໃນລະດັບເມືອງອີກດ້ວຍ, ແຕ່ສ່ວນຫຼາຍແລ້ວແມ່ນມີສັນຍາກັບແຂວງ ແລະ ແມ້ແຕ່ລະດັບຊາດກໍມີ. ໃນນີ້ ສ່ວນຫຼວງຫຼາຍ ແມ່ນນັກລົງທຶນຈີນ, ຍົກເວັ້ນບໍລິສັດຮ່ວມລົງທຶນຫນຶ່ງຊື່ ຕົງລີ-ຈິງກູ ແລະ ໄຊພະຈັນ, ບໍລິສັດທີ່ຕັ້ງຢູ່ ເມືອງລອງ (ບົດທີ 2. ຕາຕະລາງ 2.1).

## 5.2.1 ເຮັດສັນຍາແບບໃດ?

ແລ້ວແຕ່ວ່າເຮົາຈະລົມກັບໃຜ, ແຕ່ລະຝ່າຍ (ເຊັ່ນ: ແຂວງ, ເມືອງ, ນັກລົງທຶນ ແລະຊາວບ້ານ) ຕ່າງກໍໃຫ້ຂໍ້ມູນທີ່ແຕກຕ່າງກັນເລັກນ້ອຍກ່ຽວກັບການເຮັດສັນຍາກັບນັກລົງທຶນຕ່າງປະເທດ. ໂດຍທົ່ວໄປມັນແມ່ນຮູບແບບແຕ່ເທິງລົງລຸ່ມ ແລະ ໂດຍທາງການປະກອບດ້ວຍຂັ້ນຕອນດັ່ງລຸ່ມນີ້:

ນັກລົງທຶນແຈ້ງໃຫ້ແຂວງຊາບກ່ຽວກັບເຈດຈຳນົງຢາກລົງທຶນ. ໃນໄລຍະລໍຖ້າ, ພວກເພິ່ນກໍຈະເຮັດວຽກກັບທາງຫ້ອງການເມືອງ (ຫ້ອງການສົ່ງເສີມກະສິກຳປ່າໄມ້ເມືອງ), ຫ້ອງການແຜນການ ແລະ ການລົງທຶນເມືອງ ແລະເຈົ້າແຂວງ) ເພື່ອປະກອບເອກະສານຂໍລົງທຶນ ແລະ ເຮັດສັນຍາກັບແຂວງ. ຫລັງຈາກເຊັນສັນຍາກັບແຂວງແລ້ວ ນັກລົງທຶນກໍຈະກັບໄປຫາເມືອງ ແລະ ບ້ານ ເພື່ອຈະຈັດຕຽມສັນຍາສຳລັບໄລຍະຕໍ່ມາ.

ແຕ່ໃນພາກປະຕິບັດແລ້ວ, ຂັ້ນຕອນຈະບໍ່ແນ່ນອນ, ການປະຕິບັດຂັ້ນຕອນແມ່ນມີລັກສະນະບໍ່ຮັດກຸມ ແລະ ເຮັດແບບກ້ຽວໄປວຽນມາ. ດັ່ງທີ່ເຮົາຈະເຫັນໃນຫຼາຍກໍລະນີສຶກສາໃນພາກນີ້ວ່າ ສ່ວນຫຼາຍແລ້ວ ມັກຈະມີການເຮັດສັນຍາກັບແຂວງກ່ອນທີ່ຈະມີການຕົກລົງ ແລະ ກຳນົດຄວາມຮັບຜິດຊອບຢ່າງຄົບຖ້ວນກັບຊາວບ້ານ, ຊຶ່ງເປັນເງື່ອນໄຂໃຫ້ເກີດຂໍ້ຂັດແຍ່ງກັນຢູ່ລະດັບບ້ານ ແລະ ຄວາມຫຍຸ້ງຍາກໃນພາກປະຕິບັດຕົວຈິງໃນເວລາຕໍ່ມາ. ຂະບວນປຶກສາຫາລືກັບຊາວບ້ານ ສ່ວນຫຼາຍມັກຈະເຮັດແບບຟ້າວຟັ່ງເຄິ່ງໆກາງໆ, ຈະປຶກສາກັບນາຍບ້ານ ແລະ ສະມາຊິກຊຸມຊົນທີ່ສຳຄັນຈຳນວນຫນຶ່ງເທົ່ານັ້ນ. ນອກນັ້ນແລ້ວ, ດັ່ງທີ່ຊາວບ້ານໄດ້ແຈ້ງໃຫ້ຮູ້ໃນການສຳພາດຫຼາຍຄັ້ງວ່າ, ການປະຊຸມປຶກສາຫາລືສ່ວນໃຫຍ່ແລ້ວບໍ່ມີຫຍັງຫຼາຍໄປກວ່າການຂົນຂວາຍ ແລະ ມີລັກສະນະແບບບັງຄັບໃນລະດັບແຕກຕ່າງກັນໄປ. ຍ້ອນມີເຈົ້າໜ້າທີ່ລັດຖະບານມີສ່ວນຮ່ວມ (ບາງຄັ້ງກໍລວມມີທັງທະຫານ ແລະ ຕຳຫຼວດ), ຊາວບ້ານຮູ້ສຶກວ່າຕົນເອງບໍ່ມີທາງເລືອກຫຼາຍ ນອກຈາກຈຳເປັນມີສ່ວນເຂົ້າຮ່ວມແບບ “ໃນນາມ” ກັບບໍລິສັດເທົ່ານັ້ນ. ການເຫັນດີແບບໃນນາມທີ່ແຕກຫັກໄດ້ງ່າຍນີ້ ນອກຈາກໝາຍເຖິງສະພາບຄວາມເຂົ້າໃຈທີ່ບໍ່ຄ່ອຍດີແລ້ວ ກໍຍັງໝາຍເຖິງວ່າ ມັນບໍ່ມີຄວາມຕົກລົງຕັດສິນໃຈຈາກຝ່າຍຕ່າງໆຂອງສັນຍາ; ດັ່ງນັ້ນໃນພາກປະຕິບັດຈຶ່ງມັກມີຂໍ້ຂັດແຍ່ງ ແລະ ຜິດຖຽງບໍ່ລົງລອຍກັນ.

## 5.2.2 ຕົວແບບ “2+3” ໃຊ້ການໄດ້ແທ້ບໍ່?

ຈາກການທົບທວນເບິ່ງ ຈຳນວນສັນຍາ ສ່ວນຫລາຍ ໃນລະດັບແຂວງ (ແລະ ສັນຍາຂັ້ນເມືອງເມື່ອໃດຫາກພໍຊອກຫາໄດ້) ລະຫວ່າງອຳນາດການປົກຄອງແຂວງ ແລະ ຜູ້ລົງທຶນຊີ້ໃຫ້ເຫັນວ່າ ເພິ່ນໄດ້ສົ່ງເສີມຕົວແບບ “2+3” ແທ້. ຍົກເວັ້ນບາງກໍລະນີເຊັ່ນ: ດີຢວນ ແລະ ໄຊພະຈັນຢູ່ ເມືອງລອງ ແລະ ເຊັງຮົວ ຢູ່ ວຽງພູຄາ. ສັນຍາເປັນລາຍລັກອັກສອນກຳນົດແຈ້ງກ່ຽວກັບຮູບແບບສັນຍາ “2+3”, ໃນນີ້ ຊາວບ້ານຈະໄດ້ລະຫວ່າງ 55% ຫາ 70% ຂອງຜົນກຳໄລ ຊຶ່ງແລ້ວແຕ່ຄວາມຫ່າງໄກຂອງເຂດທີ່ລົງທຶນ (ພະນັກງານຫ້ອງການກະສິກຳປ່າໄມ້ແຂວງໄດ້ບອກວ່າ ບໍລິສັດທີ່ລົງທຶນຢູ່ເຂດຫ່າງໄກສອກຫລີກໄກໆ ໂດຍປົກກະຕິຈະໄດ້ສ່ວນແບ່ງຫຼາຍກວ່າແດ່). ສ່ວນຫຼາຍສັນຍາແມ່ນເຊັນກັນ 30-35 ປີ, ແຕ່ກໍ່ມີທາງເລືອກທີ່ຈະ ເຈລະຈາ ແລະ ເຮັດຄືນໃໝ່ໄດ້. ມັນຂຶ້ນກັບ

ສັນຍາສະເພາະ ຊຶ່ງຊາວບ້ານອາດ ຫລື ບໍ່ອາດຖືກຜູກມັດໃຫ້ຂາຍຢາງທີ່ເປັນສ່ວນແບ່ງຂອງຕົນໃຫ້ຜູ້ລົງທຶນ. ຖ້າຫາກຂາຍໃຫ້ຜູ້ລົງທຶນ ແມ່ນຂາຍໃນລາຄາຕະຫຼາດ; ໃນສັນຍາບໍ່ໄດ້ກຳນົດລາຄາເກັບຊື້ຕໍ່າສຸດ ຍົກເວັ້ນຫນຶ່ງກໍລະນີກັບຢຸນນານຣັບເບີ ທີ່ກຳນົດໄວ້ວ່າ "ລາຄາເກັບຊື້ຕໍ່າສຸດສາມາດເຈລະຈານຳກັນໄດ້ຖ້າເຫັນຈຳເປັນ."

ແຕ່ໃນສັນຍາກັບ ດີຢວນ, ໄຊພະຈັນ ແລະ ເຊັງຮົວ, ບໍລິສັດສາມາດເລືອກລະຫວ່າງຕົວແບບ "2+3" ຫລື "1+4" ຊຶ່ງໃນກໍລະນີສຸດທ້າຍນີ້ ຊາວບ້ານມີແຕ່ປະກອບດິນ. ໃນທາງເລືອກ "1+4" ນີ້ ການຮັບສ່ວນແບ່ງຜົນກຳໄລ ແລະ ຜົນຜະລິດນັ້ນແມ່ນປີ້ນກັນ ຊຶ່ງໃນນັ້ນ ນັກລົງທຶນຈະໄດ້ 70% ຂອງຜົນກຳໄລ. ໄດ້ຖາມຫ້ອງການກະສິກຳປ່າໄມ້ແຂວງວ່າ ເປັນຫຍັງຈຶ່ງໃຊ້ຮູບແບບ "1+4", ໃນຕົວຈິງແລ້ວ ມັນຄ້າຍຄືສະພາບໃຫ້ສຳປະທານ ອັນໝາຍເຖິງວ່າຊາວບ້ານໄດ້ສ່ວນແບ່ງແບບຂີ້ຮ້າຍກວ່າ, ເພິ່ນຕອບວ່າ ກໍລະນີແບບນີ້ມີໜ້ອຍ ແລະ ຢູ່ໃນຂັ້ນທົດລອງ.

ແຕ່ການສຳຫຼວດຕາມພື້ນທີ່ຕົວຈິງຊໍ້າພັດສະແດງໃຫ້ເຫັນ ພາບທີ່ແຕກຕ່າງກັບສິ່ງທີ່ເຈົ້າໜ້າທີ່ເວົ້າ. ຍົກເວັ້ນໝູ່ບ້ານທີ່ເຮັດສັນຍາກັບ ຕົງລີ-ຈົງກູ (ກໍລະນີ 5.2), ແລະ ອີກຈຳນວນຫນຶ່ງເຮັດກັບ ໄຊພະຈັນ ຢູ່ ເມືອງລອງ, ບ້ານທັງໝົດທີ່ເຮັດສັນຍາກັບນັກລົງທຶນຂະໜາດໃຫຍ່ຢູ່ເມືອງສິງ ແລະ ລອງ ປະຕິບັດຕາມຕົວແບບ "1+4": ຊາວບ້ານມີແຕ່ໃຫ້ດິນ, ບໍລິສັດເຮັດການປູກ ແລະ ເບິ່ງແຍງຮັກສາໂດຍຈະຈ້າງແຮງງານ (ມາຈາກໝູ່ບ້ານນັ້ນເອງ ຫລື_ຈາກທາງນອກ) ເປັນປີໆໄປຈົນກວ່າຈະມີການແບ່ງປັນຕົ້ນໄມ້, ດິນ, ຢາງ ຫລື ຜົນກຳໄລ. ຊາວບ້ານໃນເວລານັ້ນ ກໍຈະໄດ້ຮັບບໍ່ກາຍ 30% ຂອງສ່ວນແບ່ງ, ສ່ວນເຫລືອກໍແມ່ນຂອງບໍລິສັດ. ໄລຍະກ່ອນການແບ່ງປັນອາດຈະດົນນານເທົ່າໃດກໍໄດ້ ປະມານ 3 ປີ ໄປເຖິງເວລາປາດຢາງ. ມັນຍັງມີຄວາມຄຸມເຄືອ ແລະ ບໍ່ແນ່ນອນກ່ຽວກັບວ່າ ຕ້ອງແບ່ງປັນຫຍັງ ແລະ ພາກສ່ວນທີ່ເຮັດສັນຍານຳກັນ ມັກຈະເຂົ້າໃຈແບບຂັດແຍ່ງກັນກ່ຽວກັບບັນຫານີ້. ຕົວແບບ "2+3" ສົ່ງເສີມໃຫ້ມີການແບ່ງປັນຜົນກຳໄລ, ແຕ່ໃນຕົວຈິງແລ້ວ ເລື່ອງນີ້ມັກຈະເຂົ້າໃຈວ່າ ມັນແມ່ນການແບ່ງປັນຕົ້ນໄມ້ ຫລື ດິນ ໂດຍສະເພາະຢ່າງຍິ່ງຖ້າໄລຍະກ່ອນການແບ່ງປັນນັ້ນສັ້ນ. ໃນຕົວແບບ "1+4" ນັ້ນ ຊາວບ້ານອາດເຮັດວຽກໃຫ້ນັກລົງທຶນເພື່ອໄດ້ຮັບຄ່າແຮງງານ, ແຕ່ວ່າຕົວແບບ "2+3" ນັ້ນການອອກແຮງງານຂອງຊາວບ້ານຖືວ່າເປັນສ່ວນຫນຶ່ງຂອງການປະກອບສ່ວນເຂົ້າໃນທຸລະກິດ ແລະ ຈະບໍ່ໄດ້ຮັບຄ່າແຮງງານ.

ກໍລະນີ 5.3 ຈະເວົ້າເຖິງກໍລະນີ "2+3" ຊຶ່ງກາຍເປັນແບບ "1+4" ຢູ່ບ້ານສີວິໄລ, ເມືອງລອງ. ໃນກໍລະນີທີ່ຮ້າຍໄປກວ່ານີ້ກໍມີຢູ່ ຊຽງແຂງ, ເມືອງສິງ, ຊຶ່ງສັນຍາປູກຝັງດ້ວຍລະບົບ "2+3" ໄດ້ພັງທະລາຍລົງທັງໝົດພາຍຫລັງຫນຶ່ງປີ. ປັດຈຸບັນ ບໍລິສັດປູກຢູ່ບ່ອນນັ້ນບ່ອນນີ້ເປັນຕອນໆ ຢູ່ດິນສຳປະທານທີ່ອຳນາດປົກຄອງເມືອງໄດ້ມອບໃຫ້ເພື່ອທົດແທນໃຫ້ແກ່ການໄດ້ເຮັດສັນຍາປູກຝັງທີ່ລົ້ມລະລາຍ ຊຶ່ງຊາວບ້ານບໍ່ມີສ່ວນແບ່ງຈາກຜົນກຳໄລ (ກໍລະນີ 5.4).

---

## ກໍລະນີ 5.2 ບ້ານແດນກາງ

ບ້ານນີ້ເປັນບ້ານເຜົ່າມົ້ງຕັ້ງຢູ່ຕາມເສັ້ນທາງເລກ 17 ໃນ ເມືອງລອງ ປະຊາຊົນບ້ານນີ້ມາຈາກເມືອງນໍ້າທາ ເຊິ່ງໄດ້ມາຕັ້ງຖິ່ນຖານຢູ່ນີ້ເພື່ອເຮັດນາປູກເຂົ້າໃນປີ 1990. ປະມານ 80% ຂອງ ຄົວເຮືອນ (ທັງຫມົດ 85 ຄົວເຮືອນ) ໃນບ້ານ ຖືອາຊີບປູກຢາງ, ບາງຄົວເຮືອນປູກດ້ວຍຕົນເອງ, ແຕ່ຄົວເຮືອນອື່ນແມ່ນໄດ້ເຮັດສັນຍາປູກກັບບໍລິສັດ ຕົງລີ-ຈູງກູ ໂດຍໄດ້ໃຊ້ສອງຮູບການສັນຍາປູກຝັງ. ປະມານ 20 ຄອບຄົວ ໄດ້ເອົາທາງເລືອກ 1, ຊຶ່ງດ້ວຍວິທີນີ້ທາງບໍລິສັດຈະໄດ້ຮັບ 10% ຂອງລາຍຮັບຈາກການຂາຍແຜ່ນຢາງໃນອະນາຄົດ ໂດຍທີ່ຊາວບ້ານໄດ້ຮັບເບ້ຍດ້ວຍລາຄາຜ່ອນຜັນ. ມີຄອບຄົວຈຳນວນໜຶ່ງ ທີ່ມີເງິນໜ້ອຍໄດ້ເອົາທາງເລືອກ 2, ຊຶ່ງວິທີນີ້ ທາງບໍລິສັດໄດ້ 30% ຂອງລາຍຮັບໃນອະນາຄົດ ແລະ ດ້ວຍວິທີນີ້ ບໍລິສັດຈະສະໜອງເບ້ຍຢາງ ແລະ ຊ່ວຍສົ່ງເສີມ

ທາງເຕັກນິກໂດຍບໍ່ຕ້ອງເສຍຄ່າ (ຄັດອອກມາຈາກປຶ້ມຫລັກສູດຮຽນກ່ຽວກັບເລື່ອງ "2+3"). ທັງສອງທາງເລືອກ, ຊາວບ້ານຮັບຜິດຊອບເບິ່ງແຍງຄຸ້ມຄອງການປູກນັບແຕ່ເລີ່ມຕົ້ນເລີຍ. ຊາວບ້ານບໍ່ຈຳເປັນຂາຍຢາງໃຫ້ ຕົງລີ-ຈີງກູ. ເຂົາເຈົ້າ ສາມາດຂາຍໃຫ້ໃຜກໍໄດ້ທີ່ສະເໜີລາຄາດີກວ່າ ຕາບໃດທີ່ທາງບໍລິສັດໄດ້ສ່ວນແບ່ງຂອງການຂາຍຕາມຕົກລົງ.

ຊາວບ້ານແດນກາງໄດ້ປູກຢາງມາແຕ່ປີ 2004 ເຂົາເຈົ້າໄດ້ແລກປ່ຽນປະສົບການວິຊາການຈາກເພື່ອນມິດຢູ່ນ້ຳທາ ແລະ ຈີນ. ບາງຄົນໄດ້ຮັບທັກສະການປູກມາເວລາທີ່ເຮັດວຽກເປັນກຳມະກອນໃຫ້ບໍລິສັດຈີນ ແລ້ວກໍກັບມາສອນຊາວບ້ານຄົນອື່ນໆ. ພວກເພິ່ນເຫັນວ່າການຮ່ວມມືກັບ ຕົງລີ-ຈີງກູ ນັ້ນພຽງແຕ່ເປັນທາງເລືອກ ໃນໄລຍະຂ້າມຜ່ານໄປເຖິງສະພາບທີ່ເພິ່ງຕົນເອງໄດ້ຢ່າງເຕັມສ່ວນໃນອະນາຄົດ. ຊາວບ້ານແດນກາງ ຫຼາຍຄົນມີພີ່ນ້ອງເພື່ອນມິດຢູ່ບ້ານເປັນຈຸດສ້າງຄວາມກະຕືລືລົ້ນ ຍ້ອນຢາງ ແລະ ທ່ານ ຕົງລີ ເອງກໍເປັນຄົນທີ່ໃຜໆກໍຮູ້ຊື່ສຽງ ຫລື ແມ້ແຕ່ຮູ້ໃນນາມສ່ວນຕົວ. ດັ່ງນັ້ນເຂົາເຈົ້າຄິດວ່າ ເຊື່ອບໍລິສັດນີ້ໄດ້. ເວລາຖາມຊາວບ້ານວ່າເຂົາເຈົ້າຢາກຮ່ວມມືກັບບໍລິສັດຈີນ ຫລື ບໍ່ໃນອະນາຄົດ (ຕົງລີ-ຈູງກູ ເປັນທຸລະກິດຮ່ວມໂດຍທາງການ, ແຕ່ຊາວບ້ານມັກຈະຖືມັນເປັນບໍລິສັດລາວເທົ່ານັ້ນ), ເຂົາເຈົ້າຕອບວ່າ ຮ່ວມປູກພືດລະດູການເທົ່ານັ້ນໄດ້ຢູ່ ຊຶ່ງເຮັດແບບນີ້ຄວາມສ່ຽງຈະບໍ່ຫຼາຍເກີນໄປ. ຊາວບ້ານບອກວ່າ ຄົນຈີນມີເລ້ຫລ່ຽມໂພດໂດຍໄດ້ອ້າງໄປເຖິງການປູກມັນຕົ້ນທີ່ບໍ່ໄດ້ຜົນ ໃນໄລຍະຜ່ານມາ.

(ເມື່ອບໍລິສັດຈີນ ຊື່: ພາວເວີ ໄບໂອໂລຊີໂຄລ/Power Biological ເຂົ້າມາສົ່ງເສີມປູກມັນຕົ້ນຢູ່ທົ່ວພາກເໜືອຂອງລາວ, ຊາວບ້ານແດນກາງໄດ້ຮັບຄຳສັນຍາວ່າ ບໍລິສັດຈະຮັບຊື້ມັນຕົ້ນດິບ/ປຽກໃນລາຄາ 120,000 ກີບ/ໂຕນ ຫລື ແຫ້ງໃນລາຄາ 400,000 ກີບ/ໂຕນ ມັນຕົ້ນຊອຍແຫ້ງ. ແຕ່ພາຍຫລັງເກັບກ່ຽວ, ບໍລິສັດປະຕິເສດບໍ່ເກັບຊື້ມັນທີ່ບໍ່ແຫ້ງ. ຊາວບ້ານຊ້ຳພັດບໍ່ສາມາດປຸງແຕ່ງມັນຕົ້ນແຫ້ງ ແລະ ສຸດທ້າຍ ກໍບໍ່ສາມາດຂາຍຜົນຜະລິດຂອງຕົນໄດ້).

ໃນການສຳພາດ ທ່ານ. ຕົງລີ ອະດີດຮອງເຈົ້າແຂວງ, ເພິ່ນເນັ້ນວ່າ ເພິ່ນໄດ້ເອົາໃຈໃສ່ພິເສດໃນການເລືອກວ່າຈະເຮັດສັນຍາປູກຝັງກັບບ້ານໃດ ໂດຍໄດ້ເວົ້າວ່າ "ພວກເຂົາເຈົ້າຕ້ອງຢາກໄດ້ຢາງ, ຢາກມີສ່ວນປະກອບໃນວຽກ, ສິ່ງນັ້ນເປັນສິ່ງສຳຄັນທີ່ສຸດ."

---

## ກໍລະນີ 5.3 ບ້ານສີວິໄລ

ບ້ານສີວິໄລ ເປັນບ້ານລື້ ຕັ້ງຢູ່ຕາມຖະໜົນ 17 ໃນ ເມືອງລອງ, ໄດ້ເລີ່ມຕົ້ນເຮັດສັນຍາປູກກັບບໍລິສັດ Yunnan Rubber Co. (ຢາງພາລາຢຸນນານ) ໃນປີ 2007. ກ່ອນບໍລິສັດນີ້ເຂົ້າມາ, 57 ຄົວເຮືອນໃນບ້ານນີ້ໄດ້ເລີ່ມຕົ້ນປູກຢາງມາແລ້ວນັບແຕ່ປີ 2004 ມາ, ບາງຄົວເຮືອນກໍເຮັດດ້ວຍຕົນເອງ, ບາງຄົວເຮືອນກໍມີພີ່ນ້ອງ ແລະ ເພື່ອນມິດເຮັດນຳ. ຊາວບ້ານໄດ້ເບ້ຍມາຈາກເມືອງສິງ, ຈີນ ຫລື ກ້າດ້ວຍຕົນເອງ. ພວກເຂົາໄດ້ອີງອາໃສເພື່ອນມິດຈີນໃຫ້ຄວາມຮູ້ດ້ານເຕັກນິກ ແລະ ໄດ້ຈ້າງກຳມະກອນສົ່ງເສີມຈີນຈາກ ເມືອງນາງ ແລະ ເມືອງຫລ້າ ມາຊ່ວຍໃນໄລຍະຕົ້ນໆ. ນາຍບ້ານໄດ້ເລົ່າວ່າ ແຕ່ລະປີ ຈະມີນັກວິຊາການ ຂອງຈີນມາບ້ານ ເພື່ອຮັບຈ້າງຕໍ່ຕາ ແລະ ບໍລິການເຕັກນິກອື່ນໆ ໃນປີ 2007, ໂດຍໄດ້ຮັບຂໍ້ແນະນຳຈາກເມືອງ, Yunnan Rubber ໄດ້ເຂົ້າມາບ້ານ ເພື່ອຊອກດິນ. ໃນໄລຍະຕົ້ນ ບໍລິສັດຕ້ອງການ 200 ຮຕ; ແຕ່ຊາວບ້ານບໍ່ພ້ອມທີ່ຈະຮ່ວມມື ແລະ ບອກວ່າ ພວກເຂົາເຈົ້າຕ້ອງການດິນເພື່ອປູກດ້ວຍຕົນເອງ. ໃນທີ່ສຸດ ທັງສອງຝ່າຍໄດ້ຕົກລົງເອົາດິນຕອນໜຶ່ງ ມີເນື້ອທີ່ 50 ຮຕ. ຊຶ່ງໄກອອກຈາກບ້ານໄປ, ຊຶ່ງເປັນບ່ອນຂຸມຊົນອາຄ່າໃຊ້ເພື່ອເຮັດໄຮ່ (ຊາວບ້ານອາຄ່າໄດ້ຕັ້ງບ້ານຖາວອນມາແລ້ວຢູ່ໃກ້ກັບຖະໜົນ). ບໍລິສັດຮັບຜິດຊອບທຸກຢ່າງໃນສາມປີທຳອິດ ລວມທັງເບ້ຍ,

ອຸປະກອນ, ແຮງງານ. ຫລັງຈາກນັ້ນ ຊາວບ້ານ ແລະ_ບໍລິສັດກໍຈະແຍກສ່ວນແບ່ງກັນ, ຊາວບ້ານແມ່ນໄດ້ຮັບຕົ້ນໄມ້ 300 ຕົ້ນໃນທຸກໆ 1,000 ຕົ້ນ (30%). ບັດນີ້ ບໍລິສັດເຮັດສັນຍາຮັບເໝົາຕໍ່ຊ້ວງກັບຜູ້ຄຸມງານຈີນ ແລະ ລາວຈາກອຸດົມໄຊແລ້ວ ພວກນີ້ຊ້ຳພັດຈ້າງກຳມະກອນຂະມຸຈາກອຸດົມໄຊ ແລະ ຊາວບ້ານອາຄ່າຈຳນວນໜຶ່ງຈາກເມືອງລອງ. ບໍລິສັດ Yunnan Rubber ນີ້ ມີສັນຍາລະດັບແຂວງທີ່ໄດ້ໃຫ້ຄຳໝັ້ນສັນຍາຈະໃຊ້ຕົວແບບ "2+3", ແຕ່ຕົວຈິງບໍ່ໄດ້ເຮັດສັນຍາ ກັບບ້ານສີວິໄລເລີຍ ບໍ່ວ່າຈະແມ່ນໃນຮູບແບບ "2+3" ຫລື ແບບ "1+4" ກໍບໍ່ໄດ້ເຮັດຍ້ອນວ່າ ມີຊາວບ້ານບາງຄົນຍັງບໍ່ເຫັນດີເຫັນພ້ອມ, ຍັງບໍ່ພ້ອມທີ່ຈະເອົາດິນໃຫ້ ຍ້ອນເຂົາເຈົ້າຢາກປູກດ້ວຍຕົນເອງ.

ເວລາສຳພາດພະນັກງານຫ້ອງການສົ່ງເສີມກະສິກຳປ່າໄມ້ເມືອງ, ພວກເພິ່ນໄດ້ສະແດງຄວາມກັງວົນໃຈ ເພາະເປັນດັ່ງຊີ້ນກາງຫີບ ລະຫວ່າງຊາວບ້ານ ແລະ ບໍລິສັດ. ບໍລິສັດ Yunnan Rubber ມີ ສັນຍາລະດັບແຂວງໃນມື (ແລະ ລະດັບຊາດ) ຊຶ່ງໃຫ້ສິດບໍລິສັດໄປເອົາດິນກັບເມືອງ, ແຕ່ບ້ານສີວິໄລ (ແລະ ບ່ອນອື່ນໆທີ່ພົບບັນຫາຄືບ້ານສີວິໄລ) ມີດິນຢູ່, ແຕ່ປະຕິເສດທີ່ຈະມອບໃຫ້. ໃນທີ່ສຸດພະນັກງານຫ້ອງການສົ່ງເສີມເມືອງໄດ້ບອກວ່າ ເມືອງຕ້ອງໄດ້ໃຫ້ດິນຢູ່ທີ່ໄດ້ກຳນົດເປັນປ່າສະຫງວນ (ກົງກັນຂ້າມກັບສິ່ງທີ່ນາຍ ບ້ານສີວິໄລ ໄດ້ບອກວ່າ ເປັນເຂດເຮັດໄຮ່). ທາງ Yunnan Rubber ກໍກັງວົນຊ່ຳກັນ. "ຜູ້ນຳຂອງສອງປະເທດໄດ້ຕົກລົງໃຫ້ເຮັດຈັ່ງຊີ້, ແຕ່ພວກເຮົາຕ້ອງຕໍ່ສູ້ໃນແຕ່ລະລະດັບ... ບໍ່ສາມາດ ຊອກຫາດິນປູກແມ່ນຂອດທີ່ຫຍຸ້ງຍາກທີ່ສຸດ", ຜູ້ຈັດການຄົນນຶ່ງໄດ້ບອກ ໂດຍໄດ້ອ້າງອີງໄປເຖິງຂໍ້ຕົກລົງການເມືອງໃນລະດັບຊາດ.

ຄວາມຈິງແລ້ວ ສຳລັບບ້ານສີວິໄລນີ້ ບໍ່ແມ່ນເທື່ອທຳອິດທີ່ຖືກ (ເຄິ່ງ) ຂູ່ເຂັນ ເອົາດິນ. ບ້ານນີ້ຍັງ ແມ່ນຈຸດທີ່ຕັ້ງຂອງການສຳປະທານຂຸດຄົ້ນທອງແດງຂອງ ບໍລິສັດພັດທະນາບໍ່ແຮ່ລາວ-ຈີນຕາເວັນອອກໄກ/Lao-China Fareast Mine Development Co., ຊຶ່ງມີສຳນັກງານໃຫຍ່ຢູ່ຊຽງໄຮ້, ຈີນ.

ມັນຍັງມີປັດໄຈບາງຢ່າງທີ່ພົວພັນ ຊຶ່ງກັນແລະກັນ ທີ່ເຮັດໃຫ້ຕົວແບບ "2+3" ໃຊ້ການບໍ່ໄດ້:

- ບໍລິສັດຊຸກດັນໃຫ້ໄດ້ຕົວແບບ "1+4" ເພາະວ່າມັນຄືກັນກັບກໍລະນີສຳປະທານ, ຕົວແບບນີ້ເຮັດໃຫ້ບໍລິສັດສາມາດຄວບຄຸມສວນປູກໄດ້ຫຼາຍກວ່າ ແລະ ສິ່ງທີ່ສຳຄັນກວ່ານັ້ນອີກ ແມ່ນບໍລິສັດຈະໄດ້ຮັບສ່ວນແບ່ງ (ດິນ) ຫຼາຍກວ່າໃນໄລຍະຍາວ ຍ້ອນໄດ້ປະກອບເງິນແຮງງານທີ່ບໍ່ຄ່ອຍສູງໃນໄລຍະບໍ່ດົນປານໃດ (ບໍ່ເກີນ 7 ຫລື 8 ປີ).
- ຊາວບ້ານປາດຖະໜາຢາກໄດ້ຮັບຄ່າແຮງງານຈາກການເຮັດວຽກຂອງເຂົາ. ຕ່າງໄປຈາກພືດລະດູການ, ຕົ້ນຢາງຕ້ອງໃຊ້ເວລາ 7-8 ປີ ກ່ອນຈະແກ່ພໍປາດຢາງໄດ້_ ແລະ ສ້າງລາຍຮັບ. ໃນເມື່ອນັກລົງທຶນລາຍໃຫຍ່ ນັບມື້ນັບບຸກເຂົ້າຫາເຂດຫ່າງໄກຊາວບ້ານໄດ້ຖືກຂໍໃຫ້ປ່ຽນແປງຢ່າງໄວ ຈາກການດຳລົງຊີວິດທີ່ພໍກັມຢູ່ກັ ຸມກິນໄປຫາການຜະລິດຢາງເພື່ອຈຸດປະສົງການຄ້າ ເຖິງແມ່ນວ່າ ເຂົາເຈົ້າຈະບໍ່ມີແຫລ່ງ ລາຍຮັບຫຼາຍປານໃດໃນໄລຍະລໍຖ້າ. ການປະກອບສ່ວນສະໜອງແຮງງານທີ່ບໍ່ໄດ້ຮັບເງິນເຖິງ 7-8 ປີ ໃນກິດຈະກຳທີ່ເຂົາບໍ່ລື້ງເຄີຍ ແລະ ມີຄວາມສ່ຽງ ມັນບໍ່ແມ່ນທາງອອກທີ່ເປັນໄປໄດ້ອີ່ຫລີ. ພ້ອມໆກັນນັ້ນ, ຄ່າແຮງງານແບບປົກກະຕິ 30,000-40,000 ກີບຕໍ່ວັນ ສຳລັບ ຜູ້ທີ່ວກະຫາຍເງິນກໍນັບວ່າພໍຮັບໄດ້. ເຖິງວ່າ ສິ່ງທີ່ເຂົາເຈົ້າຈະສູນເສຍໄປດ້ານສ່ວນແບ່ງໃນອະນາຄົດຈະເກີນຄ່າແຮງງານໃນປັດຈຸບັນຫຼາຍປານໃດກໍຕາມ, ມັນເປັນເລື່ອງຍາກສຳລັບຊາວບ້ານທີ່ຈະຄິດໄລ່ ແລະ ໄລ່ລຽງເປັນເງິນຕະຫຼອດໄລຍະດົນສົມຄວນເຊັ່ນນັ້ນ.
- ຊາວບ້ານເຊື່ອນັກລົງທຶນໃນຂອບເຂດໃດໜຶ່ງ ແລະ ຢູ່ເຂດຫ່າງໄກໂດຍສະເພາະມັກເຫັນວ່າ ຕົນບໍ່ມີບົດບາດເປັນຕົວຕັ້ງຕົວຕີໃນໂຄງການສັນຍາປູກ: ບໍລິສັດເຂົ້າມາເພື່ອລົງທຶນໃນດິນເຂົາເຈົ້າ ແລະ ໃຫ້ຄຳໝັ້ນສັນຍາວ່າ ຈະມີຜົນກຳໄລຕາມມາ ແຕ່ມັນກໍ່ຍັງໄກຢູ່ ກ່ອນຈະມາຮອດ. ຄວາມ

ຮູ້ສຶກເປັນເຈົ້າຂອງ ຫລື_ເປັນຄູ່ຮ່ວມວຽກໃນຕົວແບບ "2+3" ນັ້ນ ແມ່ນມີໜ້ອຍທີ່ສຸດ. ຄວາມຈິງແລ້ວ ຊາວບ້ານນັ້ນລະວັງຕົວ ຢ້ານວ່າຈະຖືກຕົ້ມ ແລະ ຖືກສວຍໃຊ້ໂດຍ "ຄົນນອກ". ໃນເມື່ອມີແນວຄຶດຄືແນວນັ້ນ, ມັນກໍເປັນການຍາກທີ່ຈະໃຫ້ຊາວບ້ານເຊື່ອໝັ້ນ ແລະ ເຮັດວຽກໃຫ້ບໍລິສັດເປັນຫຼາຍໆປີ ໂດຍ ບໍ່ໄດ້ຮັບຄ່າຕອບແທນ ແລະ ຈະຫຸ້ມເຫຸທຸກຢ່າງເພື່ອອະນາຄົດທີ່ບໍ່ຮັບປະກັນ.

- ປັດໄຈສຳຄັນຫນຶ່ງອີກ ທີ່ເຮັດໃຫ້ຕົວແບບ "2+3" ບໍ່ເໝາະ, ໃຊ້ການບໍ່ໄດ້ ແມ່ນການຂາດແຄນແຮງງານພາຍໃນທ້ອງຖິ່ນເພື່ອຮອງຮັບເອົາແຜນງານສັນຍາປູກ ຝັງຂະໜາດໃຫຍ່ ຕົວຢ່າງ: ບໍລິສັດຫນຶ່ງຢູ່ ເມືອງລອງ ທີ່ມີສັນຍາເພື່ອພັດທະນາຢາງພາລາໃນເນື້ອທີ່ 17,500 ຮຕ, ແຕ່ມາເບິ່ງປະຊາກອນທ້ອງຖິ່ນລວມໃນ 22 ບ້ານທີ່ເຮັດສັນຍານຳກັນມີພຽງ 4,400 ຄົນ (ລວມທັງເດັກນ້ອຍ ແລະ ຜູ້ສູງອາຍຸ). ເບິ່ງແຕ່ແຮງງານທ້ອງຖິ່ນແມ່ນບໍ່ແທດເຫມາະກັບຕົວຈິງແທ້ໆ.

ປັດໄຈອື່ນໆຈຳນວນຫນຶ່ງ, ເຖິງວ່າບໍ່ປະກົດຂຶ້ນໃນຕົວແບບ "2+3" ກໍຕາມ, ແຕ່ໄດ້ມີສ່ວນເຮັດໃຫ້ກໍລະນີສັນຍາປູກຢາງຕ້ອງປ່າໄຊ. ໃນຫຼາຍໆກໍລະນີ ຊາວບ້ານບໍ່ເຄີຍເຫັນດີເຫັນພ້ອມຢ່າງເຕັມປ່ຽມກັບເງື່ອນໄຂກຳນົດໄວ້ໃນສັນຍາ ເຖິງວ່າໄດ້ເຊັນສັນຍາໃນນາມໄປແລ້ວກໍຕາມ. ແຕ່ຊາວບ້ານມັກປູກຂອງເຂົາເອງຫຼາຍກວ່າເຊັ່ນ: ໃນກໍລະນີບ້ານສີວິໄລ ໃນກໍລະນີ 5.3, ຫລື ບໍ່ກໍຢາກໄດ້ ສ່ວນແບ່ງດີກວ່າ ບໍ່ວ່າຈະເປັນຢາງ, ຕົ້ນຢາງ ຫລື ບໍ່ກໍມີການຂັດແຍ່ງໂຕ້ຖຽງດ້ານການແບ່ງງານ (ຊຶ່ງເປັນບັນຫາໃນບາງບ້ານຂອງກຸ່ມ ບ້ານສະ ໃນ ເມືອງລອງ). ການທີ່ເຂົາເຈົ້າຮ່ວມໃນການປູກຝັງຕາມສັນຍາປູກນັ້ນ ກໍຍ້ອນວ່າເຂົາມັກຈະຖືກບັງຄັບບໍ່ຫຼາຍກໍໜ້ອຍ ແລະ ຍ້ອນຂັ້ນຕອນການເຮັດສັນຍາແບບເທິງລົງລຸ່ມທີ່ກ່ຽວຂ້ອງກັບການລົງທຶນແບບເປັນທາງການ (ຄວາມສ່ຽງຕ່າງໆຂອງຂັ້ນຕອນນີ້ຈະເວົ້າຢ່າງລະອຽດກວ່າໃນຕອນຕໍ່ໄປ). ຍັງມີບາງບ້ານອີກ ທີ່ຍັງບໍ່ທັນພ້ອມແທ້ໆທີ່ຈະປູກຢາງເທື່ອ ຍ້ອນເຫດຜົນທາງນອກເຊັ່ນ: ໃນສະພາບຢູ່ ບ້ານ ເມີຕໍເກົ່າ, ຊຶ່ງເປັນບ້ານທີ່ມີໂຄງລ່າງຈຳກັດ (ກໍລະນີ 5.4). ຄວາມສາມາດຂອງບໍລິສັດໃນການຄຸ້ມຄອງ ແລະ ການຮັບເໝົາຕໍ່ ທີ່ບໍ່ມີປະສິດທິຜົນ ເຮັດໃຫ້ເກີດມີສະພາບຊັກຊ້າໃນການສະໜອງວັດສະດຸ, ບໍ່ຈ່າຍຄ່າແຮງງານ, ມີການຍັກຍອກເງິນ ແລະ ຂາດການສົ່ງເສີມດ້ານວິຊາການ; ທຸກສິ່ງເຫລົ່ານີ້ ເຮັດໃຫ້ໂຄງການສັນຍາຜູກພັນ ການປູກຕົກຢູ່ໃນຄວາມສ່ຽງທີ່ບໍ່ເກີດຜົນ.

---

**ກໍລະນີ 5.4 ບ້ານ ເມີຕໍເກົ່າ, ລໍຖ້າຫົນທາງ**

ບ້ານ ເມີຕໍເກົ່າ ແມ່ນບ້ານອາຄ່າແຫ່ງຫນຶ່ງທີ່ຢູ່ຫ່າງໄກ, ຢູ່ໃຈກາງກຸ່ມບ້ານຊຽງແຂງ, ເມືອງສິງ. ໃນເມື່ອກ່ອນຊາວບ້ານ ເມີຕໍເກົ່າໄດ້ອາໄສການປູກຝິ່ນເປັນອາຊີບຕົ້ນຕໍ. ພາຍຫລັງທີ່ຝິ່ນເປັນສິ່ງຕ້ອງຫ້າມໂດຍກົດໝາຍແລ້ວ, ຊາວບ້ານກໍບໍ່ມີທາງເລືອກເຫຼືອຢູ່ຫຼາຍ ນອກຈາກດຳລົງຊີວິດແບບພໍກຸ້ມຢູ່ກຸ້ມກິນດ້ວຍການປູກເຂົ້າໄຮ່, ເກັບເຄື່ອງປ່າຂອງດົງ ແລະ ລ້ຽງສັດໃນຈຳນວນຈຳກັດ. ຍ້ອນຕ້ອງຍ່າງຢ່າງທໍລະທົດເພື່ອຈະໄປຮອດຈຸດຄ້າຂາຍ ຫລື ແມ່ນ້ຳທີ່ໃກ້ທີ່ສຸດ, ຈຶ່ງເຮັດໃຫ້ເຄື່ອງປູກອື່ນໆ ເມື່ອທຽບໃສ່ຝິ່ນໃນເມື່ອກ່ອນ ໜັກ ແລະ ຍາກໃນການຂົນສົ່ງ. ໃນຫຼາຍໆປີຜ່ານມານີ້ ຊາວບ້ານຈຶ່ງຕ້ອງອີງອາໃສການຊ່ວຍເຫລືອ ຈາກອົງການເພື່ອການພັດທະນາ ເພື່ອຄ້ຳປະກັນທາງດ້ານສະບຽງອາຫານ

ເມື່ອບໍລິສັດ ພັດທະນາຢາງ ພາລາ ຂອງຈີນບໍລິສັດຫນຶ່ງມາຮອດເມືອງ ໃນປີ 2006, ການສະເໜີສັນຍາປູກດ້ວຍຮູບແບບ "2+3", ຊຶ່ງໃນນັ້ນ ຕົ້ນໄມ້ 55% ຕົກເປັນຂອງຊາວບ້ານພາຍຫລັງ 5 ປີ ໄດ້ຖືກຕ້ອນຮັບ ແບບຈາງໆ ແລະ ບໍ່ແນ່ໃຈ. ເພື່ອກະຕຸ້ນຄວາມສົນໃຈ ບໍລິສັດໄດ້ສັນຍາຈະຈ່າຍ 30 ຢວນຕໍ່ມູ ຕໍ່ປີເປັນການອຸດໜູນ; ເຖິງປານນັ້ນ ຊາວບ້ານກໍຍັງລັງເລໃຈຢູ່. ບ້ານ ເມີຕໍເກົ່າ ກໍຄືບັນດາໝູ່ບ້ານທີ່ຢູ່ເຂດຫ່າງໄກຂອງກຸ່ມບ້ານຊຽງແຂງ ຢາກຍົກຍ້າຍໄປຢູ່ຮ່ອມພູໃນເມືອງສິງ ເພື່ອຈະໄດ້ຢູ່ໃກ້ຕະຫຼາດ. ຊາວບ້ານອະທິບາຍວ່າ ເມື່ອບໍ່ມີຫົນທາງແລ້ວ ປູກຫຍັງກໍບໍ່ມີປະໂຫຍດເລີຍ.

ໃນທີ່ສຸດ ບໍລິສັດສາມາດເຮັດໃຫ້ຊາວບ້ານຈຳນວນໜຶ່ງເຊື່ອ ແລະ ໄດ້ປູກຕົ້ນຢາງ 8,000 ຕົ້ນໃນ ປີ 2006, ແຕ່ໃນຂະບວນການນີ້ ຊ້ຳພັດຍັງມີການຜິດຖຽງຕື່ມອີກ. ຊາວບ້ານໄດ້ຈົ່ມວ່າ ການນຳສົ່ງເບ້ຍ ມາຮອດບໍ່ທັນເວລາ ບໍ່ທັນກັບຕອນທີ່ເຂົາເຈົ້າໄດ້ຂຸດຂຸມປູກ (ຜູ້ຈັດການບໍລິສັດອະທິບາຍວ່າ ການສະໜອງເບ້ຍໄມ້ໃນປີ 2006 ແມ່ນຂາດເຂີນ ຍ້ອນມີຄວາມຕ້ອງການເບ້ຍສູງຫຼາຍຢ່າງບໍ່ໜ້າເຊື່ອ ຢູ່ເຂດສິບສອງພັນນາ). ມີບາງຄົນປະທ້ວງວ່າ ເຂົາບໍ່ໄດ້ຮັບເງິນແຮງງານ ຍ້ອນບໍ່ເຂົ້າໃຈວ່າໃນຮູບແບບ "2+3" ນັ້ນ ເຂົາເຈົ້າຈະບໍ່ໄດ້ຮັບເງິນແຮງງານ. ຄວາມຂັດແຍ່ງໄດ້ເພີ່ມທະວີ ພາຍຫຼັງທີ່ຜູ້ຮັກສາສວນຂອງບໍລິສັດໄດ້ຍິງງົວຊາວບ້ານຈຳນວນໜຶ່ງ ຍ້ອນງົວໄດ້ບຸກຮົ້ວໄມ້ໄຜ່ທີ່ບໍ່ແໜ້ນໜາແລ້ວກັດກິນຕົ້ນຢາງອ່ອນ.

ປີໜຶ່ງຜ່ານໄປ ເກືອບເວົ້າໄດ້ວ່າ ບໍ່ເຫັນຕົ້ນຢາງ 8,000 ຕົ້ນຢູ່ຕາມເຈີ້ຍພູເລີຍ ເພາະມີຫຍ້າ ແລະ ຕົ້ນໄມ້ນ້ອຍປົກຄຸມໄປໝົດ. ຊາວບ້ານປະຕິເສດ ບໍ່ບົວລະບັດ. ບໍລິສັດກໍຍອມ ແລ້ວກັບໄປຫາການຈັດຕັ້ງເມືອງ, ເມືອງເລີຍຕ້ອງຊອກຫາຕອນດິນນ້ອຍຢູ່ຫັ້ນຢູ່ນີ້ເປັນດິນສຳປະທານຢູ່ໃກ້ກັບ ບ້ານເມີຕໍເກົ່າ ແລະ ບ້ານຊາຍ ຊຶ່ງບໍລິສັດໄດ້ປູກເອົາເອງດ້ວຍແຮງງານທ້ອງຖິ່ນ, ຈາກຈີນ ແລະ ມາຈາກຫຼາຍບ່ອນຂອງພາກເໜືອລາວ. ຊາວບ້ານ ເມີຕໍເກົ່າສືບຕໍ່ມີຄວາມເຫັນແບບບໍ່ເປັນເອກະສັນກັນ. ດຽວນີ້ ບາງຄົນກໍເຮັດວຽກໃຫ້ບໍລິສັດເປັນໄລຍະໆໂດຍໄດ້ຮັບຄ່າຈ້າງ 20 ຢວນຕໍ່ວັນ, ມີບາງຄົນທີ່ຢາກມີສວນນ້ອຍໆຂອງຕົນເອງ (ຖ້າມີເງິນ), ແລະ ຍັງມີຈຳນວນໜຶ່ງຊຶ່ງຕັ້ງໝັ້ນ ຢາກໜີອອກໄປ. ບໍລິສັດຈີນໄດ້ພະຍາຍາມຂໍອະນຸມັດສ້າງທາງເສັ້ນໜຶ່ງ, ແຕ່ຫາກວ່າເພິ່ນໄດ້ເຮັດສັນຍາກັບບໍລິສັດ ເຢຍລະມັນ ກ່ອນແລ້ວ, ແລະ ມີລາຍງານວ່າການກໍ່ສ້າງເກືອບແລ້ວໆ. ໄດ້ຍິນຂ່າວແນວນັ້ນ ຊາວບ້ານຍັງບໍ່ຄ່ອຍເຊື່ອງ່າຍໆ: "ເພິ່ນບອກເຮົາຫຼາຍເທື່ອແລ້ວວ່າຈັກໜ້ອຍຈະມີຫົນທາງ; ພວກເຮົາບໍ່ເຊື່ອດອກ ຈົນກວ່າຈະເຫັນຕົວຈິງ."

---

ສະຫຼຸບແລ້ວ, ເຖິງວ່າການສົ່ງເສີມຕົວແບບ "2+3" ໃນໄລຍະຕົ້ນ ເບິ່ງຄືວ່າຈະມີຜົນດີ, ແຕ່ໃນພາກປະຕິບັດນັ້ນຍັງມີຫຼາຍຢ່າງທີ່ບົກຜ່ອງ. ຍ້ອນເຫດຜົນຫຼາຍປະການ, ສັນຍາປູກຝັງກັບນັກລົງທຶນລາຍໃຫຍ່ນັ້ນ ມີຫຼາຍກໍລະນີທີ່ໃນຕົວຈິງໄດ້ສະຫຼາຍຕົວ ແລະ ກາຍເປັນຮູບແບບສຳປະທານໄປແລ້ວ. ຄວາມແຕກຕ່າງທີ່ບໍ່ຄ່ອຍຫຼາຍ ລະຫວ່າງຕົວແບບ "1+4" ແລະ ປະເພດສຳປະທານມີຢູ່ວ່າ ໃນຮູບແບບ "1+4" ນັ້ນ ຊາວບ້ານຍັງຄົງສາມາດເປັນເຈົ້າຂອງຕົ້ນຢາງ ຫຼືດິນ ເຖິງວ່າຈະເປັນເຈົ້າຂອງພຽງແຕ່ສ່ວນໜ້ອຍໜຶ່ງກໍຕາມ; ນອກນັ້ນແລ້ວ ພວກເຂົາກໍຍັງໄດ້ຄ່າແຮງງານນຳ. ເຖິງຢ່າງໃດກໍຕາມ, ເຮົາກໍຍັງສາມາດເຫັນຜົນສຳເລັດໃນຮູບແບບ "2+3" ນີ້ ຢູ່ໃນໜຶ່ງບໍລິສັດຂອງລາວ ແລະ ບໍລິສັດຮ່ວມລົງທຶນຢູ່ ເມືອງສິງ ແລະ ລອງ. ໂດຍຮັບຮູ້ຄວາມສ່ຽງໃນການຈະຕີລວດກວດພຽງ, ປະກົດວ່າໂດຍທົ່ວໄປ ມີ 3 ປັດໄຈຕົ້ນຕໍ ທີ່ກ່ຽວຂ້ອງກັບການປະຕິບັດຕົວແບບ "2+3" ແລະ ສັນຍາປູກຝັງໃຫ້ໄດ້ຜົນຄື:

- ສິ່ງສຳຄັນແມ່ນຄວາມເຊື່ອໝັ້ນລະຫວ່າງຊາວບ້ານ ແລະ ນັກລົງທຶນ ຊຶ່ງແມ່ນກໍລະນີ ບ້ານແດນກາງ, ໜຶ່ງໃນຈຳນວນບ້ານ ຂອງບໍລິສັດ ຕົງລີ-ຈີງກູ (ກໍລະນີ 5.2). ລະດັບຄວາມເຊື່ອໝັ້ນນີ້ ບາງທີອາດມີສ່ວນອະທິບາຍວ່າເປັນຫຍັງບໍລິສັດລາວຈຶ່ງມີປະຫວັດຜົນງານດີກວ່າຜູ້ລົງທຶນຕົວແບບ "2+3" ທີ່ເປັນຕ່າງປະເທດ. ບໍລິສັດລາວຮູ້ຈັກຊຸມຊົນດີກວ່າ.
- ຄວາມພ້ອມຂອງຊາວບ້ານທີ່ຢາກຈະເຊື່ອມເອົາການປູກຢາງເຂົ້າໃນລະບົບດຳລົງຊີວິດຂອງເຂົາເຈົ້າ, ເລື່ອງຄວາມພ້ອມໃນດ້ານການມີແຮງງານຢ່າງພຽງພໍ ທີ່ຈະສະໜອງໃຫ້ການປູກ ແລະ ບັນຫາວ່າຊາວບ້ານມີແຫລ່ງລາຍຮັບອື່ນໆທົດແທນໃນໄລຍະລໍຖ້າ ກ່ອນຈະໄດ້ປາດຢາງ ຫຼືບໍ່.
- ຄວາມຍືດຢຸ່ນ ບໍ່ແຂງກະດ້າງຕາຍຕົວຂອງນັກລົງທຶນໃນເງື່ອນໄຂສັນຍາ ເພື່ອດັດປັບໃຫ້ຕອບສະໜອງຄວາມຕ້ອງການຂອງຄອບຄົວຕ່າງໆ. ໃນເລື່ອງນີ້ທັງ ຕົງລີ-ຈີງກູ ແລະ ໄຊພະຈັນ ແມ່ນບໍ່ມີວິທີການແຂງກະດ້າງເກີນໄປ. ຊາວບ້ານມີສ່ວນປະກອບເຂົ້າຫຼາຍເທົ່າໃດ ບໍ່ວ່າຈະແມ່ນດ້ານແຮງງານ ຫລື

ສິ່ງໃດກໍຕາມ, ກໍໝາຍເຖິງວ່າເຂົາເຈົ້າຈະມີສິດໄດ້ຮັບສ່ວນແບ່ງດີກວ່າໃນເວລາຕໍ່ມາ. ຢູ່ບ້ານອາຄ່າ ຈ່າແກ້ວເໜືອທີ່ເຮັດສັນຍາປູກຝັງ ກັບບໍລິສັດສໍາພະໃຈ, ຊາວບ້ານສາມາດເລືອກລະຫວ່າງເອົາຄ່າແຮງງານ ຫຼື ບໍ່ເອົາ. ຖ້າເອົາ ເຂົາເຈົ້າຈະໄດ້ຮັບສ່ວນແບ່ງໃນອະນາຄົດພຽງແຕ່ 40%, ແຕ່ຖ້າບໍ່ ເອົາຈະໄດ້ຮັບ 75%.

ຜົນສໍາເລັດຂອງຕົວແບບ "2+3" ຢູ່ບາງບ້ານເຮັດໃຫ້ເຂົ້າໃຈວ່າ, ບໍ່ຄວນປະຕິເສດວ່າ ຈະບໍ່ນໍາໃຊ້ຕົວແບບນີ້ເລີຍ. ແຕ່ການນໍາໃຊ້ຕົວແບບນີ້ຈະຕ້ອງທໍາການສຶກສາສະພາບໃຫ້ດີກວ່າເກົ່າ. ໃນບ້ານທີ່ສະພາບບໍ່ເໝາະສົມທີ່ຈະໃຊ້ຕົວແບບນີ້ ກໍບໍ່ຄວນຈະຝືນໃຊ້ມັນ (ເພາະວ່າໃນຄວາມເປັນຈິງກໍຊີ້ໃຫ້ເຫັນຢູ່ແລ້ວວ່າ ມັນເປັນໄປບໍ່ໄດ້).

ນອກນັ້ນແລ້ວ ການກະທໍາທີ່ປະກົດວ່າແຕກຕ່າງກັນລະຫວ່າງບໍລິສັດລາວ ແລະ ຈີນກໍບໍ່ຄວນເນັ້ນ ຫຼາຍໂພດ. ຢູ່ເມືອງສິງກໍຄືເມືອງລອງ ບໍລິສັດລາວມັກຈະດໍາເນີນງານຢູ່ເຂດໃກ້ຄຽງກັບເສັ້ນທາງ ຫລື ຕົວເມືອງ ຊຶ່ງສະພາບດັ່ງກ່າວມັກຈະໄປຄວບຄູ່ກັບສະພາບຄວາມທຸກຍາກໜ້ອຍກວ່າ, ຊາວບ້ານພ້ອມທີ່ຈະປູກຢາງຫຼາຍກວ່າ[16]. ອີກຢ່າງໜຶ່ງ ການປະຕິບັດຂອງບໍລິສັດດຽວກັນກໍມີອັນແຕກຕ່າງກັນ ຊຶ່ງມັນຂຶ້ນກັບສະພາບຈຸດພິເສດສະເພາະຂອງແຕ່ລະບ້ານ. ມີບາງບ້ານທີ່ມີຄວາມຂັດແຍ່ງຜິດຖຽງກັນຫຼາຍ, ແຕ່ບ້ານອື່ນໆຊໍ້າພັດສາມາດຈັດການກັບຕົວແບບ "1+4" ໄດ້ດີ ປາສະຈາກການຜິດຖຽງກັນ ບໍ່ວ່າຈະເປັນນັກລົງທຶນລາວ ຫລື ຈີນກໍຕາມ. ການຕີລາຄານັກລົງທຶນຂອງຊາວບ້ານລາວກໍມີຫຼາຍແບບ. ພ້ອມໆກັນກັບການບໍ່ເຊື່ອໃຈ ຊຶ່ງເປັນເລື່ອງປົກກະຕິ, ມັນກໍມີຄວາມນິຍົມຊົມຊອບ ແລະ ຄວາມຢາກໄດ້ພະລັງອໍານາດທາງເສດຖະກິດ ແລະ ຄວາມຊ່ຽວຊານດ້ານວິຊາການຂອງຈີນ. ບາງຄົນໄດ້ເວົ້າວ່າ: "ພວກເຮົາຢາກມີຢາງ, ແຕ່ພວກເຮົາບໍ່ຮູ້ຈະເຮັດແນວໃດ. ພວກເຮົາຕ້ອງການຄົນຈີນມາພັດທະນາບ້ານພວກເຮົາ."

### 5.2.3 ອັນຕະລາຍ ຍ້ອນວິທີການ ແບບເທິງລົງລຸ່ມ

ໃນຕອນຕົ້ນຂອງພາກນີ້, ຂ້າພະເຈົ້າໄດ້ອະທິບາຍໂດຍຫຍໍ້ກ່ຽວກັບຂັ້ນຕອນການເຮັດສັນຍາຂອງນັກລົງທຶນຂະໜາດໃຫຍ່ (ທາງການ). ລັກສະນະແຕ່ເທິງລົງລຸ່ມຂອງຂັ້ນຕອນນີ້ ກໍ່ໃຫ້ເກີດບາງບັນຫາຄື:

ບໍລິສັດເຊັນສັນຍາກັບແຂວງ ຫລື ລະດັບສູງໄປກວ່ານັ້ນ, ໃນເມື່ອໄດ້ສັນຍາທີ່ກໍານົດ ເນື້ອທີ່ກວ້າງໃຫຍ່ແລ້ວ, ເອກະສານນັ້ນເລີຍກາຍເປັນເຄື່ອງມືເຈລະຈາ ແລະ ນາບຂູ່ ຊາວບ້ານ, ແທນທີ່ຈະເປັນເອກະສານທີ່ເປັນມາດຕະຖານເພື່ອປະຕິບັດ. ສັນຍາຂໍ້ຕົກລົງລະດັບແຂວງ ສ່ວນໃຫຍ່ຂາດຂໍ້ມູນລະອຽດກ່ຽວກັບຕອນດິນ, ມັນພຽງແຕ່ກໍານົດຕົວເລກເປັນເຮັກຕາຢູ່ກຸ່ມບ້ານ ແລະ ເນື້ອທີ່ໃນສັນຍາສ່ວນຫຼາຍແມ່ນໃຫຍ່ກວ່າຄວາມເປັນຈິງ[17]. ເມື່ອຖາມເຈົ້າໜ້າທີ່ແຂວງວ່າຂໍ້ສັນຍາກັບແຂວງ ອະນຸຍາດໃຫ້ບໍລິສັດເຮັດຫຍັງກັນແທ້, ຄໍາຕອບທີ່ໄດ້ມາ ແມ່ນ ພຽງແຕ່ອະນຸຍາດໃຫ້ບໍລິສັດ "ສຶກສາເບິ່ງ" ຂອບເຂດ ແລະ ເນື້ອທີ່ ທີ່ເໝາະສົມ ສໍາລັບການປູກເທົ່ານັ້ນ. ສັນຍາລະດັບແຂວງນັ້ນ ມັນບໍ່ມີການຮັບປະກັນທາງດ້ານເນື້ອທີ່ປູກ ເວັ້ນເສຍແຕ່ວ່າຊາວບ້ານຈະຮ່ວມມືນໍາ. ໃນເວລາສຶກສາທົບທວນເບິ່ງເອກະສານສັນຍາ ເກືອບທັງໝົດນັ້ນ, ຂ້າພະເຈົ້າເຫັນວ່າສ່ວນໃຫຍ່ແລ້ວ ການອ່ານບັນຫາແບບເຈົ້າໜ້າທີ່ແຂວງ, ຄື ເພື່ອ "ສຶກສາເບິ່ງ", ເປັນເລື່ອງທີ່ບໍ່ເຫັນໄດ້ຢ່າງງ່າຍໆ. ໃນດ້ານປະຕິບັດ,

---

[16] ແນ່ນອນອາດມີຄົນໂຕ້ແຍ່ງວ່າ ບໍລິສັດຈີນ ເລືອກປູກຢູ່ເຂດທີ່ຫ່າງໄກກ່ວາ ເພາະວ່າມັນມີດິນກ້ວາງກ່ວາ.

[17] ຕົວຢ່າງໜຶ່ງ ໃນການສໍາປະທານ ຂອງທະຫານ ທີ່ຍາວຢຽດແຕ່ເມືອງສິງຫາລອງມີເນື້ອທີ່ 300,000 ຮຕ. ປະມານເທົ່າກັບເນື້ອທີ່ທັງໝົດຂອງສອງເມືອງໄປທາງທິດເໜືອຂອງນໍ້າມ້າເປັນບ່ອນທີ່ຫຼາຍບໍລິສັດ, ຜູ້ລົງທຶນຂະໜາດນ້ອຍ ແລະ ເຈົ້າຂອງດິນຂະໜາດນ້ອຍປູກຢູ່ແລ້ວ.

ບໍລິສັດມັກຈະເຮັດສັນຍາກັບແຂວງ ຫລື ສູງກວ່ານັ້ນ ເພື່ອເປັນສິ່ງກົດດັນຂັ້ນລຸ່ມລົງໄປ[18]. ດັ່ງໃນກໍລະນີສຶກສາທີ່ເຮົາເຫັນນຳກັນໃນບົດນີ້ ທີ່ທາງຝ່າຍນັກລົງທຶນໄດ້ພູມໃຊ້ຮູບແບບສຳປະທານ ແລະ ສັນຍາປູກຝັງ ເປັນສິ່ງບັງຄັບຊາວບ້ານໃນຫຼາຍໆລະດັບ. ຮູບແບບສັນຍາແຕ່ເທິງລົງລຸ່ມນັ້ນມີສ່ວນປະກອບໂດຍທາງອ້ອມໃຫ້ແກ່ຄວາມລົ້ມເຫຼວໃນຫຼາຍໆກໍລະນີ ຍ້ອນວ່າການຮ່ວມມືຂອງຊາວບ້ານໃນວຽກສັນຍາປູກຝັງນັ້ນ ຕົວຈິງມັນແມ່ນການຖືກບັງຄັບ ຫລື ບໍ່ກໍເປັນການຮ່ວມມືພຽງໃນນາມເທົ່ານັ້ນ.

ວິທີເຮັດວຽກແບບເທິງລົງລຸ່ມນີ້ ຍັງອະນຸຍາດໃຫ້ມີສະພາບການກຳນົດດິນທີ່ບໍ່ຈະແຈ້ງ ແລະເລື່ອມຊ້ຳຊ້ອນກັນ. ສຳລັບທາງການແຂວງ ການກຳນົດກຸ່ມບ້ານໃດຫນຶ່ງໃຫ້ຫຼາຍກວ່າຫນຶ່ງບໍລິສັດນັ້ນ ບໍ່ຄວນເປັນບັນຫາ, ເພາະວ່າບໍລິສັດຕ່າງໆນັ້ນພຽງແຕ່ໄປ "ສຶກສາເບິ່ງເງື່ອນໄຂ". ມັນແມ່ນທາງເມືອງ ແລະ ຊາວບ້ານພຸ້ນທີ່ຈະເປັນຜູ້ກຳນົດຜູ້ສຸດທ້າຍວ່າ ຈະອະນຸຍາດໃຫ້ນັກລົງທຶນໃດ ໄປເຮັດຢູ່ໃສ. ແຕ່ໃນຕົວຈິງແລ້ວ ແບບວິທີນີ້ ຊ້ຳພັດກາຍເປັນດາບສອງຄົມ. ໃນຂະນະທີ່ຊາວບ້ານປະກົດວ່າມີທາງເລືອກນັ້ນ, ເຂົາເຈົ້າຊ້ຳພັດປະເຊີນໜ້າກັບການສູ້ຍັນຢ່າງດຸເດືອດລະຫວ່າງບໍລິສັດນຳກັນ ແລະ ໃນເວລານັ້ນເອງ ທີ່ຜູ້ໃກ້ຊິດກັບລັດຖະບານມັກຈະປະກົດຕົວ ແລ້ວເຮັດໃຫ້ຊາວບ້ານຕົກຢູ່ໃນຄວາມສ່ຽງ. ນີ້ຄືສະພາບທີ່ບ້ານແຫ່ງຫນຶ່ງໃນກຸ່ມເມິງສາທີ່ເມືອງລອງ (ເບິ່ງກໍລະນີ 5.5)

ການແບ່ງຄວາມຮັບຜິດຊອບ ແລະ ອຳນາດທີ່ບໍ່ຈະແຈ້ງລະຫວ່າງຂະແໜງການຕ່າງໆຂອງລັດ ຖະບານອາດເຮັດໃຫ້ສະພາບຮ້າຍແຮງກວ່າເກົ່າໄດ້ຄືກັນ. ທາງການທະຫານ ຫຼວງນ້ຳທາ ທີ່ໄດ້ອອກສຳປະທານ ໄດ້ສ້າງຄວາມຂັດແຍ່ງຕໍ່ຂໍ້ຕົກລົງສັນຍາຕ່າງໆ ທີ່ໄດ້ອະນຸມັດໄປແລ້ວໂດຍພະແນກແຜນການ ແລະ ການລົງທຶນແຂວງ.

ເບິ່ງໃນແງ່ຫນຶ່ງອີກ, ການຊ້ຳຊ້ອນໃນການມອບໝາຍການນຳໃຊ້ດິນນີ້ ເຮັດໃຫ້ນັກລົງທຶນມີຈິດໃຈບໍ່ຫຸ່ນຫ່ຽງກ່ຽວກັບເລື່ອງສັນຍາ. ນັກລົງທຶນຈີນທີ່ໄດ້ສຳພາດຕ່າງຈົ່ມ ກ່ຽວກັບຄຸນປະໂຫຍດແບບຈຳກັດຂອງສັນຍາໃນນາມ. ບໍລິສັດເວົ້າວ່າ ຈີນກວ່າຈະໄດ້ຂຸດຂຸມ ແລ້ວປູກຕົ້ນໄມ້ລົງດິນ, ພວກເພິ່ນຈຶ່ງເວົ້າໄດ້ວ່າ ສະພາບມັນໃກ້ຄວາມຈິງແດ່ແລ້ວ ວ່າເພິ່ນຈະເປັນເຈົ້າຂອງດິນ. ການເບິ່ງບັນຫາແບບນີ້ ເຮັດໃຫ້ນັກລົງທຶນ, ໂດຍສະເພາະຢ່າງຍິ່ງ ຜູ້ທີ່ຕໍ່ສູ້ ຍ້ອນຄວາມຊ້ຳຊ້ອນໃນສັນຍາ, ຊ່ວງຊີງກັນຢ່າງເຜັດຮ້ອນ, ໄດ້ພ້ອມພາກັນຖາກຖາງດິນແບບໄວທີ່ສຸດເທົ່າທີ່ຈະເຮັດໄດ້ ແລະ ມີບາງຄັ້ງ ທີ່ບໍ່ສົນເລື່ອງຄຸນນະພາບເຕັກນິກເລີຍ. ຜູ້ຈັດການອາວຸໂສຄົນຫນຶ່ງທີ່ເຮັດວຽກຢູ່ເມືອງລອງ ໄດ້ເລົ່າກ່ຽວກັບຍຸດທະສາດຂອງລາວເອງວ່າ: "ຂຸມນ້ອຍລົງ, ຂັ້ນໄດປູກແຄບເຂົ້າ[19]. ເລື່ອງຄຸນນະພາບທີ່ເຮົາບໍ່ໄດ້ເອົາໃຈໃສ່ໃນດຽວນີ້, ພວກເຮົາສາມາດທົດແທນໄດ້ດ້ວຍຝຸ່ນ. ຈັ່ງໃດກໍຕາມດິນຢູ່ພື້ນັ້ນດີຢູ່ແລ້ວ. ຂະຫຍາຍໃຫ້ໄດ້ໄວແມ່ນບັນຫາຂໍກຸນແຈ"

ເຖິງຢ່າງໃດກໍຕາມ, ຄວນເຫັນນຳກັນວ່າສັນຍາທີ່ບໍ່ເປັນທີ່ອຸ່ນໃຈນີ້ ບໍ່ແມ່ນເຫດຜົນອັນດຽວທີ່ເຮັດໃຫ້ມີການດຸດບຸກເບີກດິນຊະຊາຍ. ການເຮັດຄືແນວນີ້ອາດເປັນປັດໃຈເຫດຜົນຫນຶ່ງເພື່ອໃຫ້ໄດ້ການອຸດໜູນຈາກແຜນງານທົດແທນການປູກຝິ່ນຂອງລັດຖະບານຈີນກໍເປັນໄດ້ (ພາກທີ 4)[20].

---

18 ເພື່ອເຮັດໃຫ້ຖານະເຈລະຈາຕົນເຂັ້ມແຂງ, ບໍລິສັດຈີນມັກຈະປັບປຸງສັນຍາແຂວງໃຫ້ເປັນສັນຍາລະດັບຊາດດ້ວຍລັດຖະບານກາງ.

19 ອີງຕາມຊ່ຽວຊານປູກຢາງ, ຂຸມນ້ອຍ ແລະ ຂັ້ນໄດແຄບສາມາດສົ່ງຜົນກະທົບ ຕໍ່ການເຕີບໃຫຍ່ຂອງຕົ້ນໄມ້ພາຍຫລັງປີທີສອງ

20 ຄວາມຈິງແລ້ວເງິນອຸດໜູນອາດເປັນສິ່ງທີ່ຊຸກຍູ້ໃຫ້ບໍລິສັດຢາກໄດ້ເນື້ອທີ່ກ້ວາງໂພດນັບແຕ່ຕອນຕົ້ນ. ດ້ານທິດສະດີເງິນອຸດໜູນຈະໄດ້ແມ່ນອີງໃສ່ເນື້ອທີ່ໆໄດ້ບຸກເບີກ, ບໍ່ແມ່ນອີງຕາມເນື້ອທີ່ໃນສັນຍາ, ແຕ່ການປະຕິບັດມີຈຸດອ່ອນຫຼາຍ.

ນອກນັ້ນແລ້ວ, ຂັ້ນຕອນແຈກຈ່າຍເງິນອຸດໜູນອາດນຳໄປສູ່ການໃຊ້ຮູບແບບເຮັດສັນຍາແບບເທິງລົງລຸ່ມ ເພື່ອມີສິດອ້າງເປັນທຸລະກິດເພື່ອທົດແທນການປູກຝິ່ນນັ້ນ, ບໍລິສັດຈີນ ຈະຕ້ອງສະແດງວ່າຕົນມີສັນຍາກັບທາງການຂອງລັດຖະບານລາວ ແລ້ວຍື່ນໄປຫາລັດຖະບານແຂວງ ຢຸນນານ (ດັ່ງນັ້ນມີສັນຍາກັບແຂວງຢ່າງໄວໆ ຈຶ່ງເປັນບູລິມະສິດສູງສຳລັບ ບໍລິສັດຈີນ). ຄວາມພະຍາຍາມປ່ຽນແທນການປູກຝິ່ນ ຊຶ່ງເປັນສິ່ງໄດ້ຮັບຄວາມສົນໃຈສູງໃນວົງການການເມືອງ ກໍໝາຍເຖິງວ່າສັນຍາຂະໜາດໃຫຍ່ຈະຕ້ອງເຊັນກັນໃນລະດັບຊາດ ຊຶ່ງກໍພົວພັນໂດຍກົງກັບຜູ້ນຳປະເທດ. ດັ່ງນັ້ນການປະຕິບັດແບບເທິງລົງລຸ່ມ ທີ່ຕິດຕາມມາ ເວົ້າໄດ້ວ່າ ເປັນສິ່ງຫລີກລ້ຽງບໍ່ໄດ້.

---

### ກໍລະນີ 5.5 ກຸ່ມບ້ານສະ, "ກຸ່ມ" ທີ່ມີການຂັດແຍ່ງ

ບ້ານສະ ແມ່ນກຸ່ມບ້ານຫນຶ່ງຢູ່ບໍ່ໄກນ້ຳຂອງໃນ ເມືອງລອງ ບ້ານທີ່ຂຶ້ນກັບກຸ່ມບ້ານນີ້ ກໍມີບ້ານແສນຂັນຄຳໃໝ່ ຊຶ່ງແມ່ນບ້ານຊາວອາຄ່າເຂດພູດອຍລຽບຕາມເສັ້ນທາງເລກ 17 ໄປທາງເຫນືອ. ໃນປີ 2007 ມີບໍລິສັດຈີນບໍລິສັດຫນຶ່ງໄດ້ເຂົ້າມາເພື່ອສົ່ງເສີມການປູກຢາງ. ບໍລິສັດນີ້ມີຄວາມສົນໃຈຢາກໄດ້ດິນຫຼາຍ, ແຕ່ຊາວບ້ານຊ້ຳພັດໄດ້ປູກມັນຕົ້ນໃສ່ແລ້ວ ພາຍໃຕ້ສັນຍາກັບບໍລິສັດ *ພາວເວີບາຍໂອໂລຊີໂຄລ* Power Biological, ຊຶ່ງແມ່ນຫນຶ່ງໃນຈຳນວນນັກລົງທຶນຈີນລາຍໃຫຍ່ຢູ່ພາກເໜືອຂອງລາວ. ບໍລິສັດຢາງໄດ້ຂໍໃຫ້ຊາວບ້ານຫລົກຕົ້ນມັນຕົ້ນອອກແລ້ວປູກຕົ້ນຢາງແທນ ແລະ ໄດ້ບອກວ່າດິນນັ້ນເປັນຂອງບໍລິສັດແລ້ວ. ຊາວບ້ານໄດ້ປະຕິເສດ. ຫລັງຈາກເລື່ອງບໍ່ໄປບໍ່ມາໄລຍະຫນຶ່ງ, ບໍລິສັດໄດ້ຈ້າງແຮງງານມາຈາກບ້ານອື່ນໆ ແລ້ວໃຊ້ກຳລັງຖາງທິ່ງມັນຕົ້ນຖິ້ມ, ອັນໄດ້ເຮັດໃຫ້ທົ່ວທັງບ້ານ ເກີດຄວາມຄຽດ ແຄ້ນ.

ຍ້ອນມີຈຸດເລີ່ມຕົ້ນບໍ່ເປັນມຸງຄຸນເຊັ່ນນີ້, ຈຶ່ງໄດ້ເຮັດໃຫ້ສາຍພົວພັນລະຫວ່າງນັກລົງທຶນປູກຢາງ ແລະ ຊາວບ້ານຊຸດໂຊມລົງຢ່າງໄວວາ. ໂດຍມີສັນຍາກັບແຂວງ ແລະ ມີສາຍພົວພັນໃກ້ຊິດກັບລັດຖະບານ, ບໍລິສັດໄດ້ເອົາຕຳຫຼວດເຂົ້າມາ, ຂູ່ວ່າຈະຈັບຊາວບ້ານຖ້າບໍ່ຮ່ວມມື. ພ້ອມນັ້ນຍັງເວົ້າເປັນໃນໆວ່າ ຖ້າບ້ານບໍ່ຮັບເອົາເງື່ອນໄຂໃນສັນຍາ, ພວກເຂົາເຈົ້າຈະເສຍສິດທັງໝົດທີ່ມີຕໍ່ດິນ ແລ້ວເຮັດເປັນດິນສຳປະທານ ອັນຈະເຮັດໃຫ້ຊາວບ້ານບໍ່ໄດ້ສ່ວນແບ່ງປັນຈາກກຳໄລເລີຍ.

ເມື່ອຖືກຂູ່ເຂັນ, ຊາວບ້ານຈຳນວນຫນຶ່ງໄດ້ເລີ່ມເຮັດວຽກໃຫ້ບໍລິສັດ, ແຕ່ໃນສຸດ ບໍລິສັດຊ້ຳພັດບໍ່ມີເງິນຈ່າຍຄ່າແຮງງານໃຫ້ເຂົາເຈົ້າ. ເວລາສຳພາດຜູ້ຈັດການຄົນຫນຶ່ງ, ລາວໄດ້ອະທິບາຍວ່າ ໄດ້ຕົກລົງກັນວ່າ ຈະຈ່າຍເງິນແຮງງານເປັນກ້ອນບາດດຽວໃນທ້າຍປີພຸ້ນ, ດັ່ງທີ່ໄດ້ເວົ້າວ່າ ມັນເປັນຄວາມບໍ່ເຂົ້າໃຈກັນຢ່າງໃຫຍ່. ຊາວບ້ານໄດ້ໄປຫາອຳນາດປົກຄອງ ເມືອງລອງ ຫຼາຍຄັ້ງ ເພື່ອປະທ້ວງຂໍຄວາມເປັນທຳ ແຕ່ຊ້ຳພັດຖືກບອກວ່າຕ້ອງຈ່າຍເງິນເພື່ອແກ້ໄຂບັນຫາຂອງເຂົາເຈົ້າ.

ຕໍ່ມາ ໄດ້ສຳພາດຫ້ອງການແຜນການເມືອງ, ພະນັກງານຄົນຫນຶ່ງໄດ້ອະທິບາຍວ່າ ບໍ່ມີຕຳຫຼວດເຂົ້າໄປໃນບ້ານດອກ. ເລື່ອງຂອງເລື່ອງກໍມີຢູ່ວ່າ ມີຕຳຫຼວດຄົນຫນຶ່ງທີ່ບັງເອີນເຮັດວຽກເສີມໃຫ້ບໍລິສັດປູກຢາງ, ການກະທຳຂອງເຂົານັ້ນ ບໍ່ກ່ຽວຂ້ອງກັບລັດຖະບານລາວ. ພະນັກງານຄົນນັ້ນບອກວ່າ ດຽວນີ້ບັນຫາໄດ້ຖືກແກ້ແລ້ວ, ບັດນີ້ມັນກໍຂຶ້ນກັບຊາວບ້ານເອງທີ່ຈະເລືອກປູກມັນຕົ້ນ ຫລື ປູກຢາງ ແລະ ບັນຫາເລື່ອງເງິນແຮງງານກໍກຳລັງຖືກແກ້ໄຂເຊັ່ນດຽວກັນ.

ຊາວບ້ານຢູ່ ບ້ານຈ່າແກ້ວເໜືອ ຊຶ່ງເປັນບ້ານອາຄ່າຕັ້ງຢູ່ໃຕ້ ບ້ານແສນຂັນຄຳໃໝ່ ກໍພາກັນຢ້ານວ່າ ຈະຕົກຢູ່ໃນຊະາຕາກຳດຽວກັນ.ກັບ ບ້ານ ຈ່າແກ້ວເໜືອ ຊຶ່ງໄດ້ມີສັນຍາກັບບໍລິສັດປູກຢາງອັນດຽວນັ້ນ. ຊາວບ້ານບໍ່ພໍໃຈນຳເງື່ອນໄຂສັນຍາ ແລະ ຢາກຕໍ່ລອງໃຫ້ໄດ້ດີກວ່າ. ໃນໄລຍະດຽວກັນກໍມີບໍລິສັດລາວ ບໍລິສັດຫນຶ່ງ ໄດ້ເຂົ້າ

ໄປສົ່ງເສີມການປູກຢາງຢູ່ ຈ່າແກ້ວເໜືອ ແລະ ບໍລິສັດນີ້ຍັງສະເໜີເງື່ອນໄຂທີ່ດີກວ່າ. ດັ່ງນັ້ນ ມີບາງຄອບຄົວໄດ້ເລີ່ມປູກໃຫ້ບໍລິສັດນີ້. ເມື່ອຮູ້ສະພາບ ບໍລິສັດຈີນກໍບໍ່ພໍໃຈ ແລະ ເວົ້າວ່າ: "ພວກເຂົາເອງກໍໄດ້ເຊັນສັນຍາກັບພວກເຮົາແລ້ວ, ດິນນີ້ຄວນເປັນຂອງພວກເຮົາ."

## 5.3 ການປູກຝັງພາຍໃຕ້ສັນຍາຜູກພັນ ກັບນັກລົງທຶນຂະໜາດນ້ອຍ (ບໍ່ເປັນທາງການ)

ໃນພາກນີ້ຂ້າພະເຈົ້າໄດ້ປຶກສາກັບນັກລົງທຶນກ່ຽວກັບສະພາບຕ່າງໆໃນການປູກຝັງແບບມີສັນຍາຜູກພັນ. ມີນັກລົງທຶນບໍ່ຫຼາຍຄົນປານໃດທີ່ເລືອກເຮັດສັນຍາທາງການກັບອຳນາດປົກຄອງເມືອງ, ສ່ວນຫຼາຍແມ່ນເຮັດສັນຍາໂດຍກົງກັບຊາວບ້ານ ຫລື ບໍ່ກໍເຮັດຂໍ້ຕົກລົງບໍ່ເປັນທາງການແບບປາກເປົ່າ. ຍ້ອນການລົງທຶນໃນຮູບແບບຈະແມ່ນທາງກົງ ຫລື ທາງອ້ອມ ມັນກໍແມ່ນເຮັດລະຫວ່າງຄົນທີ່ຮູ້ ຈັກລື້ງເຄີຍກັນ, ຍ້ອນແນວນັ້ນ ການລົງທຶນປະເພດນີ້ບໍ່ສາມາດແຍກຢ່າງສິ້ນເຊີງອອກຈາກພາກ 5.4, ຊຶ່ງຂ້າພະເຈົ້າໄດ້ຍົກບັນຫາການລົງທຶນໂດຍຊາວບ້ານເອງ ແລະ ການມີພີ່ນ້ອງ ແລະມິດສະຫາຍເປັນຄູ່ຮ່ວມງານ.

ສຳລັບນັກລົງທຶນຂະໜາດນ້ອຍນັ້ນ ກິດຈະກຳພາຍໃນລາວ ແລະ ຂ້າມຊາຍແດນເປັນສິ່ງທຳມະດາ. ເມື່ອບໍ່ມີຂໍ້ມູນຄົບຖ້ວນ, ມັນກໍເປັນການຍາກທີ່ຈະຕີລາຄາວ່າມີຮູບການປູກຝັງໃນຮູບແບບໃດຫຼາຍກວ່າກັນຢູ່ ຫຼວງນ້ຳທາ. ເຖິງຢ່າງໃດກໍຕາມ ປະກົດວ່າການລົງທຶນຂະໜາດນ້ອຍກວມເອົາສ່ວນໃຫຍ່ຂອງຈຳນວນຮູບແບບສັນຍາປູກຝັງຢູ່ເມືອງສິງ ແລະ ຢູ່ເຂດທີ່ມີການໄປມາຫາສູ່ສະດວກກວ່າຂອງ ເມືອງລອງ. ການລົງທຶນ ຂອງຄົນລາວ ໃນນັ້ນຈະເຫັນວ່າແມ່ນຊາວລາວລຸ່ມເປັນຜູ້ລົງທຶນຢູ່ໃນໝູ່ບ້ານພູດອຍ (ກໍລະນີ 5.6), ແຕ່ການລົງທຶນຂອງຈີນມັກມີຫຼາຍຢູ່ເຂດໃກ້ຊາຍແດນ. ຕົວຢ່າງ: ກຸ່ມບ້ານມອມ ຂອງເມືອງສິງ (ກໍລະນີ 5.7) ແມ່ນໄດ້ດຶງດູດເອົາຜູ້ລົງທຶນລາຍບຸກຄົນຈຳນວນຫຼາຍ ມາຈາກ ເມືອງມາງ, ເມືອງນູນ ແລະ ເມືອງພົງ ຂອງເຂດສິບສອງພັນນາ.

ກໍລະນີສັນຍາຜູກພັນປູກຝັງກັບຜູ້ລົງທຶນຂະໜາດນ້ອຍ ກໍຄ້າຍຄືກັນກັບກໍລະນີເຮັດກັບນັກລົງທຶນຂະໜາດໃຫຍ່, ຊຶ່ງສ່ວນໃຫຍ່ຮູບແບບສັນຍາແມ່ນປະເພດ "1+4". ການແບ່ງປັນເປີເຊັນສ່ວນຮ້ອຍປະກົດວ່າເຮັດໃຫ້ຊາວບ້ານໄດ້ປຽບກວ່າເລັກນ້ອຍ ແລະ ສະພາບດັ່ງກ່າວນີ້ແມ່ນນັບມື້ນັບນັບດີຂຶ້ນໃນຊຸມປີຫລັງໆນີ້ ຍ້ອນວ່າດິນຫາຍາກກວ່າເກົ່າ ໂດຍສະເພາະຢ່າງຍິ່ງຢູ່ບ່ອນໃກ້ກັບຕາໜ່າງຂົນສົ່ງ. ໂດຍທົ່ວໄປ ການແບ່ງປັນຢູ່ລະຫວ່າງ 30% ຫາ 50% ສຳລັບຊາວບ້ານ ພາຍຫລັງທີ່ນັກລົງທຶນໄດ້ປູກຝັງໄປແລ້ວສອງສາມປີ.

ເຖິງວ່າເງື່ອນໄຂໃນສັນຍາ ໃນກໍລະນີຂອງນັກລົງທຶນຂະໜາດນ້ອຍນີ້ຈະບໍ່ດີກວ່າກັນປານໃດກໍຕາມ, ດ້ານການດຳເນີນກິດຈະກຳແລ້ວເຫັນວ່າ ບໍ່ຄ່ອຍມີຄວາມຂັດແຍ່ງ. ຍ້ອນວ່າ ການມີສ່ວນກ່ຽວຂ້ອງຈາກລັດຖະບານນັ້ນຈຳກັດ ແລະ ກໍບໍ່ມີການບີບບັງຄັບ. ພາກສ່ວນໃນສັນຍາມີຄວາມເຂົ້າໃຈເຊິ່ງກັນແລະກັນດີກວ່າ ແລະ ລະດັບຄວາມເຊື່ອຖືກັນ ແລະ ກັນກໍສູງກວ່າ. ຂັ້ນຕອນດຳເນີນງານລະດັບທ້ອງຖິ່ນ ແລະ ເຮັດແບບສະໝັກໃຈກໍຍັງຊ່ວຍໃຫ້ ຄວາມຄາດຫວັງຂອງຊາວບ້ານ ແລະ ຂໍ້ສະເໜີຂອງຜູ້ລົງທຶນສອດຄ່ອງກັນດີກວ່າ ບໍ່ວ່າຈະໃນດ້ານທຶນ, ວິຊາການ, ແຮງງານ, ການຕະຫຼາດ ຫລື ທັງໝົດທີ່ໄດ້ກ່າວມາ.

ເມື່ອຄຳນຶງເຖິງຄວາມສ່ຽງສູງທີ່ອາດມີຂໍ້ຂັດແຍ່ງໂຕ້ຖຽງໃນອະນາຄົດ, ຜູ້ລົງທຶນຂະໜາດນ້ອຍຫຼາຍຄົນໄດ້ເລືອກບໍ່ລົງທຶນແບບເປັນທາງການ ເພື່ອຫລີກລ້ຽງພາສີ, ຄ່າທຳນຽມ ແລະ ບາງທີກໍເພື່ອ ຫລີກລ້ຽງການຕ້ອງໃຫ້ສິນບົນໃນການຈັດຕັ້ງລັດຖະບານ ຊຶ່ງເປັນບັນຫາສຳຄັນ (ກໍລະນີ 5.7)

## ກໍລະນີ 5.6 ຫ້ວຍລອງໃໝ່

ຫ້ວຍລອງໃໝ່ ແມ່ນບ້ານຊາວອາຄ່າຕັ້ງຢູ່ສັ້ນທາງເໜືອຂອງຮ່ອມພູ ເມືອງສິງ ເປັນບ່ອນທີ່ເລີ່ມ ປູກຢາງໃນປີ 2004. ໃນຈໍານວນ 36 ຄົວເຮືອນຂອງບ້ານ, ມີສອງຄົວເຮືອນໄດ້ປູກຢາງດ້ວຍການລົງທຶນຂອງຕົນເອງ. ສ່ວນຄົວເຮືອນທີ່ເຫລືອແມ່ນເຮັດສັນຍາປູກກັບນັກລົງທຶນ ທີ່ມາຈາກທົ່ງພຽງ ບໍລິເວນ ເມືອງສິງ. ໂດຍສະເລ່ຍເນື້ອທີ່ປູກສໍາລັບແຕ່ລະຄອບຄົວມີ 7-10 ຮຕ. ພາຍຫລັງທີ່ໄດ້ດູແລສວນປູກລະຫວ່າງ 3-5 ປີ ແລ້ວ, ນັກລົງທຶນມີສິດໄດ້ 50%-70% ຂອງຈໍານວນຕົ້ນໄມ້/ດິນ. ຊາວບ້ານຢູ່ທ້ອງຖິ່ນເອງເປັນແຮງງານ ແລະ ໄດ້ຮັບຄ່າແຮງງານເປັນອັດຕາສ່ວນ (ຕົວຢ່າງ: 2,000 ກີບຕໍ່ຂຸມທີ່ຂຸດ). ນອກນັ້ນ ຜູ້ລົງທຶນຍັງເອົາກໍາມະກອນຕົນເອງມາພ້ອມ. ຜູ້ລົງທຶນບໍ່ໄດ້ອົບຮົມຊາວບ້ານດ້ານເຕັກນິກການປູກຢາງ, ແຕ່ຊາວບ້ານຮຽນເອງໂດຍການສັງເກດເບິ່ງ. ພາຍຫລັງແບ່ງປັນແລ້ວ ແຕ່ລະຝ່າຍກໍຈະຮັບຜິດຊອບໃນການບໍາລຸງດູແລສວນໃຜສວນລາວ ເກືອບວ່າບໍ່ມີຄອບຄົວໃດໄດ້ເຊັນສັນຍາ ແລະ ຊາວບ້ານກໍບໍ່ເປັນຫ່ວງຫຍັງ, ບອກວ່າ: "ບໍ່ແມ່ນວ່າດິນຈະແລ່ນໜີໄດ້. ບາດແລ້ວໆ ພວກເຮົາກໍຈະໄດ້ຄືນໝົດ."

ແຫລ່ງລາຍຮັບຕົ້ນຕໍຂອງຊາວບ້ານແມ່ນອ້ອຍ ຊຶ່ງພວກເພິ່ນ ປູກມາໄດ້ເຈັດປີແລ້ວ ເພື່ອປ້ອນບໍລິສັດນໍ້າຕານຂອງລັດທີ່ ເມືອງພົງ ຂອງ ຈີນ ໃນອະດີດ, ແຕ່ຊາວບ້ານຫວັງວ່າ ເງິນໄດ້ມາຈາກຢາງພາລາຈະປ່ຽນແທນໃຫ້ແຫລ່ງລາຍຮັບຈາກອ້ອຍໃນທີ່ສຸດ ເພາະວ່າ ການປູກອ້ອຍນັ້ນຕ້ອງອອກແຮງງານຫຼາຍ. ນອກນັ້ນ ຊາວບ້ານຍັງເຮັດນາ ແລະ ໄຮ່ເຂົ້າ, ພ້ອມປູກເຂົ້າສາລີ. ເມື່ອກ່ອນ ກໍມີສັດລ້ຽງ, ແຕ່ຊາວບ້ານໄດ້ຂາຍໝົດ ພາຍຫລັງທີ່ເລີ່ມ ປູກຢາງ. ເມື່ອຖາມເຂົາເຈົ້າວ່າ ດຽວນີ້ ລາຍຮັບເຂົາເຈົ້າໄດ້ ຫຼຸດລົງບໍ່ ນັບແຕ່ໄດ້ຫັນເອົາເວລາ ແລະ ແຮງງານໄປໃຊ້ກັບສວນຢາງ, ຊາວບ້ານຕອບວ່າ: ເລື່ອງນີ້ບໍ່ແມ່ນຄວາມເປັນຫ່ວງໜັກ. ມີບາງຄອບຄົວທີ່ຂາດເງິນ, ໃນກໍລະນີນີ້ ເຂົາເຈົ້າກໍຂາຍຕົ້ນໄມ້ທີ່ເປັນສ່ວນແບ່ງຂອງຕົນໃຫ້ນັກລົງທຶນ. ຕົ້ນໄມ້ອາຍຸ 3 ປີ ຈະຂາຍໄດ້ປະມານ 20 ຢວນ (ຖ້າເວົ້າແລ້ວລາຄາກໍຕໍ່າ ຢ່າງບໍ່ໜ້າເຊື່ອ ເມື່ອທຽບໃສ່ລາຄາຂາຍກັນໃນປັດຈຸບັນຢູ່ສິບສອງພັນນາ ຊຶ່ງຕົ້ນໄມ້ອາຍຸ 1 ປີ ຢູ່ຈຸດທີ່ຄົນຕ້ອງການ ສາມາດຂາຍໄດ້ຫຼາຍກວ່າ 100 ຢວນ ໂດຍບໍ່ຍາກເລີຍ).

ບ້ານນີ້ເຄີຍມີປ່າສະຫງວນ ແລະ ປ່າຊົມໃຊ້ຫຼາຍກວ່າ 60 ຮຕ, ດຽວນີ້ປ່ານີ້ໄດ້ຫຼຸດລົງເກືອບບໍ່ມີເຫລືອເລີຍ ໃນເວລາອັນສັ້ນ ຫວ່າງບໍ່ຫຼາຍປີມານີ້. ຊາວບ້ານບໍ່ຄ່ອຍເປັນຫ່ວງກ່ຽວກັບຟືນດັງ ໂດຍບອກວ່າສາມາດໃຊ້ກິ່ງງ່າຕົ້ນຢາງ ຫລື ບໍ່ກໍໃຊ້ໄຟຟ້າໃນອະນາຄົດ. ແຕ່ສິ່ງທີ່ ຊາວບ້ານ ເປັນຫ່ວງຫຼາຍກວ່າ ແມ່ນໄມ້ປຸກເຮືອນ.

---

## ກໍລະນີ 5.7 ກຸ່ມບ້ານມອມ

ກຸ່ມບ້ານມອມ ສ່ວນໃຫຍ່ປະກອບດ້ວຍບ້ານຊາວອາຄ່າ ເຊິ່ງຕັ້ງຢູ່ລະຫວ່າງແມ່ນໍ້າຂອງ ແລະ ເຂດສິບສອງພັນນາ, ມັນເປັນຈຸດທີ່ດີເລີດ ເພື່ອສັງເກດ ແລະ ວິເຄາະສະພາບການລົງທຶນລະຫວ່າງຊາຍແດນ.

ນອກຈາກມີສວນປູກຂອງທະຫານ ແລະ ຂອງປະຊາຊົນເອງ ຊຶ່ງມີໃນຈໍານວນບໍ່ໜ້ອຍ, ກໍຍັງມີສວນຂອງນັກລົງທຶນຈີນຊຶ່ງໄດ້ຫລັ່ງໄຫຼເຂົ້າມາຈາກ ເມືອງນູນ, ເມືອງພົງ ຊຶ່ງຕັ້ງຢູ່ຟາກພຸ້ນຂອງຊາຍແດນ. ຢູ່ ບ້ານແສນແອ່ນ, ອະດີດນາຍບ້ານກຸ່ມບ້ານ ເມືອງນູນ ໄດ້ລົງທຶນປູກຢາງ ໃນເນື້ອທີ່ 317 ຮຕ, ໃນນັ້ນ 25% ຂອງກໍາໄລຕົກເປັນຂອງຊາວບ້ານ, 60% ເປັນຂອງຜູ້ລົງທຶນ ແລະ 15% ເປັນຂອງເມືອງ. ຢູ່ບ້ານ ບວກຫນ້າໄຊ ເກົ່າ, ພະນັກງານຂອງນິຄົມລັດທານຈາກເມືອງນູນ ໄດ້ເຮັດສັນຍາໃນເນື້ອທີ່ 80 ຮຕ, ໃນສວນປູກນີ້ 30% ຕົກເປັນຂອງຊາວບ້ານພາຍຫລັງ 3 ປີ. ຢູ່ຫ້ວຍຕາດ, ບວກຫຍ້າໄຊ ໃຫມ່, ບວກຄຸ ແລະ ປ່າຟຸກ, ຊາວຈີນ ຄົນຫນຶ່ງຈາກນິຄົມລັດ ເມືອງພົງ ໄດ້ຮ່ວມກັບນັກທຸລະກິດຈີນອາຄ່າຈໍານວນຫນຶ່ງຢູ່ບ້ານຊາຍແດນໃນການເຮັດສັນຍາກັບຊາວບ້ານລາວ.

ຢູ່ບວກຄຸ, ກຸ່ມນັກລົງທຶນນີ້ໄດ້ມີສັນຍາທາງການກັບເມືອງ ຊຶ່ງກໍານົດ 40% ຂອງຜົນລະປູກເປັນຂອງປະຊາຊົນ ແລະ 60% ເປັນຂອງຜູ້ລົງທຶນ. ເມື່ອໄດ້ລົມກັບຊາວບ້ານ, ພວກເຂົາເຈົ້າໄດ້ບອກວ່າ ໄດ້ມີເອກະສານຊ້ອນທ້າຍ "ບໍ່ເປັນທາງການ" ຕິດມານັບແຕ່ມີສັນຍາທາງການນັ້ນມາ. ບັດນີ້ "ທາງການຂັ້ນເມືອງ" ມີສິດແບ່ງເອົາ 20% ຂອງການແບ່ງປັນທັງໝົດ, ຊຶ່ງເຮັດໃຫ້ຊາວບ້ານໄດ້ແຕ່ 20% (ຂ່າວໄດ້ມາຈາກແຫລ່ງອື່ນ ໃຫ້ເຂົ້າໃຈວ່າ "ທາງການຂັ້ນເມືອງ" ນັ້ນອາດແມ່ນອະດີດຜູ້ໃກ້ຊິດກັບລັດຖະບານທີ່ມີອໍານາດ ຊຶ່ງມີບົດບາດເປັນຕົວແທນໃຫ້ບໍລິສັດຈີນ, ຊຶ່ງເຂົາຜູ້ນີ້ໄດ້ສ້າງກໍາໄລຈາກທັງສອງຝ່າຍ).

ໃນການສົນທະນາກັບຜູ້ລົງທຶນ, ພວກເຂົາກໍກັງວົນໃຈກັບການມີໜ້າຂອງຕົວແທນຄົນກາງພວກນີ້. ພວກເພິ່ນບອກວ່າຢູ່ຫ້ວຍຕາດ, ອົງການປົກຄອງເມືອງຍັງໄດ້ເອົາ 10% ຂອງສ່ວນແບ່ງແບບບໍ່ເປັນທາງການ (ໃນນັ້ນ 5% ໄດ້ຈາກນັກ

ລົງທຶນ ແລະ 5% ອີກມາຈາກປະຊາຊົນ). ນອກນັ້ນແລ້ວ ເຂົາເຈົ້າຕ້ອງເສຍຄ່າທຳນຽມຫຼາຍອັນ ທີ່ບໍ່ບອກຊື່ໃຫ້ແກ່ພະນັກງານລັດຖະບານ, ໂດຍບໍ່ມີຄຳອະທິບາຍ ແລະ ບໍ່ອີ່ຫລີກໍບໍ່ມີໃບຮັບ ເພື່ອເປັນເອກະສານວ່າມີການຈັບຈ່າຍ.

ຍັງມີອີກຕື່ມຫຼາຍໆກໍລະນີ, ມີກະທັ້ງການລົງທຶນໂດຍຜູ້ລົງທຶນຂະໜາດນ້ອຍກວ່ານັ້ນອີກ ຊຶ່ງຂ້າມມາຈາກຝັ່ງຊາຍແດນເບື້ອງພຸ້ນ. ສ່ວນຫຼາຍທາງການກໍບໍ່ຮູ້ເຂົາເຈົ້າ ແລະ ຊາວບ້ານກໍຫຼີກລ້ຽງບໍ່ຢາກບອກຫຍັງ. ຢູ່ບ້ານບວກຄຸ ຊາວບ້ານຮັບວ່າ ມີການຮ່ວມມືບາງຢ່າງກັບຊາວບ້ານຈາກຟາກພຸ້ນຂອງຊາຍແດນ, ແຕ່ວ່າບໍ່ມີ ຫຼາຍຄົນ. ແຕ່ອະດີດຫົວໜ້າບ້ານກິວຟາງ ຊຶ່ງເປັນບ້ານຈີນ-ອາຄ່າ ປະກອບດ້ວຍ 138 ຄອບຄົວ ແລະ ຕັ້ງຢູ່ກົງກັນຂ້າມກັບ ບວກຄຸໄດ້ເລົ່າວ່າ 80% ຂອງຊາວບ້ານນີ້ໄດ້ປູກຢາງຢູ່ກຸ່ມ ບ້ານມອມ ແລະ ມັກແບ່ງຜົນກຳໄລ 30/70 ຫາ 50/50 ພາຍຫຼັງປູກໄດ້ 3-4 ປີ ຫລື ບໍ່ກໍເມື່ອໄດ້ປາດຢາງ (ສ່ວນແບ່ງຫຼາຍກວ່າແມ່ນຕົກເປັນຂອງຜູ້ລົງທຶນ). ບໍ່ມີໃຜໄດ້ເຮັດສັນຍາແບບທາງການ ແລະ ກໍຍ້ານໄດ້ຜິດຖຽງກັນ ຊຶ່ງອາດເກີດຂຶ້ນໃນອະນາຄົດ. ເມື່ອຖາມວ່າເປັນຫຍັງເຂົາເຈົ້າບໍ່ເຮັດໃຫ້ການລົງທຶນເປັນທາງການ, ຊາວບ້ານຈີນບອກວ່າເຂົາເຈົ້າບໍ່ຢາກຈ່າຍພາສີເພີ່ມຕື່ມກໍຄືຄ່າທຳນຽມຕ່າງໆ. "ທາງການລາວ ບໍ່ສຸດຈະລົດຫຼາຍ".

---

ນອກເໜືອໄປຈາກໂຄງການປູກແບບມີສັນຍາທີ່ໃຊ້ກັນທົ່ວໄປແລ້ວ, ຜູ້ລົງທຶນຂະໜາດນ້ອຍຍັງມີສ່ວນຮ່ວມໃນການຂະຫຍາຍຕົວຢ່າງແຂງແຮງຂອງການປູກຢາງພາລາດ້ວຍຫຼາຍໆຮູບແບບຕື່ມອີກ. ຜູ້ລົງທຶນລາວ (ເຂົາເຈົ້າເອງ ຫລື ສະແດງຕົວເປັນຜູ້ລົງທຶນຈີນ) ກໍຍັງຊື້ດິນແບບຖາວອນນຳຊາວບ້ານເຂດພູດອຍເພື່ອປູກຢາງ. ບາງຄົນກໍຊຳນານດ້ານປູກ ແລະ ຂາຍເບ້ຍເຊັ່ນ: "ລາວວູ" ຄົນຈີນອົບພະຍົບ ຜູ້ທີ່ໄດ້ມາຢູ່ ເມືອງລອງ ໄດ້ສີ່ປີແລ້ວ. ລາວວູ ຂາຍເບ້ຍໃນລາຄາ 3,000 ກີບ ຖ້າຊາວບ້ານສາມາດຈ່າຍທັນທີ ຫລື 6,500 ກີບ ຖ້າຈ່າຍໃນຕອນຊາວບ້ານປາດຢາງ. ໃນກໍລະນີ 5.8, ຂ້າພະເຈົ້າໄດ້ໂອ້ລົມກັບແມ່ຍິງຈີນອາຄ່າຜູ້ທີ່ນອກຈາກມີສັນຍາປູກຂະໜາດນ້ອຍແລ້ວ ຍັງເປັນຄົນສະໜອງເບ້ຍ ແລະ ຄວາມຮູ້ທາງເຕັກນິກໃຫ້ເກືອບວ່າຜູ້ມີດິນຂະໜາດນ້ອຍທຸກຄົນໃນບໍລິເວນ ບ້ານຊຽງແຂງ.

## ກໍລະນີ 5.8 ອີ່ແສງ ຢູ່ຊຽງແຂງ

ອີ່ແສງ (ຊື່ສົມມຸດ) ແມ່ນແມ່ຍິງຈີນອາຄ່າ, ອາຍຸ 33 ປີທີ່ຢູ່ບ້ານຊຽງແຂງ, ບ້ານລື້ແຫ່ງໜຶ່ງຢູ່ແຄມແມ່ນ້ຳຂອງ ມາໄດ້ແປດປີແລ້ວ. ອີ່ແສງຈົບມັດທະຍົມສຶກສາຢູ່ ຊຽງຮຸ່ງ, ສິບສອງພັນນາ, ຫລັງຈາກເສັງເຂົ້າວິທະຍາໄລບໍ່ໄດ້ ລາວກໍໄດ້ເຮັດວຽກຫຼາຍຢ່າງ ກ່ອນທີ່ຈະມາລອງສ່ຽງໂຊກເຂົ້າມາລາວ. ທຳອິດ ລາວຂາຍເຄື່ອງໃຊ້ປະຈຳວັນ (ສະບູ, ນ້ຳມັນຄົວກິນ, ອາຫານກະປ໋ອງ, ໆລໆ) ແລະ ມີຮ້ານນ້ອຍໜຶ່ງແຄມນ້ຳ, ລາວຮັບໃຊ້ຊຸມໝູ່ບ້ານທີ່ມາຈາກຫຼາຍແຫ່ງຫົນໃນເຂດນັ້ນ. ຕອນທຳອິດທີ່ມາຮອດ, ລາວເວົ້າຄວາມລື້ບໍ່ໄດ້ຈັກຄຳ, ອີ່ແສງຮຽນພາສາດ້ວຍຕົນເອງຢ່າງໄວ ແລະ ປ່ຽນເປັນຊື່ລື້ ເພື່ອໃຫ້ປັບຕົວເຂົ້າກັບສະພາບໄດ້ດີ.

ໃນເວລາທີ່ ຢູ່ຊຽງແຂງ ແລະ ເຂດອ້ອມແອ້ມໄດ້ເລີ່ມປູກຢາງໃນປີ 2004, ອີ່ແສງເປັນຜູ້ສະໜອງເບ້ຍຢາງຈາກຈີນ ແລະ ເບ້ຍທີ່ລາວປູກເອງຢູ່ກັບທີ່ ໃຫ້ຊາວບ້ານ. ນອກນັ້ນ ລາວຍັງສອນທັກສະວິຊາການໃຫ້ຊາວບ້ານ. ລາວເອງໄດ້ຮຽນວິທີປູກມາຍ້ອນເກີດມາກໍເຫັນໂລດ. ຊາວບ້ານທີ່ໄດ້ສຳພາດ ສ່ວນໃຫຍ່ໄດ້ບອກວ່າ ພວກເພິ່ນໄດ້ຮຽນວິທີປູກຈາກອີ່ແສງ. ຕອນທຳອິດ ອີ່ແສງໄດ້ເອົາໝູ່ມາແຕ່ຈີນ ມາຕິດຕາຕໍ່ຕາ ແລ້ວປ່ອຍໃຫ້ຊາວບ້ານສັງເກດ ແລະ ຮຽນນຳ.

ໃນປີ 2006 ອີ່ແສງໄດ້ເຊັນສັນຍາ 35 ປີ ກັບບ້ານຊຽງແຂງໃນເນື້ອທີ່ 50 ຮຕ, ໃນນັ້ນ 15% ແມ່ນໃຫ້ຊາວບ້ານພາຍຫລັງສອງປີ ແລະ ສ່ວນທີ່ເຫລືອເປັນຂອງອີ່ແສງ. ເວລານີ້ ອີ່ແສງໄດ້ຈ້າງກຳມະກອນເຕັກນິກຈາກ ຢຸນນານ ມາເບິ່ງ. ເຂົາພວກນີ້ ແທນທີ່ຈະເອົາເງິນເດືອນ ແຕ່ໄດ້ຮັບຄຳສັນຍາວ່າຈະໄດ້ຮັບສ່ວນແບ່ງ 30% ຂອງຈຳນວນຕົ້ນໄມ້ທີ່ພວກເຂົາບົວລະບັດ. ກຳມະກອນແມ່ນມາຈາກໝູ່ບ້ານອາຄ່າໃກ້ຄຽງ, ຄ່າແຮງງານແມ່ນ 18 ຢວນ/ວັນ. ລາວບອກວ່າ "ລົງທຶນໃສ່ຢາງຕ້ອງໃຊ້ເງິນຫຼາຍແຕ່ຫົວທີເລີຍ, ຂ້ອຍຕ້ອງໃຊ້ເວລາກ່ອນຈະເລີ່ມຕົ້ນໄດ້."

ມື້ຕໍ່ມາ ເປັນມື້ອອກພັນສາ. ຊາວບ້ານພາກັນເຮັດແຜ່ນເຂົ້າຊອຍ ແລະ ໄດ້ຂ້າໝູແຕ່ເຊົ້າ. ອີ່ແສງ ຊຶ່ງຊາວບ້ານຖືວ່າລາວເປັນສະມາຊິກບ້ານ ກໍໄດ້ສ່ວນແບ່ງຊີ້ນໝູ. ອີ່ແສງເວົ້າວ່າ: "ຂ້ອຍຕ້ອງຟ້າວເອົາຊີ້ນໄປໃຫ້ກຳມະກອນກິນກ່ອນ." ເວົ້າສຸດ ອີ່ແສງກໍຮີບຢ່າງໄປສວນຢາງ.

---

### 5.4 ຊາວບ້ານລົງທຶນເອງ ແລະ ຮ່ວມມືກັບ "ພີ່ນ້ອງ"

ອີງຕາມສະຖິຕິທາງການ (ພາກທີ 2) ການລົງທຶນຂອງຊາວບ້ານເອງກວມເອົາ 80% ຂອງການປູກຢາງທັງໝົດ ຢູ່ ແຂວງ ຫຼວງນ້ຳທາ. ໃນຕົວຈິງແລ້ວ ຕົວເລກນີ້ອາດຈະໜ້ອຍໂພດ, ຖ້າຄຳນຶງເຖິງການລົງທຶນທີ່ບໍ່ໄດ້ລົງທະບຽນໃນ ພາກ 5.3 ແລະ ຮູບແບບຮ່ວມມືທີ່ບໍ່ຄ່ອຍເປັນທາງການກັບຊຸມພີ່ນ້ອງ ແລະ ມິດສະຫາຍ, ທັງສອງກໍລະນີນີ້ຖືກນັບວ່າເປັນການລົງທຶນຂອງຊາວບ້ານເອງໃນເວລາທຳການສຳຫຼວດທາງການ.

ການຮ່ວມມືກັບພີ່ນ້ອງເປັນເລື່ອງປົກກະຕິຢູ່ລາວ ກໍຄືຢູ່ຟາກນັ້ນຂອງຊາຍແດນ. ເຖິງວ່າສ່ວນໃຫຍ່ຂອງການຕົກລົງແມ່ນເຮັດແບບປາກເປົ່າ, ແຕ່ກໍມີບາງເທື່ອທີ່ເພິ່ນເຮັດສັນຍາເປັນລາຍລັກອັກສອນ. ນອກຈາກການແບ່ງປັນດິນແບບປົກກະຕິ 50/50 ແລ້ວ, ກໍຈະມີຂໍ້ກຳນົດຈຳນວນຫນຶ່ງທີ່ຕາຍໂຕກ່ຽວກັບສິ່ງທີ່ທັງສອງຝ່າຍຕ້ອງປະກອບເຂົ້າ. ການຮ່ວມມືນີ້ ມັກຈະມີລັກສະນະການໄຫຼເຂົ້າ ເປັນໄລຍະໆໃນດ້ານທຶນ, ຄວາມຮູ້ດ້ານວິຊາການ, ຊັບພະຍາກອນ, ແຮງງານ ແລະ ຂໍ້ມູນຕະຫຼາດລະຫວ່າງຊາວບ້ານ. ນອກຈາກຄວາມຕ້ອງການຊຶ່ງກັນ ແລະ ກັນແລ້ວ, ການຮ່ວມມືນີ້ ຈະຕ້ອງມີສິ່ງອື່ນສະໜັບສະໜູນເຊັ່ນ: ຄວາມເຂົ້າໃຈ, ຄວາມເຊື່ອໝັ້ນເຊິ່ງກັນແລະກັນ ແລະ ຄວາມສາມັກຄີຊົນເຜົ່າ.

ມັນກໍບໍ່ເປັນເລື່ອງແປກທີ່ເຫັນວ່າ ການລົງທຶນຂອງຊາວບ້ານເອງ ມັກຈະພົບເຫັນຫຼາຍຢູ່ເຂດທີ່ລ້ຳລວຍຂອງເມືອງສິງ, ເມືອງລອງ ແລະ ຢູ່ເຂດລຽບຊາຍແດນ. ອີກເທື່ອຫນຶ່ງ ການລົງທຶນເຫລົ່ານີ້ ກໍບໍ່ສາມາດຫລີກອິດທິພົນຂອງຈີນໄດ້. ທຽບໃສ່ຊາວບ້ານຄົນອື່ນໆ, ຜູ້ທີ່ມີສາຍພົວພັນກັບຕ່າງປະເທດຈະຢູ່ໃນຖານະດີກວ່າໃນເວລາເລີ່ມຕົ້ນ ແລະ ພວກເຂົາສາມາດສືບຕໍ່ຈະເລີນເຕີບໂຕໃນຂະບວນການປູກຢາງ, ຍ້ອນມີຄວາມສາມາດເຂົ້າເຖິງຂໍ້ມູນຕະຫຼາດຫຼາຍກວ່າ, ໄດ້ສິນເຊື່ອແບບບໍ່ເປັນທາງການ ແລະ ໄດ້ຮັບການສະໜັບສະໜູນທາງເຕັກນິກ. ຊາວບ້ານສ່ວນຫຼາຍຮຽນປູກຈາກຊາວບ້ານດ້ວຍກັນ, ມີສາຍພົວພັນໃກ້ ແລະ ໄກກັບພີ່ນ້ອງ ແລະ ມິດສະຫາຍຈີນ, ຈ້າງວິຊາການສົ່ງເສີມຈີນ ຫລືບໍ່ ກໍຍ້ອນເຄີຍເປັນກຳມະກອນໃຫ້ບໍລິສັດຈີນໃນເມື່ອກ່ອນ. ພວກເພິ່ນເລີ່ມຕົ້ນກ່ອນໝູ່ສ່ວນຫຼາຍແມ່ນໄດ້ເດີນທາງໄປຈີນເພື່ອຊອກເອົາເບ້ຍໃນໄລຍະຕົ້ນ, ແຕ່ດຽວນີ້ ເບ້ຍແມ່ນບໍ່ຮີດແລ້ວຢູ່ລາວ, ຊອກຫາໄດ້ຈາກໝູ່ຊາວບ້ານອື່ນໆ, ພໍ່ຄ້າ, ບໍລິສັດຈີນ (ຜູ້ທີ່ຂາດເງິນສົດກໍຈະເຮັດວຽກໃຫ້ບໍລິສັດຈີນ ເພື່ອແລກເອົາເບ້ຍຢາງ). ຊາວບ້ານສ່ວນຫຼາຍກໍໄດ້ເຮັດສວນກ້າເບ້ຍເພື່ອຂາຍ.

ເຖິງວ່າ ບ້ານຫາດຍາວ ເປັນບ້ານທີ່ເພິ່ນໄດ້ສຶກສາຫຼາຍ ແລະ ເປັນທີ່ຮູ້ກັນຢ່າງກວ້າງຂວາງ, ຕົວແບບສະມາຄົມຊາວສວນປະກົດວ່າ ເປັນເລື່ອງຜິດປົກກະຕິ. ສ່ວນຫຼາຍຂອງຈຳນວນການລົງທຶນຂອງຊາວບ້ານເອງນັ້ນ ຈະບໍ່ມີການຈັດຕັ້ງຫຍັງ ນອກເໜືອຈາກເປັນການຈັດຕັ້ງພາຍໃນຄົວເຮືອນເອງ. ໂດຍບໍ່ໄດ້ນັດໝາຍກັນ, ມີບາງຄັ້ງຄາວອາດມີກຸ່ມຊາວບ້ານປະກອບດ້ວຍສາມສີ່ຄອບຄົວ ພາກັນເດີນທາງໄປຊື້ສິ່ງໃດສິ່ງຫນຶ່ງ ຫລື ເພື່ອໄປຂາຍຢາງດິບນຳກັນ. ບໍ່ມີການຈັດຕັ້ງຢາງແບບທາງການເປັນຕົ້ນເປັນໂຕ ບໍ່ວ່າຢູ່ບ້ານໃດ ທີ່ຂ້າພະເຈົ້າໄດ້ໄປສຳພາດ ຍົກເວັ້ນຢູ່ ບ້ານຫາດຍາວ.

ສັງເກດວ່າ ມີສະພາບບໍ່ກົ້າເກິ່ງກັນຫຼາຍສົມຄວນລະຫວ່າງຊາວບ້ານ. ຍ້ອນບໍ່ໄດ້ມີການແບ່ງປັນດິນໃຫ້ແຕ່ລະຄົວເຮືອນຢ່າງເທົ່າທຽມກັນ, ຫມາຍວ່າ ດິນຢູ່ພູສູງນັ້ນ ຖ້າໃຜທັນ ປູກກ່ອນ ກໍ່ຈະກາຍເປັນຂອງຜູ້ນັ້ນ. ຜູ້ມີເງິນຄຳຫຼາຍກວ່າກໍເລີ່ມຕົ້ນກ່ອນ, ປູກຫຼາຍກ່ອນ, ແລະ ມີດິນດີກວ່າໝູ່. ສ່ວນຜູ້ມາລຸນກໍມີດິນໜ້ອຍ ແລະ ໄກກວ່າ. ຜູ້ທີ່ມີເງິນຄຳກໍຍັງຊື້ ຫລື ເຊົ່າດິນກັບໝູ່ບ້ານອາຄ່າຢູ່ເທິງພູເພື່ອຂະຫຍາຍເນື້ອທີ່ປູກ. ການຜິດຖຽງກັນກ່ຽວກັບເຂດແດນຂອງບ້ານໄດ້ເພີ່ມຂຶ້ນ. ບໍ່ແມ່ນເລື່ອງແປກ ທີ່ຊາວບ້ານລື້ຢູ່ເຂດລຸ່ມທີ່ອ້າງວ່າ ຫົວພູບ່ອນໃດບ່ອນຫນຶ່ງເປັນກຳມະສິດຂອງບ້ານຕົນມາ "ຕະຫຼອດ", ແຕ່ຍ້ອນວ່າບໍ່ໄດ້ນິວລະບັດໃນເມື່ອກ່ອນ ຊາວບ້ານອາຄ່າທີ່ຢູ່ໃກ້ຄຽງຈຶ່ງໄດ້ "ຂໍຢືມ" ໄປເຮັດໄຮ່ປູກເຂົ້າ. ນັບແຕ່ນັ້ນມາ ຂໍ້ຂັດແຍ່ງໄດ້ເພີ່ມຂຶ້ນເມື່ອຜູ້ຢູ່ເຂດລຸ່ມພະຍາຍາມ "ອ້າງຮຽກຮ້ອງ

ເອົາດິນຄືນ" ແລະ ພ້ອມກັນນີ້ ຊາວບ້ານຢູ່ເຂດພູສູງກໍປະຕິເສດ ບໍ່ຍອມຍົກໃຫ້. "ການລັກປູກ" ມັກເຫັນຢູ່ເລື້ອຍ ໃນຜືນດິນທີ່ກຳມະສິດ ດ້ານທີ່ດິນບໍ່ຈະແຈ້ງ. ຄວາມເຄັ່ງຕຶງໄດ້ເພີ່ມທະວີຂື້ນລະຫວ່າງຜູ້ມີຢາງ ແລະ ຜູ້ບໍ່ມີ. ຊາວບ້ານຈຳນວນຫນຶ່ງຢູ່ ເມືອງລອງ ໄດ້ລາຍງານວ່າ ຕົ້ນຢາງຖືກທຳລາຍຍ້ອນຊາວບ້ານອື່ນໆທີ່ບໍ່ພໍໃຈນຳ. ຊາວບ້ານສ່ວນຫຼາຍບົວລະບັດສວນປູກດ້ວຍແຮງງານຕົນເອງ, ແຕ່ພວກທີ່ມີສວນປູກກວ້າງກວ່າກໍຈ້າງກຳມະກອນ ຫລື ເອົາພີ່ນ້ອງ ແລະ ເພື່ອນມິດຈາກແຂວງອື່ນໆ (ຕົວຢ່າງ: ແຂວງຜົ້ງສາລີ, ຊຽງຂວາງ) ມາຊ່ວຍ. ຊາວບ້ານ ໄດ້ບອກວ່າມັນນັບມື້ນັບຍາກທີ່ຈະຈ້າງແຮງງານ ຍ້ອນບໍ່ສາມາດໃຫ້ຄ່າແຮງງານສູງ ຄືກັນກັບທີ່ບໍລິສັດຈີນມັກຈ້າງ. ຊາວບ້ານ ເກືອບທຸກຄົນຢາກຂະຫຍາຍສວນປູກຕື່ມ, ແຕ່ນອກຈາກມີຂໍ້ຈຳກັດດ້ານເງິນທຶນແລ້ວ ກໍຍັງມີຄວາມ ເປັນຫ່ວງຕື່ມຄືຄວາມຂາດແຄນແຮງງານ.

## 5.5 ຂໍ້ສະຫຼຸບ ກ່ຽວກັບປະເພດການລົງທຶນ

ບົດນີ້ ໄດ້ຍົກບັນຫາປະເພດການລົງທຶນໃນການປູກຢາງຢູ່ ຫຼວງນໍ້າທາ ຂຶ້ນມາສະເໜີ ໂດຍໄດ້ຍົກບາງຕົວຢ່າງ ສະເພາະ. ສະຫຼຸບໄດ້ວ່າ ແຕ່ພາກ 5.1 ຫາ 5.4, ຂ້າພະເຈົ້າໄດ້ສະເໜີຮູບແບບຕ່າງໆ ໃນການລົງທຶນ ແລະ ຄວາມເປັນຫ່ວງທີ່ກ່ຽວຂ້ອງດັ່ງຈະເຫັນໃນຕາຕະລາງຂ້າງລຸ່ມ:

**ຕາຕະລາງ 5.1 ນັກລົງທຶນ, ຮູບແບບປະຕິບັດ ແລະ ຄວາມເປັນຫ່ວງຕົ້ນຕໍ**

| ປະເພດຜູ້ລົງທຶນ | ຮູບແບບປະຕິບັດ | | | ຄວາມເປັນຫ່ວງຕົ້ນຕໍ |
|---|---|---|---|---|
| | ສຳປະທານ | "2+3" | "1+4" | |
| ນັກລົງທຶນ ຂະຫນາດໃຫຍ່ (ສ່ວນຫຼາຍຈີນ) | ຈຳນວນຫນຶ່ງ: ເຂດຫ່າງໄກ | ຈຳນວນຫນຶ່ງ: ບໍ່ຫ່າງໄກ | ສ່ວນຫຼາຍ: ເຂດຫ່າງໄກ ປານໃດ | ວິທີການແຕ່ເທິງລົງລຸ່ມ, ຊູ່ເຂັນ ຖົກຖຽງເລື່ອງເງື່ອນໄຂ ແລະຄ່າ ແຮງ, ກຳນົດມອບດິນ ຊໍ້າຊ້ອນ ແລະບໍ່ແຈ້ງ, ຂາດແຄນແຮງ ງານ, ຂາດແຫລ່ງແຮງງານທົດ ແທນສຳລັບຊາວ ບ້ານເຂດຫ່າງ ໄກ, ກົນສິນບົນ |
| ນັກລົງທຶນຂະ ໜາດນ້ອຍ (ລາວ&ຈີນ) | ບໍ່ກ່ຽວຂ້ອງ | ບໍ່ຄ່ອຍເຫັນ: ເຂດບໍ່ຄ່ອຍໄກ | ສ່ວນຫຼາຍ:ເຂດ ຫ່າງໄກບໍ່ຫຼາຍ | ລາຍງານໜ້ອຍກວ່າຄວາມຈິງ, ຂາດແຮງງານແດ່, ກົນສິນບົນ |
| ຊາວບ້ານ (ພີ່ນ້ອງ) | ການຈັດຕັ້ງແບບງ່າຍ ແລະ ການໄຫຼຂອງເງິນທຶນເປັນ ໄລຍະໆກໍຄືດ້ານແຮງງານ, ຄວາມຮູ້ດ້ານເຕັກນິກ, ເຂດ ບໍ່ຄ່ອຍໄກ | | | ລາຍງານໜ້ອຍກວ່າຕົວຈິງ, ແຕກຕ່າງກັນລະຫວ່າງຊາວ ບ້ານ,ຖົກຖຽງເລື່ອງເຂດແດນ ບ້ານ, ຂາດທຶນແລະຄວາມຮູ້ ວິຊາການ |

ປະເພດແລະຄວາມເປັນຈິງຂອງການພັດທະນາຢາງພາລາຢູ່ ຫຼວງນໍ້າທາ ສາມາດຕັ້ງຂໍ້ສັງເກດ ແລະ ຄຳຖາມ ດັ່ງຂ້າງລຸ່ມຄື :

- ສຳລັບນັກລົງທຶນຂະໜາດໃຫຍ່ (ທາງການ), ໂຄງການຕາມສັນຍາ "2+3" ຊຶ່ງມີຈຸດປະສົງດີສ່ວນ ຫຼາຍຈະປ່ຽນກາຍເປັນຮູບແບບ "1+4" ແທນ, ຊຶ່ງໃນພາກປະຕິບັດແມ່ນຄືກັນກັບຮູບແບບສຳປະທານ. ໃຕ້ຂອບນະໂຍບາຍລະດັບຊາດ ແລະ ແຂວງໃນທຸກວັນນີ້ ຊຶ່ງບໍ່ໃຫ້ມີຮູບແບບສຳປະທານ ແລ້ວສົ່ງເສີມ ໃຫ້ມີສັນຍາປູກ, ຂໍ້ສັງເກດນີ້ຊີ້ໃຫ້ເຫັນວ່າ ການສົ່ງເສີມສວນປູກໃນຮູບ "2+3" ນີ້ ບໍ່ສາມາດເວົ້າໄດ້ວ່າ

ເປັນທາງປົວແປງແກ້ໄຂສະພາບທຸກຍາກຂອງຊາວບ້ານພາຍໃນທ້ອງຖິ່ນໄດ້. ມັນບໍ່ພໍທີ່ຈະໄດ້ແຕ່ຫ້າມການສຳປະທານແລ້ວຍັງເຊື່ອງຊ້ອນບັນຫາຕ່າງໆ ພາຍໃຕ້ໃບໜ້າໃໝ່ເອີ້ນວ່າ: "ຕົວແບບສັນຍາປູກ."

- ໃນຂະນະດຽວກັນໃນຕົວຈິງຮູບແບບ "1+4" ຊໍ້າພັດມີຢູ່ຈຳນວນຫຼາຍ, ໂດຍສະເພາະຢ່າງຍິ່ງໃນໝູ່ນັກລົງທຶນຂະໜາດນ້ອຍ, ຊຶ່ງຢູ່ທີ່ນີ້ ເລື່ອງບີບບັງຄັບໜ້ອຍໜັກໜ້ອຍໜາຈຶ່ງເກີດ ເປັນບັນຫາ; ສະພາບດັ່ງກ່າວ ມັນຮຽກຮ້ອງໃຫ້ເຮົາຕ້ອງຕີລາຄາຈຸດດີ ແລະ ຈຸດອ່ອນຂອງຕົວແບບນີ້ຄືນໃໝ່. ເປັນໄປໄດ້ບໍ່ວ່າຮູບແບບທີ່ຄ້າຍກັບຮູບແບບສຳປະທານຈະສາມາດໃຊ້ການໄດ້ ແລະ ເປັນທາງເລືອກແທດເໝາະກັບຕົວຈິງໃນບາງສະພາບ ຖ້າຫາກໄດ້ກຳນົດເງື່ອນໄຂໄວ້ໃຫ້ດີພໍ ສຳລັບຊາວບ້ານ? ໃນພາກທີ 8, ພວກເຮົາຈະເຫັນວ່າຮູບແບບ "1+4" ນີ້ກໍເປັນທາງເລືອກທີ່ເພິ່ນນິຍົມຫຼາຍຄືກັນໃນຂະບວນພັດທະນາຢາງພາລາຢູ່ ສິບສອງພັນນາ. ທ້າຍທີ່ສຸດ ຊື່ທີ່ເອີ້ນນັ້ນແມ່ນບໍ່ສຳຄັນ ບໍ່ວ່າຈະເອີ້ນສັນຍາປູກຝັງ ຫຼື ສຳປະທານກໍຕາມ. ອັນສຳຄັນແມ່ນມັນຮັບປະກັນວ່າຊາວບ້ານໄດ້ມີແບບວິທີທີ່ເໝາະສົມ ສຳລັບຄວາມຮຽກຮ້ອງຕ້ອງການເຂົາເຈົ້າບໍ່ ແລະ ມັນໄດ້ຮັບຜົນເປັນຮູບປະທຳ ແທ້ບໍ່
- ການຂາດແຮງງານສາມາດເປັນສິ່ງຂັດຂວາງທີ່ສຳຄັນຕໍ່ການຂະຫຍາຍຕົວຂອງການປູກຢາງຢູ່ ແຂວງ ຫຼວງນ້ຳທາ. ຄວາມຈິງແລ້ວ ສິ່ງນີ້ມີສ່ວນເຮັດໃຫ້ບໍ່ສາມາດປະຕິບັດຮູບ ແບບ "2+3" ໄດ້. ໃນໄລຍະກ່ອນປາດຢາງ ໃນປັດຈຸບັນ ຊຶ່ງເປັນຊ່ວງເວລາບໍ່ຕ້ອງການແຮງງານຫຼາຍ, ນັກລົງທຶນໃຫຍ່ ແລະ ນ້ອຍກໍຍັງຍາດກຳມະກອນກັນເພື່ອບົວລະບັດສວນຢາງຢູ່ແລ້ວ. ຊາວບ້ານທີ່ຖືກສຳພາດ, ໂດຍສະເພາະຜູ້ທີ່ບໍ່ຢູ່ເຂດຫ່າງໄກສອກຫລີກຫຼາຍ ຜູ້ທີ່ມີທາງເລືອກຫຼາຍກວ່າໃນການຊອກຫາຊັບພະຍາກອນແຮງງານໄດ້ບອກວ່າ ພວກເຂົາເຈົ້າບໍ່ພຽງແຕ່ຂາດແຄນທຶນຮອນເພື່ອພັດທະນາສວນຢາງ, ແຕ່ຍັງຂາດຄວາມສາມາດດ້ານແຮງງານອີກດ້ວຍ. ເຖິງຢ່າງໃດກໍຕາມ ຜູ້ລົງທຶນຂະໜາດໃຫຍ່ ຊຶ່ງມັກມີເນື້ອທີ່ປູກໃຫຍ່ຫຼາຍກວ່າປະຊາຊົນທ້ອງຖິ່ນ, ແມ່ນຕົວບັນຫາ, ບໍ່ແມ່ນການຂາດແຄນແຮງງານ, ແຕ່ຫາກແມ່ນຂະໜາດຄວາມກວ້າງຂວາງຂອງສັນຍາຕ່າງໆ. ເມື່ອການປາດຢາງໄດ້ເລີ່ມຕົ້ນ, ພວກເຮົາຈະບໍ່ຕ້ອງເອົາປະຊາຊົນທັງໝົດຈາກ ແຂວງ ຜົ້ງສາລີ ແລະ ຊຽງຂວາງມາບໍ ຫລື ຈະຕ້ອງເປີດປະຕູໃຫ້ຄົນຈີນຈຳນວນຫຼວງຫຼາຍຍົກຍ້າຍເຂົ້າມາ?
- ວິທີການສ້າງສັນຍາແບບເທິງລົງລຸ່ມມີຈຸດອ່ອນຫຼາຍຈຸດ, ແຕ່ວ່າຈະເຮັດແນວໃດໄດ້ໃນເມື່ອເພິ່ນໄດ້ເຊັນສັນຍາລະດັບສູງກັບບັນດານັກລົງທຶນຂະໜາດໃຫຍ່ໄປແລ້ວ. ພວກເຮົາຕ້ອງມີເອກະສານເພີ່ມຕື່ມອັນໃດແດ່ ແລະ ຕ້ອງທົບທວນອັນໃດເພື່ອຮັບປະກັນວ່າຊາວບ້ານແມ່ນບໍ່ຖືກບີບບັງຄັບ ຫລື ຖືກປະຕິບັດບໍ່ດີພາຍໃຕ້ສັນຍາຕ່າງໆນັ້ນ? ຫຼາຍໆຄົນໄດ້ຮຽກຮ້ອງໃຫ້ປັບປຸງລະບຽບກົດໝາຍ, ໃຫ້ມີມາດຕະຖານ ແລະ ການປະຕິບັດສັນຍາໃຫ້ດີກວ່າເກົ່າ; ແຕ່ໃນໂລກທີ່ເພິ່ນມັກເຮັດສັນຍາແຕ່ເທິງລົງມາ ໂດຍທີ່ຊາວບ້ານມີສ່ວນຮ່ວມໜ້ອຍນັ້ນ, ເວົ້າໄດ້ບໍວ່າ ມັນກາຍເປັນເລື່ອງດີຊໍ້າ ທີ່ມີຈຸດບົກຜ່ອງໃນການປະຕິບັດສັນຍາ ເພາະມັນອາດສ້າງໂອກາດໃໝ່ສຳລັບຊາວບ້ານທີ່ຈະໄດ້ເຈລະຈາຕໍ່ລອງເພື່ອຜົນປະໂຍດຂອງຕົນ? ພາຍໃຕ້ຂໍ້ຕົກລົງບາງບ່ອນ, ຊາວບ້ານຈະຕ້ອງບູລະນະຮັກສາສວນປູກທີ່ເປັນພູດຂອງເຂົາເຈົ້າສອງສາມປີ. ບັນຫາຕັ້ງຂຶ້ນມາແມ່ນ ຈະເຮັດແນວໃດຈຶ່ງຈະແນ່ໃຈໄດ້ວ່າເຂົາເຈົ້າຈະສາມາດປະຕິບັດໜ້າວຽກນີ້ໄດ້? ສຳລັບຊາວບ້ານຢູ່ເຂດຫ່າງໄກ, ວິຖີຊີວິດຂອງເຂົາແມ່ນຖືກຄອບງຳໂດຍການເຮັດສວນຕາມສັນຍາປູກ ແລະ ເຂົາເຈົ້າກໍບໍ່ມີທາງເລືອກຫຼາຍ. ໃນສະພາບນີ້, ເຮັດຈັ່ງໃດເຮົາຈຶ່ງຈະຄ້ຳປະກັນ ແລະ ສະໜອງຕາໜ່າງຄວາມປອດໄພໃຫ້ເຂົາເຈົ້າໄດ້ໃນເມື່ອລາຄາຢາງປ່ຽນມັກຈະປ່ຽນແປງຢູ່ເລື້ອຍ? ເຮັດແນວໃດຈຶ່ງຈະຫລີກລ້ຽງບໍ່ໃຫ້ຊາວບ້ານຕ້ອງຂາຍພູດທີ່ເປັນສ່ວນແບ່ງເຂົາເຈົ້າເວລາມີຄວາມຫຍຸ້ງຍາກທາງການເງິນ? ຂ້າພະເຈົ້າຈະກັບມາເວົ້າບັນຫານີ້ຕື່ມຢູ່ບົດສຸດທ້າຍ.

# ພາກທີ 6
# ຕາໜ່າງທຸລະກິດລະຫວ່າງປະເທດ

ເຖິງວ່າຈະມີນະໂຍບາຍ ແລະ ບັນດາປັດໄຈການຕະຫຼາດກໍຕາມ ຊຶ່ງໄດ້ເວົ້າໄວ້ໃນບົດ 3 ແລະ 4, ການລົງທຶນຂອງຈີນ ຂະໜາດໃຫຍ່ ແລະ ວ່ອງໄວຄືແນວນີ້ ຈະເປັນໄປບໍ່ໄດ້ ຖ້າປາສະຈາກການສະໜັບສະໜູນ ອັນເນື່ອງມາຈາກສາຍພົວພັນທາງສັງຄົມ ແລະ ເສດຖະກິດທີ່ເຂັ້ມແຂງຍາວນານລະຫວ່າງເຂດຊາຍແດນຂອງສອງປະເທດ. ບົດນີ້ຈະເວົ້າເຖິງການເຮັດວຽກຕົວຈິງຂອງຕາໜ່າງທຸລະກິດລະຫວ່າງຊາດດັ່ງກ່າວ ພ້ອມທັງຈະສຶກສາເບິ່ງບົດບາດຂອງມັນໃນການອຳນວຍຄວາມສະດວກໃຫ້ມີການຂະຫຍາຍຕົວຢ່າງໄວວາກວ້າງຂວາງຂອງສວນປູກຢາງພາລາໃນ ຫຼວງນ້ຳທາ.

## 6.1 ປະເພດຊຸມຊົນຈີນໃນແວດລ້ອມຂອງການຂະຫຍາຍຕົວອຸດສາຫະກຳປູກຢາງ

ຫຼວງນ້ຳທາ ເປັນບ່ອນອາໃສຂອງຊາວຈີນຈຳນວນບໍ່ໜ້ອຍ ໂດຍສະເພາະ ເມືອງສິງ ໄດ້ກາຍເປັນບ່ອນຢູ່ຂອງຊຸມຊົນຈີນຫຼາຍໆປະເພດ ຊຶ່ງມີຖານະພັກອາໃສໃນລາວແຕກຕ່າງກັນໄປ ຊຶ່ງສາມາດແຍກປະເພດອອກດັ່ງຂ້າງລຸ່ມ:

- **ຂະບວນຍົກຍ້າຍຖິ່ນຖານແຕ່ຕອນທຳອິດ ຍ້ອນສົງຄາມຄວາມປັ່ນປ່ວນທາງການເມືອງ**

ຊຸມຊົນຈີນຈາກ ແຂວງ ຢຸນນານ ທີ່ຍົກຍ້າຍຖິ່ນຖານມາຢູ່ພາກເໜືອລາວ ໃນຕອນທຳອິດມີລັກສະນະມານຳກອງຄາຣາວານ, ຊາວຊື້ຂາຍ, ຜູ້ລັກລອບຄ້າຂາຍ ແລະ ຜູ້ມີຮ້ານຄ້າຈຳນວນໜຶ່ງ (Rosetti, 1997), ຕົວຢ່າງ: ຢູ່ເມືອງສິງ ມີບ້ານໜຶ່ງທີ່ເປັນບ້ານຂອງຜູ້ອົບພະຍົກຊາວຫານ-ໂລໂລ ຊຶ່ງດັ້ງເດີມມາຈາກ ຈີງກູ, ຢຸນນານ ໄດ້ເຂົ້າມາແຕ່ຕອນຕົ້ນໆ ແລະ ບໍ່ດົນມານີ້ໄດ້ຍົກຍ້າຍມາອີກຕື່ມຈາກ ຜົ້ງສາລີ ເມື່ອມີການຫ້າມປູກຝິ່ນ[21]. ຊົນເຜົ່າຫານນີ້ ນອກຈາກເວົ້າພາສາລາວແລ້ວ ຍັງຮັກສາພາສາຊົນເຜົ່າຫນຶ່ງຂອງ ຢຸນນານ ຊຶ່ງຄ້າຍກັນກັບພາສາຈີນກາງປົນເປກັບຄຳເວົ້າລາວ. ພາຍຫລັງ ທີ່ໄດ້ອາໃສຢູ່ ຜົ້ງສາລີ ມາຫຼາຍກວ່າ 100 ປີ ແລ້ວ ພວກເຂົາເຈົ້າໄດ້ຕັດການພົວພັນກັບຈີນ. ແຕ່ວ່າໃນໄລຍະບໍ່ທໍ່ໃດປີຜ່ານມານີ້ ພວກເຂົາເຈົ້າໄດ້ກາຍເປັນແຫລ່ງແຮງງານທີ່ຜູ້ລົງທຶນປູກຢາງຈີນຫານມັກຈ້າງເພາະເວົ້າພາສາດຽວກັນໄດ້.

ໃນທ້າຍໆຂອງຊຸມປີ 1940 ແລະ ຕົ້ນຊຸມປີ 1950, ການຍົກຍ້າຍເຂົ້າມາ ໄດ້ເພີ່ມຂຶ້ນ ຍ້ອນສົງຄາມກາງເມືອງໃນຈີນໄດ້ຫຍັບມາຮອດເຂດຊົນນະບົດຂອງ ຢຸນນານ. ພວກທະຫານແຕກທັບກົວກມິນຕັນໄດ້ຖອຍເຂົ້າມາຢູ່ ມຽນມາ ແລະ ລາວ, ມີບາງພວກຍັງຖອຍລົງເລິກຈົນຮອດພາກເໜືອຂອງໄທ. ແນວໃດກໍຕາມ, ກຸ່ມຄົນດັ່ງກ່າວຕ້ອງແຍກອອກຈາກການທີ່ພົນລະເຮືອນເຂດສິບສອງພັນນາຍົກຍ້າຍເຂົ້າມາໃນໄລຍະດຽວກັນ, ຊຶ່ງສ່ວນຫຼາຍແມ່ນກຸ່ມຊົນເຜົ່າສ່ວນໜ້ອຍພື້ນເມືອງ, ໃນນັ້ນລວມມີຊາວລື້ ແລະ ອາຄ່າ. ຂະບວນອົບພະຍົບເຂົ້າມາແມ່ນສູງສຸດໃນໄລຍະຕົ້ນໆຂອງການສ້າງ ປະເທດຄອມມຸຍນິດຈີນ ແລະ ສະໄໝປະຕິວັດວັດທະນະທຳ (1966-1976). ໃນເວລານັ້ນ ເຈົ້າຂອງດິນລ້ຳລວຍຊາວລື້ (ຫລືໄຕ/Dai) ອີງຕາມການຈັດປະເພດຂອງຈີນ ໄດ້ໂຕນອອກຈາກສິບສອງພັນນາ ເພາະຢ້ານລະບອບຄອມມຸຍນິດເຂັ່ນຂ້າ. ສ່ວນໜຶ່ງຂອງກຸ່ມນີ້ ສືບຕໍ່ສ້າງຄວາມຮຸ່ງເຮືອງໃຫ້ຕົນເອງໃນພູມລຳເນົາໃໝ່ຢູ່ລາວ ເຖິງຂັ້ນເປັນຜູ້ທີ່ຊຸມຊົນນັບຖື, ມີອຳນາດທຸລະກິດ ຫລື ແຮງດັນອິດທິພົນທາງການເມືອງໃນລັດຖະບານລາວ. ສາຍພົວພັນ ແລະ ທຶນທາງສັງຄົມຂອງເຂົາເຈົ້າໄດ້ຖືກຊົມໃຊ້ໂດຍຊຸມພີ່ນ້ອງຢູ່ຟາກນັ້ນຂອງຊາຍແດນ ແລະ ຫລັງໆມານີ້ ກໍແມ່ນຕອນມີການຂະຫຍາຍຕົວດ້ານການປູກຢາງ. ໃນລະຫວ່າງກາງໄປຫາທ້າຍ ຊຸມປີ 1990, ໄດ້ມີຂະບວນບໍ່ໃຫຍ່ປານໃດຂອງອົບພະຍົບອາຄ່າລາວໃນສະໄໝສົງຄາມອະເມຣິກາໄດ້

[21] ໂລໂລຊຶ່ງຕາມການຈັດແບ່ງຊົນເຜົ່າຈີນເອີ້ນວ່າ ຍີໃນລາວແມ່ນຢູ່ ຜົ້ງສາລີ ຫຼາຍທີ່ສຸດ. ຫຼາຍຄົນແມ່ນລູກຫຼານຂອງຊາວຄ້າຂາຍ ຫານ ແລະ ແມ່ຍິງໂລໂລ

ຍົກຍ້າຍຄືນມາຈາກໝູ່ບ້ານຊາຍແດນເຂດ ສິບສອງພັນນາ ແລ້ວມາຕັ້ງຢູ່ກຸ່ມ ບ້ານມອມທີ່ ເມືອງສິງ. ເຖິງວ່າກຸ່ມຄົນນີ້ ບໍ່ມີຫຼາຍທາງດ້ານຈຳນວນ, ແຕ່ເຂົາເຈົ້າມີບົດບາດເປັນຕ່ອງໂສ້ລະຫວ່າງຊາຍແດນທີ່ສຳຄັນໃຫ້ແກ່ເສດຖະກິດປູກຢາງ. ຍ້ອນເຄີຍເຮັດວຽກຢູ່ນິຄົມລັດຢູ່ສິບສອງພັນນາແລ້ວ, ກຸ່ມຄົນດັ່ງກ່າວແມ່ນຜູ້ທຳອິດທີ່ໄດ້ລິເລີ່ມປູກຢາງ ແລະ ປາດຢາງຢູ່ ຫຼວງນ້ຳທາ (ບົດທີ 2). ຜູ້ທີ່ໜຸ່ມນ້ອຍໃນກຸ່ມນີ້ຍ້ອນໄດ້ເຕີບໃຫຍ່ມາຢູ່ທັງຈີນ ແລະ ລາວ ຈຶ່ງສາມາດເວົ້າໄດ້ສາມພາສາ, ຄືອາຄ່າ, ລາວ ແລະ ພາສາຈີນກາງ (ພ້ອມທັງຮູ້ພາສາຢຸນນານ ຊຶ່ງທັງຈີນ ແລະ ຢຸນນານຕ່າງກໍເຂົ້າໃຈຊຶ່ງກັນແລະກັນ); ນອກນັ້ນ ເຂົາເຈົ້າກໍຕິຫລົບຫັບໄດ້ທາງດ້ານວັດທະນາທຳໃນທຸກໆສະພາບ. ພວກເຂົາເຈົ້າເປັນບຸກຄົນທີ່ບໍລິສັດຈີນໃນພາກເໜືອລາວຢາກໄດ້ມາເຮັດວຽກກັບຢາງພາລາ ຫລື ບໍ່ກໍໃຫ້ເປັນຜູ້ແປພາສາ ຫລື ຜູ້ຄຸມງານ.

- **ການເຂົ້າມາໃນໄລຍະລະຫວ່າງສິບປີມໍ່ໆມານີ້**

ຂະບວນເຄື່ອນຍ້າຍເຂົ້າມາໃນໄລຍະສິບປີຜ່ານມາ ສ່ວນຫຼາຍແມ່ນຊາວອົບພະຍົບຫານ ຈາກເສສວນ ແລະ ຮູນານທີ່ສະແຫວງຫາຊີວິດທີ່ດີກວ່າ. ປົກກະຕິແລ້ວຄົນພວກນີ້ຈະຂາຍເຄື່ອງເບັດຕະເລັດ, ເຄື່ອງໃຊ້ສອຍໃນເຮືອນ, ເຄື່ອງມືເຮັດດ້ວຍໂລຫະ, ແປງລົດຈັກ, ໆລໆ; ແຕ່ໃນຊຸມປີຫລັງໆນີ້ ໄດ້ປ່ຽນໄປເຮັດວຽກສວນຢາງແທນ. ຍ້ອນຂາດແຄນດ້ານທຶນ, ພວກເຂົາມີດິນປູກພຽງເລັກນ້ອຍ; ມີຫຼາຍຄົນທີ່ຮັບເໝົາຕໍ່ຊ້ອງ ແລະ ເປັນຜູ້ຄຸມງານໃຫ້ບໍລິສັດຈີນຂະໜາດໃຫຍ່. ເຖິງວ່າການຕົກລົງນຳກັນຈະແຕກຕ່າງກັນບໍ່ໜ້ອຍຈາກບ່ອນໜຶ່ງໄປຫາບ່ອນໜຶ່ງ, ແຕ່ປົກກະຕິຜູ້ຮັບເໝົາຕໍ່ຊ້ອງນີ້ ມັກຈະໄດ້ຮັບຄຳໝັ້ນສັນຍາວ່າຈະໄດ້ຮັບສ່ວນແບ່ງຫຼາຍ (ບາງກໍລະນີສູງຫຼາຍເຖິງ 50% ກໍມີ) ໃນສວນປູກຢາງທີ່ເຂົາເຮັດວຽກ.

ກຸ່ມຄົນພວກນີ້ບໍ່ຄ່ອຍເຊື່ອມເຂົ້າກັບສັງຄົມລາວສ່ວນໃຫຍ່ໄດ້ດີປານໃດ. ບໍ່ວ່າພວກເຂົາໄດ້ຢູ່ລາວດົນປານໃດກໍຕາມ ຫຼື ມີແຜນຈະຢູ່ຕື່ມອີກດົນປານໃດກໍຢ່າ, ເຂົາເຈົ້າມີແນວຄິດວ່າລາວເປັນພຽງແຕ່ບ່ອນຢູ່ຊົ່ວຄາວ ແລະ ຢູ່ໄປກໍຍ້ອນເຫດຜົນເພື່ອຄວາມກ້າວໜ້າທາງເສດຖະກິດເທົ່ານັ້ນ.

- **ນັກທຸລະກິດທ່ຽວໄປທ່ຽວມາ**

ນີ້ຄືນັກລົງທຶນຂະໜາດນ້ອຍທີ່ຫລັ່ງໄຫຼເຂົ້າມາຈາກເມືອງອ້ອມແອ້ມປະເທດລາວເຊັ່ນ: ເມືອງມາງ, ເມືອງພົງ, ເມືອງຫລ້າ. ໃນກຸ່ມນີ້ ມັກມີນັກລົງທຶນຊາວຫານ ແລະ ຊົນເຜົ່າອື່ນໆ. ບາງຄັ້ງສອງພວກນີ້ ກາຍເປັນຄູ່ຮ່ວມງານໂດຍທີ່ຄົນຫານເປັນທຶນສ່ວນໃຫຍ່ ແລະຝ່າຍຊົນເຜົ່າມີຈຸດດີດ້ານຄວາມສາມາດທາງພາສາ ແລະ ຄວາມສາມັກຄີຊົນເຜົ່າກັບຊຸມຊົນລື້ ແລະ ອາຄ່າໃນລາວ. ຄູ່ຮ່ວມງານຫານ ໂດຍປົກກະຕິແມ່ນໄດ້ເຄີຍເຮັດວຽກ ຫລື ຍັງເຮັດຢູ່ນິຄົມລັດຢູ່.

ນັກລົງທຶນຊາວຈີນລື້ ແລະ ອາຄ່າ ເຖິງວ່າ ໃນລະດັບໃດໜຶ່ງແມ່ນມີຄວາມຈົງຮັກພັກດີໃນແງ່ຊົນເຜົ່າກັບຄົນລາວລື້ ແລະ ອາຄ່າກໍຕາມ, ສ່ວນໃຫຍ່ ເຂົາເຈົ້າຄິດວ່າໂດຍພື້ນຖານແລ້ວ ຕົນເອງເປັນຄົນຈີນ ແລະ ເອກະລັກຊົນເຜົ່າມີຄວາມສຳຄັນລະດັບສຳຮອງເທົ່ານັ້ນ. ເຊັ່ນດຽວກັນກັບພວກມິດສະຫາຍຈີນຂອງພວກເຂົາ, ພວກເຂົາເຈົ້າບໍ່ຄ່ອຍສະໜັບສະໜູນ "ສິ່ງຫລ້າຫລັງ" ຂອງຊີວິດປະເພນີຂອງບ້ານໃນລາວ ແລະ ເຫັນສາຍສຳພັນທາງຊົນເຜົ່າເປັນສິ່ງເພີ່ມທະວີຜົນປະໂຫຍດເສດຖະກິດເທົ່ານັ້ນ.

- **ເງິນໃໝ່ ແລະ ຫຼາຍກວ່າເກົ່າ**

ພວກບໍລິສັດຢາງໃຫຍ່ຈີນໄດ້ເຂົ້າມາ ຫຼວງນ້ຳທາ ພຽງແຕ່ໃນໄລຍະສອງປີຜ່ານມາ. ສ່ວນຫຼວງ ຫຼາຍໃນນີ້ຍົກເວັ້ນ ບໍລິສັດຢາງພາລາ ຢຸນນານ/Yunnan Rubber ຊຶ່ງເປັນສາຂາເຄິ່ງເອກະຊົນ ຂອງກຸ່ມນິຄົມລັດຢຸນນານ (Nongken Jituan) ແມ່ນບໍລິສັດເອກະຊົນ. ນັກລົງທຶນຢາງ ພາລາຂະໜາດໃຫຍ່ຈີນໄດ້ຮັບການສະໜັບສະໜູນ

ຈາກລັດຖະບານຈີນ ດ້ວຍເງິນອຸດໜູນເພື່ອຊົດເຊີຍໃຫ້ການປູກຝິ່ນ. ຄະນະບໍລິຫານລະດັບສູງລ້ວນແລ້ວແຕ່ເປັນຊາວຫານທີ່ມີສາຍພົວພັນໜຽວແໜ້ນກັບລັດຖະບານ, ມີບາງຄົນເຄີຍມີໜ້າທີ່ສູງໃນລັດຖະບານມາແລ້ວໃນອະດີດ. ແບບປະຕິບັດການໃນລາວຂອງເຂົາເຈົ້າ ສ່ວນໃຫຍ່ແມ່ນການຮັບເໝົາຕໍ່ຊ້ວງຂະໜາດໃຫຍ່ ແລະ ເຮັດວຽກຮ່ວມກັບຊຸມຊົນຈີນທີ່ມີຢູ່ແລ້ວ ແລະຈ້າງແຮງງານຈີນອາຄ່າ ແລະລີ້ເພື່ອສ້າງສະພາບເຊື່ອມຕໍ່ທາງວັດທະນາະທຳ ແລະ ພາສາ. ພວກເຂົາຍັງຊື້ສວນທີ່ມີຢູ່ແລ້ວຈາກນັກລົງທຶນຂະໜາດນ້ອຍຜູ້ທີ່ຂາດທຶນ ຫລື ຄວາມສາມາດທີ່ຈະສືບຕໍ່ທຸລະກິດສວນຢາງ.

ບໍລິສັດຈີນຂະໜາດໃຫຍ່ມັກຈະດຳເນີນທຸລະກິດຢູ່ບາງແຂວງພາກເໜືອໄປພ້ອມໆກັນ ແລະ ຈະປູກພືດຫຼາຍຢ່າງ ຫລື ບໍ່ກໍເຮັດອຸດສາຫະກຳໄປນຳຕົວຢ່າງ: ບໍລິສັດ *ພາວເວີນາຍໂອໂລຊີຄອລ* ທີ່ປູກມັນຕົ້ນເທົ່ານັ້ນຢູ່ ຫຼວງນ້ຳທາ, ແຕ່ຊ້ຳມີສວນຢາງໃຫຍ່ສົມຄວນຢູ່ ວຽງຈັນ ແລະ ໄຊຍະບູລີ. Yunnan Rubber/ ຢາງພາລາຢຸນນານ ເຮັດວຽກຢູ່ສີ່ແຂວງພາກເໜືອ, ຣູເຟິງ /Ruifeng ປູກຢູ່ ຫຼວງນ້ຳທາ ແລະ ບໍ່ແກ້ວ. ນອກຈາກຢາງ ແລະ ພືດສິນຄ້າແລ້ວ, ນັກລົງທຶນບາງຄົນຍັງສະແຫວງ ຫາໂອກາດຂຸດຄົ້ນບໍ່ແຮ່ຢ່າງເອົາຈິງເອົາຈັງໃນຂົງເຂດ. ຍ້ອນຂາດຜູ້ແປພາສາລາວ-ຈີນຢ່າງຮ້າຍແຮງ ຈຶ່ງບໍ່ເປັນເລື່ອງແປກທີ່ບໍລິສັດຢາງ ແລະ ຜູ້ລົງທຶນໄຟຟ້ານ້ຳຕົກ ຫລື ດ້ານຂຸດຄົ້ນບໍ່ແຮ່ຈະປ່ຽນກັນໃຊ້ຜູ້ແປພາສາຄົນດຽວ. ແຕ່ການແບ່ງປັນ [ຜູ້ແປພາສາ] ແບບດຽວກັນນີ້ລະຫວ່າງບໍລິສັດປູກຢາງແມ່ນບໍ່ເຄີຍໄດ້ຍິນວ່າມີ, ທີ່ເປັນຄືແນວນີ້ກໍພໍເຂົ້າໃຈຢູ່ ເຫດຜົນກໍຍ້ອນວ່າມີການແຂ່ງຂັນຍາດດິນ.

ເຖິງວ່າປົກກະຕິສຳນັກງານໃຫຍ່ຂອງບໍລິສັດຈະຢູ່ ເມືອງຫລ້າ, ຊຽງຮຸ່ງ ຫລື ຂຸນໝິງ, ແຕ່ທຶນເພື່ອແນ່ໃສ່ທຸລະກິດນັ້ນສາມາດມາຈາກຈຸດຫ່າງໄກກວ່າ ແມ້ແຕ່ເຂດແຄມທະເລຂອງຈີນກໍມີ. ສະພາບການເງິນຂອງຜູ້ລົງທຶນກໍແຕກຕ່າງກັນແລ້ວແຕ່ບໍລິສັດ, ບາງພວກເຊັ່ນ: Yunnan Rubber/ຢາງພາລາຢຸນນານ ໄດ້ຮັບການສະໜັບສະໜູນຢ່າງແຂງແຮງດ້ານການເງິນ ແລະ ສະຖາບັນ, ແຕ່ບາງພວກແຈ້ງວ່າຕ້ອງລໍຖ້າເງິນຖົມຂຸມແມ້ແຕ່ສຳລັບໃຊ້ຈ່າຍຄ່າແຮງງານ. ຄວາມມີປະສິດທິຜົນຂອງຜູ້ຮັບເໝົາຕໍ່ຊ້ວງກໍມີອັນແຕກຕ່າງກັນຫຼາຍ. ແມ້ແຕ່ບໍລິສັດຢາງພາລາ ຢຸນນານ ຊຶ່ງບໍ່ມີບັນຫາທຶນຍັງປະເຊີນກັບບັນຫາໂຕ້ຖຽງກັນດ້ານເງິນແຮງງານ ຍ້ອນຜູ້ຮັບເໝົາຕໍ່ຊ່ວງ ສໍ້ໂກງຍັກຍອກໃນບາງຄັ້ງຄາວ.

ຕ່າງໄປຈາກຜູ້ລົງທຶນສ່ວນຕົວ ຊຶ່ງເກືອບວ່າໝົດທຸກລາຍແມ່ນເປັນນັກວິຊາການຢາງພາລາຢູ່ແລ້ວ, ພວກນັກລົງທຶນຂະໜາດໃຫຍ່ສ່ວນຫຼາຍຢູ່ ເມືອງສິງ ແລະ ລອງ (ຍົກເວັ້ນ Yunnan Rubber) ມີປະສົບການຈຳກັດຫຼາຍໃນການປູກຢາງພາລາ. ເຊັງລີຢູ່ ເມືອງສິງ ເຄື່ອນໄຫວໂດຍມີສາມໂຮງງານປຸງແຕ່ງຢາງຢູ່ສິບສອງພັນນາ, ແຕ່ບໍ່ໄດ້ລົງທຶນໃນສວນຢາງ. Ruifeng ຣູເຟິງ ເຮັດທຸລະກິດດ້ານອຸດສາຫະກຳບັນເທີງຢູ່ຈີນ, ການລົງທຶນໃນຢາງພຽງແຕ່ໄດ້ມາເລີ້ມຕົ້ນຢູ່ລາວ. Diyuan/ ດີຢວນ ກໍເຊັ່ນດຽວ ບໍ່ເຄີຍມີບົດຮຽນດ້ານບໍລິຫານຄຸ້ມຄອງສວນຢາງມາກ່ອນ. ນັກລົງທຶນພວກນີ້ຕ້ອງອີງອາໃສກຳມະກອນວິຊາການທີ່ໄດ້ວ່າຈ້າງມາຊ່ວຍດ້ານວິຊາການ, ກຳມະກອນດັ່ງກ່າວມັກຈະມາແຕ່ນິຄົມລັດ.

ການຮັບສິນບົນ ຂອງຝ່າຍລັດຖະບານລາວນັບວ່າ ສ້າງຄວາມລຳຄານບໍ່ຫຼາຍກໍໜ້ອຍແກ່ນັກລົງທຶນຈີນທັງໝົດ. ສຳລັບຜູ້ລົງທຶນຂະໜາດໃຫຍ່, ການໃຫ້ສິນບົນເປັນທັງສິ່ງກັງວົນຢ້ານກົວ ແລະ ເປັນສິ່ງສັນລະເສີນກໍເປັນໄດ້. ສຳລັບຜູ້ມີຄວາມສາມາດພໍ, ການໃຫ້ສິນບົນຂະໜາດມະຫາສານເປັນວິທີການທີ່ແທດເໝາະກັບຕົວຈິງເພື່ອແກ່ງແຍ້ງກັບບໍລິສັດຄູ່ແຂ່ງອື່ນໆ ພາຍໃຕ້ສິ່ງແວດລ້ອມການຄຸ້ມຄອງເສດຖະກິດທີ່ບໍ່ຄ່ອຍໄດ້ດີ.

## 6.2 ຕາໜ່າງລະຫວ່າງຊາດດຳເນີນງານແບບໃດ ?

ຕາໜ່າງລະຫວ່າງຊາດມີສາຍສຳພັນດ້ານຍຸດທະສາດ, ທາງການ, ນອກທາງການ ລະຫວ່າງຊາວຈີນຫານ ແລະ ກຸ່ມຊົນເຜົ່າ, ແລະ ຄູ່ຮ່ວມງານຊາວລາວ, ຜູ້ຍົກຍ້າຍມາແຕ່ກ່ອນ, ຜູ້ລົງທຶນໃໝ່ຂະໜາດໃຫຍ່ ແລະ ຜູ້ລົງທຶນຂະໜາດນ້ອຍ ກໍຄືການໄປມາຫາສູ່ເປັນປະຈຳໃນກຸ່ມພີ່ນ້ອງ, ເພື່ອນສະຫາຍ. ຊາວຈີນລື້, ອາຄ່າ, ພົນລະເມືອງລາວລື້ ແລະ ອາຄ່າປາກພາສາຈີນ ແນ່ນອນຢູ່ແລ້ວວ່າ ເປັນຕ່ອງໂສ້ສຳຄັນເຊື່ອມຕໍ່ຕາໜ່າງສະລັບສັບຊ້ອນນີ້. ຄວາມສະລັບສັບຊ້ອນນີ້ ບາງທີຈະເຫັນໄດ້ດີຈາກຕົວຢ່າງສະເພາະ ຊຶ່ງແມ່ນເລື່ອງລາວຂອງຄອບຄົວຂອງ ເຊັນ (ກໍລະນີ 6.1) ແລະ ຮູບເສັ້ນກ່ຽວກັບຕາໜ່າງ 6.1.

**ກໍລະນີ 6.1 ຄອບຄົວຂອງເຊັນ (ຊື່ສົມມຸດ)**

ໄດ້ 8 ປີ ແລ້ວທີ່ຄອບຄົວ ເຊັນ (ເຜົ່າຫານ) ໄດ້ມາຮອດ ເມືອງສິງ, ດ້ວຍຈຸດປະສົງຢາກມີຊີວິດທີ່ດີກວ່າ. ເຂົາເຈົ້າມາຈາກບ້ານຊົນນະບົດ, ໃກ້ເທດສະບານ ເມືອງຊົງກົງ, ແຂວງ ເສສອນ,ໃນພາກກາງຂອງຈີນ. “ລາວເຊັງ” ຊື່ທີ່ຄົນເອີ້ນ ຜູ້ເປັນພໍ່ມາກ່ອນ, ຕໍ່ມາເມຍພ້ອມລູກ ໄວລຸ້ນສອງຄົນຈຶ່ງຕິດຕາມມາ. ຕອນທຳອິດ ເຂົາເຈົ້າເປີດຮ້ານແປງລົດຈັກຢູ່ໃຈກາງ ເມືອງສິງ, ພ້ອມກັນນັ້ນ ກໍເຊົ່າດິນເພື່ອປູກຜັກ ແລ້ວຂາຍໃນທ້ອງຖິ່ນ ແລະ ສົ່ງໄປຂາຍຈີນ. ລາວເຊັງ ບອກວ່າ: “ທຸລະກິດແມ່ນສະໝ່ຳສະເໝີແຕ່ບໍ່ໃຫຍ່.” ໃນປີຫລັງໆມານີ້ ເມຍ ແລະ ລູກສາວໄດ້ເປີດຮ້ານອາຫານຢູ່ຖະໜົນຫລັກຂອງເມືອງ ແລ້ວມີຫ້ອງໃຫ້ເຊົ່າເປັນເດືອນສຳລັບພວກນັກທຸລະກິດທີ່ເດີນທາງໄປມາຈາກສິບສອງພັນນາ.

ໃນປີ 2004 ຄອບຄົວເຊັນ ເຮັດສວນເບ້ຍຢາງໃສ່ດິນທີ່ໄດ້ເຊົ່າມາຈາກບ້ານຊາວລື້ຢູ່ໃກ້ໆ. ຫນຶ່ງປີ ຕໍ່ມາພວກເຂົາເຈົ້າເຮັດສັນຍາປູກຢາງກັບຄະນະບ້ານໃນເນື້ອທີ່ 15 ຮຕ, ໃນນັ້ນ 30% ແມ່ນມອບໃຫ້ບ້ານ ພາຍຫລັງທີ່ພວກເຊັນ ໄດ້ບົວລະບັດໄປໄດ້ເຈັດປີທຳອິດ. ຜົນກຳໄລຂອງສ່ວນແບ່ງ ບ້ານຈະຮັກສາໄວ້ສຳລັບຊຸມຊົນ ແລະ ຈະນຳໃຊ້ສຳລັບສ້າງໂຄງລ່າງຈຳເປັນ ແລະ ສ້າງເປັນກອງທຶນສຸກເສີນຂອງບ້ານ. ລາວເຊັນ ມັກຈົ່ມເສຍດາຍທີ່ບໍ່ໄດ້ປູກຫຼາຍກວ່ານີ້. “ພວກເຮົາບໍ່ມີເງິນ. ດຽວນີ້ ຜູ້ຄົນຢູ່ແຖບນີ້ສະຫຼາດຂຶ້ນ, ຈຶ່ງເຮັດໃຫ້ສ່ວນແບ່ງເພີ່ມຂຶ້ນປະມານ 50/50 ໃນທຸກວັນນີ້.”

ນັບແຕ່ປີ 2006 ມາ, ສວນຢາງຂະໜາດນ້ອຍຂອງຄອບຄົວລາວເຊັນ ເກືອບບໍ່ເປັນຈຸດສົນໃຈຫລັກຂອງຄອບຄົວແລ້ວ. ຍ້ອນທຸລະກິດຮ້ານອາຫານລາວເຊັນ ໄດ້ຮູ້ຈັກພວກຣູເຟັນ ຊຶ່ງເປັນບໍລິສັດຢາງຕົ້ນຕໍຫນຶ່ງ ຈາກຈີນທີ່ເຮັດວຽກກັບທະຫານຢູ່ ຫຼວງນ້ຳທາ. ຄອບຄົວນີ້ກໍເລີຍກາຍເປັນຜູ້ຮັບເໝົາຕໍ່ຊ້ອງທີ່ສຳຄັນລາຍຫນຶ່ງ. ຄອບຄົວນີ້ກາຍເປັນຕ່ອງໂສ້ທີ່ສຳຄັນໃຫ້ແກ່ນັກລົງທຶນຂະໜາດໃຫຍ່, ຊາວຈີນທີ່ຍົກຍ້າຍເຂົ້າມາ ແລະ ຊຸມຊົນທ້ອງຖິ່ນພ້ອມທັງໄດ້ຮັບຜິດຊອບຊອກຫາແຮງງານໃໝ່ຫຼາຍກວ່າ 200 ຄົນ ຈາກບ້ານຕ່າງໆຢູ່ ເມືອງສິງ. ຄອບຄົວນີ້ຍັງຂາຍເບ້ຍຢາງສ່ວນໃຫຍ່ໃຫ້ບໍລິສັດຣູເຟງ. ລູກຊາຍຂອງເຊັນ, ດຽວນີ້ອາຍຸ 20 ປາຍປີ ໄດ້ກາຍເປັນຜູ້ຄຸມງານຫນຶ່ງຢູ່ບ່ອນຜະລິດເບ້ຍຢາງຂອງບໍລິສັດ ຢຸນນານຣັບເບີ ຊຶ່ງຕັ້ງຢູ່ 7 ກມ ຫ່າງຈາກເມືອງສິງ. ລູກຊາຍຜູ້ນີ້ ບໍ່ພຽງແຕ່ສາມາດເວົ້າພາສາລາວໄດ້ດີ, ແຕ່ຍັງສາມາດເວົ້າພາສາອາຄ່າໄດ້ດີສົມຄວນ, ເຮັດໃຫ້ລາວເປັນຄົນທີ່ເໝາະສົມຫຼາຍ ເພື່ອຄວບຄຸມງານທີ່ກຳມະກອນສ່ວນຫຼາຍແມ່ນອາຄ່າ.

ເມຍລາວເຊັນ ມີພີ່ນ້ອງຢູ່ສິບສອງພັນນາ, ຫນຶ່ງໃນນັ້ນ ປີຜ່ານມາໄດ້ອອກການເອົາບຳນານກ່ອນກຳນົດ ຈາກນິຄົມລັດທີ່ ເມືອງມາງ ແລ້ວມາເຮັດສວນເບ້ຍຢາງຢູ່ ເມືອງສິງ. ອີກຄົນຫນຶ່ງຍັງຢູ່ນິຄົມລັດ ແລະ ທ່ຽວຂ້າມຊາຍແດນໄປມາ. ເຂົາຄົນນີ້ພ້ອມນັກລົງທຶນອີກຈຳນວນຫນຶ່ງຮ່ວມມືກັບກອງທັບແຂວງ ແລະ ມີສວນປູກຂະໜາດໃຫຍ່ສົມຄວນຢູ່ກຸ່ມບ້ານມອມ. ຄອບຄົວເຊັນຍັງໃກ້ຊິດກັບຄົນຈີນໄຕ *ລາວເກງ* ຊຶ່ງເປັນຄອບຄົວທີ່ມີອຳນາດ ແລະ ເງິນ ກ່ອນລັດຖະບານຄອມມຸຍນິດເຂົ້າມາຢູ່ສິບສອງພັນນາແລ້ວແຍກກັນໄປຢູ່ເຂດຫ່າງໄກໃນໄທ, ລາວ

ແລະ ສະຫະລັດ ໃນໄລຍະມີຄື້ນຟອງປະຕິວັດຄອມມຸຍນິດ ແລະ ຄວາມວຸ້ນວາຍທາງການເມືອງ. ຫນຶ່ງໃນຈຳນວນພີ່ນ້ອງນັ້ນ ໄດ້ມາຢູ່ນຳກອງທັບລາວ ແລະ ດຽວນີ້ມີໜ້າທີ່ຕຳແໜ່ງສູງຢູ່ກອງທັບທີ່ ແຂວງ ຫຼວງນ້ຳທາ.

ຖ້າຈະເອີ້ນຮ້ານອາຫານເຊັ່ນ ວ່າເປັນຈຸດໃຈກາງຂອງເລື່ອງລາວກ່ຽວຂ້ອງກັບຢາງພາລາ ກໍຄືງບໍ່ເປັນການເວົ້າໂພດເກີນໄປ. ຮ້ານອາຫານນີ້ເຕັມໄປດ້ວຍນັກລົງທຶນທີ່ນັ່ງສຸມກັນຢູ່ໂຕະໄພ້ ຫລື ໄພ້ນົກກະຈອກມາຢອງ, ນອກນັ້ນ ກໍມີກຳມະກອນທີ່ມີຂີ້ຕົມຕິດໂຕລໍຖ້າຮັບເງິນແຮງງານ; ມັນເປັນບ່ອນທີ່ໄດ້ຮັບຂ່າວຫຼ້າສຸດທັນໃຈ ກ່ຽວກັບແນວໂນ້ມທາງທຸລະກິດ. ຍັງມີຮ້ານອາຫານຈີນອື່ນໆຈຳນວນຫນຶ່ງໃນເມືອງ ທີ່ມີບົດບາດຄ້າຍຄືກັນ ສຳລັບເສດຖະກິດຢາງພາລາທ້ອງຖິ່ນ. ບໍ່ມີແຫ່ງໃດທີ່ດີໄປກວ່ານີ້ແລ້ວ ທີ່ສຳລັບໃຊ້ສັງເກດການເຄື່ອນໄຫວຕະຫຼອດເວລາ ກ່ຽວກັບທຸລະກິດລະຫວ່າງຊາດ ຊຶ່ງກຳລັງດຳເນີນຢູ່ໃນຕົວຈິງ.

**ພາບເສັ້ນ 6.1 ການຂະຫຍາຍຕົວຂະໜານໃຫຍ່ຂອງການປູກຢາງ: ຕາໜ່າງທຸລະກິດ ແລະສາຍພົວພັນຂອງຜູ້ມີສ່ວນຮ່ວມ**



## ພາກ ທີ 7
## ຕ່ອງໂສ້ການຕະຫຼາດ ຂ້າມຊາຍແດນ

ໃນພາກທີ 5 ແລະ 6 ໄດ້ລົງເລິກເລື່ອງການຂະຫຍາຍຕົວເປັນຂະໜານໃຫຍ່ຂອງກິດຈະກຳສວນຢາງຢູ່ ແຂວງ ຫຼວງນ້ຳທາ ຈາກແງ່ມຸມປະເພດການລົງທຶນ ແລະ ຕາໜ່າງທຸລະກິດ. ບົດນີ້ຈະສຶກສາເບິ່ງຕ່ອງໂສ້ການຕະຫຼາດທີ່ຊາຍແດນ ແລະ ຈະເວົ້າເລື່ອງຮູບແບບການໄຫຼຂອງປັດໄຈນຳເຂົ້າການຜະລິດ (input) ແລະ ຜົນໄດ້ຮັບ (output) ຈາກທຸລະກິດນີ້.

ຮູບເສັ້ນ 7.1 ສະເໜີເປັນຂັ້ນຕອນເພື່ອໃຫ້ເຫັນເຖິງຂະບວນການຜະລິດ ແລະ ຕະຫຼາດ. ທ່ານຈະເຫັນຂະບວນການນີ້ດ້ວຍຮູບພາບຢູ່ເອກະສານແນບທ້າຍ 3. ນັບແຕ່ຂັ້ນຕອນການກ້າເບ້ຍຈົນຮອດການປຸງແຕ່ງຜະລິດຕະພັນຂັ້ນສຸດທ້າຍ ເຫັນວ່າສ່ວນໃຫຍ່ຈະຫລີກບໍ່ພົ້ນອິດທິພົນ ຂອງຜູ້ລົງທຶນລະຫວ່າງຊາດໄດ້. ໃນນີ້ ມີບາງແນວໂນ້ມທີ່ຄວນເອົາໃຈໃສ່ສັງເກດ:

ເບ້ຍຢາງທີ່ນຳໃຊ້ຢູ່ ຫຼວງນ້ຳທາ ເມື່ອກ່ອນເຄີຍເອົາມາແຕ່ສິບສອງພັນນາແຕ່ບ່ອນດຽວ, ແຕ່ທ່າອ່ຽງໃນປັດຈຸບັນແມ່ນປີ້ນກັນ ໃນໄລຍະບໍ່ເທົ່າໃດປີຜ່ານມາ, ທັງນີ້ແມ່ນຄວາມເຫັນຂອງຜູ້ຄ້າຂາຍເບ້ຍຢາງຢູ່ ເມືອງນາງ. ລາຄາເບ້ຍທຳມະດາຢູ່ລາວດຽວນີ້ຖືກກວ່າ, ແຕ່ເບ້ຍຢູ່ຖົງ ຊຶ່ງໝາຍຄວາມວ່າເບ້ຍຄຸນນະພາບ ແລະ ມີອັດຕາລອດສູງກວ່າ ຍັງຄົງເອົາມາຈາກສິບສອງພັນນາຢູ່. ບັນດາບໍລິສັດໃຫຍ່ຈາກຈີນມີສວນປູກເບ້ຍຂອງເຂົາເອງຢູ່ລາວ ເພື່ອຕອບສະໜອງຄວາມຕ້ອງການໃນທ້ອງຖິ່ນຂອງບໍລິສັດເອງ. ເຊັ່ນດຽວກັນກັບນັກລົງທຶນຂະໜາດນ້ອຍ ແລະ ຊາວບ້ານກໍປູກເບ້ຍເພື່ອຂາຍໃຫ້ຊາວບ້ານໃນທ້ອງຖິ່ນ, ໃຫ້ບໍລິສັດຈີນ ຫລື ບໍ່ກໍຂາຍຂ້າມຊາຍແດນ. ອີງຕາມຜູ້ຊ່ຽວຊານປູກຢາງບອກວ່າ ອາກາດຢູ່ຫວ່າງພູເມືອງສິງນັ້ນ ແມ່ນເໝາະ ສົມຫລາຍ ສຳລັບການປູກ ແລະ ຂະຫຍາຍເບ້ຍຢາງພາລາ. ດັ່ງນັ້ນ ໃນຫຼາຍປີຂ້າງໜ້າ ເມືອງສິງ ຍັງຈະເປັນໃຈກາງທີ່ກິດຈະກຳກ້າເບ້ຍທີ່ຈະສືບຕໍ່ຂະຫຍາຍຕົວ, ໂດຍສະເພາະຢ່າງ ຍິ່ງໃນເມື່ອນິຄົມລັດຈຳນວນຫນຶ່ງຢູ່ທາງເບື້ອງຈີນ ມີຕົ້ນຢາງທີ່ບໍ່ຜະລິດນ້ຳຢາງແລ້ວ, ດັ່ງນັ້ນຈະຕ້ອງປູກຕົ້ນຢາງໃໝ່.

ພ້ອມດຽວກັນນັ້ນ ກໍອາດຄ່ອຍໆມີການຫັນເອົາຂະບວນການປຸງແຕ່ງໄລຍະຕົ້ນຈາກສິບສອງພັນນາມາຫາ ຫຼວງນ້ຳທາ. ລັດຖະບານສິບສອງພັນນາມີທ່າທີຈະໃຫ້ໂຮງງານທ້ອງຖິ່ນປຸງແຕ່ງນ້ຳຢາງເສຍພາສີ ຍ້ອນສ້າງມົນລະພິດຕໍ່ສິ່ງແວດລ້ອມ, ຊຶ່ງມັນຈະເພີ່ມມູນຄ່າການຜະລິດພາຍໃນ (ໜັງສືພິມຊາວໜຸ່ມຈີນລາຍວັນ, ມິຖຸນາ 2007). ທາງດ້ານລະບຽບການຂອງລາວຊ້ຳພັດເກືອບວ່າບໍ່ມີຫຍັງເລີຍກ່ຽວກັບການປ້ອງກັນຜົນກະທົບຈາກອຸດສາຫະກຳປຸງແຕ່ງ ທີ່ມີຕໍ່ທຳມະຊາດ. ນັບແຕ່ບໍລິສັດຢາງພາລາຈີນ-ລາວ ໄດ້ສ້າງໂຮງງານປຸງແຕ່ງທຳອິດຢູ່ ຫຼວງນ້ຳທາໃນຕົ້ນຊຸມປີ 2000 (ຊຶ່ງໄດ້ປິດລົງນັບແຕ່ນັ້ນມາຍ້ອນການສະໜອງນ້ຳຢາງມີຈຳກັດ), ບໍລິສັດເຊັ່ງລີໄດ້ສຳເລັດການສ້າງໂຮງງານຫນຶ່ງຢູ່ ເມືອງສິງ. ບໍລິສັດຈີນໃຫຍ່ອື່ນໆກໍມີແຜນການຈະສ້າງຕື່ມຢູ່ທົ່ວ ແຂວງ ຫຼວງນ້ຳທາ. ໃນໄລຍະລໍຖ້ານີ້ ພວກນັກລົງທຶນຈີນຈຳນວນຫນຶ່ງໄດ້ເລີ່ມຕົ້ນອີ້ງເຕັ້ນໃຫ້ອຳນາດປົກຄອງ ແຂວງ ຫຼວງ ນ້ຳທາ ຈຳກັດປະລິມານນ້ຳຢາງລາວທີ່ສົ່ງອອກ ແລະໃຫ້ສົ່ງອອກແຕ່ຢາງປຸງແຕ່ງເທົ່ານັ້ນ.

ຍັງມີສະພາບບໍ່ແນ່ນອນຢູ່ ກ່ຽວກັບວິທີທີ່ຈະສົ່ງອອກນ້ຳຢາງໃນປະລິມານຫຼວງຫຼາຍຈາກລາວໄປຍັງຈີນໃນໄລຍະບໍ່ເທົ່າໃດປີຂ້າງໜ້ານີ້. ປັດຈຸບັນ ບໍລິມາດສົ່ງອອກແມ່ນຂ້ອນຂ້າງໜ້ອຍ, ນ້ຳຢາງແມ່ນມາຈາກບ້ານ ແລະ ບັນດາໝູ່ບ້ານຢູ່ລຽບຊາຍແດນເຊັ່ນ: ອຸດົມສິນ ແລະ ກຸ່ມບ້ານມອມຢູ່ ເມືອງສິງ. ອີງຕາມຫ້ອງການກະສິກຳປ່າໄມ້ແຂວງ, ປະລິມານສົ່ງອອກທັງໝົດຈາກ ຫຼວງນ້ຳທາ ໄປຈີນມີ 22 ໂຕນ ໃນປີ 2002, ໄດ້ເພີ່ມຂຶ້ນຫຼາຍສົມຄວນໃນແຕ່ລະປີຕໍ່ໆມາຈົນຮອດ 400 ໂຕນໃນປີ 2006. ເຖິງຢ່າງໃດກໍດີ, ຫ້ອງການກະສິກຳປ່າໄມ້ແຂວງ ຮັບວ່າ

ຈຳນວນສົ່ງອອກນີ້ແມ່ນມາຈາກບ້ານຫາດຍາວ ຊຶ່ງເປັນບ້ານດຽວທີ່ຂາຍຢາງໃຫ້ແກ່ຈີນໂດຍຜ່ານຊ່ອງທາງທີ່ເປັນທາງການ ໃນເວລາຂຽນລາຍງານນີ້. ສະມາຄົມທີ່ລາຍງານວ່າ ພວກເພິ່ນພຽງແຕ່ຈ່າຍພາສີກຳໄລ 35% ໃຫ້ແກ່ແຂວງ, ທາງພໍ່ຄ້າຂາຍຈີນຈ່າຍຄ່າທຳນຽມ ແລະ ພາສີທາງເບື້ອງຈີນ. ເຖິງຢ່າງໃດກໍຕາມ ເຈົ້າໜ້າທີ່ຈີນທີ່ຊາຍແດນບໍ່ໄດ້ແຈ້ງໃຫ້ຮູ້ ຂໍ້ມູນກ່ຽວກັບຄ່າທຳນຽມພາສີ. ໃນການສຳພາດເວລາຕໍ່ມາ ພວກພໍ່ຄ້າເກັບຊື້ຢູ່ ກໍປະຕິເສດໂດຍບໍ່ໄດ້ບອກຂັ້ນຕອນ ແລະ ຄ່າໃຊ້ຈ່າຍທີ່ແທ້ຈິງໃນການຄ້າຂາຍຂ້າມຊາຍແດນນັ້ນ.

**ພາບເສັ້ນ 7.1 ຕ່ອງໂສ້ການຕະຫຼາດທີ່ຊາຍແດນ**




ອີງຕາມ ອັນເດຣຍ ສະປຣິງເກີ-ເຮັນເຊີ (2005)

ການຂາຍແບບບໍ່ເປັນທາງການມີຢູ່ຫຼາຍຮູບຫຼາຍສີ ແລະ ມັກຈະມີຢູ່ຫຼາຍຕາມເຂດໃກ້ໆຊາຍແດນ, ແຕ່ຕົວເລກການຂາຍແມ່ນກໍບໍ່ໄດ້ໝົດ. ຊາວບ້ານບາງຄົນຢູ່ກຸ່ມບ້ານມອມສວຍໂອກາດເອົາຢາງທີ່ໄດ້ປາດແລ້ວນັ້ນປົນກັບຢາງຈີນຈາກສວນປູກຢາງທີ່ ເມືອງມູນ, ສວນນີ້ຍາວຢຽດອອກໄປຫາເສັ້ນຊາຍແດນກາຍຈຸດພາສີຈີນອີກ. ການຂາຍບາງຄັ້ງກໍດຳເນີນໄປໃນຄວາມມືດຂອງກາງຄືນຕາມທາງຍ່າງເພື່ອຫລີກສາຍຕາເຈົ້າໜ້າທີ່ດ່ານກວດກາຊາຍແດນ. ຢູ່ບໍລິເວນ ບ້ານບວກຄຸ ຊຶ່ງບໍ່ມີຈຸດກວດກາຊາຍແດນຢູ່ທັງສອງຟາກ ຊຶ່ງສາມາດໄປເຖິງ ເມືອງມູນນັ້ນຊາວບ້ານມີເສລີພາບຫຼາຍກວ່າທີ່ຈະຄ້າຂາຍຢາງ ແລະ ເຄື່ອງຂອງອື່ນໆລະຫວ່າງຊາຍແດນປະເທດ. ໃນເມື່ອປະລິມານມີໜ້ອຍ, ຊາວບ້ານປະກົດວ່າ ສາມາດນຳເອົາຢາງຜ່ານດ່ານກວດກາຊາຍແດນທາງການ ໂດຍບໍ່ຕ້ອງເສຍຄ່າພາສີ ຫລື ທຳນຽມໃດໆ ອາດຈະເປັນຍ້ອນວ່າມີຂໍ້ຕົກລົງດ້ານຊາຍແດນລະຫວ່າງຈີນ ແລະ ລາວ ທີ່ອະນຸຍາດໃຫ້ປະຊາຊົນອາໃສຢູ່ພາຍໃນ 20 ກມ ຈາກເສັ້ນຊາຍແດນຂອງສອງປະເທດໃຫ້ສາມາດຄ້າຂາຍປອດພາສີການຄ້າໃນມູນຄ່າສູງເຖິງ 3,000 ຢວນຕໍ່ຖ້ຽວການຄ້າ. ເຖິງຢ່າງໃດກໍຕາມ ຊາວບ້ານກຸ່ມບ້ານມອມຢູ່ ເມືອງສິງ ຈົ່ມວ່າ ມີພໍ່ຄ້າບາງຄົນຖືກພາສີຈີນທີ່ດ່ານຊາຍແດນ ເມືອງມູນ ປັບໄໝ, ແຕ່ເຂົາເຈົ້າບໍ່ແນ່ໃຈວ່າໄໝຍ້ອນເຫດຜົນອັນໃດ ແລະ ພາຍໃຕ້ມາດຕະຖານອັນໃດ.

ຄວາມບໍ່ແນ່ນອນທີ່ກ່ຽວຂ້ອງກັບການຄ້າລະຫວ່າງຊາຍແດນ ຍິ່ງຈະເປັນຜົນສະທ້ອນເພີ່ມຂຶ້ນໃນເວລາບໍ່ຮອດຫ້າປີໃນເມື່ອຈຳນວນຕົ້ນຢາງຢູ່ ຫຼວງນ້ຳທາ ແກ່ພໍຈະປາດໄດ້. ຍັງມີຄວາມເປັນຫ່ວງຕົ້ນຕໍສອງຢ່າງຄື: 1). ຊາວບ້ານ, ບໍລິສັດລາວ ແລະ ຜູ້ລົງທຶນຈີນຂະໜາດນ້ອຍອາດມີຂໍ້ເສຍປຽບໃນການສົ່ງອອກນ້ຳຢາງ ເມື່ອທຽບໃສ່ນັກລົງທຶນ

ຈີນຂະໜາດໃຫຍ່ ຜູ້ທີ່ໄດ້ຮັບການສະໜັບສະໜູນດ້ວຍບັນດານະໂຍບາຍທົດແທນການປູກຝິ່ນ, ເມື່ອເປັນຄືແນວນັ້ນ ມັນເຮັດໃຫ້ຜະລິດຕະພັນຂອງເຂົາເຈົ້າບໍ່ຕ້ອງເສຍພາສີ ແລະ ພາສີມູນຄ່າເພີ້ມໃນເວລານຳເຂົ້າ ຈຶ່ງມີລາຄາແຂ່ງຂັນທີ່ດີກວ່າ. ສວນສ່ວນຫຼາຍຂອງບໍລິສັດໃຫຍ່ນີ້ ຕັ້ງຢູ່ເຂດຫ່າງໄກທີ່ຈັດເປັນເຂດ 1; ອີງຕາມລະບຽບການລາວ ປັດຈຸບັນເພື່ອສົ່ງເສີມການລົງທຶນ ບໍລິສັດໃຫຍ່ເຫລົ່ານີ້ເສຍພາສີໃນອັດຕາຫຼຸດຜ່ອນພຽງ 10% ເປັນເວລາເຈັດປີພາຍຫລັງໄດ້ປາດຢາງ (ບົດທີ 3), ຊຶ່ງເຮັດໃຫ້ພວກເຂົາສາມາດແຂ່ງຂັນຫຼາຍກວ່າເກົ່າອີກ. 2). ຢາງພາລາ ແມ່ນອຸດສາຫະກຳທີ່ໄດ້ຮັບການປົກປ້ອງໃນຈີນ. ໃນກໍລະນີມີການສະໜອງຫຼາຍ ກວ່າຄວາມຕ້ອງການ, ນອກເໜືອໄປຈາກລາຄາຂາຍຢາງຫຼຸດໜ້ອຍລົງ, ຢາງຂອງລາວຍິ່ງຈະຕົກໃນທ່າເສຍປຽບຈາກຂໍ້ຈຳກັດດ້ານໂກຕາ ແລະ ພາສີ ຫລື ແມ້ແຕ່ຄວາມເປັນໄປໄດ້ທີ່ຊາຍແດນອາດຖືກປິດ[22]. ຊາວກະສິກອນ ແລະນັກລົງທຶນຢູ່ສິບສອງພັນນາຈະໄດ້ຮັບການປົກປ້ອງສ່ວນໃດສ່ວນໜຶ່ງ ຈາກນະໂຍບາຍປົກປ້ອງຂອງລັດຖະບານຈີນ, ແຕ່ວ່າທາງເບື້ອງລາວ ຍິ່ງຈະຕົກຢູ່ສະພາບການຜັນຜວນຂອງຕະຫຼາດແບບເພີ້ມທະວີ ຍ້ອນການປົກປ້ອງດັ່ງກ່າວນັ້ນ.

ແມ່ນຢູ່ ທີ່ມີຄວາມເປັນຫ່ວງວ່າ ຊາວບ້ານລາວອາດຖືກຂູດຮີດ ໂດຍພໍ່ຄ້າມືກາງຈີນຂາຍນ້ຳຢາງ, ແຕ່ປະກົດວ່າເຂົາເຈົ້າກໍບໍ່ຖືກເອົາປຽບຫຼາຍໄປກວ່າຊາວກະສິກອນຈີນ. ການມີໜ້າຢູ່ທົ່ວທຸກແຫ່ງຂອງພໍ່ຄ້າມືກາງ ຜູ້ທີ່ສ້າງຄວາມດຸ່ນດ່ຽງຂອງສະພາບຂຶ້ນລົງເປັນປະຈຳລະຫວ່າງການສະໜອງ ແລະ ຄວາມຕ້ອງການ ປະກົດວ່າການມີໜ້ານັ້ນໄດ້ກາຍເປັນສ່ວນໜຶ່ງທີ່ແຍກອອກບໍ່ໄດ້ຈາກເສດຖະກິດຢາງໃນເຂດສິບສອງພັນນາ. ເມື່ອໃດ ຫາກມີການສະໜອງໜ້ອຍ, ພໍ່ຄ້າມືກາງສ່ວນຫຼາຍຈະໄດ້ຖືກຕອບແທນໂດຍໂຮງງານປຸງແຕ່ງໂດຍທີ່ພໍ່ຄ້າຈະສົ່ງຢາງເຂົ້າໂຮງງານ (ດ້ວຍຮູບແບບຮຸຍກູ/huikou). ໃນເວລາທີ່ມີຜະລິດຕະພັນມີຫຼາຍໂພດ, ພໍ່ຄ້າມືກາງກໍຈະມີສິ່ງຈູງໃຈໃຫ້ພະນັກງານຢູ່ໂຮງງານປຸງແຕ່ງອຳນວຍຄວາມສະດວກຮັບເອົາສິນຄ້າຂອງຕົນ. ກຳໄລຂອງພໍ່ຄ້າມືກາງຂະໜາດນ້ອຍແມ່ນຈຳກັດ ບໍ່ມີຫຼາຍ. ຕົວຢ່າງ: ຢູ່ບ້ານ ຫາດຍາວ, ພາຍຫລັງໄດ້ທົດລອງສົ່ງນ້ຳຢາງໄປ ເມືອງຫລ້າ ເພື່ອຂາຍໂດຍກົງ, ແຕ່ເມື່ອຄິດໄລ່ຄ່າຂົນສົ່ງ ແລະ ຄ່າພາສີເຂົ້າໄປແລ້ວ ສະມາຄົມບ້ານສະຫຼຸບໄດ້ວ່າມັນບໍ່ກຸ້ມຄ່າທີ່ຈະຫຼີກ ບໍ່ໝູນໃຊ້ພໍ່ຄ້າມືກາງ. ເຖິງຢ່າງໃດກໍຕາມ ຕ້ອງຮັບຮູ້ວ່າ ຊາວບ້ານທີ່ປັດຈຸບັນສົ່ງອອກຢາງພາລາມີແນວໂນ້ມວ່າ ມີບົດຮຽນຫຼາຍກວ່າເກົ່າໃນດ້ານການຄ້າຂາຍຜ່ານຊາຍແດນ ແລະ ເຂົາເຈົ້າກໍໄດ້ສ້າງສາຍພົວພັນທີ່ກວ້າງຂວາງຢູ່ຈຸດຊາຍແດນ; ຖ້າຈະເວົ້າແລ້ວ ມັນໄດ້ຊີ້ໃຫ້ເຫັນເຖິງຄຸນນະພາບຄວາມສາມາດທີ່ຍາດມາໄດ້ ຍ້ອນມີທ່າແຮງທີ່ໄດ້ເລີ້ມຕົ້ນກ່ອນໝູ່. ຊາວບ້ານເຫລົ່ານີ້ກຳສະພາບໄດ້ດີດ້ານແນວໂນ້ມຕະຫຼາດຫລ້າສຸດ ຢູ່ສິບສອງພັນນາ ພ້ອມທັງຢູ່ໃນທ່າແຂງແຮງສົມຄວນໃນການຕໍ່ລອງ. ໃນຊຸມປີຂ້າງໜ້າ ເວລາທີ່ຕົ້ນຢາງຢູ່ເຂດຫ່າງໄກສອກຫລີກກວ່າ ສາມາດເລີ່ມຕົ້ນປາດໄດ້ຄືກັນ, ຊາວບ້ານເຫລົ່ານີ້ຈະຢູ່ໃນທ່າສ່ຽງກວ່າທີ່ຈະຖືກຂູດຮີດໂດຍພໍ່ຄ້າມືກາງ.

ຕາຕະລາງ 7.1 ຊີ້ໃຫ້ເຫັນການປຽບທຽບປັດໄຈນຳເຂົ້າຕົ້ນຕໍ ແລະ ລາຄາຜົນຜະລິດຢູ່ຫຼວງນ້ຳທາ ແລະ ສິບສອງພັນນາ. ອັດຕາທີ່ແຕກຕ່າງກັນຫຼາຍທີ່ສຸດແມ່ນລາຄາດິນ ແລະ ແຮງງານ[23]. ສັງເກດວ່າລາຄາດິນເຂດພູດ

22 ເຖິງແມ່ນວ່າຄວາມຕ້ອງການຢາງທຳມະຊາດຂອງຈີນມີສູງ ແລະ ຄາດວ່າຈະສືບຕໍ່ເພີ່ມຂຶ້ນ, ຄວາມສ່ຽງໃນດ້ານຜະລິດຫຼາຍກ່ວາຄວາມຕ້ອງການກໍອາດມີໄດ້. ການສະໜອງພາຍໃນຈີນແມ່ນຢູ່ເກົ່າ ຫຼື ຫຼຸດລົງ, ແຕ່ລັດຖະບານຈີນຊຸກຍູ້ຢາງບໍ່ພຽງແຕ່ຢູ່ພາກເໜືອມຽນມາ ແລະລາວ, ແຕ່ມີລາຍງານວ່າເພິ່ນໄດ້ສົ່ງເສີມໃຫ້ປູກຢູ່ອະເມຣິກາໃຕ້ ແລະອາຟຣິການຳ.

23 ລາຄາດິນໄດ້ລວບລວມມາຈາກການເຊົ່າໂດຍກົງ ຫລື _ຊື້ດິນໂດຍຜູ້ລົງທຶນຂະໜາດນ້ອຍນຳຊາວບ້ານ ຫລືລະຫວ່າງຊາວບ້ານນຳກັນ ນີ້ບໍ່ຄວນສັບສົນກັບໂຄງການສັນຍາປູກຢາງ (“1+4” ຫືຼ “2+3”) ຊຶ່ງໃນນີ້ຊາວສວນເອົາດິນເປັນສ່ວນປະກອບ. ລາຄາດິນຢູ່ທີ່ນີ້ກໍບໍ່ສະທ້ອນໃຫ້ເຫັນເຖິງຄ່າທຳນຽມສຳປະທານທີ່ຜູ້ລົງທຶນຂະໜາດ

ອຍຢູ່ສິບສອງພັນນາບໍ່ພຽງແຕ່ສູງກວ່າຫຼາຍ, ແຕ່ລາຄາຍັງມີຫຼາຍລະດັບທີ່ແຕກຕ່າງກັນໄປ ຊຶ່ງມັນຈະຂຶ້ນກັບສະພາບຄຸນນະພາບດິນ, ຄວາມສູງຊັນຂອງເຈີ້ຍພູ, ຈຸດທີ່ຕັ້ງ ແລະ ການເຂົ້າເຖິງ. ທຽບໃສ່ຄວາມແຕກຕ່າງກັນທາງລາຄາຢູ່ ຫຼວງນ້ຳທາ ແມ່ນບໍ່ສະລັບສັບຊ້ອນປານນັ້ນ, ຊຶ່ງນີ້ເຮັດໃຫ້ເຂົ້າໃຈວ່າ ຊາວບ້ານຍັງຈະສາມາດສວຍໃຊ້ປະໂຫຍດໃຫ້ໄດ້ຫຼາຍທີ່ສຸດໃນເວລາເຈລະຈາຕໍ່ລອງຊື້ຂາຍດິນ. ໃນຂະນະທີ່ຊາວບ້ານຈີນມັກຈະລະແວງທີ່ສຸດກ່ຽວກັບໄລຍະເວລາໃຫ້ເຊົ່າດິນ ແລະ ມັກຈະມີເອກະສານທາງກົດໝາຍເປັນອັນຄ້ຳປະກັນ (ເອກະສານທັງໝົດເວົ້າແຈ້ງກ່ຽວກັບການເຊົ່າດິນສຳລັບ ປູກໄມ້ ແຕ່ຮອບດຽວ), ຊາວບ້ານລາວມັກຈະບໍ່ຈຳແນກລະຫວ່າງການເຊົ່າດິນສຳລັບຮອບປູກຕົ້ນໄມ້ ຫລື ສຳລັບໃຊ້ໄປຕະຫຼອດ. ໃນເມື່ອບໍ່ມີໃບຕາດິນ, ນີ້ມັນຍິ່ງເພີ່ມຄວາມສ່ຽງວ່າ ອະນາຄົດອາດມີການຂັດແຍ່ງໂຕ້ຖຽງກັນ ແລະ ເຮັດໃຫ້ຊາວບ້ານລາວມີໂອກາດສູນເສຍຊັບພະຍາກອນດິນຂອງຕົນໄປ.

**ຕາຕະລາງ 7.1 ທຽບລາຄາປັດໄຈນຳເຂົ້າຕົ້ນຕໍ ແລະ ລາຄາຜົນຜະລິດ**

| | ຫຼວງນ້ຳທາ (ສິງ ແລະ ລອງ) | ສິບສອງພັນນາ (ເມືອງມາງ ແລະ ເມືອງ ພົງ) |
|---|---|---|
| ເບ້ຍ (ຢວນ) | | |
| ທຳມະດາ | 2.3-3.1 | 3 |
| ທີ່ຖືງ | ບໍ່ກ່ຽວຂ້ອງ | 6 |
| ແຮງງານ (ຢວນ/ຄົນ/ວັນ) | 25-30 | 50 |
| ດິນ<br>ພູສູງ (ຢວນ/ຮຕ/ຮອບປູກ ຫລື ຕະຫຼອດໄປ) | 4,000-5,000 | 7,500-45,000 |
| ດິນທົ່ງພຽງ (ຢວນ/ຮຕ/ລະດູການ) | 50-100 | 500-1,000 |
| ນ້ຳຢາງແຫ້ງ (ກ້ອນ ຫລື ຈຽວຕູ, ຈຽວກ້ອຍ) | | |
| 2007 (ຢວນ/ກລ) | 7-9 | 7-9 |
| 2006 (ຢວນ/ກລ) | 10-12 | 10-12 |
| ຕົ້ນໄມ້ເຊົາຜະລິດນ້ຳຢາງ (ຢວນ/ຕົ້ນອາຍຸປະມານ 30 ປີ) | ບໍ່ກ່ຽວຂ້ອງ | 200 |

ດັ່ງທີ່ໄດ້ຄາດຄະເນໃນພາກທີ 5, ການຫລັ່ງໄຫຼຂອງແຮງງານລະຫວ່າງຊາຍແດນໃນຈຳນວນຫຼວງຫຼາຍອາດເກີດຂຶ້ນໄດ້. ການມີຕົວແບບທີ່ຊັດເຈນເປັນສິ່ງຈຳເປັນເພື່ອຈະໄດ້ຄຳຕອບອັນ ແນ່ນອນ, ແຕ່ມາຄິດໄລ່ແບບງ່າຍໆໄວໆ ຕໍ່ໄປນີ້ເບິ່ງ: ອີງຕາມການສຳຫຼວດ ພົນລະເມືອງແຫ່ງຊາດ 2005, ເມືອງສິງ ມີພົນລະເມືອງທັງໝົດ 30,500 ຄົນ, ໃນນີ້ ລວມມີທັງເດັກນ້ອຍ, ຄົນເຖົ້າແກ່ ແລະ ພິການ. ອີງຕາມການຄາດຄະເນທາງການ, ເພິ່ນໄດ້ປູກຫລືມີແຜນປູກຕົ້ນຢາງໃນເນື້ອທີ່ 6,500 ຮຕ ມາເຖິງທ້າຍປີ 2007, ແຕ່ເນື້ອທີ່ຕົວຈິງໜ້າຈະກວ້າງກວ່ານີ້. ໃນອັດຕາຄວາມສາມາດປາດຢາງ 1.3 ຮຕ/ຄົນ Alton et. al. (2005), ເມືອງສິງ ຈະຕ້ອງໃຊ້ 20% ຂອງພົນລະເມືອງຂອງຕົນທັງໝົດໄປປາດຢາງໃນເນື້ອທີ່ປູກຢາງ (ຄາດຄະເນ) ໃນປັດຈຸບັນ. ເຖິງແມ່ນວ່າ ການຂາດ

---

ໃຫຍ່ຈ່າຍໃຫ້ລັດຖະບານລາວ. ຕົວຢ່າງ: Yunnan Rubber ຈ່າຍ $ 6 /ຮຕ/ປີ ໃຫ້ລັດຖະບານສຳລັບເຂດສຳປະທານ.

ແຄນແຮງງານບາງສ່ວນອາດຈະສືບຕໍ່ແກ້ໄຂໄດ້ ດ້ວຍການໄດ້ແຮງງານເຄື່ອນຍ້າຍພາຍໃນປະເທດທີ່ມາຈາກເຂດພູດອຍທາງຕາເວັນອອກສ່ຽງເໜືອຂອງລາວ. ແຕ່ມັນຍັງບໍ່ແນ່ເທື່ອວ່າ ແຮງງານເຄື່ອນຍ້າຍດັ່ງກ່າວນັ້ນຈະພຽງພໍຫລືບໍ່. ນອກນັ້ນແລ້ວ ເຖິງວ່າຄ່າແຮງງານຈີນຈະແພງກວ່າຄ່າແຮງງານລາວກໍຕາມ, ນັກລົງທຶນຈີນຊ້ຳພັດມັກໃຊ້ແຮງງານຈີນຫຼາຍກວ່າ ຍ້ອນວ່າເຂົາມີຄຸນສົມບັດມັກເຮັດວຽກຫຼາຍກວ່າ, ມີທັກສະສູງກວ່າ ແລະ ສາມາດຄຸ້ມຄອງໄດ້ງ່າຍກວ່າ. [24] ປັດໄຈຕົ້ນຕໍທີ່ຖ່ວງເວລາບໍ່ໃຫ້ມີການເຂົ້າມາຂອງແຮງງານໃນຈຳນວນຫຼາຍໃນປັດຈຸບັນແມ່ນ ຍ້ອນຄ່າທຳນຽມສູງສຳລັບອອກໃບອະນຸຍາດໃຫ້ກຳມະກອນຕ່າງປະເທດ ສາມາດ ພັກຢູ່ລາວຊົ່ວຄາວໄດ້ຢ່າງຖືກຕ້ອງຕາມກົດໝາຍ. ເຖິງຢ່າງໃດກໍຕາມ ຄ່າທຳນຽມດັ່ງກ່າວ ອາດຈະບໍ່ເປັນສິ່ງກີດຂວາງເທົ່າໃດ ເມື່ອໃດຫາກໄດ້ປາດຢາງແລ້ວ ແລະ ເມື່ອນັ້ນການເຫັນຜົນກຳໄລແມ່ນຢູ່ບໍ່ໄກ.

[24] ກຳມະກອນຈີນຢູ່ ສິບສອງພັນນາ ແລະ ຢູ່ຫຼວງນ້ຳທາໄດ້ຮັບອັດຕາຄ່າແຮງງານຄືກັນ, ແຕ່ຄ່າແຮງງານເຂົາເຈົ້າ ຈະສູງກ່ວາຢູ່ລາວ ສຳລັບນັກລົງທຶນຖ້າຄິດໄລ່ຄ່າຂົນສົ່ງ ແລະ ຄ່າເຮັດເອກະສານທາງການ.

# ພາກທີ 8
# ຫນຶ່ງຊາຍແດນ, ສອງປະເທດ, ຫນຶ່ງເສັ້ນທາງ

## 8.1 ສະພາບລວມກ່ຽວກັບການປູກຢາງຢູ່ເຂດ ສິບສອງພັນນາ

ພູມີປະເທດສວນປູກຢາງຢູ່ສິບສອງພັນນາສາມາດແບ່ງອອກເປັນສອງປະເພດສະເພາະໃຜລາວ ແຕ່ຫາກມີສ່ວນພົວພັນກັນ: ສວນທີ່ໄດ້ພັດທະນາໂດຍນິຄົມລັດ ແລະ ສວນທີ່ປູກດິນຫຼາຍສົມ ຄວນໃນເວລາຕໍ່ມາໂດຍຊາວບ້ານ, ສະຫະກອນບ້ານ, ລັດຖະບານທ້ອງຖິ່ນ ແລະ ໂດຍນັກລົງທຶນເອກະຊົນ, ຊຶ່ງລວມທັງໝົດນີ້ ໃນພາສາຈີນເອີ້ນວ່າ: "ມິນຢີງ/minying". ປັດຈຸບັນ ສວນປູກທັງໝົດທີ່ເປັນຂອງນິຄົມລັດແມ່ນຫຼຸດ 50% ເລັກນ້ອຍຂອງເນື້ອທີ່ສວນຢາງທັງໝົດ, ແຕ່ວ່າ ລະດັບການຜະລິດຂອງນິຄົມເຫລົ່ານີ້ ສາມາດລື່ນລະດັບຂອງສວນປູກອື່ນໆເຖິງ 50% ຍ້ອນມີການບໍລິຫານຄຸ້ມຄອງຢ່າງມີປະສິດທິຜົນ ແລະ ຍ້ອນມີເຕັກໂນໂລຊີທີ່ທັນສະໄໝ. ຂໍ້ມູນດ້ານເນື້ອທີ່ສວນຢາງທັງໝົດໃນແງ່ປະຫວັດສາດ ແລະ ສະພາບປັດຈຸບັນ ໄດ້ມີການເກັບກຳບັນທຶກໄວ້. ຂໍ້ມູນລ້າສຸດທີ່ມີຈາກແຫລ່ງສິ່ງພິມຊີ້ໃຫ້ເຫັນວ່າ ຕົກມາຮອດທ້າຍເດືອນມີນາ 2005 ຢູ່ສິບສອງພັນນາມີເນື້ອທີ່ປູກຢາງທຳມະຊາດທັງໝົດມີ 2.5 ລ້ານມູ, ໃນນັ້ນ ຕົ້ນຢາງໃນເນື້ອທີ່ 1.4 ລ້ານມູ ແມ່ນໄດ້ປາດແລ້ວ (ໜັງສືພິມສິບສອງພັນນາ, 29 ມີນາ 2007).

ໃນນາມວ່າເປັນຄວາມພະຍາຍາມອັນຫນຶ່ງເພື່ອສ້າງປະເທດໃນໄລຍະຕົ້ນໆ, ກອງຜະລິດ ແລະ ກໍ່ສ້າງຢຸນນານ, ຕົ້ນແບບຂອງນິຄົມລັດຢຸນນານ, ໄດ້ລິເລີ່ມປູກຢາງຢູ່ເຂດສິບສອງພັນນາ ດົນ ນານມາແລ້ວ ນັບຖອຍຫລັງໄປຫາຊຸມປີ 1950 ພຸ້ນ. ໃນຊຸມປີ 1960 ຊາວໜຸ່ມເມືອງໃຫຍ່ທີ່ມີການສຶກສາດີທີ່ມາຈາກບັນດາແຂວງພາກກາງ ແລະ ແຄມຝັ່ງທະເລ ຮ່ວມກັບທະຫານບຳນານຂອງກອງທັບປົດປ່ອຍປະຊາຊົນຈີນ ໄດ້ຫລັ່ງໄຫຼເຂົ້າມາເປັນຈຳນວນຫຼວງຫຼາຍ ແລະ ກາຍເປັນກຸ່ມຜູ້ບຸກເບີກກໍ່ສ້າງວິສາຫະກິດຢາງພາລາ. ເວົ້າກັນວ່າ ນິຄົມເຫລົ່ານີ້ໄດ້ເອົາໜ່ວຍພູທີ່ດີທີ່ສຸດ, ຊຶ່ງການກະທຳແບບນີ້ໄດ້ຜັກດັນຊາວບ້ານຊົນເຜົ່າອອກໄປ, ໃນນັ້ນຕົ້ນຕໍແມ່ນເຜົ່າອາຄ່າທີ່ຕ້ອງຍ້າຍໄປຢູ່ແຖວນອກອອກໄປຢູ່ດິນທີ່ມີຄວາມອຸດົມສົມບູນໜ້ອຍກວ່າ (Sturgeon, 1977). ໃນທ້າຍຂອງຊຸມປີ 1970, ເມື່ອການປະຕິວັດວັດທະນາທຳໄດ້ສິ້ນສຸດລົງ ແລະ ເມື່ອມີ ການນຳລະດັບຊາດຊຸດໃໝ່ມາແທນທີ່, ສ່ວນຫຼວງຫຼາຍຂອງຊາວໜຸ່ມຈາກເມືອງໃຫຍ່ກໍໄດ້ກັບຄືນເມືອບ້ານເກີດຂອງເຂົາເຈົ້າແບບທັນທີທັນໃດ, ຊຶ່ງໄດ້ເຮັດໃຫ້ກຳລັງແຮງງານຫຼຸດລົງເກືອບເຖິງ 85% (ນິຄົມລັດເມັງເປັງ, 2005). ສະພາບມີຊ່ອງຫວ່າງແບບກະທັນຫັນດັ່ງກ່າວ ໄດ້ເຮັດໃຫ້ນິຄົມລັດຕ້ອງຂົນຂວາຍຍາດແຍ່ງຢ່າງບໍ່ໄວ້ໜ້າ ດູດດຶງເອົາຫຼາຍໆໝູ່ບ້ານຊົນເຜົ່າຢູ່ອ້ອມແອ້ມມາເພື່ອໃຫ້ໄດ້ແຮງງານແລະດິນ (bing zhai jin chang). ຊາວບ້ານໃນເວລານັ້ນ ສ່ວນຫຼວງຫຼາຍຍັງຄົງດຳລົງຊີບແບບປະເພນີ ແລະ ເຮັດໄຮ່ເລື່ອນລອຍຢູ່ ໄດ້ຖືກຈັດຕັ້ງໃຫ້ກາຍເປັນພະນັກງານນິຄົມລັດ ແລະ ໄດ້ຍ້າຍເຂົ້າໄປຢູ່ບ່ອນພັກພາອາໃສໃນດິນນິຄົມ. ເພິ່ນໄດ້ໃຊ້ຄວາມພະຍາຍາມຢ່າງແຂງແຮງເພື່ອເອົາແຮງງານທີ່ບໍ່ມີດິນເປັນຂອງຕົນເອງທີ່ຢູ່ເຂດພູສູງທີ່ດິນບໍ່ດີເຂົ້າມາເຊັ່ນ: ຢູ່ເຂດເຊັງຍວນ, ໂມຈຽງ ແລະ ຈິງກູ.

ນັບແຕ່ຊຸມປີ 1980 ພຸ້ນ ທີ່ລັດຖະບານຈີນໄດ້ສຳເລັດການມອບດິນໃນລະດັບບ້ານ ແລະ ໄດ້ປະຕິບັດລະບົບຄວາມຮັບຜິດຊອບຂອງຄົວເຮືອນ. ນັບແຕ່ນັ້ນມາ ກໍໄດ້ມີການແບ່ງປັນເຂດແດນລະຫວ່າງນິຄົມລັດ ແລະ ຂອງບ້ານໃນທ້ອງຖິ່ນຢ່າງເປັນທາງການ.[25] ແຕ່ນັ້ນມາ ນິຄົມລັດບໍ່ສາມາດຂະຫຍາຍຕົວອອກໄດ້ຍ້ອນຂາດເນື້ອທີ່ດິນ, ຍ້ອນແນວນັ້ນ ລັດຖະບານຈີນ ແລະ ນິຄົມລັດໃນຊຸມປີ 1980 ໄດ້ຫັນຄວາມພະຍາຍາມໄປປຸກລະດົມຊາວບ້ານໃນທ້ອງຖິ່ນໃຫ້ປູກຢາງ. ບາດກ້າວນີ້ ເຂົ້າໃຈກັນວ່າເປັນທັງວິທີສືບຕໍ່ຂະຫຍາຍການປູກຢາງ ແລະ ເປັນ

[25] ຍ້ອນລາຄາຢາງໄດ້ພຸ່ງຂຶ້ນສູງ, ເຂດແດນຈຶ່ງເປັນເລື່ອງໂຕ້ແຍ່ງກັນລະຫວ່າງຊາວບ້ານ ແລະ ນິຄົມລັດໃນຊຸມປີຜ່ານມາ.

ການຫຼຸດຜ່ອນຄວາມທຸກຍາກໃນໝູ່ຊຸມຊົນ. ໂດຍໄດ້ຮັບເງິນກູ້ຢືມ ແລະ ທຶນຈາກລັດຖະບານ, ນິຄົມໄດ້ສະໜອງເບ້ຍໃນລາຄາຜ່ອນຜັນ ຫຼື ບໍ່ຄິດໄລ່ຄ່າ ພ້ອມໆກັບການຝຶກອົບຮົມ ແລະ ສະໜັບສະໜູນທາງວິຊາການ. ເຖິງມີລາຍງານວ່າ ສວນຢາງທີ່ບໍ່ແມ່ນນິຄົມລັດໄດ້ມີມານັບແຕ່ຊຸມປີ 1960 ພຸ້ນກໍຕາມ, ຊາວບ້ານບໍ່ໄດ້ປູກຢາງເປັນຂະບວນຈົນເຖິງເວລາທີ່ຫາກໍກ່າວມານີ້. ໄປພ້ອມໆກັນ ທາງນິຄົມລັດໄດ້ສືບຕໍ່ຂົນຂວາຍໝູ່ບ້ານອ້ອມແອ້ມຮ່ວມເຂົ້າໃນລະບົບນິຄົມລັດ ໂດຍສະເໜີໃຫ້ຊາວບ້ານໄດ້ມີລາຍຮັບແບບປົກກະຕິ, ຜົນປະໂຫຍດດ້ານສະຫວັດດີການ ແລະ ສິ່ງດີໆມີປະໂຫຍດຕ່າງໆຕອບແທນໃຫ້ແກ່ດິນ (ຕົວຢ່າງ: ບ້ານຫນຶ່ງຢູ່ ເມືອງຫລ້າ ທີ່ໄດ້ເຂົ້າກັບນິຄົມລັດເມືອງພົງ ໃນປີ 1998, ຕາມທີ່ເລົ່າກັນມາ ໄດ້ຮັບເງິນ 500,000 ຢວນ ຕອບແທນໃຫ້ແກ່ການປະກອບດິນໃຫ້ປະມານ 8,000 ມູ. ຮອດຕອນທ້າຍຊຸມປີ 1980, ຊາວບ້ານຢູ່ພູສູງຖືກກົດດັນໜັກ ຍ້ອນຂໍ້ຈຳກັດລັດຖະບານທີ່ເຂັ້ມງວດດ້ານການເຮັດໄຮ່ ແລະ ຍ້ອນດິນປູກຝັງຂາດຄວາມອຸດົມສົມບູນ. ໃນການຊອກຫາທາງອອກ, ມີບາງລາຍກໍໄດ້ຫັນໄປຫານິຄົມລັດ.

ໃນຊຸມປີ 1990 ໃນຂະນະທີ່ການປະຕິຮູບເສດຖະກິດໄດ້ຂະຫຍາຍຕົວ ຢ່າງເລິກເຊິ່ງນັ້ນ ດິນສາມາດໃຊ້ໂອນ ແລະ ນຳໃຊ້ໃນຂໍ້ຕົກລົງນຳກັນໄດ້ງ່າຍດາຍກວ່າເກົ່າ. ພ້ອມດຽວກັນນັ້ນ ລັດຖະບານກໍຍັງສົ່ງເສີມຢ່າງເອົາຈິງເອົາຈັງໃຫ້ຫັນເອົາອັນທີ່ເອີ້ນວ່າ ສີ່ "ດິນບໍ່ໄດ້ໃຊ້ເປັນປະໂຫຍດ" ເພື່ອເຮັດກະສິກຳ, ອັນໄດ້ເຮັດໃຫ້ມີເນື້ອທີ່ເພີ່ມຕື່ມໄດ້ ໂດຍເອົາມາຈາກດິນພູເຊື່ອມຄຸນທີ່ໄດ້ໂອນເຂົ້າລະບົບນິຄົມລັດ. ພ້ອມດຽວກັນນັ້ນ ທາງນິຄົມລັດກໍໄດ້ເລີ່ມຕົ້ນສ້າງສັນຍາປູກຢາງກັບຊາວບ້ານໃນທ້ອງຖິ່ນ ຫລື ເອີ້ນໃນພາສາທາງການວ່າ "ການພັດທະນາຮ່ວມ" ຊຶ່ງປົກກະຕິການແບ່ງປັນຜົນກຳໄລມັກຈະຢູ່ໃນຮູບແບບ 30/70 ຫລື 40/60. ທາງນິຄົມແມ່ນປະກອບທຶນ ແລະ ສົ່ງເສີມໃຫ້ຄວາມຮູ້ດ້ານວິຊາການ, ຊາວບ້ານແມ່ນເປັນດິນ ແລະ ແຮງງານ. ເຖິງຢ່າງໃດກໍຕາມ ຊ່ອງທາງການຕະຫຼາດຢາງຍັງຄົງແມ່ນລັດຄວບຄຸມເປັນສ່ວນໃຫຍ່ໃນໄລຍະຕົ້ນຫາຕອນກາງຂອງຊຸມປີ 1990 ແລະ ຢາງແມ່ນຫນຶ່ງໃນຈຳນວນສິນຄ້າລາຍການສຸດທ້າຍທີ່ລາຄາບໍ່ຖືກຄອບງຳໂດຍກົດລະບຽບ.

ໃນໄລຍະດຽວກັນ ລະບົບຄຸ້ມຄອງບໍລິຫານຂອງນິຄົມລັດ ກໍໄດ້ໝູນໃຊ້ແຜນ ທີ່ອີງອາໃສໄມ້ງັດສິ່ງກະຕຸ້ນລະດົມໃຈບາງຢ່າງ ແລະ ກົນໄກຕະຫຼາດເຂົ້າຊ່ວຍ. ເມື່ອມີລະບົບຈ່າຍແຮງງານທີ່ອີງຕາມຜົນຜະລິດ, ກຳມະກອນທີ່ມີທັກສະໜ້ອຍກວ່າ ຫລື ເຖົ້າແກ່ກວ່າ (ສາຍຕາຊຸດໂຊມ) ມີບາງຄັ້ງໃນທີ່ສຸດ ຕ້ອງຈ່າຍເງິນໃຫ້ນິຄົມເພາະບໍ່ສາມາດບັນລຸ ໂຄຕາ ການຜະລິດຂອງຕົນໄດ້, ຈຶ່ງເຮັດໃຫ້ບາງຄົນຕ້ອງອອກວຽກ ຫລື ອອກກິນບຳນານກ່ອນກະສຽນອາຍຸ. ກົງກັນຂ້າມ ເມື່ອບັນລຸໂຄຕາ ຕົນແລ້ວ, ກຳມະກອນມີເສລີພາບ ຫລື ແມ້ແຕ່ໄດ້ຖືກສົ່ງເສີມໃຫ້ປະກອບກິດຈະກຳທຸລະກິດສ່ວນຕົວອີກດ້ວຍ ເພື່ອເພີ່ມລາຍຮັບໃຫ້ຕົນເອງ. ພ້ອມດຽວກັນນັ້ນ ລະບົບນິຄົມລັດກໍປະຕິບັດການປັບປຸງແປງມາດຕະຖານເຕັກນິກການປາດຢາງ ໂດຍໄດ້ໃຊ້ໂຕກະຕຸ້ນດ້ານເຄມີອີກຕື່ມ, ຕົ້ນຢາງຖືກປາດໜ້ອຍເທື່ອລົງ ແລະ ມີຊີວິດຍາວນານກວ່າ. ເຖິງຢ່າງໃດກໍຕາມ ສະພາບປັບປຸງແປງນີ້ ໄດ້ຫຼຸດຜ່ອນຄວາມຕ້ອງການແຮງງານຂອງນິຄົມລັດລົງ ແລະ ເຮັດໃຫ້ມີຫຼາຍໆກໍລະນີ "ເຊຍກາງ/Xiagang" ຊຶ່ງເວົ້າແຈ້ງກໍແມ່ນຖືກເລີກຈ້າງງານ ເພື່ອໃຫ້ນິຄົມສາມາດຫຼຸດເງິນໃຊ້ຈ່າຍຄ່າແຮງງານໄດ້ຢ່າງຫຼາຍ. ໃນໄລຍະດັ່ງກ່າວນີ້ ກຳມະກອນ, ກຳມະກອນກິນບຳນານ ຫລື "ເຊຍກາງ" ກໍອອກໄປພະຈົນໄພຂ້າງນອກນິຄົມ ເພື່ອພັດທະນາສວນປູກເອກະຊົນ ໂດຍໄດ້ໃຊ້ຮູບແບບຕ່າງໆຂອງການຊື້ ແລະ ແຜນການເຮັດສັນຍາປູກກັບຊາວບ້ານ.

ນອກຂອບເຂດນິຄົມລັດ, ຊາວບ້ານໃນທ້ອງຖິ່ນ ຊຶ່ງໄດ້ຜົນປະໂຫຍດ ແລະ ໄດ້ສະສົມທຶນຈາກສວນປູກກ່ອນໜ້ານັ້ນ, ກໍພ້ອມກັນເລີ່ມພັດທະນາສວນຢາງຮອບໃໝ່ຕື່ມໃນກາງຊຸມປີ 1990. ນອກຈາກປູກສວນຕົນເອງ, ໃນສ່ວນທີ່ເຫລືອຂອງດິນຢູ່ເຂດພູສູງ ພວກເຂົາເຈົ້າຍັງນັບມື້ນັບເຮັດສັນຍາຈ້າງກັບນັກພັດທະນາເອກະຊົນ. ມີບາງຄົນໃຫ້ເຊົ່າດິນໂດຍກົງ, ຄົນອື່ນໆອີກເຮັດຂໍ້ຕົກລົງສັນຍາ ໂດຍມີແຜນແບ່ງປັນຜົນກຳໄລແບບໃດແບບຫນຶ່ງ. ໃນສັນຍາແບບນີ້, ປົກກະຕິຊາວບ້ານຈະປະກອບດິນເທົ່ານັ້ນ ແລ້ວໄດ້ສ່ວນແບ່ງຂອງກຳໄລໃນອະນາຄົດ

ລະຫວ່າງ 40-50%. ປ່າສະຫະກອນບ້ານກໍຖືກນຳໄປໃຊ້ເຮັດສັນຍາໃຫ້ສະມາຊິກບ້ານເອງໃນບາງກໍລະນີ ຫລື ບໍ່ກໍເຮັດກັບນັກລົງທຶນເອກະຊົນ. [26] ຜູ້ລົງທຶນເອກະຊົນຫຼາຍຄົນມາຈາກນິຄົມລັດ ດັ່ງທີ່ໄດ້ຍົກມາເວົ້າໃນວັກກ່ອນໜ້າ; ບາງຄົນດຽວນີ້ ກໍແມ່ນຄົນລັດເຄິ່ງເອກະຊົນທີ່ຊອກຫາແຫລ່ງລາຍຮັບເພີ້ມ; ແຕ່ກໍຍັງມີຄົນອື່ນໆທີ່ມາຈາກນອກສິບສອງພັນນາ ເປັນຄົນທານທີ່ມີເງິນແຕ່ບໍ່ມີດິນ. ໃນຕອນທ້າຍຊຸມປີ 1990 ແລະ ຕົ້ນຊຸມປີ 2000 ຊາວບ້ານຫຼາຍຄົນໄດ້ຂາຍຕົ້ນຢາງຕົນເອງໃຫ້ກຳມະກອນນິຄົມລັດ ຍ້ອນລາຄາຢາງຕົກຕໍ່າ. ຊາວບ້ານໄດ້ບອກວ່າ ຢູ່ເຣລີ, ມີບ້ານອາຄ່າຫນຶ່ງອ້ອມແອ້ມນິຄົມລັດ ເມັງແປງ ໄດ້ຂາຍຫຼາຍກວ່າ 30% ຂອງຕົ້ນໄມ້ຕົນເອງ. ດຽວນີ້ຫຼາຍຄົນກໍເສຍໃຈທີ່ໄດ້ຂາຍມັນໄປຍ້ອນເຫດຜົນທີ່ເຮົາຮູ້ດີ. ຕົ້ນໄມ້ *ເກຣດ* ຫນຶ່ງທີ່ໃຫ້ນ້ຳຢາງສູງສຸດມີລາຄາຫຼຸດ 300 ຢວນ ໃນຕອນທ້າຍຊຸມປີ 1990. ຕົ້ນໄມ້ດຽວກັນນີ້ສາມາດຂາຍໄດ້ຢ່າງໜ້ອຍ 500 ຢວນໃນຕະຫຼາດ.
ຕົກມາຮອດຊຸມປີ 2000, ເມື່ອລາຄາຢາງໄດ້ຂຶ້ນສູງ, ທັງນິຄົມລັດ ແລະ ຊາວບ້ານຕ່າງກໍໄດ້ຮັບຜົນປະໂຫຍດຫຼາຍສົມຄວນຈາກສວນປູກຕົນ. ທຽບໃສ່ຊາວບ້ານທີ່ໄດ້ກາຍເປັນກຳມະ ກອນ ນິຄົມລັດ, ພວກທີ່ຍັງຢູ່ນອກລະບົບປະກົດວ່າຍັງມີຊີວິດດີກວ່າຊ້ຳ. ອີງຕາມກຳມະກອນນິຄົມລັດຄົນຫນຶ່ງ, ຜູ້ມີສວນຂອງຕົນເອງມີສະພາບທີ່ຍືດຢຸ່ນກວ່າ, ບໍ່ຈຳເປັນຕ້ອງຂາຍນ້ຳຢາງໃຫ້ນິຄົມລັດ, ຍ້ອນແນວນັ້ນ ຈຶ່ງສາມາດໄດ້ລາຄາສູງກວ່າຈາກການຂາຍຢາງທີ່ເກັບກູ້. ບາງທີ ສິ່ງທີ່ສຳຄັນໄປກວ່ານັ້ນ ແມ່ນບຸກຄົນເຫລົ່ານີ້ ຍັງສາມາດນຳໃຊ້ດິນຂອງຕົນຢ່າງເຕັມທີ່, ດິນຊຶ່ງເປັນຊັບສິນ ນັບມື້ນັບມີຄ່າສູງ. ສັນຍາປູກຢາງ ແລະ ແຜນການປູກພືດໝູນວຽນເປັນສິ່ງທີ່ນິຍົມເຮັດກັນໃນຊຸມປີ 2000 ຊຶ່ງໃນນີ້ ເງື່ອນໄຂຂອງສັນຍາມັກຈະໃຫ້ເຈົ້າຂອງດິນ (ຊາວບ້ານ) ທີ່ມີຖານະດີກວ່າເກົ່າມາເລື້ອຍໆ ຍ້ອນດິນນັບມື້ນັບຫາຍາກ. ໃນຈຳນວນຊາວບ້ານ, ພວກທີ່ບໍ່ໄດ້ຖືກກະທົບຫຼາຍຈາກສຳປະທານຍ້ອນການຂະຫຍາຍຂອງນິຄົມລັດໃນປີຕົ້ນໆນັ້ນ ກໍປະກົດວ່າມີສະພາບດີກວ່າ, ມີຕຶກໃຫຍ່ກວ່າເກົ່າ, ມີເຄື່ອງໃຊ້ເອເລັກໂຕນິກ ຫຼາຍກວ່າ, ມີລົດຫຼູຫຼາກວ່າເກົ່າ ແລະ ມີເຄື່ອງໃຊ້ໃນຄົວເຮືອນ. ຄວາມຈິງແລ້ວ ສະພາບປົ້ນກັບກັນໃນດ້ານການແຈກຢາຍຊັບສິນທີ່ແຈ່ມໃສກວ່າເບິ່ງຄືບໍ່ໄກຄວາມຈິງ, ຊາວບ້ານທີ່ຮັ່ງມີຈຳນວນຫນຶ່ງບໍ່ປາດຢາງດ້ວຍຕົນເອງອີກແລ້ວ, ພວກເພິ່ນໄດ້ເຮັດສັນຍາໃຫ້ກຳມະກອນນິຄົມລັດທີ່ບໍ່ມີດິນເປັນຜູ້ປາດໃຫ້, ປົກກະຕິກຳມະກອນພວກນີ້ຈະໄດ້ຮັບ 30% ຂອງນ້ຳຢາງເປັນສິ່ງທົດແທນ. ເຖິງຢ່າງໃດກໍຕາມຄວນສັງເກດວ່າ ການທີ່ບໍ່ມີຂໍ້ກຳນົດກຳກັບລາຄານັ້ນເຮັດໃຫ້ຜູ້ມີດິນສວນປູກໜ້ອຍ ບໍ່ມີກຳລັງເລີຍຈາກສະພາບຕະຫຼາດໃນເວລາທີ່ດີກໍຄືເວລາຕະຫຼາດປັ່ນປ່ວນ. ລະຫວ່າງທ້າຍຊຸມປີ 1990-2001, ເວລາທີ່ລາຄາຕະຫຼາດໂລກຕົກຕໍ່າສຸດໃນ 30 ປີນັ້ນ, ຊາວບ້ານຫຼາຍຄົນໄດ້ຂາຍຕົ້ນໄມ້ເພື່ອຈັດການກັບສະພາບຕົນເອງ, ແຕ່ກົງກັນຂ້າມ ກຳມະກອນນິຄົມລັດຊ້ຳພັດຖືກປົກປ້ອງຈາກສະພາບທີ່ຜັນຜວນຂອງຕະຫຼາດ.

ຄວາມບໍ່ກ້ຳເກິ່ງກັນແມ່ນປະກົດການຫນຶ່ງໃນກຸ່ມຜູ້ທີ່ມີດິນໜ້ອຍ. ໃນຊຸມປີ 1980, ຍ້ອນການມອບດິນບໍ່ຈະແຈ້ງ, ຢູ່ບາງບ້ານ ດິນເທິງພູນັ້ນ ສ່ວນໃຫຍ່ແມ່ນ "ຜູ້ໃດມາກ່ອນໄດ້ກ່ອນ", ແຕ່ກໍບໍ່ເປັນແບບນີ້ທຸກໆບ້ານ. ຊາວບ້ານທີ່ມີເງິນໄດ້ເລີ່ມຕົ້ນກ່ອນ, ໄດ້ຕອນດິນທີ່ເປັນທີ່ຕ້ອງການທີ່ສຸດ ແລະ ກໍໄດ້ປູກກ່ອນໝູ່. ນອກນັ້ນ ກໍສັງເກດເຫັນ

---

26 ສະພາບແທ້ຈິງຂອງການຄຸ້ມຄອງດິນພູຢູ່ລະດັບບ້ານນັ້ນມັນບໍ່ຈະແຈ້ງໝົດ. ອີງຕາມການສົນທະນາກັບເຈົ້າໜ້າທີ່ລັດຖະບານ, ການມອບດິນໃນຕອນຕົ້ນຊຸມປີ 1980 ພົວພັນເຖິງການກຳນົດດິນພູສູງສາມປະເພດ: ປະເພດທີຫນຶ່ງ ແມ່ນດິນປ່າໄມ້ທີ່ເປັນອະສັງຫາລິມະຊັບຄົວເຮືອນມີສິດນຳໃຊ້ (zi liu shan) ແລະ ດິນໄຮ່ ຊຶ່ງໄດ້ມອບໃຫ້ຄົວເຮືອນ. ປະເພດທີສອງ ແມ່ນປ່າສະຫະກອນ (ji tilin) ຊຶ່ງຄຸ້ມຄອງໂດຍສະຫະກອນບ້ານເພື່ອໃຊ້ເປັນຟືນ ແລະ ປຸກສ້າງເຮືອນ; ປະເພດທີສາມ ແມ່ນປ່າລັດຊຶ່ງແບ່ງອອກໄປຕາມບົດບາດຂອງມັນເຊັ່ນ: ປ່າແຫ່ງນ້ຳ, ປ່າທົວທັດ, ໆລໆ. ໃນຕົວຈິງການແບ່ງພູສູງນັ້ນມີແຕ່ໃນນາມ ແລະ ເສັ້ນແບ່ງປະເພດຢູ່ພູນັ້ນບໍ່ໄດ້ກຳນົດແຈ້ງ. ບາງບ້ານທີ່ອຶດດິນ ຊາວບ້ານເອງຈະກຳນົດເຂດແດນ. ແຕ່ທົ່ວໄປແລ້ວ ການນຳໃຊ້, ເຮັດສັນຍາ ແລະ ໂອນດິນມັກຕົກໃນສະພາບບໍ່ໄດ້ຄວບຄຸມແນ່ນອນ (ຊິນຫົວເນັດ, 21 ພຶດສະພາ 2007) ລະບົບນີ້ປະກົດວ່າເປັນເຊັ່ນນັ້ນແທ້, ເວລາໂອ້ລົມກັບຊາວບ້ານ.

ຄວາມບໍ່ກໍ້າເກິ່ງກັນໃນກຸ່ມອາຍຸທີ່ແຕກຕ່າງກັນກໍເລີ່ມປະກົດຕົວ, ກຸ່ມຊາວໜຸ່ມສ້າງຄອບຄົວໃໝ່ໄວກວ່າກຸ່ມອາຍຸແກ່. ໝູ່ບ້ານສ່ວນໃຫຍ່ມີດິນໜ້ອຍເຕັມທີ ເພື່ອແບ່ງໃຫ້ຄົວເຮືອນໜຸ່ມນ້ອຍໃໝ່. ເບິ່ງໃນດ້ານເນື້ອທີ່, ຊາວບ້ານໃນເຂດປູກຢາງແມ່ນໄຄກວ່າພວກທີ່ຢູ່ເຂດພູສູງ ທຸລະກັນດານບໍ່ມີຕົ້ນຢາງ (ຕົວຢ່າງ: ຣອນແຍ ແລະ ໂມຈຽງ), ຊາວບ້ານມັກຈະເປັນກຳມະກອນໃຫ້ຊາວກະສິກອນ ກິນເງິນເບ້ຍມື້ບໍ່ເກີນ 50 ຢວນ/ວັນ. ຕາມທຳມະດາ ເຂົາເຈົ້າຈະໄດ້ເຮັດ ພຽງແຕ່ວຽກປະເພດບຳລຸງຮັກສາ, ນີ້ກໍຍ້ອນວ່າ ຊາວບ້ານມັກຈະເຮັດໜ້າວຽກປາດຢາງເອງ ຊຶ່ງມັນຮຽກຮ້ອງໃຫ້ມີທັກສະຫຼາຍກວ່າ ຫລືບໍ່ ກໍເຮັດສັນຍາໃຫ້ກຳມະກອນນິຄົມລັດ ຊຶ່ງໄດ້ຮັບການອົບຮົມເປັນຢ່າງດີເຮັດແທນ.

ຫຼາຍທົດສະວັດຜ່ານມານີ້ ເຫັນວ່າລະບົບການດຳລົງຊີວິດຂອງຊາວບ້ານໄດ້ປ່ຽນແປງສົມຄວນຍ້ອນຢາງພາລາ. ຢູ່ເມືອງນາງ ແລະ ເມືອງພົງ, ອີງຕາມການບອກເລົ່າຂອງຊາວບ້ານໃນທ້ອງຖິ່ນ ການເຮັດໄຮ່ສ່ວນໃຫຍ່ແມ່ນບໍ່ມີມາຫຼາຍສິບປີແລ້ວ. ໃນຕອນຕົ້ນຂອງການປູກຢາງ, ຊາວບ້ານກໍໄດ້ປູກອ້ອຍເຊັ່ນກັນເພື່ອສະໜອງໃຫ້ບໍລິສັດກັ່ນນໍ້າຕານ ເມືອງພົງ, ແຕ່ການປູກອ້ອຍໄດ້ຄ່ອຍຫຼຸດໜ້ອຍລົງໃນເມື່ອການເກັບກູ້ຢາງນຳລາຍໄດ້ໃຫ້ດີກວ່າ.[27] ທົ່ງນາທີ່ມີລະບົບຊົນລະປະທານ ໃນຄັ້ງໜຶ່ງເຄີຍປູກເຂົ້າສາມລະດູ. ລະບົບຊົນລະປະທານແມ່ນລັດຖະບານສ້າງໃຫ້ໃນຊຸມປີ 1950 ແລະ 1960. ດຽວນີ້ ຊາວບ້ານສ່ວນຫຼາຍປູກເຂົ້າແຕ່ລະດູການດຽວ ຫລື ບໍ່ປູກຊໍ້າ., ສາເຫດແມ່ນຍ້ອນລາຄາຢາງທີ່ເພີ່ມຂຶ້ນ ແລະລາຍໄດ້ທີ່ມີຈາກການປູກພືດສິນຄ້າທຽບໃສ່ການປູກເຂົ້າທີ່ມີຜົນກຳໄລໜ້ອຍກວ່າ; ແຕ່ກໍມີບາງຄົນທີ່ເວົ້າວ່າເຂດປູກດັ່ງກ່າວ ເລີ່ມມີບັນຫາກ່ຽວກັບການສະໜອງນໍ້າໜ້ອຍລົງ ຊຶ່ງເຂົາເຈົ້າບອກວ່າ ຕົ້ນເຫດຂອງສະພາບນີ້ແມ່ນການປູກຢາງແຜ່ລາມອອກໄປຫຼາຍໂພດ. ຢູ່ສິບສອງພັນນາເວົ້າລວມແລ້ວ ແມ່ນມີນາປູກເຂົ້າຈຳກັດຫຼາຍ.[28] ດິນສ່ວນໃຫຍ່ໄດ້ຖືກປ່ຽນໄປເປັນສວນປູກກ້ວຍໂດຍການລົງທຶນຈາກແຂວງ ກວາງດົງ ແລະ ກວາງສີ ຕາມຂ່າວລືບອກຈາກຈະສະໜອງໃຫ້ຕະຫຼາດພາຍໃນແລ້ວຍັງໄດ້ສົ່ງອອກໄປປະເທດທາງເໜືອເຊັ່ນ: ຍີ່ປຸ່ນ ແລະ ຣັດເຊຍ. ສວນປູກຢາງຢູ່ ສິບສອງພັນນາ ໂດຍລວມແມ່ນປູກແຕ່ຢາງ, ການປູກພືດປະເພດອື່ນກໍປະສົມນຳແຕ່ແບບຈຳກັດ ກໍມີພຽງແຕ່ໃນປີຕົ້ນໆ. ໃນຕອນທ້າຍຂອງຊຸມປີ 1990 ແລະຕົ້ນຊຸມປີ 2000, ຍ້ອນລາຄາຢາງຕົກ, ຊາວບ້ານໄດ້ລາຍງານວ່າ ໄດ້ທົດລອງປູກຕົ້ນຊາໃສ່ນຳ ພ້ອມທັງລ້ຽງສັດປີກໃນລະຫວ່າງຕົ້ນຢາງທີ່ໃຫຍ່ເຕັມທີ່ແລ້ວ ເພື່ອຊ່ວຍໃຫ້ມີລາຍຮັບ (Wu et. al., 2001). ທັງໝົດເຫລົ່ານັ້ນປະກົດວ່າໄດ້ຢຸດແລ້ວ. ຄວາມຈິງແລ້ວ ສິ່ງກົງກັນຂ້າມພວມເກີດຂຶ້ນ ຊຶ່ງໃນນີ້ຈະເຫັນວ່າ ສວນຕົ້ນໄມ້ ແລະສວນຊາຄັ້ງກ່ອນ ປັດຈຸບັນແມ່ນມີ ຕົ້ນຢາງອ່ອນແຊມຂຶ້ນມາປະດັບປະດາ.

ຍ້ອນລາຄາຢາງກະໂດດຂຶ້ນສູງຢ່າງໄວວາໃນຊຸມປີ 2000, ການຂະຫຍາຍຕົວຂອງສວນຢາງຢ່າງກວ້າງຂວາງ ແລະ ເຄັ່ງຮ້ອນກາຍເປັນຄວາມເປັນຫ່ວງໜັກໃຈສຳລັບລັດຖະບານ. ຊາວບ້ານບາງຄົນຕາບອດ ຍ້ອນຄວາມໂລບຢາກໄດ້ທັນທີທັນໃດ ແລ້ວກໍພາກັນປາດທຸກໆວັນ ຊຶ່ງເປັນການຫຼຸດຜ່ອນຮອບວຽນຜະລິດຕະພັນຂອງຕົ້ນຢາງ (ຕົ້ນໄມ້ມັນຕ້ອງການພັກຜ່ອນຢ່າງໜ້ອຍສຸດຕ້ອງບາມື້ປາດ, ຖ້າອີງຕາມເຕັກນິກທີ່ເຄີຍປະຕິບັດກັນມາ, ຕົ້ນຢາງຢູ່ນິຄົມລັດຖືກປາດທຸກສາມມື້). ນອກນັ້ນແລ້ວ, ດັ່ງທີ່ໄດ້ເວົ້ານ້ອຍໜຶ່ງຢູ່ພາກທີ 3, ຕົ້ນຢາງໄດ້ປົກຄຸມເຂດທີ່

---

[27] ບໍລິສັດນໍ້າຕານ ເມັງແປງ ດຽວນີ້ໄດ້ເຮັດສັນຍາປູກຝັງກັບຫຼາຍໆບ້ານຢູ່ ເມືອງສິງ ທາງຟາກລາວ, ຊາວບ້ານສະແດງເຈດຕະນາວ່າຢາກຢຸດປູກອ້ອຍຖ້າຕົ້ນຢາງເຂົາແກ່ແລ້ວ.

[28] ເຂົ້ານຳມາຊົມໃຊ້ໃນເຂດນີ້ (ແລະ ບາງທີ່ຫຼາຍກ່ວາເຂດນີ້) ແມ່ນອີງອາໃສການນຳເຂົ້າຈາກລາວ ແລະມຽນມາ. ນັບແຕ່ 2007, ການສົ່ງອອກເຂົ້າຢູ່ ເມືອງສິງ ແລະ ລອງ, ຫຼວງນໍ້າທາ ແມ່ນຜູກຂາດໂດຍບໍລິສັດຈີນໜຶ່ງທີ່ໄດ້ເຮັດສັນຍາກັບອຳນາດປົກຄອງແຂວງ. ເຫດຜົນທາງການໃນການຜູກຂາດແມ່ນເພື່ອຮັບປະກັນສະໜອງໃຫ້ກອງທັບລາວ ແລະ ເພື່ອທີ່ກລັ້ງບໍ່ໃຫ້ສົ່ງເຂົ້າອອກໄປຈີນຫຼາຍໂພດ, ແຕ່ເຫດຜົນແທ້ຈິງແມ່ນມີຫຼາຍກວ່າແລ້ວແຕ່ຜູ້ຕີລາຄາ.

ລັດຖະບານຈີນເອີ້ນວ່າເຂດ "ກາຍສອງ" (liang chao) ຊຶ່ງໝາຍເຖິງເຂດທີ່ລະດັບຄວາມສູງສະເລັ່ຍ ຈາກໜ້ານໍ້າທະເລ ກາຍ 900 ແມັດ ແລະ ລະດັບຄວາມຄ້ອຍຊັນ ກາຍ_35 ອົງສາ. ສະພາບສິ່ງແວດລ້ອມຊຸດໂຊມຢ່າງໜັກໄດ້ຖືກບັນທຶກໄວ້ໂດຍສື່ ແລະ ນັກຄົ້ນຄວ້າຈີນ, ແລະ ບັນຫານີ້ໄດ້ຍົກມາສົນທະນາກັນໃນບົດຂຽນຂອງ Alton et. al., (2005) ຖ້າຄິດໄລ່ການສູນເສຍດິນໃນອັດຕາ 10 ຢວນຕໍ່ໂຕນ ແລະ ສູນເສຍນໍ້າໃນລາຄາ 1 ຢວນ/ໜຶ່ງແມັດກ້ອນ, ຄາດຄະເນກັນວ່າ ກໍາແພງນະຄອນສິບສອງພັນນາ ສູນເສຍ 150 ລ້ານຢວນໃຫ້ແກ່ການປູກຢາງ ຍ້ອນມີການເຊາະເຈື່ອນຂອງດິນ ແລະ ການເຫືອດຫາຍຂອງນ້ໍໃຕ້ດິນໃນແຕ່ລະປີ, ນີ້ແມ່ນອີງຕາມຂໍ້ມູນຈາກສວນພຶດສາຊາດ ເມືອງມູນ (ໜັງສືພິມຊາວໜຸ່ມປະຈໍາວັນ, 21 ມິຖຸນາ 2007). ຫຼາຍກຸ່ມບ້ານໃກ້ໆກັບ ຈິງຮົງ ໄດ້ມີບັນຫາ ທີ່ສາຍນໍ້າ ແລະ_ນໍ້າສ້າງຢູ່ທ້ອງຖິ່ນໄດ້ແຫ້ງໝົດເລີຍ (ສື່ມັກຍົກຕົວຢ່າງກຸ່ມບ້ານ ຈີງກັງ ເພື່ອໃຫ້ເຫັນບັນຫາ). ທ່າມກາງບັນຍາກາດທີ່ນິຍົມຊົມຊອບຢາງພາລາ ເມື່ອບໍ່ດົນມານີ້, ລັດຖະບານກໍາແພງນະຄອນໄດ້ເລີ່ມຕົ້ນ ບັ້ນລະດົມຂົນຂວາຍທີ່ມີຄາດໝາຍສູງເອີ້ນວ່າ "ປ່ອຍຢາງຄືນໃຫ້ປ່າ" (tui jiao huan lin), ຊຶ່ງເປັນຄໍາຂວັນທີ່ໄດ້ກ່າຍຈາກຮູບແບບຂະບວນການທີ່ຮູ້ກັນດີຄື "ເມັດພືດເພື່ອໃຫ້ຂຽວ" (tui geng huan lin). ສື່ທ້ອງຖິ່ນໄດ້ອອກຂ່າວແບບເດັ່ນຊັດກ່ຽວກັບຜົນງານແບບວິລະບູລຸດຂອງຊາວບ້ານທີ່ໄດ້ສະໝັກໃຈເສຍສະລະ ຫລືກຕົ້ນຢາງຂອງຕົນເອງ ເພື່ອຜົນປະໂຫຍດທີ່ຍິ່ງໃຫຍ່ກວ່ານັ້ນ. ໃນເດືອນມິຖຸນາ 2006, ລັດຖະບານກໍາແພງນະຄອນໄດ້ຫ້າມທຸກໆການປູກພືດໝູນວຽນ, ການໂອນ, ການເຮັດຂໍ້ຕົກລົງສັນຍາ, ຫລື__ເຮັດສັນຍາຕໍ່ຊ້ອງທີ່ພົວພັນກັບປ່າສະຫະກອນ ຫລື ດິນໄຮ່ທີ່ປ່ອຍເປັນເຮື້ອໃຫ້ພືດໄດ້ຟື້ນຕົວ; ເຮັດແນວນີ້ແມ່ນມີຈຸດປະສົງຫຼຸດຜ່ອນການລຸກລໍ້າປ່າ ແລະ ເຮັດໃຫ້ສະພາບຮ້ອນຮົນຂອງຕະຫຼາດຊື້ຂາຍດິນເຢັນລົງ ຊຶ່ງທັງໝົດນີ້ ໂຕຂັບເຄື່ອນມັນກໍຄືຢາງ.[29] ໃນປີ 2007 ເພິ່ນໄດ້ເຮັດແຜນເພື່ອຊື້ ປ່າທໍາມະຊາດທີ່ເຫລືອ ແລະ ດິນໄຮ່ທີ່ປະເປັນເຮື້ອຈາກຊາວບ້ານຈໍານວນ 500,000 ມູ ໃນລາຄາ 500 ຢວນ/ມູ ເພື່ອສະຫງວນໄວ້. ເຖິງແນວໃດກໍຕາມ, ເຈົ້າໜ້າທີ່ທາງການບໍ່ມີຄວາມຫວັງສູງປານໃດວ່າຈະປະຕິບັດໄດ້ ເພາະວ່ານັກລົງທຶນສວນຢາງມັກຈະສະເໜີລາຄາຊື້ທີ່ສູງກວ່າຫຼາຍ. ພ້ອມກັນນັ້ນ ລັດຖະບານຍັງມີແຜນຈະເລີ້ມຕົ້ນເກັບຄ່າທໍານຽມຊົດເຊີຍສິ່ງແວດລ້ອມຈາກຜູ້ເຮັດທຸລະກິດປຸງແຕ່ງຢາງພາລາໃນອະນາຄົດອັນໃກ້ນີ້, ແຕ່ຊໍ້າພັດຢ້ານວ່ານັກທຸລະກິດເຫລົ່ານັ້ນ ຈະມີວິທີການໄປເກັບຄ່າທໍານຽມກັບຊາວກະສິກອນອີກຕໍ່ໜຶ່ງ.

ການຄວບຄຸມການພັດທະນາຢາງ ຢູ່ສິບສອງພັນນາ ເປັນບັນຫາລະອຽດອ່ອນແທ້ໆ. ເຖິງວ່າລັດຖະບານໄດ້ປະຕິບັດມາດຕະການແນ່ນອນ ເພື່ອໜ່ວງໜ່ຽວການປູກແບບຂະຫຍາຍໃຫ້ຊ້າລົງ, ຢາງພາລາກໍຍັງຄົງເປັນອຸດສາຫະກໍາທີ່ໄດ້ຮັບການປົກປ້ອງໃນລະດັບສູງ ບໍ່ພຽງແຕ່ຍ້ອນວ່າມັນມີຄວາມສໍາຄັນເພື່ອຮັບປະກັນການເຕີບໂຕທາງອຸດສາຫະກໍາຂອງຈີນ, ແຕ່ນອກນັ້ນແລ້ວ, ຢູ່ສິບສອງພັນນາ ກະສິກອນສ່ວນຫຼວງຫຼາຍຕ້ອງເພິ່ງພາອາໃສຢາງ ຍ້ອນວ່າມັນເປັນພາຫະນະໜຶ່ງດຽວ ເພື່ອດໍາລົງຊີວິດ. ຍ້ອນບົດບາດຫຼາຍປະການຂອງຢາງ ຈຶ່ງເຮັດໃຫ້ມີນະໂຍບາຍຈໍານວນໜຶ່ງທີ່ເບິ່ງຄືວ່າບ໊ອງໆ ເພື່ອຄວບຄຸມການປູກຢາງ. ພ້ອມໆດຽວກັນກັບການຫ້າມຢ່າງມີປະສິດທິຜົນທີ່ບໍ່ໃຫ້ປູກຢາງ (ເຖິງວ່າຈະບໍ່ແມ່ນຫ້າມໂດຍທາງການ) ເພື່ອເຫັນແກ່ສະພາບແວດລ້ອມ, ການປູກຢາງຊໍ້າຍັງຄົງໄດ້ຮັບການອຸດໜູນຖົມຊຸມຢູ່. ໃນປີ 2007, ກະຊວງກະສິກໍາ ຂອງຈີນໄດ້ອະນຸມັດການອຸດໜູນ 20 ລ້ານຢວນ ຕື່ມເພື່ອຖົມຊຸມໃຫ້ແກ່ການແຈກຢາຍເບ້ຍຢາງຄຸນນະພາບສູງໃຫ້ແກ່ກະສິກອນ. ອີງຕາມຄໍາເວົ້າຂອງປາລາ, ຊາວຈີນອາຄ່າຈາກບ້ານໜຶ່ງທີ່ ເມືອງມາງ, ຊາວບ້ານບໍ່ເຄີຍເສຍພາສີອາກອນສວນຢາງຂອງ

---

[29] ນອກຈາກຢຸດຕິບໍ່ໃຫ້ມີການໝູນວຽນນໍາໃຊ້ດິນ ຊຶ່ງເປັນມາດຕະການທ້ອງຖິ່ນນໍາໃຊ້ກັນຢູ່ກໍາແພງນະຄອນສິບສອງພັນນາແລ້ວ ທົ່ວປະເທດຈີນກໍາລັງປະຕິຮູບປ່າອີກຄັ້ງໃໝ່. ການປະຕິຮູບນີ້ແມ່ນມອບປ່າຊຶ່ງຄັ້ງໜຶ່ງເປັນປ່າສະ ຫະກອນຄືນໃຫ້ແກ່ຄົວເຮືອນ. ມີບາງຄົນເຫັນວ່ານີ້ເປັນໂອກາດດີເຮັດໃຫ້ຊາວບ້ານມີຄວາມຮັບຜິດຊອບກ່ວາເກົ່າໃນການໃຊ້ປ່າ, ແຕ່ຄວາມເຫັນແບບວິຈານຊໍ້າເວົ້າວ່າການປະຕິຮູບນີ້ແມ່ນວິທີງ່າຍໆ ເພື່ອຫີຼກລ້ຽງຄໍາຈົ່ມວ່າກ່ຽວກັບການບໍລິຫານຊັບພະຍາກອນທີ່ໃຊ້ການບໍ່ໄດ້.

ເຂົາເລີຍ, ແລະ ຍິ່ງໄປກວ່ານັ້ນ ຍັງໄດ້ຮັບເງິນອຸດໜຸນ 12 ຢວນ/ມູ/ປີ ນັບແຕ່ປີ 2005 ເປັນຕົ້ນມາ (ຊຶ່ງເປັນສ່ວນໜຶ່ງຂອງການປ່ຽນແປງນະໂຍບາຍກວ້າງຂວາງກວ່າຂອງຈີນ ໂດຍແນໃສ່ ຫຼຸດຜ່ອນການແບກຫາບດ້ານພາສີຂອງກະສິກອນ). ນອກນັ້ນ ຢາງຍັງຄົງຢູ່ໃຕ້ແຜນການຈຳກັດການນຳເຂົ້າ, ພ້ອມໆດຽວກັນ ຂະແໜງອຸດສາຫະກຳຂອງຈີນກໍຖືກກະທົບ ຍ້ອນການສະໜອງບໍ່ພຽງພໍ ແລະ ລາຄາຖີບຂຶ້ນສູງ.

ປະຫວັດຜ່ານມາ ແລະ ສະພາບປັດຈຸບັນຂອງການພັດທະນາຢາງຢູ່ສິບສອງພັນນາເປັນເລື່ອງລາວສະລັບສັບຊ້ອນທີ່ປະສານກັນລະຫວ່າງຂໍ້ຄິດຄວາມກັງວົນທີ່ມີຕໍ່ເສດຖະກິດ, ການເມືອງ ແລະ ສະພາບແວດລ້ອມ, ແລະພາຍໃຕ້ສະພາບອັນລະອຽດອ່ອນນີ້ເອງ ທີ່ເຮັດໃຫ້ຢາງ ຂະຫຍາຍເລື້ອຍໆອອກຈາກ ສິບສອງພັນນາ ໄປຍັງພາກເໜືອຂອງລາວໃນທົດສະວັດຜ່ານມາ.

## 8.2 ປຽບທຽບ ແຂວງ ຫຼວງນໍ້າທາ ແລະ ສິບສອງພັນນາ

ເຖິງວ່າໄລຍະເວລາຈະແຕກຕ່າງກັນຫຼາຍ, ຫຼວງນ້ຳທາ ແລະ ສິບສອງພັນນາ ຍັງມີຫຼາຍຢ່າງທີ່ຄ້າຍຄືກັນເມື່ອທັງສອງເດີນຕາມເສັ້ນທາງໃຜລາວເພື່ອພັດທະນາຢາງພາລາ.

- ມີຄວາມເຄັ່ງຕຶງຄ້າຍຄືກັນລະຫວ່າງຜູ້ມີສວນປູກຂະໜາດໃຫຍ່ ແລະ ຊຸມຊົນທ້ອງຖິ່ນ

ຄວາມທັນສະໄໝດ້ານອຸດສາຫະກຳ ແລະ ການດຳລົງຊີວິດແບບປະເພນີ. ສາຍພົວພັນທີ່ມີລະຫວ່າງ ນິຄົມລັດໃນຕອນຕົ້ນໆ ແລະ ຊຸມຊົນພື້ນເມືອງກໍຄືກັນກ່ຽວກັບສະພາບທີ່ເຫັນຢູ່ໃນລາວທຸກວັນນີ້ ລະຫວ່າງຜູ້ລົງທຶນຂະໜາດໃຫຍ່ ແລະ ຊາວບ້ານ. ການສຳປະທານດິນສາມາດເຮັດໄດ້ງ່າຍກວ່າໂດຍນິຄົມລັດຈີນທີ່ຢູ່ໃຕ້ລະບອບຜະເດັດການລະດັບສູງ ແລະ ລະບອບເສດຖະກິດແບບວາງແຜນໃນຕອນນັ້ນ. ການກີນເອົາບ້ານ (bing zhai jin chang) ໃນຕອນຕົ້ນໄດ້ເຮັດໃຫ້ຊາວບ້ານສູນເສຍວິຖີຊີວິດປະເພນີທັງໝົດ ແລະ ພຽງແຕ່ຂ້າມຄືນໄປ ກໍໄດ້ປ່ຽນເຂົາເຈົ້າໃຫ້ເປັນກຳມະກອນອຸດສາຫະກຳ. ຈຶ່ງບໍ່ເປັນເລື່ອງແປກຫຍັງທີ່ເຮັດໃຫ້ມີຂໍ້ຂັດແຍ່ງ (ເຖິງວ່າ ບໍ່ອື້ຫຼືກໍບໍ່ມີໃຜເກັບກຳເປັນເອກະສານ ຫລື ຍົກຂຶ້ນມາສົນທະນາ), ເຊັ່ນດຽວກັບສະພາບອະນຸມັດສຳປະທານ ຫລືບີບໃຫ້ເຮັດສັນຍາປູກຢາງກະຕຸ້ນໃຫ້ມີການໂຕ້ຖຽງກັນໃນໝູ່ກະສິກອນລາວໃນທຸກວັນນີ້. ມີບາງກໍລະນີບ້ານທັງບ້ານຖືກຍຸບ, ຊາວບ້ານຖືກຈັດສົ່ງໃຫ້ໄປເຮັດວຽກຢູ່ນຳໜ່ວຍຜະລິດແຕກຕ່າງກັນໄປ, ທັງນີ້ ກໍເພື່ອໃຫ້ຊາວບ້ານຕ້ອງຕັດຂາດສາຍພົວພັນແລ້ວ "ດັດປັບ" ໃຫ້ເຂົ້າກັບແບບວິທີກ້າວໜ້າອຸດສາຫະກຳທີ່ເປັນທາງເລືອກທີ່ດີກວ່າ. ບ້ານທີ່ຍັງຄົງຢູ່ນອກລະບົບນິຄົມລັດ ທີ່ມີດິນດີຢູ່ບາງບ່ອນ, ດິນນັ້ນກໍຖືກເອົາໄປ, ເຮັດໃຫ້ຊາວບ້ານຕ້ອງໄປຊອກຫາດິນຢູ່ໄກອອກໄປອີກ ເວລາທີ່ເຂົາເຈົ້າຕ້ອງການຢາກພັດທະນາສວນປູກຕົນເອງໃນຕອນຕໍ່ມາ. ແມ່ນແຕ່ດຽວນີ້ ຊຶ່ງຫຼາຍທົດສະວັດໄດ້ຜ່ານໄປແລ້ວ, ເຖິງວ່າຈະປົງແລ້ວກໍຕາມ ຜູ້ເຖົ້າຊາວບ້ານບາງຄົນຍັງຈື່ ແລະ ຈົ່ມກ່ຽວກັບດິນທີ່ໄດ້ເສຍໄປໃຫ້ລັດຫານ (haw, labeu).

ຍ້ອນວ່າລະບົບນິຄົມລັດບໍ່ອະນຸຍາດໃຫ້ສຳພາດເຈົ້າໜ້າທີ່ທາງການ, ຂ້າພະເຈົ້າພຽງແຕ່ສາມາດລົມກັບຫົວໜ້າໜ່ວຍຜະລິດທີ່ ເມືອງມາງ ແລະ ເມືອງພົງ. ເມື່ອຖືກຖາມວ່າ ເປັນຫຍັງເພິ່ນບໍ່ໃຊ້ຮູບແບບສັນຍາປູກຢາງ (lian he kai fa) ຊຶ່ງເປັນຮູບແບບສາຍກາງກວ່າ ຖ້າທຽບໃສ່ການກີນເອົາບ້ານ (bing zhai jin chang) ໃນໄລຍະຕົ້ນໆພຸ້ນ, ຫົວໜ້າທີມຄົນໜຶ່ງໄດ້ຕອບຢ່າງໜັກແໜ້ນວ່າ: "ມັນເປັນໄປບໍ່ໄດ້ຮູບແບບສັນຍາປູກຢາງນີ້ ເປັນໄປບໍ່ໄດ້ຈົນຕົກຮອດຊຸມປີ 1990. ກ່ອນໜ້ານັ້ນ ຊາວບ້ານທຸກຈົນໂພດ. ດັ່ງນັ້ນ ບໍ່ມີທາງທີ່ມັນຈະໃຊ້ການໄດ້." ຄວາມເຫັນດັ່ງກ່າວ, ເຖິງວ່າມັນຈະບໍ່ໃຫ້ຄຳອະທິບາຍແບບລະອຽດກໍຕາມ, ອາດເປັນສິ່ງເຕືອນເຮົາວ່າ ມັນອາດມີຫຍັງຂອງມັນໃນຄວາມເຫັນທີ່ວ່າ "ທຸກໂພດ" ເພື່ອຈະປະຕິບັດສັນຍາປູກຢາງ. ຖ້າເປັນຄືແນວນັ້ນ, ເຮົາສາມາດເວົ້າໄດ້ບໍ່ວ່າ ນັ້ນແຫຼະຄືສິ່ງຢັ້ງຢືນເພີ່ມຕື່ມ ທີ່ຊີ້ໃຫ້ເຫັນເຖິງຄວາມບໍ່ເໝາະສົມທີ່ຈະເອົາຮູບແບບສັນຍາ "2+3"

ມານຳໃຊ້ຢູ່ ຫຼວງນ້ຳທາ? ໃນພາກທີ 5, ຂ້າພະເຈົ້າໄດ້ຊຽນວ່າ ຢູ່ເຂດຫ່າງໄກສອກຫລີກຂອງແຂວງ, ຮູບແບບ "2+3" ປາໄຊແທ້, ແຕ່ຮູບແບບວິທີ "1+4" ຊຶ່ງເປັນຕົວແບບຄ້າຍສຳປະທານຊ້ຳພັດຢູ່ລອດ.

ເຖິງວ່າ ຄວາມບໍ່ພໍໃຈ ຄວາມຕຶງຄຽດ ອາດບໍ່ຫາຍໄປເທື່ອລະຫວ່າງນິຄົມລັດ ແລະ ຊຸມຊົນທ້ອງຖິ່ນກໍຕາມ, ດຽວນີ້ ເກືອບວ່າບໍ່ມີອາການຂັດແຍ່ງແບບໂຈ່ງແຈ້ງໃດໆ: ຊົນຊາດສ່ວນໜ້ອຍລຸ້ນໃໝ່ແມ່ນມີຄວາມກະຕືລືລົ້ນ ແລະ ທະນົງໃຈທີ່ເປັນສ່ວນໜຶ່ງຂອງຊີວິດທັນສະໄໝຈີນທີ່ພວມບຸກໜ້າ. ພວກເຂົາເຈົ້າບໍ່ເຄີຍສຳຜັດກັບຊ່ວງເວລາກ່ອນມີນິຄົມລັດ ຫລື ການຍົກຍ້າຍເຂົ້າມາຂອງຊາວຫານຢ່າງຫຼວງຫຼາຍ. ກົງກັນຂ້າມຊາວບ້ານອາຍຸແກ່ກວ່າມີທັດສະນະແບບມີຂໍ້ຂັດແຍ່ງ ແລະ ຫຼາຍລະດັບ ກ່ຽວກັບມິດສະຫາຍຊາວຫານ: "ພວກສະຫາຍຫານນີ້ເຂົາໄດ້ເອົາດິນພວກເຮົາ, ແຕ່ເຂົາກໍໄດ້ສອນ ວິທີປູກຢາງໃຫ້ເຮົາ ແລະ ເຮັດສິ່ງດີໆສຳລັບພວກເຮົາ. ສິບສອງພັນນາໄດ້ພັດທະນາກໍແມ່ນຍ້ອນເຂົາເຈົ້າ. ຖ້າພວກເຂົາບໍ່ໄດ້ຊ່ວຍເຮົາປູກຢາງ, ພວກເຮົາກໍຈະບໍ່ຮັ່ງຄືທຸກມື້ນີ້." ໃນທີ່ສຸດຜົນໄດ້ເປັນຕົນເປັນໂຕດ້ານເສດຖະກິດປະກົດວ່າ ສາມາດປົວແປງແກ້ໄຂຄວາມເຄັ່ງຕຶງໃນຊຸມຊົນເຜົ່າ ແລະຄວາມແຕກແຍກສັງຄົມໄດ້. ໃນສິບປີຂ້າງໜ້າ ເມື່ອຕົ້ນຢາງສ່ວນໃຫຍ່ຢູ່ ຫຼວງນ້ຳທາ ເຂົ້າສູ່ໄລຍະປາດໄດ້ສູງແລ້ວ, ພວກເຮົາຈະໄດ້ຍິນຄວາມເຫັນແບບດຽວນີ້ບໍ ຈາກປາກຊາວບ້ານລາວກ່ຽວກັບນັກລົງທຶນຈີນ? ຖ້າຫາກໄດ້ຍິນເຊັ່ນນັ້ນ ມັນໜ້າຈະຖືເປັນໂອກາດໜ້າຊົມເຊີຍສະເຫລີມສະຫຼອງໄດ້ ຫລືບໍ່?

- ຮູບແບບຄ້າຍຄືກັນທາງດ້ານຜູ້ເປັນເຈົ້າຂອງສວນຂະໜາດນ້ອຍ ແລະ ການສະໜອງແຮງງານ

ຢູ່ຫຼວງນ້ຳທາ ແລະ ສິບສອງພັນນາ ກໍເຊັ່ນດຽວ, ຊາວບ້ານທີ່ສະພາບດີກວ່າກໍສາມາດເລີ່ມຕົ້ນໄວກວ່າ, ໄດ້ດິນດີກວ່າ ແລະ ໄດ້ປູກຕົ້ນຢາງຫຼາຍກວ່າ. ຄວາມແຕກໂຕນກັນນີ້ ອາດບໍ່ມີຫຼາຍປານນັ້ນຢູ່ ຫຼວງນ້ຳທາ ຍ້ອນລະດັບການສະໜັບສະໜູນຂອງລັດຖະບານແມ່ນຕໍ່າກວ່າ, ການສະໜອງສິນເຊື່ອກໍຈຳກັດ ແລະ ການນຳໃຊ້ລະບຽບການດ້ານມອບດິນບໍ່ເຂັ້ມແຂງ. ຜູ້ມີດິນຂະໜາດນ້ອຍຢູ່ທັງສອງແຫ່ງມັກຈະຕັດສິນໃຈໄລຍະຍາວໂດຍອີງໃສ່ຂໍ້ພິຈາລະນາໄລຍະສັ້ນ. ຈະເຫັນໄດ້ທີ່ຊາວບ້ານ ສິບສອງພັນນາ ຟ້າວຂາຍຕົ້ນຢາງເຂົາເຈົ້າໃນເວລານ້ຳຢາງຕົກຕໍ່າ, ໃນຂະນະດຽວກັນ ຊາວບ້ານລາວກໍເຮັດແບບດຽວກັນ ທັງນີ້ກໍເພື່ອແກ້ໄຂເຫດການສຳຄັນຂອງຊີວິດ (ເຊັ່ນ: ແຕ່ງດອງ, ສົ່ງສະການ, ໆລໆ) ຫລື ເພື່ອປິ່ນປົວ. ເຖິງຢ່າງໃດກໍຕາມ ຫຼາຍໆກໍລະນີແບບນີ້ ໄດ້ຜ່ອນຄາຍລົງແລ້ວ ຍ້ອນການໃຫ້ສິນເຊື່ອແກ່ຜູ້ມີສວນປູກຂະໜາດນ້ອຍໄດ້ຂະຫຍາຍອອກ. ຮູບແບບແຮງງານໃນສອງເຂດກໍມີແນວໂນ້ມຄືກັນ. ການພັດທະນາສວນຢາງ ສິບສອງພັນນາ ແມ່ນອີງອາໃສແຮງງານຈາກນອກ, ບໍ່ວ່າຈະເປັນຊາວໜຸ່ມທີ່ມີການສຶກສາໃນຊຸມປີຕົ້ນໆ ຫລື ກຳມະກອນຊົນເຜົ່າໃນຕອນຕໍ່ມາ, ແຫລ່ງແຮງງານ ຫຼວງນ້ຳທາ ກໍເຊັ່ນດຽວ ຊຶ່ງນັບມື້ຕ້ອງອີງອາໃສຂົນຂວາຍກຳມະກອນມືໃໝ່, ຜູ້ຍົກຍ້າຍມາແຕ່ຜົ້ງສາລີ ແລະ ຊຽງຂວາງ ກໍຄືກຳມະກອນຖືກຕ້ອງ ແລະ ບໍ່ຖືກຕ້ອງກົດໝາຍຈາກຈີນ.

- ຄວາມທ້າທາຍຄືກັນ ທາງດ້ານຄຸ້ມຄອງດິນ ແລະ ປ່າໄມ້

ກ່ອນໜ້າການມາຮອດຂອງຢາງພາລາ, ດິນຕາມພູສູງບໍ່ມີຄຸນຄ່າສູງປານໃດໃນແງ່ການຄ້າ ບໍ່ວ່າຢູ່ ສິບສອງພັນນາ ກໍຄືຢູ່ ຫຼວງນ້ຳທາ. ຮູບແບບການມອບດິນ ແລະ ນຳໃຊ້ຢູ່ທັງສອງບ່ອນມີບັນຫາຄືກັນຢູ່ໃນແງ່ເຂດແດນບໍ່ຈະແຈ້ງ ແລະ ການປະຕິບັດບໍ່ເຂັ້ມແຂງ. ເຖິງຢ່າງໃດກໍຕາມສະພາບຂາດການຄວບຄຸມເຫັນຄືວ່າໜັກໜ່ວງກວ່າຢູ່ຫຼວງນ້ຳທາ ຊຶ່ງສະທ້ອນໃຫ້ເຫັນເວລາສຳພາດຊາວບ້ານ ຊຶ່ງສ່ວນຫຼາຍບໍ່ຄ່ອຍຮູ້ເລື່ອງແຜນນຳໃຊ້ທີ່ດິນ ນອກຈາກເຂດຊາຍແດນບ້ານ. ກົງກັນຂ້າມຊາວບ້ານຈີນສາມາດບອກໄດ້ວ່າດິນພູມອບໃຫ້ມີຫຼາຍປານໃດ, ມອບໃຫ້ໃຜ, ດ້ວຍຈຸດປະສົງໃດ; ແຕ່ເນື່ອງຈາກວ່າ ເສັ້ນແດນບໍ່ຈະແຈ້ງເວລາປະຕິບັດໃນບາງຄັ້ງຈຶ່ງພົບຂໍ້ຫຍຸ້ງຍາກ. ເມື່ອທຽບໃສ່ຄົນລາວ, ຊາວບ້ານຈີນປະກົດວ່າມີຄວາມຮູ້ສຶກໜັກແໜ້ນກວ່າກ່ຽວກັບການເປັນເຈົ້າຂອງດິນ ຊຶ່ງ

ອາດເນື່ອງມາຈາກຢູ່ຈີນ ມີການອຶດດິນແດ່. ແນວໂນ້ມແບບດຽວກັນອາດຈະປະກົດຕົວໃນລາວ (ບໍ່ວ່າຈະມີການອອກໃບຕາດິນທາງການ ຫລື ບໍ່ກໍຕາມ) ຍ້ອນວ່າການປູກຢາງເຮັດໃຫ້ລາຄາດິນເພີ່ມຂຶ້ນ.

ໃນບໍ່ເທົ່າໃດປີມານີ້ ປ່າສະຫະກອນ ແລະ ນິຄົມຢູ່ ສິບສອງພັນນາ ນັບມື້ນັບຖືກປ່ຽນສະພາບໃຫ້ເປັນສວນປູກຢາງໂດຍຊາວບ້ານ ແລະ ຜູ້ລົງທຶນເອກະຊົນ, ອັນເປັນພາບທີ່ວທັດທີ່ຫຼາຍໆຄົນຍ້ານວ່າ ຫຼວງນໍ້າທາ ອີກບໍ່ນານກໍຈະກາຍເປັນຄືກັນ. ຕາມຊາວບ້ານເອງບອກເລົ່າວ່າ ສ່ວນຫຼວງຫຼາຍຂອງສວນຢາງທີ່ມີຢູ່ທີ່ ເມືອງສິງ ແລະ ເມືອງລອງ ມາເຖິງປັດຈຸບັນແມ່ນປູກຢູ່ຕອນດິນໄຮ່ເຮື້ອ, ແຕ່ວ່າໃນບາງບ້ານປູກຢູ່ຮ່ອມພູ ເມືອງສິງ, ຊາວບ້ານໄດ້ສາລະພາບວ່າ ສວນຢາງໄດ້ເລື່ອນເຂົ້າໄປຫາປ່າສະຫງວນແລ້ວ. ຢູ່ຫຼວງນໍ້າທາ ແລະ ຢູ່ຈີນ ກໍເຊັ່ນດຽວກັນ, ບໍ່ມີລະບຽບການເພື່ອຕີລາຄາຄວາມຖືກຕ້ອງຕາມກົດໝາຍ ຫລື ຄວາມເໝາະສົມຂອງດິນກ່ອນສວນປູກຢາງຈະເກີດໂດຍນັກລົງທຶນ ຫລື ເຈົ້າຂອງດິນຂະໜາດນ້ອຍ. ນອກນັ້ນແລ້ວລະບຽບການຈີນ ແລະ ລາວ ອະນຸຍາດໃຫ້ຕີຄວາມໝາຍ "ປ່າ" ແບບດຽວກັນ, ຊຶ່ງເຮັດໃຫ້ມີຊ່ອງຫວ່າງໃນກົດໝາຍທີ່ອາດເກີດຂຶ້ນໄດ້. ໃນຍຸດທະສາດປ່າໄມ້ເຖິງ 2020, ການປູກປ່າ, ລວມທັງປູກຕົ້ນຢາງ, ແມ່ນຖືກສົ່ງເສີມຢ່າງເດັ່ນຊັດວ່າ ເປັນເສັ້ນທາງເພີ່ມທະວີ "ປ່າ" ປົກຫຸ້ມ ປະເທດລາວ. ເຊັ່ນດຽວກັນກັບສະພາບ ສິບສອງພັນນາ, ການອຸດໜູນຂອງລັດຖະບານສໍາລັບຂະບວນ "ເມັດພືດເພື່ອຄວາມຂຽວ" ມີບາງຄັ້ງໄດ້ຖືກສວຍໃຊ້ໄປປູກຕົ້ນຢາງ.[30]

ພ້ອມກັນນີ້ ມັນກໍມີຄວາມແຕກຕ່າງບາງຢ່າງໃນຂະບວນພັດທະນາສວນຢາງຢູ່ ຫຼວງນໍ້າທາ ແລະ ດ້ານໜຶ່ງອີກຢູ່ ສິບສອງພັນນາ:

- ຄວາມແຕກຕ່າງໃນລະດັບການສະໜັບສະໜູນຂອງລັດຖະບານຕໍ່ເຈົ້າຂອງສວນປູກຂະໜາດນ້ອຍ

ການສະໜັບສະໜູນຂອງລັດຖະບານໄດ້ເປັນສິ່ງສໍາຄັນໃນການພັດທະນາຂອງເຈົ້າຂອງດິນຂະໜາດນ້ອຍຢູ່ ສິບສອງພັນນາ. ຊາວບ້ານບໍ່ພຽງແຕ່ສາມາດເຂົ້າເຖິງເບ້ຍໂດຍບໍ່ຕ້ອງຊື້ ຫລື ໃນລາຄາຖືກຊຸມ, ໄດ້ຮັບສິນເຊື່ອຢ່າງຫຼວງຫຼາຍ ແລະ ບໍ່ຕ້ອງເສຍພາສີ, ແຕ່ກໍຍັງໄດ້ຮັບການສະໜັບສະໜູນທາງວິຊາການຢ່າງຫຼວງຫຼາຍຈາກນິຄົມລັດ ຊຶ່ງເລື່ອງນີ້ ຍັງສືບຕໍ່ເຖິງທຸກວັນນີ້. ກົງກັນຂ້າມ ອໍານາດການປົກຄອງ ແຂວງຫຼວງນໍ້າທາ ໄດ້ສັນຍານັບແຕ່ເດືອນທັນວາ 2006 ວ່າຈະຊ່ວຍຊາວບ້ານທີ່ບໍ່ມີດິນນາໃຫ້ມີດິນປູກຢາງ 1 ຮຕຕໍ່ຄອບຄົວ. ຫຼາຍກວ່າໜຶ່ງປີຜ່ານໄປ ແຜນດັ່ງກ່າວຍັງບໍ່ທັນເປັນຕົນເປັນໂຕ. ບໍ່ດົນເທົ່າໃດ ຄືພາຍຫລັງທີ່ຊາວບ້ານເລີ່ມຕົ້ນປາດຢາງ, ເຂົາເຈົ້າກໍຕ້ອງເສຍພາສີແລ້ວ. ນອກນັ້ນແລ້ວ ອັດຕາພາສີແມ່ນບໍ່ປ່ຽນແປງຈາກປີໜຶ່ງຫາປີໜຶ່ງ, ຊຶ່ງມັນຈະເຮັດໃຫ້ມີບັນຫາບໍ່ກໍ້າເກິ່ງໃນຊຸມປີເລີ່ມຕົ້ນ ແລະ ຊ່ວງປີຫລັງໆທີ່ປະລິມານນໍ້າຢາງໜ້ອຍລົງ ແລະ ໃນຍາມເສດຖະກິດຕົກຕໍ່າ.

ຊາວບ້ານຍັງມີຄວາມຫຍຸ້ງຍາກທີ່ຈະຂໍສິນເຊື່ອເພື່ອປູກຢາງ, ຫຼາຍຄົນໄດ້ລາຍງານວ່າ ຄໍາຮ້ອງຂໍຢືມເງິນຂອງເຂົາເຈົ້າໄດ້ຖືກປະຕິເສດ. ບໍ່ມີຊາວບ້ານຄົນໃດທີ່ຖືກສໍາພາດເຫັນວ່າ ຫ້ອງການສົ່ງເສີມກະສິກໍາປ່າໄມ້ເມືອງ ຫລື ອົງກອນລັດອື່ນໆເປັນແຫລ່ງສົ່ງເສີມວິຊາການ. ຊາວບ້ານໄດ້ອີງອາໃສຊາວບ້ານອື່ນໆເປັນຕົ້ນຕໍ ຫລືບໍ່ ກໍຍ້ອນສາຍພົວພັນຂ້າມຊາຍແດນໄປ ຫລືບໍ່ ກໍຈ້າງພະນັກງານສົ່ງເສີມຈີນເພື່ອໃຫ້ການສະໜັບສະໜູນວິຊາການ.

---

30 ອີງຕາມລະບຽບການແຫ່ງຊາດ, ການຫັນເອົາດິນກະສິກໍາເປັນປ່າຕ້ອງມີປ່ານິເວດຢ່າງໜ້ອຍ 80%, ແຕ່ຄໍານິຍາມປ່ານິເວດນັ້ນມັນມີຫຼາຍຄວາມໝາຍ. ການແຍກປະເພດທໍາອິດໃນປີ 2001 ໂດຍກະຊວງປ່າໄມ້ ບໍ່ໄດ້ຖືວ່າຕົ້ນຢາງເປັນແນວພັນນິເວດ. ແຕ່ໃນ 2002 ໂດຍຕອບສະໜອງຄໍາຂໍຮ້ອງຂອງ ແຂວງ ຢຸນນານ, ຕົ້ນຢາງກາຍເປັນທັງປະເພດນິເວດ ແລະ ການຄ້າ. ການແຍກປະເພດສະເພາະມັນແລ້ວແຕ່ຮູບແບບສະເພາະໃນການປູກ. ສິ່ງດັ່ງກ່າວເຮັດໃຫ້ມີຊ່ອງຫວ່າງໃນລະບຽບການໃນພາກປະຕິບັດ ຊຶ່ງເຮັດໃຫ້ດິນກະສິກໍາບາງບ່ອນຖືກປ່ຽນເປັນປ່າຢາງ ຊຶ່ງທັງໝົດໄດ້ຮັບເງິນອຸດໜູນຈາກລັດຖະບານກາງ.

- ຄວາມແຕກຕ່າງດ້ານການຄວບຄຸມຄຸນນະພາບ ແລະ ສົ່ງເສີມທາງວິຊາການ

ບັນດານິຄົມລັດ ແລະ ສະຖາບັນພືດເຂດຮ້ອນ ແຫ່ງຢຸນນານ, ຕັ້ງຢູ່ ຈິງຮົງ, ສະໜອງການຄົ້ນຄວ້າ, ທົດລອງ ແລະ ວຽກສົ່ງເສີມວິຊາການໃຫ້ຊາວສວນຢາງ ແລະ ອຸດສາຫະກຳປູກຢາງໂດຍລວມ. ແຕ່ຢູ່ລາວບໍ່ມີການຈັດຕັ້ງທຽບເທົ່າ. ລັດຖະບານຈີນ ຍັງຖົມຂຸມໃຫ້ການເພາະປູກເບ້ຍຄຸນນະພາບສູງ ແລະ ອອກໃບຢັ້ງຢືນໃຫ້ທະນາຄານເບ້ຍໄມ້ແກ່ຊາວສວນ ເພື່ອ ຮັບປະກັນຄຸນນະພາບເບ້ຍໂດຍທົ່ວໄປ ກ່ອນຈະເອົາໄປປູກຢູ່ສວນຢາງທີ່ ສິບສອງພັນນາ. ແຕ່ຢູ່ ຫຼວງນໍ້າທາ ໂດຍທົ່ວໄປແມ່ນບໍ່ມີໃຜຮູ້ຊະນິດແຫລ່ງທີ່ມາຂອງເບ້ຍຢາງ ແລະ ບໍ່ມີການກວດກາຄຸນນະພາບຂອງສວນປູກທີ່ໄດ້ສ້າງຂຶ້ນມາ, ທັງສວນນ້ອຍ ແລະ ໃຫຍ່, ແມ່ນບໍ່ມີການຕິດຕາມ ຫລື ຕີລາຄາແຕ່ຢ່າງໃດ. ຜູ້ປູກຂະໜາດນ້ອຍຂາດການອົບຮົມໃນເລື່ອງປູກຢາງ ແລະ ເຕັກນິກການປາດ, ນີ້ກໍແມ່ນບັນຫາຂອງຜູ້ລົງທຶນຂະໜາດໃຫຍ່ເຊັ່ນດຽວ. ດັ່ງທີ່ຂ້າພະເຈົ້າໄດ້ສະເໜີໃນບົດກ່ອນໜ້ານີ້ວ່າ ການສົ່ງຕໍ່ຄວາມຮູ້ດ້ານເຕັກໂນໂລຊີນັ້ນແມ່ນຈຳກັດ ບໍ່ວ່າກໍລະນີໂຄງການສັນຍາປູກຢາງ ຫລື ໃນກໍລະນີສຳປະທານກໍເຊັ່ນດຽວ, ຢ່າງໜ້ອຍກໍແມ່ນສະພາບພົບເຫັນໃນປັດຈຸບັນ.

- ຫຼວງນໍ້າທາ ໄປຕາມເສັ້ນທາງເລັ່ງລັດ ຫລືບໍ່?

ສິບສອງພັນນາ ໄດ້ຜ່ານຫຼາຍໆໄລຍະຍາວນານໃນຂະບວນການພັດທະນາຢາງ, ແຕ່ລະໄລຍະມີຄວາມສະເພາະຂອງມັນ, ຈາກຈຸດທີ່ມີແຕ່ນິຄົມລັດເປັນສ່ວນໃຫຍ່ໃນໄລຍະຕົ້ນໆ ຕິດຕາມມາດ້ວຍໄລຍະທີ່ມີການຂະຫຍາຍຕົວຂອງສວນຂະໜາດນ້ອຍຂອງຊາວກະສິກອນ ແລະ ໃນທີ່ສຸດກໍແມ່ນໄລຍະທີ່ແຜ່ລາມຂອງການລົງທຶນເອກະຊົນ. ແຕ່ວ່າສະພາບຢູ່ ຫຼວງນໍ້າທາ ບໍ່ເປັນຄືແນວນັ້ນ, ຄືທຸກສິ່ງທຸກຢ່າງເກີດຂຶ້ນພ້ອມໆກັນ: ການລົງທຶນຂະໜາດໃຫຍ່, ລົງທຶນຂະໜາດນ້ອຍ, ການສຳປະທານ, ການມີສັນຍາຜູກພັນປູກ, ສວນປູກເຈົ້າຂອງດິນຂະໜາດນ້ອຍ, ມີທັງໝົດນີ້ ກ່ອນທີ່ຈະມີສະຖາບັນໃຫ້ການສະໜັບສະໜູນ: ສິດທິໃນການຄຸ້ມຄອງທີ່ດິນບໍ່ຮັບປະກັນ, ບໍ່ມີການປະເມີນສະພາບແວດລ້ອມ, ການສົ່ງເສີມດ້ານວິຊາການອ່ອນ, ສິນເຊື່ອມີຈຳກັດ, ລະບຽບການບໍ່ຄົບຖ້ວນ ແລະ ການສໍ້ລາດຕິດສິນບົນມີຢູ່ເຕັມ. ສິບສອງພັນນາ ໃຊ້ເວລາເກືອບ 50 ປີ ເພື່ອມີສວນປູກຢາງ 2.5 ລ້ານມູ, ພຽງແຕ່ນິຄົມລັດຢຸນນານເທົ່ານັ້ນ ກໍມີສັນຍາຈະພັດທະນາສວນປູກ ເຖິງ 2.5 ລ້ານມູ ຢູ່ສີ່ແຂວງພາກເໜືອຂອງລາວ ພາຍໃນເວລາບໍ່ພໍເທົ່າໃດປີຂ້າງໜ້າ. ພວກເຮົາພ້ອມຈະຮອງຮັບເອົາແຜນການພັດທະນາການປູກຢາງທັງໝົດນີ້ບໍໃນເວລາອັນສັ້ນໆນີ້?

ສິບສອງພັນນາ ມີບາງບົດຮຽນສຳຄັນເພື່ອສອນ ຫຼວງນໍ້າທາ. ແນ່ນອນວ່າຢາງພາລາບວກກັບຂໍ້ລິເລີ່ມເສດຖະກິດອື່ນໆ, ແມ່ນສຳຄັນທີ່ຈະຊ່ວຍຊຸມຊົນທ້ອງຖິ່ນ ໃຫ້ຫລຸດພົ້ນອອກຈາກສະພາບທຸກຍາກແລ້ວກ້າວໄປສູ່ການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ. ແຕ່ຄວນສັງເກດຢູ່ທີ່ວ່າ ຜົນສຳເລັດຈະເປັນໄປບໍ່ໄດ້ ຖ້າປາສະຈາການສະໜັບສະໜູນດ້ວຍຄວາມຕັດສິນໃຈສູງຕໍ່ເຈົ້າຂອງດິນຂະໜາດນ້ອຍຂອງລັດຖະບານຈີນ. ອີກຢ່າງໜຶ່ງ, ການປ່ຽນແປງໃນທາງບວກເຫລົ່ານີ້ມີມາໄດ້ ກໍຕ້ອງສູນເສຍສິ່ງແວດລ້ອມຢ່າງຫຼວງຫຼາຍ. ຖ້າຫາກຄຳເວົ້າ ຂອງນັກລົງທຶນຈີນ ແລະ ຊາວບ້ານທີ່ຂ້າພະເຈົ້າໄດ້ໂອ້ລົມນຳຖືກຕ້ອງ, ຄຳເວົ້າທີ່ວ່າ: “ເຈົ້າບໍ່ຕ້ອງສົນເລື່ອງສິ່ງແວດລ້ອມເທື່ອ, ບັນຫາປາກທ້ອງຕ້ອງມາກ່ອນ”, ຖ້າເປັນແນວນັ້ນ ປະຊາຊົນ ຫຼວງນໍ້າທາ ເດ, ເຂົາເຈົ້າພ້ອມ ຫຼືຄວນທີ່ຈະຮັບສະພາບແລກປ່ຽນຊື້ນໄປປາມາແບບນີ້ແລ້ວບໍ?

ມັນນອກເໜືອຂອບການເຮັດລາຍງານສະບັບນີ້ ທີ່ຈະທຳການປຽບທຽບຢ່າງລະອຽດລະອໍ ກ່ຽວກັບສະພາບຢູ່ສອງຟາກຊາຍແດນ ຊຶ່ງມັນແມ່ນຫົວຂໍ້ສຶກສາສະເພາະຂອງມັນເອງ. ແຕ່ເຈົ້າໜ້າທີ່ກໍຄືຊາວສວນ ຫຼວງນໍ້າທາ (ພ້ອມທັງຜູ້ໃຫ້ທຶນ) ແນ່ນອນວ່າ ຈະໄດ້ຮັບຜົນປະໂຫຍດ ຈາກຄວາມເຂົ້າໃຈເພີ້ມຕື່ມ ແລະ ຈາກການແລກປ່ຽນຄວາມເຫັນກັບຝ່າຍຕ່າງໆທີ່ ສິບສອງພັນນາ, ຜົນປະໂຫຍດ ບໍ່ພຽງແຕ່ໃນດ້ານຄວາມຮູ້ວິຊາການ ແຕ່ໃນດ້ານບົດຮຽນທັງໃນແງ່ລະດົມຈິດໃຈ ແລະ ແງ່ຄວາມລະມັດລະວັງທີ່ຕ້ອງມີໃນບັນດາຍຸດທະສາດການພັດທະນາລວມ.

## ຕາຕະລາງ 8.1 ການປຽບທຽບສະພາບພັດທະນາຢາງພາລາຢູ່ ຫຼວງນໍ້າທາ+ສິບສອງພັນນາ

| | ຫຼວງນໍ້າທາ | ສິບສອງພັນນາ |
|---|---|---|
| **ການກໍ່ຕັ້ງ** | ກາງຊຸມປີ 1990<br>ການລິເລີ່ມຂອງຊາວບ້ານເອງ,ໂດຍມີອິດທິ ພົນຈາກຈີນ ແລະ ສະໜັບສະໜູນຂອງລັດຖະບານ, ສົມທົບຢ່າງໄວວາຈາກນັກລົງທຶນ | ຊຸມປີ 1950<br>ນິຄົມລັດ, ຕໍ່ມານໍາໄປສູ່ການມີສ່ວນຮ່ວມຂອງຊາວບ້ານ. ການລົງທຶນຂອງເອກະຊົນແຜ່ລາມໃນຊຸມປີ 1990 |
| **ນັກລົງທຶນຂະໜາດໃຫຍ່** | ຕົ້ນຕໍແມ່ນ ບໍລິສັດຈີນ ເຮັດວຽກໃຕ້ເງື່ອນໄຂປ່ຽນແທນໃຫ້ການປູກຝິ່ນ | ນິຄົມລັດ |
| **ນັກລົງທຶນຂະໜາດນ້ອຍ** | ນັກລົງທຶນຈາກທົ່ງພຽງ, ນັກລົງທຶນຈີນ(ຫານ ແລະ ຊົນເຜົ່າ) ຈາກເຂດຊາຍແດນ | ເພື່ອນຮ່ວມງານນິຄົມລັດ, ອະດີດບໍລິສັດລັດຢູ່ທ້ອງຖິ່ນທີ່ເປັນເອກະຊົນ, ນັກລົງທຶນຫານຈາກເຂດດິນທາຍາກ |
| **ຮູບແບບລົງທຶນ (ໃຫຍ່)** | ສໍາປະທານ ຫລື ສັນຍາປູກກັບຊຸມຊົນທ້ອງຖິ່ນ | ລົງທຶນຂອງລັດຂະໜາດໜັກຕອນ ເລີ່ມຕົ້ນ. ບ້ານຖືກກືນເອົາໂດຍນິຄົມລັດໃນໄລຍະຊຸມປີ 1970 ແລະ 1980. ຫຼາຍຮູບແບບສັນຍາປູກຝັງ ແລະ ໃຫ້ເຊົ່າດິນກັບຊຸມຊົນທ້ອງຖິ່ນໃນຊຸມປີ 1990 ແລະ 2000 |
| **ຮູບແບບລົງທຶນ (ນ້ອຍ)** | ສັນຍາປູກຢາງຫຼາຍຮູບແບບ, ໃຫ້ເຊົ່າ ແລະ ຊື້ດິນ | ໃຫ້ເຊົ່າດິນ, ສັນຍາປູກຢາງດ້ວຍຫຼາຍຮູບແບບ |
| **ການນໍາໃຊ້ດິນ** | ໃຜມາກ່ອນໄດ້ກ່ອນ. ດິນໄຮ່ໃນອະດີດ ແລະ ບຸກລຸກປ່າເລັກນ້ອຍ | ປ່າສະຫະກອນ ແລະ ດິນໄຮ່ປ່ອຍໃຫ້ປ່າຟື້ນຄືນໃໝ່ມັກຈະໃຊ້ເຮັດສັນຍາປູກສວນຢາງໃນຕອນຕົ້ນໃນຊຸມປີ 1990 |
| **ທຶນ** | ທຶນ ແລະ ສິນເຊື່ອຈາກລັດມີຈໍາກັດ | ທຶນ ແລະ ເງິນອຸດໜູນລັດໃນຕອນຕົ້ນ. ດຽວນີ້ສ່ວນຫຼາຍເປັນທຶນເອກະຊົນ. ມີສິນເຊື່ອບໍ່ອັ້ນສໍາລັບຜູ້ລົງທຶນຂະໜາດໃຫຍ່ ແລະ ນ້ອຍ |
| **ສົ່ງເສີມວິຊາການ** | ສົ່ງທອດຄວາມຮູ້ເຕັກໂນໂລຊີ ບໍ່ມາຈາກສູນກາງ ແລະ ບໍ່ເປັນທາງການ ຜ່ານສາຍພີ່ນ້ອງ/ມິດສະຫາຍລະຫວ່າງຊາຍແດນ | ສະໜັບສະໜູນວິຊາການຢ່າງກວ້າງຂວາງຈາກນິຄົມລັດໃຫ້ແກ່ຊາວບ້ານ. ລັດຖະບານຖົມຊຸມສະໜອງເບ້ຍຄຸນນະພາບສູງ |
| **ສະໜອງແຮງງານ** | ຊາວບ້ານທ້ອງຖິ່ນ, ກໍາມະກອນຈາກພູດອຍ (ຕົວຢ່າງ: ຜົ້ງສາລີ) ແລະ ກໍາມະກອນຈີນຖືກຕ້ອງ ແລະ ບໍ່ຖືກຕ້ອງກົດໝາຍ | ກໍາມະກອນນິຄົມລັດ, ຊາວບ້ານທ້ອງຖິ່ນ ແລະ ກໍາມະກອນຈາກເຂດພູດອຍທຸລະກັນດານ |
| **ການປຸງແຕ່ງ** | ສະຖານທີ່ປຸງແຕ່ງຈໍາກັດ (ໃນປັດຈຸບັນ) | ສະຖານີເກັບ ແລະ ໂຮງງານປຸງແຕ່ງຈໍານວນຫນຶ່ງຊຶ່ງເປັນຂອງນິຄົມລັດ, ລັດຖະບານທ້ອງຖິ່ນ ຫລື ບຸກຄົນແລະບໍລິສັດເອກະຊົນ |
| **ການຕະຫຼາດ** | ສະໜອງ ສິບສອງພັນນາ. ປັດຈຸບັນຄ້າຂາຍຜ່ານຊາຍແດນບໍ່ເປັນທາງການ ແລະ ມີການ | ຄວບຄຸມໂດຍລັດຢ່າງເຕັມປ່ຽມຮອດທ້າຍຊຸມປີ 1990. ສະໜອງໃຫ້ພາກ |

| | ຫຼວງນໍ້າທາ | ສິບສອງພັນນາ |
|---|---|---|
| | ເກັບຊື້ແບບທາງການໂດຍພໍ່ຄ້າຈີນ. ສະພາບໃນອະນາຄົດບໍ່ແນ່ນອນ | ກາງ ແຄມທະເລຂອງຈີນ ແລະ ໄກໄປກວ່ານັ້ນ. ອຸດສາຫະກຳປີກປ້ອງທັງນຳເຂົ້າ ແລະ ສົ່ງອອກເຮັດພາຍໃຕ້ການຄວບຄຸມທາງລະບຽບການຢ່າງເຄັ່ງຄັດໂດຍຜ່ານໂຄຕາ ແລະ ພາສີ |
| **ພາສີ** | ຊາວບ້ານຕ້ອງເສຍພາສີທັນທີ່ ທີ່ໄດ້ປາດຢາງ | ຊາວບ້ານເສຍພັນທະພາສີພຽງເລັກນ້ອຍ |

# ພາກທີ 9
# ປະເດັນບັນຫາ, ຂໍ້ສະເໜີ ແລະ ບົດບາດຂອງການຊ່ວຍເຫລືອເພື່ອພັດທະນາ

ບົດຕ່າງໆທີ່ສະເໜີກ່ອນໜ້ານີ້ໄດ້ຢັ້ງຢືນ ແລະ ວິເຄາະ ປະກົດການຢາງພາລາຢູ່ ຫຼວງນໍ້າທາໂດຍໄດ້ສຸມໃສ່ເຂດຊາຍແດນ. ໃນບົດສຸດທ້າຍນີ້, ຂ້າພະເຈົ້າຈະໃຫ້ຂໍ້ສະຫຼຸບປະເດັນບັນຫາ ແລະ ຂໍ້ທ້າທາຍ ຊຶ່ງໄດ້ສະເໜີໃນລາຍງານນີ້ ແລະ ມີຂໍ້ແນະນຳບາດກ້າວສະເພາະເພື່ອການແກ້ໄຂທີ່ເປັນໄປໄດ້

## 9.1 ສະຫຼຸບປະເດັນບັນຫາ ແລະ ຂໍ້ແນະນຳ

### 9.1.1 ການເຮັດສັນຍາຜູກພັນ ໃນການປູກຢາງພາລາ

<u>ສະຫຼຸບປະເດັນ</u>: **ເຫັນວ່າ**ມັນມີຊ່ອງຫວ່າງຫຼາຍລະຫວ່າງການເຮັດສັນຍາປູກຢາງດັ່ງທີ່ທາງການແຂວງໄດ້ວາດພາບເອົາໄວ້ ແລະ ຕົວຈິງທີ່ປະຕິບັດຢູ່. ຕົວແບບ “2+3” ສ່ວນຫຼາຍຈະເຈືອຈາງໄປເປັນຕົວແບບ “1+4” (ຫລືສຳປະທານ) ໃນຕົວຈິງ, ເຮັດໃຫ້ຊາວບ້ານໄດ້ຮັບສ່ວນແບ່ງປັນຂີ້ຮ້າຍກວ່າເກົ່າ. ການແບ່ງປັນຜົນກຳໄລມັກຈະໝາຍເຖິງການແບ່ງປັນດິນ ແລະ ຕົ້ນໄມ້. ຊາວບ້ານບາງຄັ້ງ ຖືກກົດດັນໃຫ້ເຂົ້າໃນໂຄງການສັນຍາປູກຢາງກັບນັກລົງທຶນຂະໜາດໃຫຍ່. ການໂຕ້ແຍ່ງດ້ານເງິນເດືອນເປັນສິ່ງທີ່ມັກເກີດ. ການກຳນົດເນື້ອທີ່ດິນປູກຝັງມັກຊໍ້າຊ້ອນ ແລະ ເຂດກຳນົດເພື່ອທ◌ໍສັນຍາປູກຂະໜາດໃຫຍ່ເກີນຄວາມເປັນຈິງ ຊຶ່ງກາຍເປັນຄວາມເປັນຫ່ວງຕື່ມອີກ ແລະ ເປັນໜໍ່ແໜງໃຫ້ເກີດຄວາມຂັດແຍ່ງໃນອະນາຄົດ.

<u>ຂໍ້ສະເໜີ</u>

- ງົດຊົ່ວຄາວການອະນຸມັດໂຄງການສັນຍາປູກຢາງຂະໜາດໃຫຍ່ໃໝ່ (ຮີບດ່ວນ)

ລັດຖະບານລາວ ໄດ້ງົດການໃຫ້ສຳປະທານດິນລະດັບສູນກາງ ຫຼາຍກວ່າ 100 ຮຕ ຂຶ້ນໄປ ນັບແຕ່ ພຶດສະພາ ປີ 2007, ການງົດແບບດຽວກັນນີ້ ຄວນນຳໄປໃຊ້ສຳລັບໂຄງການສັນຍາປູກຝັງໃໝ່ຂະໜາດໃຫຍ່ທີ່ ຫຼວງນໍ້າທາ ຍ້ອນວ່າ ສະພາບທີ່ປະຕິບັດຢູ່ດຽວນີ້ ກໍຄືຈຳນວນນັກລົງທຶນທີ່ມີຫຼວງຫຼາຍ ແລະ ເຂດແດນພາຍໃນແຂວງທີ່ໄດ້ເຮັດສັນຍາສຳປະທານໄປແລ້ວ ກໍ່ຊ້ອນຂ້າງຫລາຍ. ເຮົາຕ້ອງມີເວລາພຽງພໍເພື່ອສັງລວມບັນດາປະເດັນບັນຫາທີ່ຍັງຄ້າງຄາ, ສ້າງຕັ້ງລະບົບຕິດຕາມ ແລະ ປະເມີນຜົນ, ທົບທວນເບິ່ງວິທີການ ຕົວແບບທີ່ໄດ້ສົ່ງເສີມມາ ແລະ ດັດປັບຕາມຄວາມຈຳເປັນ.

- ປັບປຸງສະພາບຊາວບ້ານຜູ້ທີ່ບໍ່ມີທາງອອກ (ຮີບດ່ວນ)

ສຳລັບຊາວບ້ານຜູ້ທີ່ຖືກ*ລັອກ* ບໍ່ມີທາງອອກ ຍ້ອນໂຄງການສັນຍາປູກໄມ້ “1+4” ຊຶ່ງກຳລັງແຜ່ລາມຢູ່ນັ້ນ, ຕ້ອງຊອກຫາວິທີການເຮັດໃຫ້ເຂົາເຈົ້າເຂົ້າເຖິງດິນ ແລະ ຊັບພະຍາກອນໃຫ້ໄດ້ຫຼາຍທີ່ສຸດ, ພ້ອມທັງສະໜັບສະໜູນທາງວິຊາການ ແລະ ສິນເຊື່ອທີ່ເຂົາເຈົ້າຕ້ອງການ. ພາຍຫລັງການແບ່ງປັນດິນ/ຕົ້ນໄມ້, ຊຶ່ງເກີດຂຶ້ນລະຫວ່າງສາມປີ ເຖິງ ເວລາປາດຢາງໄດ້ ແລ້ວແຕ່ຂໍ້ຕົກລົງສັນຍາສະເພາະ, ຊາວບ້ານ ໂດຍສະເພາະຢ່າງຍິ່ງຜູ້ຢູ່ເຂດຫ່າງໄກສອກຫລີກ, ອາດປະສົບກັບຂໍ້ທ້າທາຍຕ່າງໆ ທີ່ໜັກໜ່ວງກ່ຽວກັບແຮງງານ, ຄວາມສາມາດດ້ານວິຊາການ ແລະ ການເງິນເພື່ອຮັກສາສ່ວນແບ່ງຂອງຕົນໄວ້ຄືເກົ່າ. ການສະໜັບສະໜູນດ້ານສິນເຊື່ອ ແລະ ວິຊາການຈະເປັນສິ່ງຕ້ອງການທີ່ສຳຄັນ ເພື່ອປ້ອງກັນບໍ່ໃຫ້ຊາວບ້ານຕ້ອງຂາຍສ່ວນແບ່ງຂອງຕົນໃຫ້ຜູ້ລົງທຶນ (ຊຶ່ງເປັນເລື່ອງທີ່ເກີດຂຶ້ນແລ້ວຢູ່ບາງບ່ອນ). ໃນໄລຍະດຽວກັນ ຕ້ອງຮຽກຮ້ອງໃຫ້ບໍລິສັດສອນໃຫ້ຊາວບ້ານຮູ້ເຕັກນິກການປູກ, ບົວລະບັດຮັກສາ, ປາດຢາງ ແລະ ຕ້ອງສ້າງຕັ້ງກົນໄກຕິດຕາມເພື່ອຮັບປະກັນວ່າ ຊາວບ້ານທີ່ເຮັດຕາມນັ້ນ (ຄວນສັງເກດວ່າໃນໂຄງການທີ່ມີຢູ່ປັດຈຸບັນ, ການປັນສ່ວນແບ່ງມັກຈະມີຂຶ້ນດົນສົມຄວນກ່ອນຈະໄດ້ປາດຢາງ; ມັນເປັນເລື່ອງບໍ່ຍາກທີ່ບໍລິສັດຈະດຶງເອົາກຳມະກອນທັກສະຕໍ່າໃນໝູ່ຊາວບ້ານ ໂດຍບໍ່ໄດ້ຖ່າຍທອດຄວາມຮູ້ດ້ານວິຊາການໃຫ້ຊາວບ້ານເລີຍ). ນອກນັ້ນ ຄວນມີມາດຕະຖານຕໍ່າສຸດ ກ່ຽວກັບອັດຕາ ແລະ ການຈ່າຍເງິນເດືອນ

ໃຫ້ທ່ວງທັນເວລາ ເພື່ອຫລີກລ້ຽງການຜິດຖຽງ ແລະ ການກະທຳແບບເອົາປຽບ. ມາດຕະການຕ່າງໆເຫລົ່ານີ້ ເມື່ອໃດຫາກໄດ້ສ້າງສຳເລັດຂຶ້ນມາແລ້ວ, ອາດຈະລວມເຂົ້າໄວ້ໃນຊຸມເອກະສານແບບທ້າຍຂອງສັນຍາທີ່ມີຢູ່ແລ້ວ.

- ໃນຕົວແບບ "1+4" ຊາວບ້ານໄດ້ສ່ວນແບ່ງດີກວ່າ (ຮີບດ່ວນ ຫລື ຊ້າໂພດແລ້ວ)

ຮູບແບບ "1+4" ເບິ່ງຄືວ່າ ຈະສືບຕໍ່ເປັນຮູບແບບສັນຍາຜູກພັນ ໃນການປູກຢາງອີກຢູ່ ສຳລັບ ຫຼວງນໍ້າທາ. ອີງຕາມລະບຽບການລວມ, ແຂວງ ແລະ ເມືອງ ຄວນຮຽກຮ້ອງໃຫ້ຊາວບ້ານ ທີ່ໄດ້ສ່ວນແບ່ງໜ້ອຍສຸດນັ້ນ ໃຫ້ໄດ້ສູງກວ່າເກົ່າ (ຕົວຢ່າງ: 45%) ໃນກໍລະນີມີສັນຍາປູກຝັງ "1+4" (ແຕ່ມັນອາດຫລ້າສວຍເກີນໄປສຳລັບຫລາຍບ່ອນ, ບາງຄົວເຮືອນທີ່ໄດ້ເຊັນສັນຍາໄປແລ້ວ).[31] ຫາກສາມາດຂໍຮ້ອງນັກລົງທຶນທາງການໃຫ້ສະເໜີສ່ວນແບ່ງທີ່ດີກວ່າໃຫ້ແກ່ ຊາວບ້ານ, ມັນກໍຈະຊ່ວຍກົດດັນໃຫ້ນັກລົງທຶນທີ່ບໍ່ເປັນທາງການປະຕິບັດຄືກັນ (ຊຶ່ງເປັນຜູ້ທີ່ມັກຈະສະເໜີສ່ວນແບ່ງດີກວ່າຢູ່ແລ້ວ). ໃນໄລຍະດຽວກັນ ຄວນສະໜອງເຄື່ອງມື ແລະ ຄວາມຮູ້ໃຫ້ຊາວບ້ານ (ຕົວຢ່າງ: ລາຄາວັດສະດຸປ້ອນເຂົ້າ ຢູ່ຈີນ, ໂດຍສະເພາະຢ່າງຍິ່ງລາຄາດິນ ແລະ ຄວາມສາມາດພື້ນຖານ ດ້ານພາສາຈີນ) ເພື່ອໃຫ້ເຂົາເຈົ້າຢູ່ໃນທ່າເຂັ້ມແຂງກວ່າເກົ່າໃນເວລາຕໍ່ລອງ

- ເພີ່ມທະວີປັບປຸງການຕິດຕາມນັກລົງທຶນ

ເຖິງວ່າ ແຂວງ ແລະ ເມືອງເນັ້ນຄວາມຈຳເປັນທີ່ຈະຕ້ອງຕິດຕາມນັກລົງທຶນໃຫ້ດີກວ່າເກົ່າ, ແຕ່ວ່າ ຍັງບໍ່ມີຂັ້ນຕອນຈະແຈ້ງແນ່ນອນ ແລະ ບໍ່ມີອົງກອນໃດທີ່ຈະຕິດຕາມ. ມັນຈຳເປັນແທ້ໆທີ່ຕ້ອງມີອົງການໃດໜຶ່ງທີ່ຂ້ອນຂ້າງເປັນກາງ (ບາງທີອົງການໃຫ້ທຶນສາກົນຮ່ວມກັບ ລັດຖະບານລາວ) ເພື່ອເຮັດບົດບາດນີ້ ແລະ ຈະດຳເນີນການຕີລາຄາການປະຕິບັດຕົວຂອງຜູ້ລົງທຶນເປັນໄລຍະໆ. 32[32] ຖ້າຫາກພົບເຫັນບັນຫາຕື່ມອີກ ມັນກໍຈຳເປັນທີ່ຈະຕ້ອງດຳເນີນຂະບວນການຕິດຕາມ.

- ປັບປຸງສັນຍາ ແລະ ຂັ້ນຕອນໃນການເຮັດສັນຍາໃຫ້ດີກວ່າເກົ່າ

ບໍ່ໃຫ້ສັນຍາລະດັບຊາດ, ແຂວງ ຫລື ເມືອງ ອະນຸມັດຈຳນວນເນື້ອທີ່ (ເຮັກຕາ) ຕາຍຕົວສຳລັບສວນປູກ ເຊິ່ງຜ່ານມານັ້ນ ໄດ້ກາຍເປັນແຫລ່ງທີ່ມາຂອງການບີບບັງຄັບໃນໄລຍະປະຕິບັດ. ສັນຍາ ທີ່ເຮັດຢູ່ລະດັບສູງກວ່າລະດັບບ້ານ ຄວນກຳນົດແຕ່ຈຳນວນເຮັກຕາ **ສູງສຸດ** ທີ່ນັກລົງທຶນສາມາດພັດທະນາໃນຂອບເຂດພູມສາດໃດໜຶ່ງແລະ ຄວນກຳນົດສ່ວນແບ່ງກຳໄລ **ຕໍ່າສຸດ** ທີ່ຊາວບ້ານຈະໄດ້ຮັບ. ຄວນເນັ້ນວ່າ ບໍ່ມີສັນຍາ ທີ່ຕົກລົງກັນໃນລະດັບສູງໃດທີ່ຮັບປະກັນ ການມີສ່ວນຮ່ວມຂອງຊາວບ້ານ ຫລື ການເຂົ້າເຖິງດິນ. ນອກນັ້ນ ສັນຍາຈຳເປັນຕ້ອງເວົ້າແຈ້ງວ່າ ບໍ່ໃຫ້ສິດຜູກຂາດຕໍ່ດິນ ຊຶ່ງມັນຈະຈຳກັດການແຂ່ງແຍ້ງໃນໝູ່ນັກລົງທຶນ ແລະ ນຳໄປສູ່ການໃຊ້ຮູບແບບບີບບັງຄັບ. ການບໍ່ມອບສິດຜູກຂາດແຕ່ຜູ້ດຽວກໍຈະບໍ່ເຮັດໃຫ້ມີບັນຫາເລື່ອມເອົາດິນກັນ.[33]

---

[31] ປັດຈຸບັນສ່ວນຫຼວງຫຼາຍຂອງການເຊັນສັນຍາ "1+4" ກັບນັກລົງທຶນລາຍໃຫຍ່ນັ້ນ ສ່ວນແບ່ງມັກຈະເປັນ 30/70 (ທັງເບິ່ງຕາມຕົວຈິງ ແລະ ເບິ່ງຢູ່ໃນຫຼາຍຂໍ້ຕົກລົງຂອງແຂວງທີ່ອະນຸຍາດໃຫ້ມີຕົວແບບ "1+4") ຊຶ່ງມັນປີ້ນກັບສິ່ງທີ່ແຂວງສົ່ງເສີມຄືສ່ວນແບ່ງ 70/30. ພຽງແຕ່ອົງປະກອບແຮງງານເທົ່ານັ້ນ ຈະເປັນເຫດຜົນໃຫ້ມີຄວາມແຕກໂຕນກັນຫຼາຍປານນັ້ນແທ້ບໍ່ 40% ຂອງສ່ວນແບ່ງທີ່ເປັນດິນ/ຕົ້ນໄມ້? ເພິ່ນຕົກລົງກັນແບບນີ້ແຕ່ຕອນເລີ່ມຕົ້ນໄດ້ແນວໃດ? ມັນແມ່ນຕົວແບບເສດຖະກິດອີງຕາມລາຄາສິ່ງປ້ອນເຂົ້າບໍ, ມັນແມ່ນຕົວຢ່າງຢືມມາຈາກປະເທດຕ່າງໆ ໃນຂົງເຂດບໍ (ເຊັ່ນ: ສິບສອງພັນນາ) ຫລື ມັນແມ່ນຜົນໄດ້ຮັບຈາກການເຈລະຈາໂດຍກົງບໍ? ແມ່ນແຕ່ເບິ່ງໃນດ້ານຄຸນຄ່າເສດຖະກິດແທ້ຈິງເທົ່ານັ້ນ ປະກົດວ່າມີໂອກາດຈະປັບປຸງສ່ວນແບ່ງຂອງຊາວບ້ານໄດ້ຢູ່ ໃນເມື່ອຄ່າຂອງດິນໃນລາວກໍນັບມື້ເພີ່ມຂຶ້ນ.

[32] ການເຂົ້າຮ່ວມຂອງອົງກອນກ່ຽວຂ້ອງລາວໃນຂະບວນນີ້ແມ່ນບໍ່ແນ່ນອນ ຍ້ອນວ່າມັນມັກມີການໃຫ້ສິນບົນ ແລະ ເຫັນແກ່ມິດສະຫາຍທີ່ເປັນນັກລົງທຶນ.

[33] ເຖິງແນວໃດກໍຕາມ ເຮົາຄວນຈື່ວ່າການບໍ່ມອບສິດແຕ່ຝ່າຍດຽວນັ້ນກໍມີຈຸດອ່ອນຂອງມັນ. ຜູ້ລົງທຶນອາດຮູ້ສຶກກົດດັນຕ້ອງຍາດແຍ່ງເອົາດິນ. ອັນນີ້ເປັນສິ່ງແລກປ່ຽນຕິດຕາມມາ ຊຶ່ງສາມາດໄກ່ເກ່ຍແກ້ໄຂໄດ້ດ້ວຍການຄວບຄຸມຈຳນວນນັກລົງທຶນຂະໜາດໃຫຍ່ທີ່ຈະອະນຸຍາດຢູ່ແຂວງ.

ການປຶກສາຫາລືລະດັບບ້ານຕ້ອງໃຫ້ມັນລະອຽດລະອໍ ແລະ ຕ້ອງປຶກສາລະດັບຄົວເຮືອນນໍາ. ຄວນໃຫ້ໂອກາດຊາວບ້ານ ໃນການຕັດສິນໃຈສໍາລັບຄົວເຮືອນຕົນວ່າ ເຂົາເຈົ້າຢາກຮ່ວມໃນໂຄງການສັນຍາຜູກພັນປູກຢາງໃດໜຶ່ງ ຫລືບໍ່ ເພາະວ່າການໄດ້ຮັບພຽງແຕ່ຄວາມເຫັນພ້ອມຈາກນາຍບ້ານຝ່າຍດຽວ ແມ່ນບໍ່ພຽງພໍ, ເພາະວ່ານາຍບ້ານຄົນດຽວບໍ່ສາມາດ ທີ່ຈະຕາງໜ້າໃຫ້ຫຼາຍໆແນວຄິດທີ່ຊາວບ້ານມີ ແລະ ນາຍບ້ານນັ້ນເອງທີ່ມັກຈະຖືກຊື້ຈ້າງ. ການປຶກສາຫາລືຈໍາເປັນຕ້ອງເຮັດແບບໂປ່ງໃສ ແລະ ສາມາດຕິດຕາມໄດ້ຈາກພາຍນອກ.

ນອກຈາກນີ້ ເຈົ້າໜ້າທີ່ຈາກອົງກອນ ແລະ ລະດັບຕ່າງໆຂອງລັດຖະບານລາວ (ຫລື ແມ້ແຕ່ຄົນອື່ນໆ ພາຍໃນອົງກອນດຽວກັນ) ຄວນມີການປະສານສົມທົບກັນ ແລະ ໃຫ້ມີຄວາມກະຈ່າງແຈ້ງເພື່ອຫລີກລ້ຽງສະພາບບໍ່ສອດຄ່ອງກັນ ແລະຂໍ້ຂັດແຍ່ງໃນຂະບວນການສ້າງສັນຍາເຮັດສວນປູກ. ບົດບາດຂອງກໍາລັງທະຫານ ແລະ ຕໍາຫຼວດໃນການລົງທຶນຄວນຖືກປະເມີນ, ເຮັດໃຫ້ມີຄວາມກະຈ່າງ ແລະ ຄວນເຊື່ອມສານເຂົ້າກັນ ຫລື ປະຕິບັດຕາມຂັ້ນຕອນການລົງທຶນ ແລະ ບາດກ້າວຕິດຕາມທົ່ວໄປ ຢ່າງເຄັ່ງຄັດ.
ລະບຽບການບາງອັນຂອງລັດຖະບານຈີນ ອາດກະທົບຕໍ່ຂະບວນການເຮັດສັນຍາໄດ້ຄືກັນ. (ຕົວຢ່າງ: ບັນດາບໍລິສັດອາດສູ້ຊົນໃຫ້ໄດ້ເນື້ອທີ່ແນ່ນອນກວ້າງພໍຈະມີສິດຮັບເງິນອຸດໜູນ). ການເຈລະຈາລະຫວ່າງລັດຖະບານອາດຈະຈໍາເປັນ ເພື່ອຮັບປະກັນຄວາມສອດຄ່ອງຂອງກົດລະບຽບຕ່າງໆ ແລະ ແກ້ໄຂໃຫ້ຖືກກ່ຽວກັບສິ່ງອຸດໜູນທີ່ໃຫ້ບໍ່ຖືກບ່ອນ.

- ໃຫ້ການສະໜັບສະໜູນແກ່ຊາວບ້ານດ້ານໄກ່ເກ່ຍ

ຈໍາເປັນຕ້ອງສ້າງອົງການໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຈາກສັນຍາຜູກພັນການປູກຢາງ (ຕົ້ນຕໍໃນບັນຫາເຂດແດນ, ລະບົບແບ່ງສ່ວນ ຫລື ເງິນຄ່າຈ້າງແຮງງານ). ຊາວບ້ານບໍ່ມີສາຍທີ່ຈະລາຍງານກໍລະນີຜິດຖຽງຕໍ່ວ່າກັນ ນອກຈາກອົງກອນລັດຖະບານ ຊຶ່ງມັກຈະເຂົ້າຂ້າງຜູ້ລົງທຶນຫຼາຍກວ່າຊາວບ້ານ. ຂໍ້ຂັດແຍ່ງຈະມີຫຼາຍ ເມື່ອຕົ້ນຢາງສ່ວນຫຼາຍພ້ອມທີ່ຈະໄດ້ປາດ ແລະ ເຫັນວ່າການໄກ່ເກ່ຍທີ່ມີປະສິດທິຜົນ ແລະ ຍຸດຕິທໍາ ຈະມີຄວາມສໍາຄັນຫຼາຍ ເພື່ອຮັກສາຜົນປະໂຫຍດຂອງຊາວບ້ານ ແລະ ເພື່ອພິທັກປົກປ້ອງລະບຽບສັງຄົມໃນຂົງເຂດ. ອົງກອນໃຫ້ທຶນຮ່ວມກັບລັດຖະບານລາວ ຄວນຄິດເຖິງເລື່ອງໃຫ້ການສະໜັບສະໜູນ ທໍາການໄກ່ເກ່ຍຮັບໃຊ້ຊຸມຊົນທ້ອງຖິ່ນ.

## 9.1.2 ການຄຸ້ມຄອງດິນ ແລະ ປ່າໄມ້

<u>ສະຫຼຸບປະເດັນບັນຫາ</u>: ນອກເໜືອຈາກເຂດແດນບ້ານແລ້ວ, ຊາວບ້ານບໍ່ຮູ້ຫຍັງຫຼາຍ ກ່ຽວກັບ ຫລື ປະຕິບັດຕາມແຜນນໍາໃຊ້ທີ່ດິນ ແລະ ການມອບດິນ. ດິນຢູ່ພູດອຍບໍ່ໄດ້ຖືກມອບຫມາຍ ຫລື ແບ່ງປັນໃຫ້ແຕ່ລະຄົວເຮືອນ, ອັນໄດ້ສ້າງຄວາມບໍ່ກໍ້າເກິ່ງກັນ ແລະ ກຽດຊັງກັນລະຫວ່າງໝູ່ຊາວບ້ານໃນເມື່ອດິນນັບມື້ນັບມີຄ່າຂຶ້ນ. ເຂດແດນບ້ານເຮັດໃຫ້ມີການຜິດຖຽງກັນ ເມື່ອຊາວບ້ານຊອກຫາດິນໃໝ່ເພື່ອປູກຢາງ. ສໍາລັບຜູ້ມີດິນຂະໜາດນ້ອຍ ຫລື ໃຫຍ່. ຍັງບໍ່ທັນມີຂັ້ນຕອນແນ່ນອນເພື່ອກວດກາເບິ່ງຄວາມເໝາະສົມ ຫລື ຄວາມຖືກຕ້ອງດ້ານກົດໝາຍກ່ຽວກັບດິນປູກຢາງ. ສ່ວນຫຼວງຫຼາຍແມ່ນໄດ້ປູກໃສ່ໄຮ່ເຮື້ອໃນອະດີດ ແຕ່ຍັງມີກໍລະນີການລະເມີດເຂົ້າໄປໃນປ່າສະຫງວນ. ພ້ອມນີ້ຊາວບ້ານມັກລາຍງານວ່າ ໄດ້ມີການນໍາໃຊ້ "ປ່າຊົມໃຊ້" ເພື່ອປູກຢາງ, ແຕ່ຢູ່ບ່ອນນີ້ບໍ່ແນ່ວ່າມັນເປັນແນວນັ້ນແທ້ບໍ່ ຫລື ຍ້ອນຄວາມສັບສົນໃນການໃຊ້ຄໍາສັບ.

<u>ຂໍ້ສະເໜີ</u>:

- ໝູນໃຊ້ ກໍລະນີຢາງພາລາ ເພື່ອເປັນໂອກາດໃນການໄກ່ເກ່ຍ ແລະ ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາທີ່ດິນ ແລະ ໃຫ້ຟ້າວເລັ່ງລັດເລື່ອງກໍາມະສິດທີ່ດິນ ຫລື ການອອກໃບຕາດິນ (ດ່ວນ)

ຜ່ານມາ ດິນເຂດພູດອຍບໍ່ເຄີຍມີຄຸນຄ່າສູງ ຄືດຽວນີ້, ຢາງໄດ້ກາຍເປັນຕົວເລັ່ງໃຫ້ວຽກງານມອບດິນ ແລະ ກໍາມະສິດຕໍ່ທີ່ດິນຊົນນະບົດຢູ່ເຂດພູດອຍ. ເມື່ອເຫັນແນວໂນ້ມ ຂອງການເຮັດສັນຍາປູກຝັງໃນປັດຈຸບັນ ຊຶ່ງເມື່ອເວົ້າເຖິງການແບ່ງປັນຜົນກໍາໄລ ມັກຈະໝາຍເຖິງການແບ່ງປັນດິນ ຫລື ຕົ້ນໄມ້, ຕໍ່ບັນຫານີ້ ມັນມີຄວາມສໍາຄັນພິ

ເສດທີ່ຊາວບ້ານຕ້ອງມີເອກະສານຖາວອນທີ່ອ້າງເຖິງກຳມະສິດທີ່ດິນ, ເຮັດໃຫ້ການມອບດິນ ແລະ ການກຳນົດເຂດແດນໃຫ້ມັນຈະແຈ້ງ ກໍຈະຊ່ວຍແກ້ໄຂການໂຕ້ຖຽງກັນກ່ຽວກັບດິນໃນໝູ່ປະຊາຊົນໄດ້.

- ກໍ່ສ້າງລະບົບເຝົ້າລະວັງໃຫ້ເປັນຮູບປະທຳ

ຖ້າບໍ່ມີ ລະບົບການເຝົ້າລະວັງ ທີ່ເປັນຮູບເປັນຮ່າງ ໂດຍສະເພາະ ການສ້າງແຜນທີ່ຄວາມເໝາະສົມໃນການປູກຢາງ ແລະ ການປະເມີນຜົນກະທົບຕໍ່ສະພາບແວດລ້ອມເຮົາກໍ່ຈະ ບໍ່ສາມາດ ວາງລະບົບການຕິດຕາມທີ່ມີປະສິດທິຜົນ ແລະ ເປັນຮູບປະທຳໄດ້. ຖ້າບໍ່ມີລະບົບຕິດຕາມ ກໍໝາຍຄວາມວ່າມັນບໍ່ມີຂໍ້ມູນຕົວເລກທີ່ເຊື່ອໃຈໄດ້ກ່ຽວກັບປະລິມານ ແລະ ຈຸດທີ່ຕັ້ງຂອງສວນຢາງຢູ່ ຫຼວງນໍ້າທາ. ໃນນາມເປັນສ່ວນຫນຶ່ງຂອງວຽກງານປ່ຽນແທນການປູກຝິ່ນ, ປັດຈຸບັນ ແຂວງ ຢຸນນານ ກຳລັງພັດທະນາລະບົບເຝົ້າລະວັງ ເພື່ອຕິດຕາມສວນປູກຢູ່ພາກເໜືອຂອງລາວໂດຍນຳໃຊ້ທັງພາບຖ່າຍດາວທຽມທີ່ມີຄວາມລະອຽດສູງ ແລະ ຂໍ້ມູນພາກສະໜາມ. ຜົນການເຝົ້າລະວັງນີ້ຄາດຫວັງກັນວ່າ ຈະຊ່ວຍປະເມີນຄວາມຄືບໜ້າໂດຍລວມ ກໍຄືຕິດຕາມທຸລະກິດຂອງແຕ່ລະບ່ອນເພື່ອຈະສາມາດກຳນົດການອຸດໜູນ ເຊິ່ງເປັນໂອກາດດີ ທີ່ ລັດຖະບານລາວ ຄວນເຈລະຈາກັບ ແຂວງ ຢຸນນານ ເພື່ອຮ່ວມມື ແລະ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບໂຄງການນີ້.

### 9.1.3 ການຕະຫຼາດ

<u>**ສະຫຼຸບປະເດັນບັນຫາ**</u>:

ສຳລັບຊາວບ້ານ ຢູ່ໃນເຂດຫ່າງໄກສອກຫລີກ ແລະ ບໍ່ມີສາຍພົວພັນກັບພີ່ນ້ອງທີ່ຢູ່ເຂດ ຊາຍແດນ ຈະຖືວ່າເປັນຜູ້ດ້ອຍໂອກາດ ທີ່ຈະໄດ້ຮັບຂໍ້ມູນ ຂ່າວສານ ດ້ານການຕະຫລາດ ທ່ວງທັນເວລາ. ເນື້ອແທ້ ຂອງສັນຍາຜູກພັນການປູກ ກໍ່ໄດ້ລະບຸແລ້ວວ່າ ຊາວບ້ານ ອາດບໍ່ໄດ້ຖືກຮັບປະກັນ ດ້ານການຕະຫລາດ (ລາຄາ) ຈາກ ຫລື ຜ່ານນັກລົງທຶນ ຫລັງຈາກທີ່ໄດ້ມີການແບ່ງສວນ ຫລື ຕົ້ນຢາງໄປແລ້ວ (ເຊິ່ງເກີດຂຶ້ນ ຫລາຍປີກ່ອນ ຈະໄດ້ປາດຢາງ). ຜູ້ຂາຍຢາງລາຍຍ່ອຍ ຕ້ອງໄດ້ເສັຍພາສີ ເຊິ່ງຈະກາຍເປັນຈຸດເສັຍປຽບ ທັນທີ ເມື່ອທຽບກັບ ຜູ້ສົ່ງອອກຢາງ ທີ່ດຳເນີນໄປພາຍໃຕ້ນະໂຍບາຍການປູກ ເພື່ອ ທົດແທນຝິ່ນ ຂອງບັນດາບໍລິສັດຢາງ. ນອກນັ້ນ ຊາວບ້ານຍັງມີຄວາມສ່ຽງດ້ານການ ສະຫນອງທີ່ຫລາຍກວ່າຄວາມຕ້ອງການອີກ.

<u>**ຂໍ້ສະເໜີ**</u>:

- ເຜີຍແຜ່ຂ່າວສານການຕະຫຼາດໃຫ້ຊາວບ້ານຮູ້

ເກັບກຳ ແລະ ແຈກຢາຍລາຍຊື່ ຈຳນວນໂຮງງານປຸງແຕ່ງຢາງຕົ້ນຕໍຢູ່ ເມືອງນາງ, ເມືອງ ພົງ ແລະ ເມືອງຫລ້າ. ລາຍງານລາຄາເກັບຊື້ຜະລິດຕະພັນຢາງ (ນໍ້າຢາງ, ຢາງເຫນັບ (ຢາງກ້ອນ), ແຜ່ນຢາງແຫ້ງ, ຯລຯ) ພ້ອມມີການປັບປຸງຂໍ້ມູນລາຄາ ຢ່າງໜ້ອຍໃຫ້ໄດ້ທຸກສາມເດືອນ. ເກັບກຳຂໍ້ມູນກ່ຽວຂ້ອງ ຈາກພໍ່ຄ້າຂະໜາດນ້ອຍ ແລະ ຕົວແທນມີກາງໃນຂົງເຂດ. ສຶກສາໃຫ້ຊາວບ້ານຮູ້ກ່ຽວກັບຕ່ອງໂສ້ຕະຫຼາດ. ແຈ້ງໃຫ້ຊາວບ້ານຮູ້ກ່ຽວກັບຂັ້ນຕອນ ແລະ ຄ່າທຳນຽມຕ່າງໆ ທີ່ດ່ານກວດກາຊາຍແດນ. ນອກນັ້ນ ຄວນເກັບກຳຂໍ້ມູນການຕະຫຼາດທີ່ລະອຽດຢ່າງເປັນປົກກະຕິກ່ຽວກັບເບ້ຍຢາງ, ດິນ, ຕົ້ນຢາງທີ່ໃຫຍ່ແລ້ວ (ໂດຍຄຳນຶງເຖິງວ່າແຕ່ລະປະເພດທີ່ເວົ້ານັ້ນມີລາຄາແຕກຕ່າງກັນຫຼາຍແລ້ວແຕ່ລະຄຸນນະພາບ, ປະເພດ ແລະ ສະຖານທີ່). ຂໍ້ມູນຂ່າວສານນີ້ບໍ່ຈຳເປັນຕ້ອງໃຫ້ມີການຜູກຂາດໂດຍພາກສ່ວນ ໃດຫນຶ່ງ (ບໍ່ດັ່ງນັ້ນມັນຈະເຮັດໃຫ້ເກີດມີການບິດເບືອນ ຂອງຂໍ້ມູນໄດ້ງ່າຍໂດຍການຈ່າຍ ສິນບົນ). ຂໍ້ມູນຂ່າວສານຄວນໄປຮອດຊາວບ້ານຢ່າງທັນການ ແລະ ເປັນທີ່ເຂົ້າໃຈງ່າຍ. ໂຄງການຜູ້ໃຫ້ທຶນອາດຄຶດເຖິງເລື່ອງວ່າຈ້າງຊາວບ້ານທີ່ເວົ້າພາສາຈີນ ທີ່ຮູ້ເລື່ອງສະພາບເຂດແດນ (ຕົວຢ່າງ: ຊາວບ້ານຈາກກຸ່ມບ້ານມອມ) ເພື່ອປະຕິບັດໜ້າວຽກເກັບກຳຂໍ້ມູນ.

- ສ້າງທັກສະ ແລະ ຈັດຕັ້ງກຸ່ມສຳລັບຊາວບ້ານ

ຊາວບ້ານໂດຍສະເພາະພວກທີ່ຢູ່ເຂດຫ່າງໄກສອກຫລີກ ສາມາດໄດ້ຮັບຜົນປະໂຫຍດຈາກການສຶກສາດ້ານເສດຖະກິດພື້ນຖານ ແລະ ຝຶກອົບຮົມໃນດ້ານທັກສະການຕໍ່ລອງ (ຕົວຢ່າງ: ປຶດບາດສົນມຸດສຳລັບຊາວບ້ານ). ອຳນວຍຄວາມສະດວກໃນດ້ານອົບຮົມແບບ ເພື່ອນສອນເພື່ອນ ດ້ານພາສາຈີນໃຫ້ກັນເອງ (ຊາວບ້ານຕາມຊາຍແດນຫຼາຍຄົນຮູ້ພາສາຈີນຫຼາຍສົມຄວນ). ນອກນັ້ນ ກໍສ້າງຄວາມສະດວກໃຫ້ຊາວບ້ານຈັດຕັ້ງເປັນກຸ່ມຊື້ ແລະ ຂາຍນໍ້າຢາງເພື່ອໃຫ້ຊາວບ້ານມີພະລັງຕໍ່ລອງຫຼາຍກວ່າເກົ່າ.

- ການເຈລະຈາລະຫວ່າງລັດຖະບານ ກ່ຽວກັບນະໂຍບາຍສົ່ງອອກຢາງພາລາ

ການສື່ສານ ແລະ ເຈລະຈາຕໍ່ລອງ ກ່ຽວກັບວ່າ ຈະຄຸ້ມຄອງການສົ່ງອອກຂະໜາດໃຫຍ່ໃນອະນາຄົດຈຳເປັນຕ້ອງເລີ່ມຕົ້ນແຕ່ດຽວນີ້. ຄວນຄາດກະວ່າຈະມີລະບົບໂກຕາ ແລະ ນະໂຍບາຍພາສີຈະເປັນຄືແນວໃດ? ການປະຕິບັດແບບພິເສດຕໍ່ນັກລົງທຶນ ແລະ ຊາວບ້ານລາວຈະເປັນຄືແນວໃດ ເມື່ອທຽບໃສ່ບໍລິສັດຈີນ? ນອກຈາກນີ້ແລ້ວ, ເພື່ອຈະຮູ້ໄດ້ວ່າ ມັນມີຄວາມສ່ຽງຢ່າງແທ້ຈິງດ້ານການສະໜອງຫຼາຍໂພດນັ້ນ, ມັນມີຄວາມຈຳເປັນທີ່ຕ້ອງມີຂໍ້ມູນຫຼາຍກວ່າເກົ່າວ່າ ຈີນໄດ້ລົງທຶນປູກຢາງຢູ່ຕ່າງປະເທດຫຼາຍປານໃດ, ໃນຈັງຫວະຄວາມໄວຊໍ່າໃດ ແລະ ມັນຈະກະທົບການສະໜອງທັງໝົດໃນໂລກຄືແນວໃດ? ຂໍ້ມູນນີ້, ບວກໃສ່ການເຝົ້າລະວັງການປູກໃນພາກສະໜາມແມ່ນສຳຄັນຍິ່ງ ເພື່ອຄວບຄຸມ, ຄຸ້ມຄອງໃນລະດັບມະຫາພາກດ້ານການພັດທະນາຢາງພາລາໃນພາກເໜືອ ຂອງລາວ.

### 9.1.4 ປະເດັນສຳຄັນອື່ນໆ ແລະ ຂໍ້ແນະນຳ

- ສົ່ງເສີມໃຫ້ມີວິທີສ້າງລາຍຮັບໄດ້ແບບຫຼາກຫຼາຍ: ຊາວບ້ານຕ້ອງເຂົ້າໃຈສະພາບການປ່ຽນແປງຂຶ້ນລົງຂອງລາຄາຢາງ ແລະ ຕ້ອງກຽມພ້ອມຮັບມື ກັບສະພາບການດ້ວຍການມີແຫລ່ງລາຍຮັບຫຼາຍຢ່າງ. ຄວາມຫຼາກຫຼາຍດ້ານລາຍຮັບກໍຍັງມີຄວາມສຳຄັນສຳລັບຄວາມໝັ້ນຄົງໃນຊີວິດ ໄລຍະຫຼາຍປີກ່ອນປາດຢາງ ອັນຈະເຮັດໃຫ້ຊາວບ້ານມີທ່າແຮງ ໃນການເຈລະຈາຕໍ່ລອງທີ່ເຂັ້ມແຂງໂດຍທາງອ້ອມ. ມັນຈະປ້ອງກັນບໍ່ໃຫ້ຊາວບ້ານຂາຍເຄື່ອງປູກຂອງຕົນໃຫ້ນັກລົງທຶນ ຫລື ຮັບເອົາລາຄາແບບເຊືອດຄໍ ໃນເວລາທີ່ຕະຫຼາດຊົບເຊົາຖົດຖອຍ.
- ເສີມຂະຫຍາຍການສະໜອງສິນເຊື່ອ ແລະ ວຽກສົ່ງເສີມວິຊາການ: ສິ່ງນີ້ບໍ່ພຽງແຕ່ຈະເປັນສິ່ງສຳຄັນທີ່ຈະສະໜັບສະໜູນຊາວສວນຢາງຂະໜາດນ້ອຍ ຜູ້ທີ່ໃຊ້ທຶນຕົນເອງປູກ, ແຕ່ຍັງຈະຮັບໃຊ້ຊາວບ້ານ ຊຶ່ງປັດຈຸບັນ ທີ່ຮ່ວມໃນໂຄງການສັນຍາປູກຢາງອີກ (ໃຫ້ເບິ່ງ 9.1, ພາກ 1). ການມີສິນເຊື່ອ ແລະ ການຊ່ວຍເຫລືອວິຊາການຢ່າງຫຼວງຫຼາຍແມ່ນໜຶ່ງໃນບັນດາປັດໄຈສຳຄັນທີ່ສຸດ ທີ່ຈະນຳໄປສູ່ຜົນສຳເລັດຮຸ່ງເຮືອງຂອງຊາວສວນຢາງຢູ່ ສິບສອງພັນນາ.
- ກຽມພ້ອມຮັບສະພາບຂາດແຮງງານ: ເຮັດການຄາດຄະເນລ່ວງໜ້າທາງສະຖິຕິກ່ຽວກັບຄວາມແຕກຕ່າງກັນດ້ານຄວາມຕ້ອງການ ແລະ ການສະໜອງແຮງງານ. ພວກເຮົາສາມາດເວົ້າໄດ້ວ່າ ແຮງງານມາຈາກແຂວງອື່ນໆ ຈະມີເທົ່າໃດເມື່ອທຽບໃສ່ມາຈາກຈີນ? ຕົວເລກຄາດຄະເນນີ້ ສາມາດໃຊ້ເປັນທິດເພື່ອປະເມີນຄວາມເປັນໄປໄດ້ຂອງເຂດສວນປູກປັດຈຸບັນ ຕາມແຜນຢູ່ ຫຼວງນໍ້າທາ ແລະ ຊ່ວຍໃນການຄຸ້ມຄອງປະລິມານຄົນໄຫຼຜ່ານຊາຍແດນໃນອະນາຄົດ (ອາດເຮັດໄດ້ໂດຍດັດປັບທ່າທຳນຽມ ແລະຂັ້ນຕອນເພື່ອຮັບເອົາແຮງງານຕ່າງປະເທດ).[34]
- ລະບຽບການດ້ານສິ່ງແວດລ້ອມກ່ຽວກັບໂຮງງານປຸງແຕ່ງຢາງ: ມີນັກລົງທຶນຫຼາຍຄົນທີ່ໄດ້ສ້າງ ຫລື ມີແຜນຈະສ້າງໂຮງງານປຸງແຕ່ງໃນລາວ, ແຕ່ວ່າ ລະບຽບການປັດຈຸບັນແມ່ນເກືອບວ່າ ບໍ່ມີຫຍັງເລີຍກ່ຽວ

---

[34] ໃນຂະນະດຽວກັນ, ຮັກສາໄວ້ ແລະ ປັບປຸງໃຫ້ດີກ່ວາເກົ່າ ກຳແພງທີ່ໃຊ້ຢູ່ປັດຈຸບັນສຳລັບແຮງງານຊົ່ວຄາວຕ່າງດ້າວ ຍົກເວັ້ນນັກວິຊາການ (ຄວນມີມາດຕະການແນ່ນອນເພື່ອຫຼີກລ້ຽງສະພາບໃຜກໍກາຍເປັນວິຊາການໝົດ). ກ່ອນທີ່ຈະສາມາດຄວບຄຸມ ຄຸ້ມຄອງການພັດທະນາຢາງໄດ້ດີກ່ວາ, ໃຫ້ເຫັນບັນຫາວ່າການມີແຮງງານເຂົ້າມາຢ່າງຫຼວງຫຼາຍກ່ອນໄລຍະປາດພຽງແຕ່ຈະເຮັດໃຫ້ມີການບຸກເບີກດິນແບບຊະຊາຍ.

ກັບມາດຕະຖານສິ່ງແວດລ້ອມທີ່ຕ້ອງປະຕິບັດຕາມ. ລະບຽບການ ຫຼວງນ້ຳທາ ເດືອນທັນວາ 2006 (ຈ.ຂ. ເລກ 7) ພຽງແຕ່ເວົ້າວ່າ ໂຮງງານເຫລົ່ານີ້ບໍ່ສາມາດ "ສ້າງມົນລະພິດ" ຫລື "ເຮັດໃຫ້ມີກິ່ນ"

## 9.2 ບົດບາດ ວິວັດທະນາການ ຂອງອົງການຊ່ວຍເຫລືອ ເພື່ອການພັດທະນາ

ເບິ່ງໃນຫຼາຍໆດ້ານ, ການປູກຢາງຢູ່ ຫຼວງນ້ຳທາ ພຽງແຕ່ແມ່ນມຸມມອງຈຸລະພາກຂອງປະກົດການກວ້າງກວ່ານັ້ນໃນທົ່ວປະເທດລາວ, ເອເຊຍ ແລະ ມຸມໂລກທີ່ກຳລັງພັດທະນາ: ຈີນກຳລັງເຕີບໂຕ, ສ້າງສາຍພົວພັນ, ທຸ້ມເທການລົງທຶນ ແລະ ແຈກຢາຍການຊ່ວຍເຫລືອ ເພື່ອມຸ້ງໄປສູ່ໂລກກຳລັງພັດທະນາ ຊຶ່ງເຮັດທັງໝົດນັ້ນ ແມ່ນດ້ວຍບາດກ້າວທີ່ແຂງແຮງ ບໍ່ຈົ່ງຈຽມ. ຊຸມຊົນຕາເວັນຕົກທີ່ພັດທະນາແລ້ວ ທີ່ມີຖານະຢູ່ໃຈກາງເວທີມາຫຼາຍທົດສະວັດບັດນີ້ພົບວ່າ ຕົນເອງຖືກຊຸກໄປຢູ່ທາງຂ້າງ ທີ່ມີຖານະບໍ່ມີແຮງໂຕ້ຕອບ, ບໍ່ບຸກ ເມື່ອເຊິ່ງໜ້າກັບອິດທິພົນເສດຖະກິດຈີນທີ່ພຸ້ງເດັ່ນ. ນັ້ນເປັນການປ່ຽນແປງສະພາບທີ່ບໍ່ຄ່ອຍຈະອຸ່ນໃຈ.

ແຕ່ກໍ່ບໍ່ຈຳເປັນທີ່ຈະຕ້ອງປະນາມຈີນວ່າບໍ່ດີ ພຽງແຕ່ວ່າ ຈີນແມ່ນໃບໜ້າໃໝ່ໃນບ້ານເມືອງ. ເຖິງວ່າ ບາງສິ່ງຢ່າງທີ່ບໍລິສັດຈີນໃນລາວເຮັດໄປແມ່ນກອບໂກຍ, ສິ່ງນັ້ນ ມັນບໍ່ກ່ຽວຂ້ອງກັບການທີ່ພວກເຂົານັ້ນເປັນຈີນ, ແຕ່ຍ້ອນວ່າ ພວກເຂົານັ້ນເປັນນັກທຸລະກິດ ທີ່ສະແຫວງຫາກຳໄລສູງສຸດທີ່ດຳເນີນງານຢູ່ໃນສະພາບແວດລ້ອມທີ່ຂາດການຄວບຄຸມຄຸ້ມຄອງທີ່ດີ ແລະ ເຕັມໄປດ້ວຍການໃຫ້ສິນບົນ. ໃນເສດຖະກິດໂລກາພິວັດຂອງທຸກວັນນີ້, ທຶນ ມີເສລີພາບທີ່ຈະແລ່ນໄປຫາບ່ອນໃດກໍ່ຕາມທີ່ມີຜົນກຳໄລສູງສຸດ. ພວກເຮົາບໍ່ສາມາດຕຳນິໃຜເລີຍ, ຈີນ ຫລື ຊາດໃດກໍ່ຕາມ, ທີ່ໄດ້ນຳເງິນມາລົງທຶນຢູ່ລາວ (ຖ້າຈະເວົ້າແລ້ວ ລັດຖະບານ ແລະ ປະຊາຊົນລາວ ກໍ່ສົ່ງເສີມການລົງທຶນພວກນັ້ນຄືກັນ). ພ້ອມດຽວກັນນັ້ນ ກໍ່ບໍ່ຄວນຖິ້ມຄວາມຮັບຜິດຊອບໃສ່ທຸລະກິດເອກະຊົນ ໃຫ້ເຂົາຕ້ອງປັບປຸງການເຮັດວຽກຂອງລັດຖະບານລາວ. ພ້ອມດຽວກັນນັ້ນ ມັນກໍ່ບໍ່ໜ້າຈະໄດ້ປະໂຫຍດຫຍັງ ທີ່ຈະຂໍໃຫ້ນັກທຸລະກິດຢຸດເຊົາ ບໍ່ສວຍໃຊ້ຊ່ອງຫວ່າງໃນການປະຕິບັດກົດໝາຍ ຫລື ບໍ່ໃຫ້ສິນບົນແກ່ເຈົ້າໜ້າທີ່ ຊຶ່ງໃນຫຼາຍໆກໍລະນີເປັນຜູ້ທີ່ສ້າງ ແລະ ສືບຕໍ່ໃຫ້ມີລະບອບຄໍຣັບຊັນ ໃນໄລຍະຕົ້ນ. ນັ້ນແມ່ນພາລະຂອງລັດຖະບານລາວທີ່ຍັງເຮັດບໍ່ໄດ້ຢ່າງເຕັມເມັດເຕັມໜ່ວຍ ຫລື ແມ່ນເປົ້າໝາຍໜຶ່ງຂອງບັນດາແຜນງານຊ່ວຍເຫລືອທີ່ສຸມໃສ່ການບໍລິຫານ ແລະ ປົກຄອງທີ່ບໍ່ທັນໄດ້ບັນລຸ. ບາງຄົນອາດຕິຕຽນຈີນວ່າ ດຳເນີນການແບບບໍ່ຍຸດຕິທຳ ທີ່ໄດ້ເຮັດໃຫ້ຄວາມທະເຍີທະຍານທາງເສດຖະກິດຂອງຕົນກາຍເປັນປະເດັນການເມືອງ ແລະ ໄດ້ຕົບແຕ່ງແປງສີວ່າ ແມ່ນເພື່ອຄວາມມຸ້ງໝາຍອື່ນໆ (ຕົວຢ່າງ: ທົດແທນການປູກຝິ່ນ), ແຕ່ເວົ້າບໍ່ໄດ້ເລີຍວ່າ ຈີນແມ່ນຜູ້ທຳອິດທີ່ເຮັດດັ່ງນັ້ນ: ບາງຄົນສາມາດເວົ້າຄືກັນວ່າ ສົງຄາມຕ້ານຢາເສບຕິດໃນມຽນມາ ແລະ ລາວແມ່ນ ສປຊ ເປັນຜູ້ເສຍຄ່າໃຊ້ຈ່າຍ.

ຜົນກະທົບຂອງການພັດທະນາຂອງຈີນຢູ່ພາກເໜືອຂອງລາວ, ດີ ຫລື ຮ້າຍຈະຢູ່ໃນສະພາບທີ່ບໍ່ເຄີຍເຫັນ ຫລືບັນລຸມາກ່ອນໂດຍ ອົງການທີ່ໃຫ້ການຊ່ວຍເຫລືອ ເພື່ອພັດທະນາຊຸມຊົນ ແບບດັ້ງເດີມຜ່ານມາ. ພ້ອມໆດຽວກັນກັບການທີ່ຊາວບ້ານລາວ ແລະ ຊັບພະຍາກອນຂອງເຂົາເຈົ້າຕົກໃນຄວາມສ່ຽງທີ່ຈະຖືກປຸ້ນສະດົມ, ພວກເຂົາເຈົ້າຊ້ຳພັດມີໂອກາດເຂົ້າຮ່ວມໃນຕະຫຼາດໂລກໃນລະດັບທີ່ບໍ່ຄາດຄິດໃນເມື່ອກ່ອນ. ຜູ້ຈັດການຈີນລະດັບອາວຸໂສຂອງບໍລິສັດຢາງຈີນສະເໜີຄວາມຄິດວ່າ: "ຊາວຕາເວັນຕົກມາຢູ່ນີ້ດົນສົມຄວນ, ໄດ້ສ້າງຂົວໜຶ່ງແຫ່ງ, ໂຮງໝໍ ໜຶ່ງແຫ່ງ, ໂຮງຮຽນນຶ່ງຫລັງ... ຊາວບ້ານກໍ່ຍັງທຸກຢູ່, ຍັງໃຊ້ຊີວິດຄືຈັ່ງເຂົາໄດ້ໃຊ້ ສິບ, ຊາວ, ຫ້າສິບປີ ຜ່ານມາແລ້ວ. ສິ່ງທີ່ພວກເຮົາເອົາມາໃຫ້ແມ່ນການພັດທະນາ, ຄວາມທັນສະໄໝແທ້ໆ."

**ການຊ່ວຍເຫລືອຂອງຕາເວັນຕົກຫລ້າສະໄໝແລ້ວບໍ່?**

ຄຳຕອບສັ້ນໆແມ່ນ ບໍ່. ການຊ່ວຍເຫລືອ ຂອງອົງການພັດທະນາຕ່າງໆ ຍັງແມ່ນສິ່ງຈຳເປັນ ເພື່ອຊ່ວຍຜ່ອນຜັນຄ່າໃຊ້ຈ່າຍຂະໜາດໃຫຍ່ດ້ານເສດຖະກິດສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງມັກຈະມີໃນໄລຍະຫັນປ່ຽນເສດຖະກິດຢ່າງໄວວາ. ມັນຈະເປັນຂໍ້ຜິດພາດຂອງອົງກອນສາກົນຕ່າງໆ ທີ່ຈະຖອນຕົວອອກຈາກເຂດທີ່ປະກົດວ່າ "ພວກຈີນໄດ້ເປັນໂຕຢືນແລ້ວ." ໃນກໍລະນີຢາງພາລາ, ພາກ 9.1 ໄດ້ສະເໜີບາງວິທີການສະເພາະທີ່ອົງກອນໃຫ້ທຶນສາມາດຍື່ນມືເຂົ້າໄປ. ຜູ້ໃຫ້ທຶນສາກົນໂດຍຮ່ວມກັບ ລັດຖະບານລາວ ມີບົດບາດສຳຄັນໃນການໄກ່ເກ່ຍຂໍ້ຂັດແຍ່ງ, ປັບປຸງການບໍລິຫານປົກຄອງ, ສ້າງຄວາມເຂັ້ມແຂງທາງແວດລ້ອມການຄຸ້ມຄອງລະບຽບການ, ຫຼຸດຜ່ອນການເສຍຫາຍ ແລະ ຜົນກະທົບຕໍ່ສະພາບແວດລ້ອມ, ສຳຄັນທີ່ສຸດກໍແມ່ນຂົບຂວາຍຫາການສະໜັບສະໜູນ ເພື່ອໃຫ້ຊຸມຊົນທ້ອງຖິ່ນມີອຳນາດ ແລະ ມີຄວາມເຂັ້ມແຂງ.

ບັນດາຍຸດທະສາດພັດທະນາຂອງຈີນອາດແຕກຕ່າງໄປຈາກຮູບແບບການຊ່ວຍເຫລືອແບບດັ້ງເດີມຂອງຕາເວັນຕົກ, ແຕ່ກໍບໍ່ໝາຍຄວາມວ່າ ລະຫວ່າງສອງຢ່າງນັ້ນ ບໍ່ມີພື້ນຖານຄືກັນເລີຍ. ຈີນບໍ່ໄດ້ເຕີບໂຕຂຶ້ນມາໃນສູນຍາກາດຂອງໂລກ. ຈີນເອົາໃຈໃສ່ທີ່ສຸດ ແລະ ໃນທາງຍຸດທະສາດເຊັ່ນດຽວວ່າ ພາບພົດສາກົນຕົນເປັນແນວໃດ. ອ້າງອີງເຖິງກົດຈະກຳທົດແທນໃຫ້ການປູກຝິ່ນໃນລາວ ແລະ ມຽນມາ, ຈີນຖືວ່າ "ການຮ່ວມມືກັບອົງການສາກົນ" ແມ່ນໜຶ່ງໃນບູລິມະສິດສູງສຸດເພື່ອກ້າວໄປຂ້າງໜ້າ (ກົມການຄ້າຢູນນານ, 6 ສິງຫາ 2007). ນີ້ເປັນເວທີທີ່ດີເລີດສຳລັບທຸກພາກສ່ວນ, ລວມທັງ ອົງການທີ່ໃຫ້ການຊ່ວຍເຫລືອ ພັດທະນາ ຊຸມຊົນ, ລັດຖະບານຈີນ ແລະ ລາວ ກໍຄືທຸລະກິດເອກະຊົນທີ່ຈະຮ່ວມແຮງກັນ ແລະ ແກ້ໄຂຫຼາຍໆປະເດັນບັນຫາທີ່ໄດ້ຍົກຂຶ້ນມາສົນທະນາໃນລາຍງານນີ້. ກອງປະຊຸມ ລະດັບແຂວງ ຫລື ລະດັບຊາດທີ່ກ່ຽວພັນກັບຄູ່ຮ່ວມຈາກຫລາຍພາກສ່ວນໃນຫົວຂໍ້ສວນປູກ ເພື່ອທົດແທນການປູກຝິ່ນ ໜ້າຈະເປັນຈຸດເລີ່ມຕົ້ນ ເພື່ອເສີມສ້າງໃຫ້ມີການສົນທະນາໄລຍະຍາວ ແລະ ສາຍພົວພັນຮ່ວມມື ໃນອະນາຄົດ.

ອົງກອນຊ່ວຍເຫລືອທັງຫຼາຍໃນພາກເໜືອຂອງລາວ ຄວນມີວິທີການທີ່ຕັ້ງໜ້າ ເພື່ອຊອກຮູ້ບັນດານະໂຍບາຍ, ແຜນຂອງຈີນດ້ານການລົງທຶນ ແລະ ການຄ້າໃນຂົງເຂດ. ອາດເກີດຜົນດີ ຖ້າຮ່ວມມືກັບອົງການບໍ່ສັງກັດລັດ ແລະ ສະຖາບັນສຶກສາຂອງຈີນ ເພື່ອແລກປ່ຽນຂໍ້ມູນ ແລະ ຜ່ານການຈັດຕັ້ງເຫລົ່ານີ້ ເຮັດໃຫ້ການປະຕິບັດຂອງບໍລິສັດຈີນ ເປັນເປົ້າເຝົ້າມອງຕຳນິຕິຊົມຈາກສັງຄົມຈີນເອງ. ມະຫາຊົນຈີນ ກໍາໄດ້ພຽງເລັກນ້ອຍກ່ຽວກັບຄວາມເປັນຈິງໃນຫຼາຍດ້ານຂອງການລົງທຶນຂອງຈີນຢູ່ຕ່າງປະເທດ. ການລົງຂ່າວແບບບໍ່ກວ້າງຂວາງໃນປັດຈຸບັນ ຈະວາດພາບຢ່າງເບື່ອງນິດ ໃຫ້ເຫັນແຕ່ທາງບວກ ແລະ ຄວາມເປັນວິລະບູລຸດ ເທົ່ານັ້ນ.

ພ້ອມດຽວກັນນັ້ນ ຢູ່ລະດັບທ້ອງຖິ່ນ, ພວກເຮົາຕ້ອງຮັບຮູ້ ແລະ ໝູນໃຊ້ສ້າງຄວາມສາມາດໃນໝູ່ຊາວອົບພະຍົບຈີນ ແລະ ພວກທີ່ອາໃສຢູ່ຕາມຊາຍແດນ. ຫຼາຍໆຄົນເປັນນັກວິຊາການດີເລີດ, ເປັນຜູ້ເກັບກຳຂໍ້ມູນ, ນາຍແປພາສາ ຫລື ຜູ້ຊ່ຽວຊານການຕະຫຼາດ ແລະ ເຫດຜົນເຫລົ່ານີ້ເຮັດໃຫ້ບໍລິສັດຈີນ ຕ້ອງການເຂົາເຈົ້າມາປະຕິບັດງານຢູ່ພາກເໜືອຂອງລາວ.

ຢູ່ລຽບຊາຍແດນ ແຂວງ ຫຼວງນ້ຳທາ, ແຕ່ໃດໆມາ ຊາວບ້ານໄດ້ຍ້າຍໄປມາ, ແຕ່ງງານກັນ ແລະ ໄດ້ຄ້າຂາຍລະຫວ່າງຊາຍແດນ. ຈາກມຸມມອງແບບນັ້ນ, ປະກົດການລະຫວ່າງຊາດຕັ້ງຫລ້າສຸດທີ່ພົວພັນເຖິງຢາງພາລາ ຈຶ່ງບໍ່ເປັນໜ້າກຽດຊັງທີ່ພົ້ນອອກຈາກເສັ້ນທາງຕາມປະຫວັດສາດ. ນອກຈາກນີ້ ມັນກໍບໍ່ແມ່ນຂົງເຂດທີ່ມີແຕ່ທຸລະກິດຂະໜາດໃຫຍ່ ຫລື ລະດັບຊາດຄຸມເອົາໝົດ. ສາຍພົວພັນລະຫວ່າງຊາຍແດນແບບບໍ່ເປັນທາງການ ແມ່ນໜຶ່ງໃນຈຳນວນຕົວເລັ່ງທຳອິດເຮັດໃຫ້ເກີດສວນປູກຢາງຢູ່ພາກເໜືອຂອງລາວ ແລະ ມັນຈະສືບຕໍ່ເປັນແຫລ່ງ ສະໜັບສະໜູນໃຫ້ແກ່ເຈົ້າຂອງສວນປູກຂະໜາດນ້ອຍ. ອິດທິພົນຂອງຈີນຍັງຈະສືບຕໍ່ຂະຫຍາຍ ສິ່ງທີ່ຍັງຄົງຢູ່ໃນສະພາບດຸ່ນດ່ຽງ ແມ່ນພູມີປະເທດ (ຍັງຄົງ) ທີ່ຫ່າງໄກຂອງພາກເໜືອຂອງລາວ ແລະ ຊີວິດການເປັນຢູ່ຂອງຜູ້ຄົນທີ່ເອີ້ນພູມີປະເທດນີ້ວ່າ ບ້ານເຮືອນຂອງຕົນ.

**ເອກະສານຊ້ອນທ້າຍ 1 ລາຍການບ້ານທີ່ໄດ້ຢ້ຽມຢາມ**

| ບ້ານ | ກຸ່ມບ້ານ | ເມືອງ | ຊົນເຜົ່າ | ພົນລະເມືອງ (ດັ່ງທີ່ ຫົວໜ້າບ້ານລາຍ ງານ) | ເນື້ອທີ່ທັງໝົດ ປູກຢາງໂດຍ ປະມານ | ສະພາບປູກຢາງພາລາ | ຍົກຂຶ້ນມາ ປຶກສາໃນ ລາຍງານນີ້ |
|---|---|---|---|---|---|---|---|
| ໜອງຄຳ | ຊຽງໃຈ | ສິງ | ລື້ | 92 ຄອບຄົວ (ຫຼາຍ ກວ່າ 90% ປູກຢາງ) | 100 ຮຕ | ການປູກຢາງໄດ້ເລີ່ມແຕ່ 2003 ສ່ວນຫຼາຍປູກຢູ່ດິນໄຮ່ປະເປັນເຊື້ອຂອງຄອບຄົວເອງ ແລະ ເບ້ຍເອົາມາແຕ່ຈີນ ຫລື ເອົາຈາກທ້ອງຖິ່ນເອງ. ຄະນະບ້ານໄດ້ຈັດຕັ້ງສະມາຊິກ ແລະ ເຮັດສັນຍາປູກກັບນັກລົງທຶນຈີນທ້ອງຖິ່ນ ແລະແບ່ງປັນຜົນ 30/70 ຂອງກຳໄລໃຫ້ກຳມະການບ້ານ ແລະ 70% ເປັນຂອງນັກລົງທຶນ | |
| ລໍເມີ | ມອມ | ສິງ | ອາຄ່າ | 87 ຄອບຄົວ,ປູກຢາງໝົດ | 180 ຮຕ | ຕອນທຳອິດຄົນຢູ່ ລໍເມີ ທີ່ເມື່ອກ່ອນຢູ່ ບວກຊຸ, ບ້ານຊາຍແດນໃນກຸ່ມມອມ ຊຶ່ງເປັນຜູ້ລິເລີ່ມປູກຢາງກ່ອນໝູ່. ປູກໃສ່ດິນເມື່ອກ່ອນເຄີຍເປັນດິນໄຮ່. ໄດ້ເລີ່ມປາດຢາງໃນຈຳນວນບໍ່ຫຼາຍຕົ້ນ. ຊາວ ບ້ານຂາຍນ້ຳຢາງແບບບໍ່ເປັນລະບຽບໂດຍລວມ, ຂາຍໃຫ້ພໍ່ຄ້າຊາຍແດນຟາກພຸ້ນຢູ່ ເມັງຮັບ. ນັບແຕ່ກາງຊຸມປີ 2000 ບ້ານລໍເມີ ເລີ່ມເຫັນບັນຫາບຸກລຸກເອົາດິນຢູ່ຫຼາຍທິດ. ເຣລີ, ບໍລິສັດຈີນທີ່ເຮັດສັນຍາກັບທະຫານແຂວງປູກໃສ່ດິນຂອງທະຫານທີ່ບໍ່ມີເຂດແດນຄັກແນ່. ທາງໃຕ້ຊ້ຳມີສຳປະທານດິນໃຫ້ຕຳຫຼວດເມືອງ (ສ່ວນໜຶ່ງແມ່ນດິນຢູ່ ຫ້ວຍລອງຂາວ). ຊາວບ້ານຫຼາຍຄົນນອກຈາກບົວລະບັດຢາງຕົນເອງແລ້ວຍັງເຮັດວຽກໃຫ້ເຣລີ ອີກເພື່ອໄດ້ເງິນແຮງງານ. | |
| ຫ້ວຍລອງໃຫມ່ | ຊຽງໃຈ | ສິງ | ອາຄ່າ | 36 ຄອບຄົວ, ສ່ວນຫຼາຍເຮັດສວນຢາງ | 280 ຮຕ | ເລີ່ມປູກຢາງ 2004 ໂດຍມີສັນຍາທາງການ ແລະ ບໍ່ເປັນທາງການກັບນັກລົງທຶນລື້ ຫລື ພະນັກງານລັດມາຈາກໃຈກາງຫວ່າງພູ ເມືອງສິງ: ແບ່ງສ່ວນຕົ້ນໄມ້ 50/50 ຫາ 30/70 ຊຶ່ງຜູ້ລົງທຶນຈະໄດ້ຫຼາຍກວ່າ. ຊາວບ້ານຂາຍສ່ວນແບ່ງຂອງຕົນໃຫ້ນັກລົງທຶນເປັນເລື່ອງບໍ່ແປກ. ຊາວບ້ານສະໜອງແຕ່ດິນ ແລະ ໄດ້ຮັບເງິນແຮງງານ ຖ້າເຮັດວຽກໃຫ້ຜູ້ລົງທຶນ. ປ່າປົກຫຸ້ມ, ປ່າສະຫງວນ ຫລື ນຳໃຊ້ມີໜ້ອຍສຸດ. | ບົດທີ 5 |
| ຫ້ວຍລອງເກົ່າ | ຊຽງໃຈ | ສິງ | ອາຄ່າ | 55 ຄອບຄົວ, 287 ຄົນ, ຫຼາຍກວ່າ 50 ປູກຢາງ | ຫຼາຍກວ່າ 300 ຮຕ | ໄດ້ເລີ່ມປູກຢາງ 2004 ໂດຍມີສັນຍາປູກສວນຢາງກັບຜູ້ລົງທຶນລື້ລາຍບຸກຄົນ ຫລື ເຈົ້າໜ້າທີ່ລັດຖະບານຈາກຮ່ອມ ພູສິງ; ການຈັດການແບ່ງປັນແມ່ນຄືກັບກໍລະນີ ຫ້ວຍລອງໃໝ່. | |

| ບ້ານ | ກຸ່ມບ້ານ | ເມືອງ | ຊົນເຜົ່າ | ພົນລະເມືອງ (ດັ່ງທີ່ຫົວໜ້າບ້ານລາຍງານ) | ເນື້ອທີ່ທັງໝົດປູກຢາງໂດຍປະມານ | ສະພາບປູກຢາງພາລາ | ຍົກຂຶ້ນມາປຶກສາໃນລາຍງານນີ້ |
|---|---|---|---|---|---|---|---|
| ຫຼັກຄຳໄໝ່ | | ນໍ້າທາ | ອາຄ່າ | 58 ຄອບຄົວ, 228 ຄົນ, ເຮັດສວນຢາງທັງໝົດ | 60 ຮຕ | ຕັ້ງຢູ່ເຂດປົກປ້ອງແຫ່ງຊາດນໍ້າຫ້າ. ເລີ່ມປູກຢາງ 2003 ຊຶ່ງເປັນສ່ວນໜຶ່ງຂອງແຜນງານສົ່ງເສີມຂອງອຳນາດປົກຄອງເມືອງທີ່ໃຫ້ 12 ບ້ານຍືມເບ້ຍໄປກ່ອນ. ບໍລິສັດຈີນ ໄດ້ຮັບເໝົາໃຫ້ສຳເລັດປູກຕົວຈິງ. ຊາວບ້ານບໍ່ໄດ້ມີສ່ວນຮ່ວມປານໃດໃນໄລຍະຕົ້ນຂອງການກໍ່ສ້າງສວນປູກ. | ພາກທີ<br>ພາກທີ 2 |
| | | ນໍ້າທາ | ມົ້ງ | 91 ຄົວເຮືອນ (Alton et. al., 2005) | 834 ຮຕ | ເລີ່ມປູກຢາງປີ 1994 ດ້ວຍການລິເລີ່ມຂອງຊາວບ້ານເອງພ້ອມມີລັດຖະບານສະໜັບສະໜູນ. ນຳໃຊ້ຕົວແບບສະມາຄົມກະສິກອນ ຊຶ່ງບໍ່ປົກກະຕິທຳມະດາ. ດຽວນີ້ພວມປາດຢາງຢູ່ທັງ 334 ຮຕ. ສ່ວນຫຼາຍຂາຍນໍ້າຢາງຜ່ານທາງການໄປເມັງແປງ, ສິບສອງພັນນາ. | |
| ບວມພຽງ | | ນໍ້າທາ | ມົ້ງ | 33 ຄອບຄົວ, ເກືອບວ່າປູກຢາງໝົດ | | ເລີ່ມປູກຢາງປີ 1994. ກຸ່ມດຽວກັບພວກ ປັດຈຸບັນປາດ ແລະ_ຂາຍນໍ້າຢາງໃຫ້ພໍ່ຄ້າດຽວກັບພວກເກັບຊື້ຈາກບ້ານ | |
| ມອມ | ມອມ | ສິງ | ລື້ | 103 ຄອບຄົວ, 409 ຄົນ, ທັງໝົດປູກຢາງ | 115 ຮຕ | ເລີ່ມປູກຢາງປີ 1998 ດ້ວຍການຊ່ວຍເຫລືອຈາກພີ່ນ້ອງຈີນລື້ຢູ່ເບື້ອງພຸ້ນຂອງຊາຍແດນ. ການຮ່ວມມືຈາກພີ່ນ້ອງແມ່ນເລື່ອງປົກກະຕິແຕ່ບໍ່ຄ່ອຍໄດ້ລາຍງານ. ພວກທີ່ໄດ້ປາດແລ້ວຂາຍນໍ້າຢາງໃຫ້ສວນປູກທີ່ເຮັງຊຸນ ຊຶ່ງຂ້າມເຂດດ່ານກວດກາຊາຍແດນທາງການໄປ. ບາງຄົນກໍຂາຍແຜ່ນຢາງແຫ້ງຂ້າມຊາຍແດນໂດຍຕ້ອງຈ່າຍຄ່າທຳນຽມແຕກຕ່າງກັນໄປບໍ່ເປັນລະບົບຢູ່ທີ່ດ່ານກວດກາຊາຍແດນ | |
| ບວກຄຸ | ມອມ | ສິງ | ອາຄ່າ | 93 ຄົວເຮືອນ, ທັງໝົດປູກຢາງ | | ເລີ່ມປູກຢາງປີ 1996-97 ພາຍຫລັງອົບພະຍົກກັບຄືນມາແຕ່ຈີນ. ເຂົາເຈົ້າໄດ້ກັບຄືນພ້ອມເງິນທຶນ ແລະ ຄວາມຮູ້ວິຊາການຍ້ອນເຄີຍໄດ້ເຮັດວຽກຢູ່ນິຄົມລັດ. ທຶນຂະໜາດນ້ອຍຢູ່ເມັງຊຸນແມ່ນມີຫຼາຍແຕ່ບໍ່ໃຫ້ທາງການຮູ້. PT ກຸ່ມນັກລົງທຶນຂະໜາດນ້ອຍປະກອບດ້ວຍຊາວຈີນຫານ ຈາກນິຄົມລັດເມັງຊຸນຮ່ວມກັບນັກທຸລະກິດຈີນອາຄ່າຈຳນວນໜຶ່ງຢູ່ຕາມບ້ານຊາຍແດນ | |

| ບ້ານ | ກຸ່ມບ້ານ | ເມືອງ | ຊົນເຜົ່າ | ພົນລະເມືອງ (ດັ່ງທີ່ຫົວໜ້າບ້ານລາຍງານ) | ເນື້ອທີ່ທັງໝົດປູກຢາງໂດຍປະມານ | ສະພາບປູກຢາງພາລາ | ຍົກຂຶ້ນມາປຶກສາໃນລາຍງານນີ້ |
|---|---|---|---|---|---|---|---|
| ບວກຫຍ້າ ໄຊເກົ່າ | ມອມ | ສິງ | ອາຄ່າ | 38 ຫລັງຄາເຮືອນ, ທັງໝົດປູກຢາງ | 44 ຮຕ (ໂດຍຊາວບ້ານ) 80 ຮຕ (ສັນຍາປູກສວນ) | ເລີ່ມປູກຢາງປີ 2004 ດ້ວຍເບ້ຍມາແຕ່ເມັງຮຸນ. ຮຽນປູກນຳພີ່ນ້ອງມິດສະຫາຍຢູ່ເມັງຮຸນ. ເຮັດສັນຍາປູກສວນຢາງ 2006 ກັບນັກລົງທຶນສ່ວນບຸກຄົນມາຈາກນິຄົມລັດ (ຊາວບ້ານ 30% ບໍລິສັດ 70%), ແບ່ງປັນກັນພາຍຫລັງ 3 ປີ, ຊາວ ບ້ານບາງຄົນເຮັດວຽກເປັນກຳມະກອນລາຍວັນໃຫ້ນັກລົງທຶນ, ໄດ້ເງິນ 25 ຢວນ/ມື້ | |
| ບວກຫຍ້າ ໄຊໃຫມ່ | ມອມ | ສິງ | ອາຄ່າ | 62 ຫລັງຄາເຮືອນ, ຍົກເວັ້ນ 3 ປູກຢາງໝົດ | ຫຼາຍກວ່າ 200 ຮຕ, ປະມານເຄິ່ງຫນຶ່ງເປັນສັນຍາປູກ | ເລີ່ມປູກຢາງປີ 1997 ດ້ວຍຂໍ້ລິເລີ້ມຂອງຊາວບ້ານເອງ (7 ຄອບຄົວ ດຽວນີ້ປາດແລ້ວ). ເຮັດສັນຍາປູກນັບແຕ່ 2006 ກັບຜູ້ລົງທຶນຈີນຫານ ຈາກນິຄົມລັດທີ່ເມັງແປງໂດຍຜ່ານຄົນຈີນອາຄ່າເປັນຕົວແທນມີກາງທີ່ຢູ່ ບ້ານເຮລີ, ເມັງຮຸນ. ກຳມະກອນມາຈາກ ຮັງຮີຢຸນນານ. ນ້ຳຢາງຂາຍຜ່ານດ່ານ ເມັງຮຸນ ທີ່ບໍ່ມີລະບົບຕາຍໂຕມັກຈະປ່ຽນແປງ. | |
| ເມີຕໍ ເກົ່າ | ຊຽງແຂງ | ສິງ | ອາຄ່າ | 48 ຄົວເຮືອນ | 18 ຮຕ (ບໍ່ໄດ້ເບິ່ງແຍງ) | ສັນຍາປູກກັບບໍລິສັດເຊັງລີ ບໍ່ໄດ້ຮັບຜົນນັບແຕ່ 2006 ຍ້ອນຂໍ້ຈຳກັດດ້ານໂຄງລ່າງ. ຊາວບ້ານຫຼາຍຄົນບໍ່ຕັດສິນໃຈປູກເພາະຢາກຍ້າຍໄປຢູ່ ເມືອງສິງ | ພາກທີ ພາກທີ 5 |
| ຈາພູທອນ | ຊຽງແຂງ | ສິງ | ອາຄ່າ | 48 ຄົວເຮືອນ ປູກຢາງທັງໝົດ | | ຊາວບ້ານເລີ່ມປູກຢາງ 2005 (ສ່ວນຫນຶ່ງແມ່ນຍ້ອນຫົວໜ້າບ້ານສົ່ງເສີມ ແລະຈັດຕັ້ງ), ໄດ້ເບ້ຍຈາກຈີນ ແລະ ຈ້າງນັກວິຊາການຈີນມາຕໍ່ຕາ. ດ້ານທິດສະດີປູກພາຍໃຕ້ສັນຍາກັບບໍລິສັດຢາງເຊັງລີ, ແຕ່ດຽວນີ້ພຽງແຕ່ກ້າເບ້ຍໃຕ້ສັນຍາແລ້ວຂາຍໃຫ້ເຊັງລີ. | |
| ໂລກູ | ຊຽງແຂງ | ສິງ | ອາຄ່າ | 50 ຄອບຄົວ, 20 ປູກຢາງ | 15 ຮຕ | ຊາວບ້ານປູກດ້ວຍຕົນເອງປີ 2006 ຫລັງຈາກບ້ານ ຊຽງແຂງ ໄດ້ປູກຢາງ. ໄດ້ເບ້ຍຈາກສວນເບ້ຍຂອງຄົນອົບພະຍົກຈີນຢູ່ແຄມນ້ຳ ແລະ ເອົາມາແຕ່ ເມືອງສິງ. ບໍລິສັດເຊັງລີ ໄດ້ມາຊຸກຍູ້ຫຼາຍຄັ້ງ. ຄອບຄົວທຸກຍາກກວ່າມັກຈະຮ່ວມມືນຳບໍລິສັດ, ແຕ່ມີຂໍ້ຂັດແຍ່ງເລື່ອງແຮງງານມີຄວາມສັບສົນກ່ຽວກັບເງື່ອນໄຂຂອງສັນຍາ, ແຕ່ກໍຍັງມີຄົນທີ່ຍັງບໍ່ຕັດສິນໃຈປູກຍ້ອນເຂດນີ້ມີໂຄງລ່າງບໍ່ຮັບປະກັນ. | |
| ຊຽງແຂງ | ຊຽງແຂງ | ສິງ | ລື້ | 45 ຄອບຄົວ, 44 ປູກຢາງ | ຫຼາຍກວ່າ 22 ຮຕ (ໂດຍ | ຊາວບ້ານເລີ່ມປູກ 2003-04, ໄດ້ເບ້ຍ ແລະສະໜັບສະໜູນວິຊາການຈາກອົບພະຍົກຈີນຄົນຫນຶ່ງທີ່ຢູ່ກັບບ້ານ. ເຂົາຄົນນີ້ດຽວນີ້ຍັງເຮັດສັນຍາປູກກັບບ້ານໃນ | ບົດ 5 |

| ບ້ານ | ກຸ່ມບ້ານ | ເມືອງ | ຊົນເຜົ່າ | ພົນລະເມືອງ (ດັ່ງທີ່ຫົວໜ້າບ້ານລາຍງານ) | ເນື້ອທີ່ທັງໝົດປູກຢາງໂດຍປະມານ | ສະພາບປູກຢາງພາລາ | ຍົກຂຶ້ນມາປຶກສາໃນລາຍງານນີ້ |
|---|---|---|---|---|---|---|---|
| | | | | | ຊາວບ້ານ) | ເນື້ອທີ່ 50 ຮຕ. ສ່ວນແບ່ງ 15% ໃຫ້ບ້ານພາຍຫລັງ 2 ປີ | |
| ຊາຍ | ຊຽງແຂງ | ສິງ | ລື້ | 33 ຄອບຄົວ, ທັງໝົດປູກຢາງ | ຫຼາຍກວ່າ 30 ຮຕ | ນອກຈາກ 3 ຄອບຄົວ ທີ່ເຮັດສັນຍາກັບ ບໍລິສັດຢາງເຊັ່ງລີ, ທີ່ເຫລືອແມ່ນປູກດ້ວຍຕົນເອງນັບແຕ່ 2003, ໃຊ້ເບ້ຍຈາກ ເມືອງສິງ ຫລື ກວນຫລີ (ທ່າເຮືອຈີນເບື້ອງເທິງນໍ້າຂອງ). ບໍລິສັດເຊັ່ງລີ ໄດ້ມີຖານປະຕິບັດງານໜຶ່ງໃກ້ ບ້ານໄຊ ແລະ ໄດ້ປູກຫຼາຍກວ່າ 20,000 ຕົ້ນຢາງ ຢູ່ເຂດສຳປະທານມາເຖິງດຽວນີ້. | |
| ຈະຢີ | ຊຽງກົກ | ລອງ | ມູເຊີ | 212 ຄົນ | | ຄອບຄົວຈຳນວນໜຶ່ງເລີ່ມປູກຢາງໂດຍມີສັນຍາກັບນັກລົງທຶນລາວໃນທ້ອງຖິ່ນໂດຍຫັກສ່ວນແບ່ງ 50/50. ໃນ 2006 ດິນສ່ວນທີ່ເຫລືອໄດ້ໃຫ້ ຣູເຟັງ, ບໍລິສັດຢາງຈີນສຳປະທານ. ຣູເຟັງ ມີສັນຍາກັບທະຫານແຂວງ, ດິນນາທັງໝົດທີ່ກາຍເປັນສວນກ້າເບ້ຍຢາງ. | ບົດ 5 |
| ແດນກາງ | ສີວິໄລ | ລອງ | ມົ້ງ | 85 ຄົວເຮືອນ, 80% ປູກຢາງ | ຫຼາຍກວ່າ 80 ຮຕ | ຊາວບ້ານໄດ້ເລີ່ມປູກນັບແຕ່ 2004 ດ້ວຍຕົນເອງ ຫລື ມີສັນຍາປູກກັບຕົງລີ-ຈີງກູ, ທຸລະກິດຮ່ວມ | ບົດ 5 |
| ສີວິໄລ | ສີວິໄລ | ລອງ | ລື້ | 57 ຄົວເຮືອນ_ທັງໝົດປູກຢາງ | | ຊາວບ້ານປູກຢາງໃນເວລາຕ່າງກັນໄປນັບແຕ່ 2004 ມາ, ບາງຄົນກໍປູກດ້ວຍຕົນເອງ, ພວກໜຶ່ງອີກມີພີ່ນ້ອງຊ່ວຍ. ມີໂຄງການສັນຍາປູກກັບ ບໍລິສັດ ຢຸນນານ ແຕ່ 2007 ໃນເນື້ອທີ່ 50 ຮຕ ໄກອອກຈາກບ້ານ | ບົດ 5 |
| ຊຽງກົກເກົ່າ | ຊຽງກົກ | ລອງ | ລື້ | 81 ຄົວເຮືອນທັງໝົດປູກຢາງ | 70 ຮຕ | ເລີ່ມປູກ 2004-05 ດ້ວຍຮູບແບບປະສົມ: ໂດຍຊາວບ້ານລົງທຶນເອງ ແລະ ມີສັນຍາປູກກັບ ບໍລິສັດລາວໄຊພະຈັນ ຊຶ່ງມີການຕົກລົງ ດ້ວຍ 2 ຮູບການ: ຊາວບ້ານ 50%, ບໍລິສັດ 50% ຖ້າຊາວບ້ານປະກອບທັງດິນ ແລະ ແຮງງານ; ຫລືຊາວບ້ານ 30%, ບໍລິສັດ 70% ຖ້າຊາວບ້ານໄດ້ຮັບຄ່າແຮງງານເຮັດຢູ່ປັດຈຸບັນ. ມີຫຼາຍຮູບການແບ່ງປັນທີ່ຊາວບ້ານຮັບ 30% ແລະບໍລິສັດ 70% ຍັງມີຫຼາຍຢູ່ເມື່ອຊາວບ້ານເຮັດສັນຍາກັບນັກລົງທຶນແຕ່ລະລາຍທີ່ມາຈາກເມືອງສິງ | |

| ບ້ານ | ກຸ່ມບ້ານ | ເມືອງ | ຊົນເຜົ່າ | ພົນລະເມືອງ (ດັ່ງທີ່ຫົວໜ້າບ້ານລາຍງານ) | ເນື້ອທີ່ທັງໝົດປູກຢາງໂດຍປະມານ | ສະພາບປູກຢາງພາລາ | ຍົກຂຶ້ນມາປຶກສາໃນລາຍງານນີ້ |
|---|---|---|---|---|---|---|---|
| ຜາແຕ | ສີວິໄລ | ລອງ | ອາຄ່າ | 67 ຄົວເຮືອນ | | ຍົກເວັ້ນສີ່ຄອບຄົວທີ່ປູກດ້ວຍຕົນເອງ, ສ່ວນໃຫຍ່ເຮັດສັນຍາປູກຝັງກັບ ບໍລິສັດຢາງຢຸນນານ ໂດຍທີ່ຊາວບ້ານຮັບ 30% ສ່ວນແບ່ງ ແລະ ບໍລິສັດຮັບ 70% ຂອງເນື້ອທີ່ປູກໃນ 200 ຮຕ. ແຮງງານຕາມທີ່ມີລາຍງານແມ່ນພວກຮັບເໝົາຕໍ່ຊ້ວງຂອງ ບໍລິສັດຢຸນນານ ໄດ້ຍັກຍອກເງິນ. ນອກນັ້ນກໍມີການຍາດເອົາດິນໂດຍພະນັກງານລັດຖະບານໃນທ້ອງຖິ່ນ. | |
| ຫ້ວຍຂົວ 1 | ຈອມແຈ້ງ | ລອງ | ໄທແດງ | 52 ຄອບຄົວ, ໃນນັ້ນ 50 ປູກຢາງ | | ການກຳນົດດິນເຂດເນີນສູງໃຫ້ແຕ່ລະຄອບຄົວອີງຕາມຂໍ້ລິເລີ່ມຂອງຊາວບ້ານເອງ (2,500 ແມດມົນທົນຕໍ່ຄອບຄົວ). ການລົງທຶນຂອງຊາວບ້ານເອງ ຫລື ຮ່ວມມືແບບບໍ່ເປັນທາງການກັບພີ່ນ້ອງ, ເພື່ອນມິດ | |
| ດອນສະຫວ່າງ | ຈະເລີນໄຊ | ລອງ | ໄທດຳ | 71 ຄົວເຮືອນ, ປະມານ 60 ຄອບຄົວປູກຢາງ | 40 ຮຕ | ຊາວບ້ານໄດ້ປູກດ້ວຍຕົນເອງ ຫລື ຍ້ອນພີ່ນ້ອງຊ່ວຍນັບແຕ່ 2005, ເບ້ຍຢາງຊື້ມາຈາກ “ລາວວູ” ຄົນຈີນອົບພະຍົກເຂົ້າມາທີ່ໃຫ້ລາຄາດີ | |
| ຈ່າແກ້ວເໜືອ | ບ້ານສະ | ລອງ | ອາຄ່າ | 30 ຄອບຄົວ, 23 ປູກຢາງ | | ຍົກເວັ້ນ 4 ຄອບຄົວ ທີ່ປູກຂອງຕົນເອງ, ທີ່ເຫລືອມີສັນຍາປູກກັບ ດີຢອນ ຊຶ່ງສ່ວນແບ່ງແມ່ນ 30 ໃຫ້ຊາວບ້ານ ແລະ 70 ໃຫ້ບໍລິສັດ. ຊາວບ້ານບໍ່ພໍໃຈໃນເງື່ອນໄຂ ແລະ ກຳລັງຄຶດຈະໄປປູກໃຫ້ໄຊພະຈັນ ຊຶ່ງເປັນບໍລິສັດລາວຕັ້ງຢູ່ຊຽງກົກ. | |
| ແສນຂັນຄຳໃໝ່ | ບ້ານສະ | ລອງ | ອາຄ່າ | 47 ຄົວເຮືອນ | | ສັນຍາປູກແບບບັງຄັບກັບດີຢອນ, ສ່ວນແບ່ງແມ່ນ 30 ໃຫ້ຊາວ ບ້ານ ແລະ 70 ໃຫ້ບໍລິສັດ. ຜິດຖຽງເລື່ອງຄ່າແຮງງານ ແລະ ກຳນົດໃຊ້ດິນ. | ບົດ 5 |
| ແສນຂັນຄຳເກົ່າ | ບ້ານສະ | ລອງ | ອາຄ່າ | 34 ຄອບຄົວ, 18 ປູກຢາງ | ປະມານ 5 ຮຕ | ຊາວບ້ານປູກຂອງເຂົາເຈົ້າເອງ. ໄດ້ເບ້ຍມາ ແລະ ຮຽນວິທີປູກຍ້ອນເຄີຍເຮັດວຽກໃຫ້ຜູ້ລົງທຶນຢູ່ ລອງ. ດີຢອນ ມາສົ່ງເສີມປູກຢາງຫຼາຍຄັ້ງແຕ່ຊາວບ້ານບໍ່ສົນໃຈຢາກຮ່ວມ, ຢາກພັດທະນາສວນຕົນເອງຕາມຄວາມສາມາດຫຼາຍກວ່າ. | |
| ໜອງຄຳ | ຈະເລີນໄຊ | ໄອງ | ລື້ | 70 ຄອບຄົວ, ສ່ວນຫຼາຍປູກຢາງ | | 16 ຄອບຄົວປູກກັບ ຕົງລີ-ຈູງກູ, ສ່ວນແບ່ງຊາວບ້ານໄດ້ 60, ບໍລິ ສັດ 40. ຜູ້ປູກເອງເອົາເບ້ຍມາຈາກລາວວູ. ດີຢອນ ພະຍາຍາມລະດົມແຕ່ຊາວບ້ານຕ້ານ. | |

| ບ້ານ | ກຸ່ມບ້ານ | ເມືອງ | ຊົນເຜົ່າ | ພົນລະເມືອງ (ດັ່ງທີ່ຫົວໜ້າບ້ານລາຍງານ) | ເນື້ອທີ່ທັງໝົດປູກຢາງໂດຍປະມານ | ສະພາບປູກຢາງພາລາ | ຍົກຂຶ້ນມາປຶກສາໃນລາຍງານນີ້ |
|---|---|---|---|---|---|---|---|
| ສົມປານໃໝ່ | ຊຽງກົກ | ໄອງ | ອາຄ່າ | 36 ຄົວເຮືອນ, 26 ປູກຢາງ | | 16 ຄອບຄົວປູກເອົາເອງ, 10 ຄອບຄົວປູກກັບໄຊພະຈັນໂດຍທີ່ຊາວບ້ານໄດ້ 30 ແລະ ບໍລິສັດໄດ້ກໍາໄລ 70. ໄຊພະຈັນຈ້າງກໍາມະກອນວິຊາການຈີນ. | |
| ປາລາ | ເມືອງມາງ | ກິ່ງແຂວງສິບສອງພັນນາ | ອາຄ່າ | 148 ຄອບຄົວ, ທັງໝົດປູກຢາງ | | ຊາວບ້ານເລີ່ມປູກ 1985 ໂດຍໄດ້ຮັບເງິນກູ້ຢືມປອດດອກເບ້ຍຈາກລັດຖະບານ ແລະ ຮັບການສະໜັບສະໜູນວິຊາການຈາກນິຄົມລັດ. ສະຫະກອນເຂດພູດອຍມີສັນຍາປູກກັບນິຄົມລັດ, ທີ່ງພຽງໃຫ້ນັກລົງທຶນຈາກກວາງດົງປູກກ້ວຍ. | |
| ກົວຟາງ | ເມືອງນູນ | ກິ່ງແຂວງສິບສອງພັນນາ | ອາຄ່າ | 138 ຄົວເຮືອນ, ທັງໝົດປູກຢາງ | | ເລີ່ມປູກຢາງ 1985 ໂດຍໄດ້ຮັບເບ້ຍໃນລາຄາຜ່ອນຜັນ ແລະ ເງິນກູ້ຢືມປອດດອກເບ້ຍຈາກລັດຖະບານ ແລະ ສະໜັບສະໜູນດ້ານວິຊາການນິຄົມລັດ. ຍ້ອນຂໍ້ຈໍາກັດດ້ານດິນ, ຫຼາຍກວ່າ 80 ຄອບຄົວດຽວນີ້ກໍາລັງລົງທຶນຢູ່ ກຸ່ມບ້ານມອມຢູ່ ຫຼວງນໍ້າທາ. ບໍ່ມີປ່າເຫລືອອີກແລ້ວຢູ່ ກົວຟາງ. | ບົດ 5 |
| ເຣລີ | ເມືອງ ນູນ | ກິ່ງແຂວງສິບສອງພັນນາ | ອາຄ່າ | | | ການປູກຢາງເລີ່ມຕົ້ນ 1985 ດ້ວຍການສະໜັບສະໜູນຂອງລັດຖະບານ. ໃນຊຸມປີ 1990 ຫຼາຍກວ່າ 30% ຂອງຕົ້ນໄມ້ຖືກຂາຍໄປໃຫ້ນິຄົມລັດຍ້ອນຊາວບ້ານຂາດຄວາມສາມາດ. | |
| ມັນສາຍນູນ | ເມືອງມາງ | ກິ່ງແຂວງສິບສອງພັນນາ | ລື້ (ໄຕ) | 246 ຄົວເຮືອນ, ທັງໝົດປູກຢາງ | | ເລີ່ມປູກຢາງປີ 1985 ໂດຍໄດ້ຮັບເບ້ຍລາຄາຜ່ອນຜັນ ແລະ ເງິນກູ້ຢືມປອດດອກເບ້ຍຈາກລັດຖະບານ ແລະ ສະໜັບສະໜູນວິຊາການຈາກນິຄົມລັດ. ໃນຕອນທໍາອິດແຈກຢາຍດິນພູດອຍດ້ວຍວິທີ "ຜູ້ໃດມາກ່ອນໄດ້ກ່ອນ" ຈົນກວ່າວິທີມອບຈະແຈ້ງກວ່າໃນຊຸມປີ 1990. ການຂາຍຕົ້ນໄມ້ໃຫ້ກໍາມະກອນນິຄົມລັດແມ່ນເລື່ອງປົກກະຕິໃນຊຸມປີ 1990. ບໍ່ມີປ່າເຫລືອ. | |
| ເມັງກາງ | ເມືອງມາງ | ກິ່ງແຂວງສິບສອງພັນນາ | ລື້ (ໄຕ) | 61 ຄົວເຮືອນ, ທັງໝົດປູກຢາງ | | ເລີ່ມປູກຢາງປີ 1984 ໂດຍໄດ້ຮັບເບ້ຍລາຄາຜ່ອນຜັນ ແລະ ເງິນກູ້ຢືມບໍ່ມີດອກເບ້ຍຈາກລັດຖະບານ ແລະ ສະໜັບສະໜູນວິຊາການຈາກນິຄົມລັດ. ແຕ່ລະຄົນໄດ້ຮັບດິນພູດອຍ 6 ມູ, ຖ້າປູກຫຼາຍກວ່ານັ້ນ, ເຄິ່ງຫນຶ່ງຂອງສ່ວນທີ່ເຫລືອເປັນຂອງສະຫະກອນບ້ານ. ນັບແຕ່ກາງຊຸມປີ 1990 ສະຫະກອນຢູ່ພູດອຍໄດ້ເຮັດສັນຍາກັບບໍລິສັດເປັນລາຍໆ ແລະ ເຮັດກັບຊາວບ້ານ ຊຶ່ງໂດຍທົ່ວໄປການແບ່ງປັນກໍາໄລແມ່ນ 50/50. ຄອບຄົວທີ່ບໍ່ຄ່ອຍມີເງິນກໍຍັງເຮັດສັນຍາເຮັດວຽກ | |

| ບ້ານ | ກຸ່ມບ້ານ | ເມືອງ | ຊົນເຜົ່າ | ພົນລະເມືອງ (ດັ່ງທີ່ຫົວໜ້າບ້ານລາຍງານ) | ເນື້ອທີ່ທັງໝົດປູກຢາງໂດຍປະມານ | ສະພາບປູກຢາງພາລາ | ຍົກຂື້ນມາປຶກສາໃນລາຍງານນີ້ |
|---|---|---|---|---|---|---|---|
| | | | | | | ໃຫ້ຜູ້ລົງທຶນ. ຈຳນວນນ້ອຍໜຶ່ງດຽວນີ້ລົງທຶນຢູ່ ເມືອງສິງ, ຫຼວງນ້ຳທາ, ຕົກລົງສ່ວນແບ່ງແມ່ນຊາວບ້ານໄດ້ 30, ບໍລິສັດໄດ 70 ຖ້າຫາກຊາວບ້ານປະກອບແຕ່ດິນ. | |
| ນານຊາງ | ເມືອງພົງ | ກິ່ງແຂວງສິບສອງພັນນາ | ລື້ (ໄຕ) | 31 ຄົວເຮືອນ, ທັງໝົດປູກຢາງ | | ຜິດຖຽງເລື່ອງດິນກັບນິຄົມລັດ ອັນນຳໄປສູ່ການມອບດິນ 400 ມູ ໃຫ້ຊາວບ້ານໃນ 2005. ເຮັດສັນຍາປູກກັບນັກລົງທຶນເອກະຊົນຈາກເຊັຽຍວນ ໂດຍມີສ່ວນແບ່ງ 45 ໃຫ້ຊາວບ້ານ (55 ໃຫ້ບໍລິສັດ. ຊາວບ້ານພຽງແຕ່ປະກອບດິນ). | |
| ຊາງຍົງ | ເມືອງຫລ້າ | ກິ່ງແຂວງສິບສອງພັນນາ | ລື້ (ໄຕ) | 180 ຄົວເຮືອນ | | ໂດຍປະເພນີເປັນບ້ານປູກຊາ. ເລີ່ມປູກຢາງປະມານ 2004 ໂດຍຊາວບ້ານໃຊ້ທຶນຕົນເອງ, ປູກກັບຕົ້ນຊາ. ແຮງງານອົບພະຍົກມາແຕ່ຮົງເຮ ແລະ ໂມຈຽງມີຫຼາຍສົມຄວນ. ການລົງທຶນຂ້າມຊາຍແດນແບບບໍ່ເປັນທາງການຢູ່ ຫຼວງນ້ຳທາ ແລະ ອຸດົມໄຊເປັນເລື່ອງທຳມະດາ ແລະ ການແບ່ງປັນແມ່ນ 50/50 | |

## ເອກະສານຊ້ອນທ້າຍ 2 ຄຳຖາມເພື່ອເກັບກຳຂໍ້ມູນລະດັບບ້ານ

| | | |
|---|---|---|
| 1 | ຊື່ບ້ານ, ຊົນເຜົ່າ ແລະ ຈຳນວນຄອບຄົວ | |
| 2 | ມາເຖິງດຽວນີ້ ບ້ານໄດ້ປູກຕົ້ນຢາງໄດ້ຈັກເຮັກຕາແລ້ວ? | |
| 3 | ຊາວບ້ານປູກດ້ວຍຕົນເອງຈັກເຮັກຕາ? ປູກແຕ່ປີໃດ? ຈັກຄອບຄົວປູກ? ເອົາເບ້ຍມາແຕ່ໃສ? | |
| 4 | ຖ້າປູກດ້ວຍຕົນເອງສ່ວນຫຼາຍຊາວບ້ານຮູ້ປູກໄດ້ແນວໃດ? | |
| 5 | ບ້ານນີ້ໃຊ້ທຶນຂອງນັກລົງທຶນປູກບໍ່? ຖ້າແມ່ນມີການເຊັນສັນຍາບໍ່ ຫລື ເປັນການຕົກລົງປາກເປົ່າ? ສັນຍານັ້ນເຮັດກັບໝົດບ້ານ ຫລື ເຮັດກັບແຕ່ລະຄອບຄົວ? ຖ້າເຮັດກັບຄອບຄົວມີຈັກຄອບຄົວໄດ້ເຊັນສັນຍາ? | (ຖ້າບ້ານບໍ່ໄດ້ໃຊ້ເງິນບໍລິສັດ/ນັກລົງທຶນປູກໃຫ້ຂ້າມໄປຫາຄຳຖາມ 14) |
| 6 | ໃນບ້ານນີ້ ມີຈັກເຮັກຕາທີ່ໄດ້ປູກກັບບໍລິສັດ/ນັກລົງທຶນ? ປູກມາແຕ່ປີໃດ? | |
| 7 | ຊື່ຂອງບໍລິສັດ/ນັກລົງທຶນແມ່ນຫຍັງ? ບໍລິສັດ/ນັກລົງທຶນມາແຕ່ໃສ/ຖ້າເປັນຈີນ, ມາຈາກໃສຢູ່ຈີນ ແລະ ຊົນເຜົ່າໃດ? (ຮານ, ອາຄ່າ ຫລື ລື້)? ແມ່ນພີ່ນ້ອງ ຫລື ເພື່ອນມິດ? ມີຫຼາຍກວ່າຫນຶ່ງບໍລິສັດ/ຜູ້ລົງທຶນບໍ ໃນບ້ານນີ້? ໃຫ້ຖາມຄຳຖາມຂ້າງເທິງຈົນໝົດສຳລັບແຕ່ລະບໍລິສັດ/ຜູ້ລົງທຶນ | ນັກລົງທຶນ 1:<br>ນັກລົງທຶນ 2:<br>ນັກລົງທຶນ 3:<br>ໃນບາງກໍລະນີ, ສະເພາະຢ່າງຍິ່ງຖ້າຜູ້ລົງທຶນແມ່ນລື້ຈາກທົ່ງພຽງ, ບ້ານຫນຶ່ງອາດມີນັກລົງທຶນຫຼາຍກວ່ານາຍບ້ານຈະຈື່ຈຳໄດ້ຢ່າງລະອຽດ. ຖ້າເປັນແນວນີ້, ຂໍໃຫ້ນາຍບ້ານເວົ້າແບບລວມໆແທນທີ່ຈະເວົ້າລະອຽດສຳລັບແຕ່ລະຄົນ. |
| 8 | ສຳລັບແຕ່ລະບໍລິສັດ/ນັກລົງທຶນ ຫລື ໂດຍທົ່ວໄປ, ສັນຍາເປັນລາຍລັກອັກສອນ ຫລື ປາກເປົ່ານັ້ນດົນປານໃດ? ນັບແຕ່ມື້ປູກ ຫລື ແຕ່ມື້ປາດ? | |
| 9 | ສຳລັບແຕ່ລະບໍລິສັດ/ນັກລົງທຶນ ຫລື ໂດຍທົ່ວໄປ, ເປີເຊັນການແບ່ງປັນແນວໃດ (ເປີເຊັນຊາວບ້ານໄດ້ຮັບ ແລະ ເປີເຊັນບໍລິສັດ/ນັກລົງທຶນໃດ)? ແບ່ງປັນຫຍັງແທ້ (ດິນ, ຕົ້ນໄມ້ ຫລື ຢາງ)? | |
| 10 | ສຳລັບແຕ່ລະບໍລິສັດ/ນັກລົງທຶນ ຫລື ໂດຍທົ່ວໄປ, ຊາວບ້ານຕ້ອງປະກອບຫຍັງ (ດິນ, ແຮງງານ)? ທາງບໍລິສັດ/ນັກລົງທຶນປະກອບຫຍັງ (ທັກສະວິຊາການ? ເບ້ຍຢາງ? ອຸປະກອນ?) ໃຜຈ່າຍຄ່າພາສີດິນ? | |
| 11 | ສຳລັບແຕ່ລະບໍລິສັດ/ນັກລົງທຶນ ຫລື ໂດຍທົ່ວໄປ, ບໍລິສັດ/ນັກລົງທຶນຈ່າຍແຮງງານຊາວບ້ານບໍ່? ຈ່າຍເທົ່າໃດ? | |
| 12 | ສຳລັບແຕ່ລະບໍລິສັດ/ນັກລົງທຶນ ຫລື ໂດຍທົ່ວໄປ, ການແບ່ງສ່ວນຈະມີຂຶ້ນເວລາໃດ (3 ປີຫລັງຈາກປູກບໍ່? 5 ປີຫລັງຈາກປູກ? ຫລື ພາຍຫລັງໄດ້ປາດຢາງ)? | |
| 13 | ສຳລັບແຕ່ລະບໍລິສັດ/ນັກລົງທຶນ ຫລື ໂດຍທົ່ວໄປ, ຊາວບ້ານຕ້ອງຂາຍສ່ວນແບ່ງຂອງຕົນໃຫ້ບໍລິສັດ/ນັກລົງທຶນໃນສັນຍາ | |

| | | |
|---|---|---|
| | ບໍ? ຫລື ຂາຍໃຫ້ໃຜໄດ້ທີ່ໃຫ້ລາຄາສູງສຸດໃນຕອນຂາຍ. | |
| 14 | ຊາວບ້ານປູກກັບພີ່ນ້ອງ ຫລືເພື່ອນມິດບໍ? ຖ້າແມ່ນ, ການຕົກລົງໂດຍລວມເປັນແນວໃດ (ສັນຍາເປັນລາຍລັກອັກສອນ? ປາກເປົ່າ? ໄດ້ຢືມເງິນບໍ? ໄດ້ແລກປ່ຽນຄວາມຮູ້ທາງເຕັກນິກບໍ?) ຖ້າຫາກມີຂໍ້ສັນຍາ ຫລື_ຕົກລົງປາກເປົ່າ, ສັນຍາຕົກລົງຂຽນແນວໃດ? | |
| 15 | ຊາວບ້ານມັກປູກດ້ວຍຕົນເອງບໍ, ປູກກັບພີ່ນ້ອງ, ໝູ່ ຫລື ປູກກັບນັກລົງທຶນ? ເປັນຫຍັງ? | |

* ຄຳຖາມນີ້ໃຊ້ພຽງແຕ່ເປັນອັນຊ່ວຍການສຳພາດຊາວບ້ານແບບມີໂຄງຮ່າງແບບຄ້າວໆ. ພ້ອມນີ້ໄດ້ເກັບກຳຂໍ້ມູນທີ່ມີຄຸນຄ່າໃນເວລາໂອ້ລົມແບບສະບາຍໆ.

## ເອກະສານຊ້ອນທ້າຍ 3 ປະມວນພາບ

ຕ່ອງໂສ້ການຕະຫຼາດທີ່ຊາຍແດນ:
ຈາກຫຼວງນໍ້າທາຫາສິບສອງພັນນາ



**1.** ຕໍ່ຕາເບ້ຍ
(ຖ່າຍໃກ້ບ້ານນາຄໍາ, ເມືອງສິງ).



**2.** ຕົ້ນອ່ອນ



**3.** ຕົ້ນກໍາລັງປາດ.
(ພາບຖ່າຍຢູ່ບ້ານບອມພຽງ)



**4.** ເຮັດຢາງກ້ອນ (ພາບຖ່າຍຢູ່
ບອມພຽງ, ເມືອງຫຼວງນໍ້າທາ)



**5.** ຢາງກ້ອນ (ຢາງເໜັນ)
(ພາບຖ່າຍຢູ່ບ້ານລໍເມີ, ເມືອງສິງ).



**6.** ກຽມພ້ອມໄປຂາຍຂ້າມຊາຍແດນ.

ທາງຝາກນັ້ນຂອງຊາຍແດນ...



7. ສະຖານີເກັບເອົາຢາງນອກບ້ານສາຍນູນ, ເມືອງ ມາງ, ຕັ້ງຢູ່ໃກ້ໆ ກັບ ດ່ານກວດກາ ປາງທອງ-ເມືອງ ມາງ.



7. ສະຖານີເກັບຊື້ຢາງແຫ້ງໃກ້ກັບ ນິຄົມລັດ ເມືອງ ພົງ




7. ປ້າຍຊີ້ໄປຫາຈຸດເກັບຢາງ (ປ້າຍ ສັນຍານແບບນີ້ມີຢູ່ທົ່ວເວລາຂີ່ໄປ ຕາມທົນທາງໃຫຍ່ ໃນຈີນ)



8. ບຣິສໂຕນ (ລົງທຶນໂດຍຍີ່ປຸ່ນ) ເປັນ ໂຮງງານໃຫຍ່ກ່ວາໝູ່ທີ່ເມືອງ ພົງ




8. ລ້າງຕາກແຫ້ງ ແລະອັດມາ ແລ້ວເປັນແຜ່ນ, SCR 20 *Jiaobao* ໄດ້ກຳເນີດ.





9. ຕົ້ນຢາງທີ່ບໍ່ຜະລິດນ້ຳຢາງແລ້ວຖືກໄປປຸງແຕ່ງເປັນພື້ນເຮືອນ, ເຄື່ອງໃຊ້ໃນເຮືອນ, ໆລໆ (ພາບຖ່າຍໃກ້ເມືອງພົງ).



ທິວທັດໂດຍລວມທີ່ເມືອງສິງ:ຕົ້ນຢາງຍັງບໍ່ທັນໃຫຍ່ສຸດເທິງພູ, ທົ່ງນາເຂົ້າ ແລະຕົ້ນອ້ອຍຢູ່ທົ່ງພຽງ (ພາບຖ່າຍໃກ້ບ້ານຕາໜີ, ເມືອງສິງ)




ປ້າຍທີ່ມັກພົບເຫັນຕາມຖະໜົນກ່ຽວກັບສວນປູກຢາງເພື່ອທົດແທນການປູກຝິ່ນ (ພາບຖ່າຍໃກ້ບ້ານກາງໃໝ່, ເມືອງສິງ).



ທິວທັດມັກພົບເຫັນຢູ່ສິບສອງພັນນາ: ຕົ້ນຢາງຢູ່ເທິງພູ, ທົ່ງພຽງມີສວນປູກຕົ້ນກ້ວຍ ແລະພືດລົ້ມລຸກອື່ນໆ (ຖ່າຍພາບໃກ້ບ້ານປາລາ, ເມືອງມາງ)



ວິນລາໃໝ່, ເຮືອນເກົ່າມີເສົາ ແລະຢາງ: ບ້ານເຮລີຢູ່ເມືອງນູນ, 20 ນາທີດ້ວຍລົດຈັກຈາກບ້ານບວກຄຸ, ລາວ



**ຜະລິດໂດຍ :**

ການຮ່ວມມືດ້ານວິຊາການ ຂອງເຢຍລະມັນ

ການພັດທະນາຊົນນະບົດໃນເຂດພູດອຍ ຂອງ ສປປ ລາວ

ຖະໜົນວັດນາກໃຫຍ່, ບ້ານ ທ່າພະລານໄຊ, ເມືອງສີສັດຕະນາກ,

ນະຄອນຫຼວງວຽງຈັນ, ສປປ ລາວ

ຕູ້ ປ.ນ. 9233

ໂທ: +856 21 353605

ແຟັກ: +856 21 312408

ອີເມລ: rdma@gtzrural.org